ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດ ຂອງ ສປປ ລາວ ເຖິງປີ 2030

ນະຄອນຫລວງວຽງຈັນ
2019

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດ ຂອງ ສປປ ລາວ ເຖິງປີ 2030

**ນະຄອນຫລວງວຽງຈັນ**
**2019**

## ຈັດພິມໂດຍ:

**ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ**
ຖະໜົນ: ໄກສອນ ພົມວິຫານ, ບ້ານສີວິໄລ, ເມືອງໄຊທານີ, ນະຄອນຫລວງວຽງຈັນ, ສປປ ລາວ.
ໂທລະສັບ: +856 21 716076
ແຟັກ: +856 21 716076

**ກະຊວງແຜນການ ແລະ ການລົງທຶນ**
ຖະໜົນ: ສຸພານຸວົງ, ບ້ານສີຖານເໜືອ, ເມືອງສີໂຄດຕະບອງ, ນະຄອນຫລວງວຽງຈັນ, ສປປ ລາວ.
ໂທລະສັບ: +856 21 217010
ແຟັກ: +856 21 217010

ຈັດພິມຄັ້ງທຳອິດ ປີ 2019, ຈຳນວນ 1.500 ເຫລັ້ມ


©ສະຫງວນລິຂະສິດ


## ສະໜັບສະໜູນໂດຍ:

ທະນາຄານໂລກ ປະຈຳ ສປປ ລາວ
ໂດຍຜ່ານກອງທຶນປົກປັກຮັກສາສິ່ງແວດລ້ອມ

# ສາລະບານ


**ອະລຳພະບົດ**............................................................................................ i

**ບົດນຳ**................................................................................................... iv

**ພາກທີ I: ຄວາມຕ້ອງການ ແລະ ຈຳເປັນພາວະວິໄສຂອງການສ້າງຍຸດທະສາດ ແລະ ສູນສົ່ງເສີມການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ແລະ ສະພາບການພັດທະນາເສດຖະກິດ-ສັງຄົມ**

1.1. ສະພາບແວດລ້ອມ ແລະ ທ່າອ່ຽງລວມຂອງສາກົນ.................................................... 1

1.2. ສະພາບການພັດທະນາເສດຖະກິດ-ສັງຄົມຂອງ ສປປ ລາວ........................................... 2

1.3. ສະພາບການພັດທະນາເສດຖະກິດ-ສັງຄົມຂອງ ສປປ ລາວ ຕາມທິດສີຂຽວ-ຍືນຍົງ.............................. 6

**ພາກທີ II: ຄວາມໝາຍ, ທິດທາງ, ຈຸດປະສົງ ແລະ ເປົ້າໝາຍລວມຂອງຍຸດທະສາດການເຕີບໂຕສີຂຽວແຫ່ງຊາດ ຂອງ ສປປ ລາວ ແລະ ການພົວພັນກັບຍຸດທະສາດ ແລະ ແຜນພັດທະນາເສດ ຖະກິດ-ສັງຄົມແຫ່ງຊາດ, ຂະແໜງການ ແລະ ທ້ອງຖິ່ນ**

2.1. ຄວາມໝາຍຂອງການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ.......................................... 9

2.2. ທິດທາງ, ເປົ້າໝາຍ ແລະ ຈຸດປະສົງຂອງຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ............. 13

2.3. ທີ່ຕັ້ງ, ພາລະບົດບາດ ແລະ ການພົວພັນລະຫວ່າງຍຸດທະສາດການເຕີບໂຕສີຂຽວແຫ່ງ ຊາດຂອງ ສປປ ລາວ ກັບຍຸດທະສາດ ແລະ ແຜນພັດທະນາຂະແໜງການ ແລະ ທ້ອງຖິ່ນ.......................................... 14

**ພາກທີ III: ຂົງເຂດ ແລະ ຂະແໜງການຈຸດສຸມ ແລະ ສະໜັບສະໜູນຂອງຍຸດທະສາດການເຕີບໂຕສີຂຽວ ແຫ່ງຊາດຂອງ ສປປ ລາວ**

3.1. ຂົງເຂດຈຸດສຸມທີ່ຕິດພັນກັບຫລາຍຂະແໜງການ.................................................. 16

3.1.1. ສະພາບແວດລ້ອມ ແລະ ການຄຸ້ມຄອງການລົງທຶນ............................................... 16

3.1.2. ພັດທະນາຊົນນະບົດ ແລະ ຫລຸດຜ່ອນຄວາມທຸກຍາກ............................................. 17

3.1.3. ບົດບາດຍິງ-ຊາຍ: ການປົກປ້ອງ ແລະ ສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ.............................. 19

3.1.4. ການປັບຕົວເຂົ້າກັບສະພາບການປ່ຽນແປງດິນຟ້າອາກາດ ແລະ ການຄຸ້ມຄອງໄພພິບັດທາງທຳມະຊາດ.......... 20

3.2. ຂະແໜງການຈຸດສຸມຂອງຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ............................ 22

3.2.1. ຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ............................................ 22

3.2.2. ຂະແໜງການກະສິກຳ ແລະ ປ່າໄມ້............................................................. 24

3.2.3. ຂະແໜງອຸດສາຫະກຳ ແລະ ການຄ້າ............................................................ 28

3.2.4. ຂະແໜງການໂຍທາທິການ ແລະ ຂົນສົ່ງ........................................................ 32

3.2.5. ຂະແໜງພະລັງງານ ແລະ ບໍ່ແຮ່............................................................... 35

3.2.6. ຂະແໜງຖະແຫລງຂ່າວ, ວັດທະນາທຳ ແລະ ທ່ອງທ່ຽວ............................................ 38

3.2.7. ຂະແໜງວິທະຍາສາດ ແລະ ເຕັກໂນໂລຊີ.......................................................... 41

3.3. ຂະແໜງການສະໜັບສະໜູນ.................................................................... 42

3.3.1. ຂະແໜງການເງິນ.............................................................................. 42

3.3.2. ຂະແໜງທະນາຄານ............................................................................ 43

3.3.3. ຂະແໜງສຶກສາທິການ ແລະ ກິລາ............................................................... 43

3.3.4. ຂະແໜງແຮງງານ ແລະ ສະຫວັດດີການສັງຄົມ.................................................... 43

3.3.5. ຂະແໜງສາທາລະນະສຸກ........................................................................ 44

**ພາກທີ IV: ກົນໄກຈັດຕັ້ງປະຕິບັດຍຸດທະສາດການເຕີບໂຕສີຂຽວແຫ່ງຊາດ ຂອງ ສປປ ລາວ**


4.1. ກົນໄກການດ້ານການຈັດຕັ້ງ........................................................................ 45
4.2. ກົນໄກການເງິນ........................................................................................ 49
4.2.1. ແຫລ່ງລາຍຮັບຂອງກອງທຶນສົ່ງເສີມການເຕີບໂຕສີຂຽວ........................................ 49
4.2.2. ເປົ້າໝາຍການໃຊ້ຈ່າຍຂອງກອງທຶນສົ່ງເສີມການເຕີບໂຕສີຂຽວ................................ 51
4.3. ມາດຕະການດ້ານນະໂຍບາຍ ແລະ ນິຕິກຳ......................................................... 51


**ພາກທີ V: ການຕິດຕາມ, ປະເມີນຜົນ ແລະ ລາຍງານຄວາມຄືບໜ້າຂອງການພັດທະນາເສດຖະກິດຕາມທິດສີຂຽວ-ຍືນຍົງໃນ ສປປ ລາວ**


5.1. ຂົງເຂດ, ມິຕິ ແລະ ຕົວຊີ້ວັດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ..................................... 53
5.2. ດັດຊະນີການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ.......................................................... 57
5.3. ການຕິດຕາມ ແລະ ລາຍງານ.............................................................................. 60

ເອກະສານອ້າງອີງ........................................................................................... 61
ເອກະສານຊ້ອນທ້າຍ......................................................................................... 62

# ແຜນວາດ

ແຜນວາດທີ 1: ຄວາມໝາຍຂອງການເຕີບໂຕສີຂຽວຂອງ ສປປ ລາວ.................................................... 12
ແຜນວາດທີ 2: ການພົວພັນລະຫວ່າງຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ກັບຍຸດທະສາດ ແລະ ແຜນການຂອງຂະແໜງການ ແລະ ທ້ອງຖິ່ນ....................................................... 15
ແຜນວາດທີ 3: ແຜນວາດທີ່ຕັ້ງ ແລະ ກົນໄກປະສານງານຂອງສູນສົ່ງເສີມການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ. 48

# ຕາຕະລາງ

ຕາຕະລາງທີ 1: ຂົງເຂດ, ມິຕິ ແລະ ຕົວຊີ້ວັດການເຕີບໂຕສີຂຽວຂອງ ສປປ ລາວ...................................... 54
ຕາຕະລາງທີ 2: ຜົນການປະເມີນການເຕີບໂຕສີຂຽວຂອງ ສປປ ລາວ ແລະ ຄາດໝາຍ ປີ 2025 ແລະ 2030......... 58

# ອະລຳພະບົດ

ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ສະບັບນີ້ ແມ່ນການຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ X ຂອງພັກ, ວິໄສທັດ 2030, ຍຸດທະສາດໄລຍະ 10 ປີ (2016-2025) ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020) ໃຫ້ເປັນອັນລະອຽດ. ຈຸດປະສົງ ແລະ ເປົ້າໝາຍຕົ້ນຕໍຂອງການສ້າງ ແລະ ຈັດຕັ້ງປະຕິບັດຍຸດທະສາດສະບັບນີ້ ແມ່ນເພື່ອເສີມສ້າງຄວາມອາດສາມາດໃນການເຊື່ອມສານການເຕີບໂຕສີຂຽວເຂົ້າໃນການສ້າງ ແລະ ຈັດຕັ້ງປະຕິບັດຍຸດທະສາດ ແລະ ແຜນການຂອງຂະແໜງການ ແລະ ທ້ອງຖິ່ນໃນແຕ່ລະໄລຍະ ເພື່ອຮັບປະກັນການບັນລຸເປົ້າໝາຍການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໄລຍະຍາວທີ່ພັກ ແລະ ລັດຖະບານຂອງ ສປປ ລາວ ໄດ້ກຳນົດໄວ້ ເປັນຕົ້ນແມ່ນ: ການຫລຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ (LDC) ໃນຕໍ່ໜ້າ ແລະ ກ້າວໄປເປັນປະເທດກຳລັງພັດທະນາທີ່ມີລາຍຮັບປານກາງສູງຕາມທິດສີຂຽວ-ຍືນຍົງ ແລະ ບັນລຸເປົ້າໝາຍການພັດທະນາແບບຍືນຍົງ (SDGs) ໃນປີ 2030 ຢ່າງມີຄຸນນະພາບ.

ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ສະບັບນີ້ ສ້າງຂຶ້ນ ເພື່ອຮັບປະກັນການບັນລຸເປົ້າໝາຍການພັດທະນາເສດຖະກິດ-ສັງຄົມແຫ່ງຊາດໄລຍະຍາວ ທີ່ພັກ ແລະ ລັດຖະບານແຫ່ງ ສປປ ລາວ ໄດ້ກຳນົດໄວ້, ຄຽງຄູ່ກັບການສ້າງຄວາມສົມດຸນ ລະຫວ່າງການຂະຫຍາຍຕົວຂອງເສດຖະກິດ, ການປົກປັກຮັກສາສິ່ງແວດລ້ອມ ແລະ ການພັດທະນາທາງດ້ານສັງຄົມ ໃຫ້ສາມາດຮັກສາໄດ້ການຂະຫຍາຍຕົວຂອງເສດຖະກິດໃນລະດັບສູງ, ໝັ້ນທ່ຽງ, ຕໍ່ເນື່ອງ ແລະ ຍາວນານ. ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ສະບັບນີ້ໄດ້ເລັ່ງໃສ່: (1) ຊຸກຍູ້ສົ່ງເສີມການຂະຫຍາຍຕົວຂອງເສດຖະກິດ ແລະ ຫລຸດຜ່ອນຄວາມທຸກຍາກຢ່າງກວ້າງຂວາງ, ທົ່ວເຖິງ ແລະ ເປັນທຳ ໂດຍໃຫ້ທຸກຄົນໃນສັງຄົມໄດ້ຮັບຜົນປະໂຫຍດຈາກການພັດທະນາດັ່ງກ່າວ; (2) ຍົກສູງປະສິດທິພາບ ແລະ ປະສິດທິຜົນຂອງການນຳໃຊ້ຊັບພະຍາກອນທຳມະຊາດທີ່ມີຢູ່ຢ່າງຈຳກັດຂອງປະເທດໃຫ້ເກີດຜົນປະໂຫຍດສູງສຸດ; (3) ການຂະຫຍາຍຕົວຂອງເສດຖະກິດທີ່ສະອາດ ແລະ ເປັນມິດຕໍ່ສິ່ງແວດລ້ອມ, ຫລຸດຜ່ອນສິ່ງເສດເຫລືອ ແລະ ການປ່ອຍທາດອາຍພິດເຮືອນແກ້ວ ແລະ (4) ເພີ່ມຄວາມທົນທານຂອງເສດຖະກິດຕໍ່ສະພາບການປ່ຽນແປງດິນຟ້າອາກາດ, ໄພພິບັດທາງທຳມະຊາດ ແລະ ການເໜັງຕີງຂອງສະພາບເສດຖະກິດໂລກ.

ເພື່ອບັນລຸຈຸດປະສົງ ແລະ ເປົ້າໝາຍດັ່ງກ່າວ, ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ສະບັບນີ້ ຈຶ່ງໄດ້ຄົ້ນຄວ້າ ແລະ ກຳນົດ 4 ຂົງເຂດທີ່ຕິດພັນກັບຫລາຍຂະແໜງການ, 7 ຂະແໜງການຈຸດສຸມເພື່ອສົ່ງເສີມ ແລະ 5 ຂະແໜງການປົ່ນອ້ອມ ຄື:

- 4 ຂົງເຂດຈຸດສຸມທີ່ຕິດພັນກັບຫລາຍຂະແໜງການປະກອບມີ: (1) ປັບປຸງສະພາບແວດລ້ອມ ແລະ ລະບົບຄຸ້ມຄອງການລົງທຶນໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງຂຶ້ນ; (2) ພັດທະນາຊົນນະບົດ ແລະ ຫລຸດຜ່ອນຄວາມທຸກຍາກ ເພື່ອຍົກສູງລະດັບຊີວິດການເປັນຢູ່ຂອງປະຊາຊົນໃນຊົນນະບົດໃຫ້ສູງຂຶ້ນ ກໍ່ຄືເພື່ອຫລຸດຜ່ອນຄວາມແຕກໂຕນລະຫວ່າງຕົວເມືອງ ແລະ ຊົນນະບົດ ແລະ ເພື່ອຮັບປະກັນໃຫ້ປະຊາຊົນທີ່ທຸກຍາກໃນຊົນນະບົດສາມາດໄດ້ຮັບຜົນປະໂຫຍດຈາກການຂະຫຍາຍຕົວຂອງເສດຖະກິດຢ່າງທົ່ວເຖິງ ແລະ ເປັນທຳ; (3) ບົດບາດຍິງ-ຊາຍ, ໂດຍສະເພາະແມ່ນເລັ່ງໃສ່ຍົກສູງຖານະບົດບາດ ແລະ ສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ ເພື່ອຫລຸດຜ່ອນຄວາມແຕກຕ່າງລະຫວ່າງຍິງ-ຊາຍໃນທຸກຂົງເຂດເສດຖະກິດ-ສັງຄົມ ແລະ (4) ຫລຸດຜ່ອນຄວາມສ່ຽງ ແລະ ຄວາມບອບບາງຂອງເສດຖະກິດຕໍ່ສະພາບການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດທາງທຳມະຊາດ.

- 7 ຂະແໜງການຈຸດສຸມປະກອບມີ: (1) ຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ໂດຍສະເພາະແມ່ນເລັ່ງໃສ່ການສຳຫລວດ, ຈັດສັນ, ວາງແຜນການນຳໃຊ້ ແລະ ຄຸ້ມຄອງຊັບພະຍາກອນທຳມະຊາດແບບມີສ່ວນຮ່ວມຂອງຫລາຍຂະແໜງການ, (2) ຂະແໜງກະສິກຳ ແລະ ປ່າໄມ້, (3) ຂະແໜງອຸດສາຫະກຳ ແລະ ການຄ້າ, (4) ຂະແໜງພະລັງງານ ແລະ ບໍ່ແຮ່, (5) ຂະແໜງໂຍທາທິການ ແລະ ຂົນສົ່ງ, (6) ຂະແໜງຖະແຫລງຂ່າວ, ວັດທະນາທຳ ແລະ ທ່ອງທ່ຽວ ແລະ (7) ຂະແໜງວິທະຍາສາດ ແລະ ເຕັກໂນໂລຊີ.

- 5 ຂະແໜງການສະໜັບສະໜູນ ຫລື ປີ່ນອ້ອມປະກອບມີ: (1) ການເງິນ, (2) ທະນາຄານ, (3) ສຶກສາທິການ ແລະ ກິລາ, (4) ແຮງງານ ແລະ ສະຫວັດດີການສັງຄົມ ແລະ (5) ສາທາລະນະສຸກ.

ນອກນັ້ນ, ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ສະບັບນີ້ ຍັງໄດ້ຄົ້ນຄວ້າ ແລະ ກຳນົດກົນໄກການເຊື່ອມສານການເຕີບໂຕສີຂຽວເຂົ້າໃນນະໂຍບາຍ, ຍຸດທະສາດ, ແຜນຂອງຂະແໜງການ ແລະ ທ້ອງຖິ່ນຢ່າງເປັນລະບົບ ແລະ ມີປະສິດທິພາບສູງ. ໄດ້ນຳສະເໜີການສ້າງຕັ້ງສູນ ແລະ ກອງທຶນສົ່ງເສີມການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ເພື່ອເປັນຈຸດປະສານງານ ແລະ ກົນໄກການເງິນເພື່ອຊຸກຍູ້ ແລະ ສົ່ງເສີມການພັດທະນາເສດຖະກິດ-ສັງຄົມແຫ່ງຊາດຕາມທິດສີຂຽວ-ຍືນຍົງ ພ້ອມທັງສ້າງລະບົບຕິດຕາມປະເມີນຜົນບັນດາຕົວຊີ້ບອກຕ່າງໆໃນຍຸດທະສາດນີ້ ແລະ ພັດທະນາໃຫ້ກາຍເປັນລະບົບຕິດຕາມທີ່ມີປະສິດທິພາບ ແລະ ປະກົດຜົນເປັນຈິງເທື່ອລະກ້າວ.

ຂ້າພະເຈົ້າ, ຂໍຖືເອົາໂອກາດນີ້ຕາງໜ້າໃຫ້ພັກ, ລັດຖະບານ ແລະ ປະຊາຊົນລາວທົ່ວປະເທດ ຂໍສະແດງຄວາມຂອບອົກຂອບໃຈມາຍັງຄະນະຊີ້ນຳລະດັບຊາດວຽກງານການເຕີບໂຕສີຂຽວ ກໍ່ຄືຄະນະຊີ້ນຳ ແລະ ກອງເລຂາຄະນະຮັບຜິດຊອບສ້າງຍຸດທະສາດ ແລະ ສູນສົ່ງເສີມການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ທີ່ໄດ້ປະຕິບັດໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍດ້ວຍຄວາມເອົາໃຈໃສ່ ແລະ ຮັບຜິດຊອບສູງ ຈົນເຮັດໃຫ້ການສ້າງຍຸດທະສາດສະບັບນີ້ປະສົບຜົນສຳເລັດຢ່າງຈົບງາມ. ຂໍສະແດງຄວາມຂອບໃຈເປັນພິເສດມາຍັງທະນາຄານໂລກ (WB), ກອງທຶນປົກປັກຮັກສາສິ່ງແວດລ້ອມ (EPF) ແລະ ສະຖາບັນການເຕີບໂຕສີຂຽວໂລກ (GGGI) ທີ່ໄດ້ໃຫ້ການສະໜັບສະໜູນທາງດ້ານວິຊາການ ແລະ ງົບປະມານ ແກ່ການສ້າງຍຸດທະສາດສະບັບນີ້ໃຫ້ສຳເລັດຕາມລະດັບຄາດໝາຍ. ຂໍສະແດງຄວາມຂອບໃຈມາຍັງບັນດາຄູ່ຮ່ວມພັດທະນາ, ອົງການຈັດຕັ້ງສາກົນ ແລະ ທຸກພາກສ່ວນກ່ຽວຂ້ອງ ທັງພາກລັດ, ເອກະຊົນ, ວິສາຫະກິດ ແລະ ອົງການຈັດຕັ້ງສັງຄົມພາຍໃນ ທີ່ໄດ້ໃຫ້ການສະໜັບສະໜູນ ແລະ ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນຂະບວນການສ້າງຍຸດທະສາດສະບັບນີ້ໃຫ້ປະສົບຜົນສຳເລັດຕາມລະດັບຄາດໝາຍ. ຍຸດທະສາດສະບັບນີ້ ແມ່ນໝາກຜົນຂອງການຮ່ວມມືຢ່າງກວ້າງຂວາງຂອງທຸກພາກສ່ວນໃນສັງຄົມ, ເປັນທາງເດີນໜຶ່ງເພື່ອການພັດທະນາແບບຍືນຍົງ ແລະ ທັງເປັນຍຸດທະສາດໜຶ່ງທີ່ສຳຄັນໃນການປະຕິບັດວິໄສທັດການພັດທະນາໄລຍະຍາວຂອງ ສປປ ລາວ. ດັ່ງນັ້ນ, ຂ້າພະເຈົ້າ ຫວັງຢ່າງຍິ່ງວ່າ ບັນດາທ່ານຈະສືບຕໍ່ສະໜັບສະໜູນ ແລະ ປະກອບສ່ວນຢ່າງຕັ້ງໜ້າ ເຂົ້າໃນການຈັດຕັ້ງປະຕິບັດຍຸດທະສາດສະບັບນີ້ໃຫ້ປະສົບຜົນສຳເລັດຕາມລະດັບຄາດໝາຍທີ່ໄດ້ກຳນົດໄວ້.

ນະຄອນຫລວງວຽງຈັນ, ວັນທີ 06 ມີນາ 2019

**ນາຍົກລັດຖະມົນຕີແຫ່ງ ສປປ ລາວ**

ທອງລຸນ ສີສຸລິດ

ຄຳຂວັນຍຸດທະສາດການເຕີບໂຕສີຂຽວແຫ່ງຊາດ ຂອງ ສປປ ລາວ

**“ເພື່ອການຂະຫຍາຍຕົວຂອງເສດຖະກິດທີ່ມີປະສິດພາບ, ສະອາດ, ກວ້າງຂວາງ, ທົ່ວເຖິງ, ເປັນທຳ ແລະ ທົນທານຕໍ່ສະພາບການປ່ຽນແປງດິນຟ້າອາກາດ ແລະ ການເໜັງຕີງຂອງເສດຖະກິດໂລກ”**

# ບົດນຳ

ເພື່ອຜັນຂະຫຍາຍມະຕິຂອງກອງປະຊຸມໃຫຍ່ຄັ້ງທີ X ຂອງພັກປະຊາຊົນປະຕິວັດລາວ ລັດຖະບານແຫ່ງ ສປປ ລາວ ໄດ້ສ້າງວິໄສທັດ 2030 ແລະ ຍຸດທະສາດໄລຍະ 10 ປີ (2016-2025) ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020). ວິໄສທັດ ແລະ ຍຸດທະສາດ ກໍ່ຄືແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດດັ່ງກ່າວເຊິ່ງໄດ້ກຳນົດທິດທາງ ແລະ ເປົ້າໝາຍການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຂອງ ສປປ ລາວ; ໂດຍເລັ່ງໃສ່ສືບຕໍ່ພັດທະນາເສດຖະກິດ-ສັງຄົມ ເພື່ອຫລຸດພົ້ນຈາກສະຖານະພາບປະເທດດ້ອຍພັດທະນາໃນປີ 2020 ແລະ ກາຍເປັນປະເທດກຳລັງພັດທະນາທີ່ມີລະດັບລາຍຮັບປານກາງສູງ ແລະ ບັນລຸເປົ້າໝາຍການພັດທະນາແບບຍືນຍົງ (SDGs) ໃນປີ 2030 ຕາມທິດສີຂຽວ-ຍືນຍົງ[1]. ສະພາແຫ່ງຊາດຊຸດທີ VIII ໄດ້ຮັບຮອງເອົາວິໄສທັດ, ຍຸດທະສາດ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດດັ່ງກ່າວໃນກອງປະຊຸມຄັ້ງປະຖົມມະລຶກໃນລະຫວ່າງວັນທີ 20-22 ເມສາ 2016 ທີ່ ນະຄອນຫລວງວຽງຈັນ.

ເພື່ອຮັບປະກັນການພັດທະນາເສດຖະກິດ-ສັງຄົມຂອງ ສປປ ລາວ ໃຫ້ໄປຕາມທິດສີຂຽວ-ຍືນຍົງຕາມການກຳນົດຂອງວິໄສທັດ, ຍຸດທະສາດໄລຍະ 10 ປີ (2016-2025) ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ VIII (2016-2020); ລັດຖະບານແຫ່ງ ສປປ ລາວ ໄດ້ສ້າງຕັ້ງຄະນະຊີ້ນຳລະດັບຊາດວຽກງານເຕີບໂຕສີຂຽວຂຶ້ນໃນວັນທີ 08 ທັນວາ 2016 ໂດຍມີ ທ່ານຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ ເປັນປະທານ; ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ເປັນຮອງ, ມີຫົວໜ້າສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ ແລະ ບັນດາລັດຖະມົນຕີຂອງກະຊວງ ແລະ ຂະແໜງການກ່ຽວຂ້ອງຈຳນວນໜຶ່ງເປັນຄະນະ. ຄະນະຊີ້ນຳລະດັບຊາດວຽກງານການເຕີບໂຕສີຂຽວດັ່ງກ່າວ ມີພາລະບົດບາດ ແລະ ໜ້າທີ່ຕົ້ນຕໍໃນການຊີ້ນຳ-ນຳພາການຈັດຕັ້ງປະຕິບັດວຽກງານການເຕີບໂຕສີຂຽວໃນຂອບເຂດທົ່ວປະເທດ ໃຫ້ປະສົບຜົນສຳເລັດຢ່າງມີປະສິດທິພາບ, ປະສິດທິຜົນສູງ ແລະ ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຕົວຈິງ ຂອງການພັດທະນາເສດຖະກິດ-ສັງຄົມຂອງ ສປປ ລາວ ໃນແຕ່ລະໄລຍະກໍ່ຄືຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເອົາຍຸດທະສາດ ແລະ ນະໂຍບາຍຂອງຂະແໜງການ ແລະ ທ້ອງຖິ່ນທີ່ຕິດພັນກັບການເຕີບໂຕສີຂຽວ (ລາຍລະອຽດເອກະສານຊ້ອນທ້າຍທີ 2).

ເພື່ອເປັນທິດທາງ ແລະ ບ່ອນອີງໃຫ້ແກ່ການຊີ້ນຳ-ນຳພາ ກໍ່ຄືເປັນກົນໄກປະສານງານ, ຊຸກຍູ້ການເຕີບໂຕສີຂຽວໃນຂອບເຂດທົ່ວປະເທດຢ່າງເປັນລະບົບ ແລະ ມີປະສິດທິພາບສູງ, ຄະນະຊີ້ນຳລະດັບຊາດວຽກງານເຕີບໂຕ ສີຂຽວດັ່ງກ່າວໄດ້ຕົກລົງເຫັນດີໃຫ້ສ້າງຍຸດທະສາດ ແລະ ສົ່ງເສີມການເຕີບໂຕສີຂຽວແຫ່ງຊາດ ຂອງ ສປປ ລາວ ໃນວັນທີ 19 ເມສາ 2017 ແລະ ພ້ອມດຽວກັນນັ້ນ ກໍ່ໄດ້ຕົກລົງແຕ່ງຕັ້ງຄະນະສ້າງຍຸດທະທະສາດ ແລະ ສົ່ງເສີມການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ; ໂດຍມອບໝາຍໃຫ້ ທ່ານຫົວໜ້າສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ ເປັນຫົວໜ້າຄະນະຊີ້ນຳ, ຮອງລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ແລະ ຮອງຫົວໜ້າສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ ເປັນຮອງ, ມີບັນດາຮອງລັດຖະມົນຕີຂອງກະຊວງ ແລະ ຂະແໜງການທີ່ກ່ຽວຈຳນວນໜຶ່ງເປັນຄະນະ ແລະ ໄດ້ມອບໝາຍໃຫ້ສູນຄົ້ນຄວ້າວິທະຍາສາດ ແລະ ນະໂຍບາຍເສດຖະກິດ-ສັງຄົມ, ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ ແລະ ກົມແຜນການ-ສູນຄົ້ນຄວ້ານະໂຍບາຍການພັດທະນາ, ກະຊວງແຜນການ ແລະ ການລົງທຶນ ເປັນຈຸດປະສານງານຂອງກອງເລຂາ ຫລື ຈຸດປະສານງານໃນການຮ່າງຍຸດທະສາດດັ່ງກ່າວ. (ລາຍລະອຽດໃນເອກະສານຊ້ອນທ້າຍທີ 3)

ພາຍໃຕ້ການຊີ້ນຳ-ນຳພາຢ່າງໃກ້ຊິດຂອງຄະນະຊີ້ນຳ, ກອງເລຂາຮ່າງຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ໄດ້ເປັນໃຈກາງໃນການປະສານງານ ແລະ ຄົ້ນຄວ້າຮ່າງຍຸດທະສາດສະບັບນີ້ຂຶ້ນໂດຍການມີ

---

1 ວິໄສທັດ 2030 ແລະ ຍຸດທະສາດໄລຍະ 10 ປີ (2016-2025).

ສ່ວນຮ່ວມຢ່າງກວ້າງຂວາງຂອງຂະແໜງການ, ທ້ອງຖິ່ນ, ອົງການຈັດຕັ້ງສັງຄົມ, ຄູ່ຮ່ວມພັດທະນາ, ອົງການຈັດຕັ້ງສາກົນ, ວິສາຫະກິດພາຍໃນ ແລະ ຕ່າງປະເທດ. ໃນຂະບວນການສ້າງຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ຄັ້ງນີ້ໄດ້ມີການຈັດກອງປະຊຸມປຶກສາຫາລື, ລະດົມຄວາມຄິດ ແລະ ປະກອບຄຳຄິດຄຳເຫັນຢູ່ຂັ້ນສູນກາງຂັ້ນຄະນະຊີ້ນຳ ຈຳນວນ 3 ຄັ້ງ ແລະ ໄດ້ເຊີນເອົາບັນດາຜູ້ຕາງໜ້າຈາກບັນດາຂະແໜງການກ່ຽວຂ້ອງຕ່າງໆອ້ອມຂ້າງສູນກາງ, ອົງການຈັດຕັ້ງສັງຄົມ, ຄູ່ຮ່ວມພັດທະນາ, ຜູ້ຕາງໜ້າຈາກພາກວິສາຫະກິດພາຍໃນ ແລະ ຕ່າງປະເທດເຂົ້າຮ່ວມຢ່າງກວ້າງຂວາງ. ໃນຂັ້ນທ້ອງຖິ່ນ, ໄດ້ມີການຈັດກອງປະຊຸມປຶກສາຫາລື, ລະດົມຄວາມຄິດ ແລະ ປະກອບຄຳຄິດຄຳເຫັນຢູ່ 3 ພາກຂອງປະເທດ (ພາກເໜືອ, ພາກກາງ ແລະ ພາກໃຕ້) ເຊິ່ງມີຜູ້ຕາງໜ້າຈາກຂະແໜງການຂອງບັນດາແຂວງ (18 ແຂວງ) ທົ່ວປະເທດເຂົ້າຮ່ວມ. ນອກນັ້ນ, ຍັງມີກອງປະຊຸມປຶກສາຫາລືສະເພາະພາຍໃນກອງເລຂາຫລາຍຄັ້ງ. ຄຽງຄູ່ກັບຂະບວນການກະກຽມ ແລະ ການດຳເນີນການຮ່າງຍຸດທະສາດນັ້ນ, ຄະນະຊີ້ນຳ ແລະ ກອງເລຂາຮ່າງຍຸດທະສາດການເຕີບໂຕສີຂຽວແຫ່ງຊາດ ຂອງ ສປປ ລາວ ຍັງໄດ້ໄປທັດສະນະສຶກສາ ແລະ ຖອດຖອນບົດຮຽນຢູ່ປະເທດ ສ.ເກົາຫລີ, ເຊິ່ງເປັນປະເທດທີ່ມີບົດຮຽນ ແລະ ປະສົບຜົນສຳເລັດໃນການພັດທະນາເສດຖະກິດ-ສັງຄົມຂອງຕົນຕາມທິດສີຂຽວ-ຍືນຍົງ.

ຂະບວນການຮ່າງຍຸດທະສາດສະບັບນີ້, ຍັງໄດ້ຮັບການສະໜັບສະໜູນດ້ານວິຊາການຈາກທະນາຄານໂລກ (World Bank WB), ສະຖາບັນການເຕີບໂຕສີຂຽວໂລກ (Global Green Growth Institute GGGI), ອົງການ UNIDO ແລະ ອື່ນໆ. ສະຖາບັນ ແລະ ອົງການຈັດຕັ້ງສາກົນຕ່າງໆດັ່ງກ່າວໄດ້ໃຫ້ການສະໜັບສະໜູນດ້ານວິຊາການແກ່ຂະບວນການຮ່າງຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ສະບັບນີ້ດ້ວຍຮູບການຕ່າງໆເຊັ່ນ: ທະນາຄານໂລກ (WB) ໄດ້ຈັດກອງປະຊຸມວິຊາການ ກ່ຽວກັບການສະໜອງເງິນໃຫ້ແກ່ວຽກງານເຕີບໂຕສີຂຽວ, ສະໜອງຂໍ້ມູນ, ຄຳຄິດຄຳເຫັນ ແລະ ຂໍ້ສະເໜີແນະຫລາຍອັນທີ່ເປັນປະໂຫຍດໃຫ້ແກ່ຂະບວນການສ້າງຍຸດທະສາດສະບັບນີ້ ແລະ ພິເສດແມ່ນທະນາຄານໂລກ (WB) ໄດ້ໃຫ້ການສະໜັບສະໜູນດ້ານງົບປະມານໃຫ້ແກ່ຂະບວນສ້າງຍຸດທະສາດສະບັບນີ້ໂດຍຜ່ານກອງທຶນປົກປັກຮັກສາສິ່ງແວດລ້ອມ (EPF); ເຊິ່ງໃນນັ້ນລວມມີງົບປະມານໃນການໄປທັດສະນະສຶກສາຢູ່ຕ່າງປະເທດຂອງຄະນະຊີ້ນຳ ແລະ ກອງເລຂາ ເພື່ອຖອດຖອນ ແລະ ແລກປ່ຽນບົດຮຽນ, ຈັດກອງປະຊຸມສຳມະນາປຶກສາຫາລືພາຍໃນ, ການລົງເກັບກຳຂໍ້ມູນ ແລະ ການສຶກສາຄົ້ນຄວ້າ ເພື່ອຮັບໃຊ້ຂະບວນການສ້າງຍຸດທະສາດສະບັບນີ້. ສະຖາບັນການເຕີບໂຕສີຂຽວໂລກ (GGGI) ໄດ້ດຳເນີນການສຶກສາປະເມີນທ່າແຮງການເຕີບໂຕສີຂຽວໃນ ສປປ ລາວ (GreenGrowth Potential Assessment in Lao PDR) ແລະ ຫລາຍກິດຈະກຳທີ່ປິ່ນອ້ອມວຽກງານການເຕີບໂຕສີຂຽວ ເຊັ່ນ: ການຝຶກອົບຮົມ, ການເຂົ້າເຖິງແຫລ່ງທຶນ, ການປະເມີນສະພາບຂີ້ເຫຍື້ອ, ນ້ຳເປື້ອນໃນ ສປປ ລາວ ແລະ ອື່ນໆ; ຜົນການສຶກສາດັ່ງກ່າວໄດ້ເປັນແຫລ່ງຂໍ້ມູນ ແລະ ບ່ອນອີງໜຶ່ງທີ່ສຳຄັນຂອງການກຳນົດຍຸດທະສາດສະບັບນີ້; ນອກນັ້ນ, ສະຖາບັນການເຕີບໂຕສີຂຽວໂລກ (GGGI) ຍັງໄດ້ຕັ້ງໜ້າເຂົ້າຮ່ວມຂະບວນການ, ໃຫ້ຄຳແນະນຳ ແລະ ປະກອບຄຳຄິດຄຳເຫັນທີ່ເປັນປະໂຫຍດຫລາຍອັນຕໍ່ຮ່າງຍຸດທະສາດສະບັບນີ້. ອົງການ UNIDO, ອົງການຈັດຕັ້ງສາກົນ ແລະ ຄູ່ຮ່ວມພັດທະນາອື່ນໆ ກໍ່ໄດ້ເຂົ້າຮ່ວມ ແລະ ປະກອບຄຳຄິດຄຳເຫັນທີ່ມີຄຸນຄ່າໃນຂະບວນການສ້າງຍຸດທະສາດສະບັບນີ້ຢ່າງຫ້າວຫັນ ແລະ ມີຊີວິດຊີວາ.

ເພາະສະນັ້ນ, ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ສະບັບນີ້ ຈຶ່ງແມ່ນໝາກຜົນຂອງການມີສ່ວນຮ່ວມ ແລະ ເປັນເອກະພາບຢ່າງກວ້າງຂວາງຂອງສັງຄົມ. ການສ້າງຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ສະບັບນີ້, ບໍ່ແມ່ນສ້າງຂຶ້ນເພື່ອປ່ຽນແທນຍຸດທະສາດ ແລະ ແຜນການຂອງຂະແໜງການ ແລະ ທ້ອງຖິ່ນທີ່ມີຢູ່ແລ້ວ. ແຕ່ເປັນຍຸດທະສາດເສີມ, ສ້າງຂຶ້ນເພື່ອເປັນທິດທາງ ແລະ ບ່ອນອີງໃນການເຊື່ອມສານການເຕີບໂຕສີຂຽວເຂົ້າໃນຍຸດທະສາດ ແລະ ແຜນການຂອງຂະແໜງການ ແລະ ທ້ອງຖິ່ນໃນແຕ່ລະໄລຍະໃຫ້ມີຄວາມເປັນເອກະພາບໃນການກຳນົດມາດຕະຖານ ແລະ ການຈຳກັດຄວາມບໍ່ສອດຄ່ອງກັນນັ້ນ ກໍ່ຄືເພື່ອຊຸກຍູ້ ແລະ ສົ່ງເສີມການຈັດຕັ້ງປະຕິບັດແຜນງານ ແລະ ໂຄງການທີ່ກ່ຽວຂ້ອງກັບການເຕີບໂຕສີຂຽວ-ຍືນຍົງໃນຍຸດທະສາດ ແລະ ແຜນພັດທະນາດັ່ງກ່າວໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ ເພື່ອຮັບປະກັນການບັນລຸເປົ້າໝາຍການພັດທະນາ

ເສດຖະກິດ-ສັງຄົມແຫ່ງຊາດ, ການພັດທະນາຂອງຂະແໜງການ ແລະ ທ້ອງຖິ່ນ ຕາມທິດສີຂຽວ-ຍືນຍົງຕາມທີ່ໄດ້ກຳນົດໄວ້ໃນວິໄສທັດ 2030, ຍຸດທະສາດໄລຍະ 10 ປີ (2016-2025) ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020).

ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ສະບັບນີ້ປະກອບດ້ວຍ 5 ພາກໃຫຍ່ ຄື: ພາກທີ I ຄວາມຕ້ອງການ ແລະ ຈຳເປັນພາວະວິໄສຂອງການສ້າງຍຸດທະສາດ ແລະ ສູນສົ່ງເສີມການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ. ພາກທີ II ຄວາມໝາຍ, ທີ່ຕັ້ງ, ພາລະບົດບາດ ແລະ ສາຍພົວພັນລະຫວ່າງຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ກັບຍຸດທະສາດ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນຂອງຂະແໜງການ ແລະ ທ້ອງຖິ່ນ. ພາກທີ III ກຳນົດຂົງເຂດ ແລະ ຂະແໜງການຈຸດສຸມ/ບູລິມະສິດຂອງການສົ່ງເສີມການເຕີບໂຕສີຂຽວໃນ ສປປ ລາວ. ພາກທີ IV ກົນໄກ ແລະ ມາດຕະການຈັດຕັ້ງປະຕິບັດຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ແລະ ພາກທີ V ລະບົບຕິດຕາມ, ປະເມີນຜົນ ແລະ ລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດວຽກງານການເຕີບໂຕສີຂຽວ ໃນແຕ່ລະໄລຍະ ດ້ວຍການສ້າງດັດຊະນີການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ. ລະບົບດັ່ງກ່າວໄດ້ຄິດໄລ່ຄ່າດັດຊະນີຂອງ ສປປ ລາວ ໃນປະຈຸບັນ ແລະ ກຳນົດຄາດໝາຍເຖິງປີ 2025 ແລະ 2030.

ແຕ່ເຖິງຢ່າງໃດກໍ່ຕາມ, ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ສະບັບນີ້ຍັງບໍ່ທັນໄດ້ກຳນົດແຜນງານ, ໂຄງການລະອຽດ ແລະ ຍັງບໍ່ທັນໄດ້ຄາດຄະເນຄວາມຕ້ອງການດ້ານງົບປະມານເພື່ອຈັດຕັ້ງປະຕິບັດແຜນງານ ແລະ ໂຄງການດັ່ງກ່າວ. ແຜນງານ, ໂຄງການ ແລະ ແຜນງົບປະມານດັ່ງກ່າວຍັງຈະຕ້ອງໄດ້ຮັບການຄົ້ນຄວ້າ ແລະ ຜັນຂະຫຍາຍໃຫ້ເປັນອັນລະອຽດແຕ່ລະໄລຍະ ພາຍຫລັງຍຸດທະສາດສະບັບນີ້ໄດ້ຮັບການຮັບຮອງ ແລະ ປະກາດຈັດຕັ້ງປະຕິບັດຢ່າງເປັນທາງການ.

ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດ ຂອງ ສປປ ລາວ ສະບັບນີ້, ບໍ່ແມ່ນຄຳພີຕາຍຕົວ; ແຕ່ເປັນເອກະສານທີ່ມີຊີວິດຊີວາທີ່ຈະຕ້ອງໄດ້ມີການຄົ້ນຄວ້າ, ປັບປຸງ ແລະ ປ່ຽນແປງໃຫ້ແທດເໝາະກັບສະພາບການ ແລະ ຄວາມຮຽກຮ້ອງຕ້ອງການຕົວຈິງຂອງການພັດທະນາເສດຖະກິດ-ສັງຄົມໃນ ສປປ ລາວ ໃນແຕ່ລະໄລຍະ.

# ພາກທີ I

# ຄວາມຕ້ອງການ ແລະ ຈຳເປັນພາວະວິໄສຂອງການສ້າງຍຸດທະສາດ ແລະ ສູນສົ່ງເສີມການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ແລະ ສະພາບການພັດທະນາເສດຖະກິດ-ສັງຄົມ

## 1.1. ສະພາບແວດລ້ອມ ແລະ ທ່າອ່ຽງລວມຂອງສາກົນ

ນັບແຕ່ທ້າຍສະຕະວັດທີ 20 ເປັນຕົ້ນມາ ຫລາຍປະເທດໃນໂລກໄດ້ເລັ່ງໃສ່ພັດທະນາດ້ານເສດຖະກິດຂອງຕົນໃຫ້ຂະຫຍາຍຕົວໂດຍໄວດ້ວຍການນຳໃຊ້ຊັບພະຍາກອນທຳມະຊາດຢ່າງຫລວງຫລາຍ, ຟູມເຟືອຍ, ຂາດປະສິດທິພາບ, ປະສິດທິຜົນ ແລະ ກ້າວໄປເຖິງຄວາມບໍ່ຍືນຍົງຂອງການພັດທະນາ; ໄດ້ສົ່ງຜົນກະທົບເຮັດໃຫ້ຊັບພະຍາກອນທຳມະຊາດບົກແຫ້ງລົງ ແລະ ເຊື່ອມໂຊມຢ່າງໄວວາ, ຄວາມສາມາດໃນການສະໜອງການບໍລິການຂອງລະບົບນິເວດຫລຸດລົງ ແລະ ສະພາບດິນຟ້າອາກາດມີການປ່ຽນແປງຢ່າງໄວວາ, ໂດຍສະເພາະແມ່ນການເພີ່ມຂຶ້ນຂອງອຸນຫະພູມ, ການປ່ຽນແປງຂອງອາກາດ, ການປ່ຽນແປງຂອງລະດູການ ແລະ ອື່ນໆ. ການບົກແຫ້ງ, ເຊື່ອມໂຊມຂອງຊັບພະຍາກອນທຳມະຊາດ ແລະ ການປ່ຽນແປງຂອງສະພາບດິນຟ້າອາກາດດັ່ງກ່າວໄດ້ສົ່ງຜົນກະທົບພາໃຫ້ເກີດໄພພິບັດທາງທຳມະຊາດທີ່ນັບມື້ຮ້າຍແຮງ ເຊັ່ນ: ພາຍຸ, ແຜ່ນດິນໄຫວ, ສືນາມິ, ໄພແຫ້ງແລ້ງ, ໄພນ້ຳຖ້ວມ ແລະ ອື່ນໆ ໄດ້ສົ່ງຜົນກະທົບຕໍ່ພື້ນຖານໂຄງລ່າງ, ຊັບພະຍາກອນທຳມະຊາດ, ທີ່ຢູ່ອາໄສ ແລະ ການຜະລິດກະສິກຳທີ່ເປັນແຫລ່ງສະບຽງອາຫານຂອງມວນມະນຸດ. ຫລາຍກວ່ານັ້ນ, ມົນລະພາວະທາງອາກາດ, ສຽງ, ກິ່ນ ແລະ ອື່ນໆ ທີ່ເກີດຈາກການຂະຫຍາຍຕົວຂອງໂຮງງານອຸດສາຫະກຳ, ການຂົນສົ່ງ, ຕົວເມືອງ ແລະ ຂົງເຂດອື່ນໆທີ່ບໍ່ຄຳນຶງເຖິງສະພາບແວດລ້ອມຍັງເປັນສາຍເຫດຕົ້ນຕໍຂອງໂລກໄພໄຂ້ເຈັບ ແລະ ພະຍາດຕ່າງໆ ເຊັ່ນ: ມະເຮັງປອດ, ໂລກຜີວໜັງ, ແລະ ອື່ນໆ. ຕາມສະຖິຕິຂອງອົງການອະນາໄມໂລກ (WHO), ໃນແຕ່ລະປີມີຫລາຍກວ່າ 7 ລ້ານຄົນໃນທົ່ວໂລກເສຍຊີວິດຍ້ອນພະຍາດຕ່າງໆທີ່ກ່ຽວຂ້ອງກັບມົນລະພິດທາງອາກາດ[2]. ປະຊາກອນຫລາຍລ້ານຄົນສ່ຽງຕໍ່ການການສູນເສຍທີ່ຢູ່ອາໄສຖາວອນຍ້ອນການເພີ່ມຂຶ້ນຂອງອຸນຫະພູມ ແລະ ການສູງຂຶ້ນຂອງໜ້ານ້ຳທະເລ.

ຜົນຂອງການພັດທະນາເສດຖະກິດ-ສັງຄົມ ທີ່ມີລັກສະນະບໍ່ຍືນຍົງໃນໄລຍະຜ່ານມາໄດ້ເຮັດໃຫ້ຈິດສຳນຶກ ແລະ ທິດທາງຂອງການພັດທະນາເສດຖະກິດ-ສັງຄົມຂອງຫລາຍປະເທດໃນໂລກມີການປ່ຽນແປງ.

ບັນດາປະເທດດັ່ງກ່າວໄດ້ໃຫ້ຄວາມສຳຄັນຕໍ່ກັບການປົກປັກຮັກສາສິ່ງແວດລ້ອມ ແລະ ການພັດທະນາດ້ານສັງຄົມ ໄປພ້ອມໆກັບການພັດທະນາເສດຖະກິດນັບມື້ນັບຫລາຍຂຶ້ນ ໄດ້ເຮັດໃຫ້ການເຕີບໂຕສີຂຽວ-ຍືນຍົງ ຫລືການພັດທະນາເສດຖະກິດທີ່ຄຳນຶງເຖິງສັງຄົມ ແລະ ສິ່ງແວດລ້ອມໄດ້ກາຍເປັນທ່າອ່ຽງລວມຂອງໂລກໃນສະໄໝປະຈຸບັນ. ລັດຖະບານຂອງຫລາຍປະເທດ ໄດ້ກຳນົດນະໂຍບາຍການພັດທະນາເສດຖະກິດ-ສັງຄົມຂອງຕົນຕາມທິດສີຂຽວ-ຍືນຍົງ ເພື່ອຮັບປະກັນການປົກປັກຮັກສາສິ່ງແວດລ້ອມ, ບັນເທົາການປ່ຽນແປງ ຂອງສະພາບດິນຟ້າອາກາດ ແລະ ຜົນກະທົບທາງສັງຄົມ. ຕົວຢ່າງ: ສປ.ຈີນ ໄດ້ກຳນົດເປົ້າໝາຍຫລຸດຜ່ອນການປ່ອຍທາດອາຍກາກໂບນິກໃຫ້ໄດ້ 40-45% ພາຍໃນປີ 2020; ອິນເດຍ ຕັ້ງເປົ້າໝາຍຫລຸດຜ່ອນການນຳໃຊ້ພະລັງງານໃຫ້ໄດ້ 20-25% ໃນປີ 2020 ຈາກລະດັບການຊົມໃຊ້ໃນປີ 2005; ອິນໂດເນເຊຍ ຕັ້ງເປົ້າໝາຍຫລຸດການປ່ອຍທາດອາຍພິດເຮືອນແກ້ວໃຫ້ໄດ້ 26% ຕ່ຳກວ່າລະດັບ BAU ໃນປີ 2020; ປະເທດໄທ ຕັ້ງເປົ້າໝາຍການຫລຸດຜ່ອນການນຳໃຊ້ພະລັງງານລົງ 25% ໃນປີ 2030 ຈາກລະດັບປີ 2005; ສສ.ຫວຽດນາມ ຕັ້ງເປົ້າໝາຍຫລຸດຜ່ອນການປ່ອຍທາດອາຍພິດເຮືອນແກ້ວໃຫ້ໄດ້ 10-15% ໃນປີ 2020 ແລະ ສືບຕໍ່ຫລຸດຜ່ອນການປ່ອຍທາດອາຍພິດເຮືອນແກ້ວໃຫ້ໄດ້ 2-3% ຕໍ່ປີຈົນ

2 https://www.paho.org/salud-en-las-americas-2017/?p=53.

ເຖິງປີ 2030. ສຳລັບ ສ.ເກົາຫລີ ໄດ້ຕັ້ງເປົ້າໝາຍຫລຸດຜ່ອນການປ່ອຍອາຍພິດເຮືອນແກ້ວໃຫ້ໄດ້ 30% ຕ່ຳກວ່າລະດັບ BAU ໃນປີ 2020 (Jacob, Kauppert ແລະ Quitzow, 2013). ອົງການສະຫະປະຊາຊາດເພື່ອການພັດທະນາ (UNDP) ໄດ້ກຳນົດເອົາການພັດທະນາແບບຍືນຍົງ (SDGs) ເປັນເປົ້າໝາຍການພັດທະນາເຖິງປີ 2030 ເພື່ອໃຫ້ການພັດທະນາແບບດັ່ງກ່າວກາຍເປັນພັນທະຂອງທຸກປະເທດ. ບັນດາອົງການຈັດຕັ້ງສາກົນ ແລະ ສະຖາບັນການເງິນມີບົດບາດຕໍ່ການພັດທະນາຂອງໂລກ ເຊັ່ນ: ທະນາຄານໂລກ (WB), ທະນາຄານພັດທະນາອາຊີ (ADB) ແລະ ອື່ນໆ ກໍ່ລ້ວນແຕ່ຖືເອົາການພັດທະນາເສດຖະກິດ-ສັງຄົມຕາມທິດສີຂຽວ-ຍືນຍົງ ເປັນເງື່ອນໄຂໃນການປ່ອຍເງິນກູ້ໃຫ້ແກ່ລັດຖະບານ ແລະ ໂຄງການພັດທະນາຕ່າງໆ.

ກອງປະຊຸມລັດຖະສະພາອາຊຽນຄັ້ງທີ35ທີ່ຈັດຂຶ້ນວັນທີ17ກັນຍາ2014,ບັນດາປະເທດສະມາຊິກອາຊຽນ (ASEAN) ໄດ້ຕົກລົງເປັນເອກະພາບກັນໃຫ້ແຕ່ລະປະເທດສ້າງຍຸດທະສາດ ແລະ ສູນສົ່ງເສີມການເຕີບໂຕສີຂຽວຂອງຕົນຂຶ້ນເພື່ອເປັນບ່ອນອີງ ແລະ ເປັນກົນໄກປະສານງານໃນການຊຸກຍູ້ສົ່ງເສີມວຽກງານການເຕີບໂຕສີຂຽວຢ່າງເປັນລະບົບ ແລະ ມີປະສິດທິພາບ[3]. ປະຈຸບັນ, ຫລາຍປະເທດສະມາຊິກອາຊຽນ ເຊັ່ນ: ສສ. ຫວຽດນາມ, ກຳປູເຈຍ, ອິນໂດເນເຊຍ ແລະ ອື່ນໆກໍ່ມີຍຸດທະສາດ ແລະ ສູນສົ່ງເສີມການເຕີບໂຕສີຂຽວຂອງຕົນ. ເພາະສະນັ້ນ, ເພື່ອປະຕິບັດຕາມມະຕິຕົກລົງຂອງລັດຖະສະພາອາຊຽນ ຄັ້ງທີ 35 ກໍ່ຄືເພື່ອໃຫ້ສອດຄ່ອງກັບທ່າອ່ຽງລວມຂອງການພັດທະນາເສດຖະກິດ-ສັງຄົມຂອງສາກົນ ແລະ ພາກພື້ນ ສປປ ລາວ ຈະຕ້ອງໄດ້ມີຍຸດທະສາດ ແລະ ສູນສົ່ງເສີມການເຕີບໂຕສີຂຽວຂອງຕົນຂຶ້ນ.

## 1.2. ສະພາບການພັດທະນາເສດຖະກິດ-ສັງຄົມຂອງ ສປປ ລາວ

ການສ້າງຍຸດທະສາດ ແລະ ສູນສົ່ງເສີມການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ບໍ່ພຽງແຕ່ເປັນການປະຕິບັດຕາມທ່າອ່ຽງລວມຂອງໂລກ ແລະ ພັນທະສາກົນເທົ່ານັ້ນ ແຕ່ຍັງແມ່ນຄວາມຮຽກຮ້ອງຕ້ອງການ ແລະ ຈຳເປັນພາວະວິໄສຂອງການພັດທະນາເສດຖະກິດ-ສັງຄົມຂອງ ສປປ ລາວ ເອງ ເພື່ອຮັບປະກັນການບັນລຸເປົ້າໝາຍການພັດທະນາເສດຖະກິດ-ສັງຄົມແຫ່ງຊາດໄລຍະຍາວ ເຊັ່ນ: ການຫລຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ໃນປີ 2020 ຢ່າງຍືນຍົງ, ການບັນລຸເປົ້າໝາຍການພັດແບບຍືນຍົງ (SDGs) ແລະ ກາຍເປັນປະເທດກຳລັງພັດທະນາ ທີ່ມີລະດັບລາຍຮັບປານກາງສູງ ໃນປີ 2030 ຕາມທີ່ໄດ້ກຳນົດໄວ້ໃນວິໄສທັດ 2030 ແລະ ຍຸດທະສາດໄລຍະ 10 ປີ (2016-2025)[4].

ໃນທົດສະວັດຜ່ານມາ, ສປປ ລາວ ປະສົບຜົນສຳເລັດຢ່າງໃຫຍ່ຫລວງໃນການພັດທະນາເສດຖະກິດ ແລະ ຫລຸດຜ່ອນຄວາມທຸກຍາກ. ຕາມຕົວເລກສະຖິຕິໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020), ລາຍຮັບສະເລ່ຍຕໍ່ຫົວຄົນເພີ່ມຂຶ້ນຈາກ 1.217 ໂດລາສະຫະລັດຕໍ່ຄົນຕໍ່ປີ ໃນປີ 2011 ເປັນ 1.970 ໂດລາສະຫະລັດຕໍ່ຄົນຕໍ່ປີ ໃນປີ 2015[5]; ເຊິ່ງກົງກັບອັດຕາການຂະຫຍາຍຕົວສະເລ່ຍປະມານ 7,9% ຕໍ່ປີ; ອັດຕາສ່ວນຜູ້ທຸກຍາກຫລຸດລົງຈາກ 27,6% ໃນປີ 2008 ມາເປັນປະມານ 20% ໃນປີ 2015[6], ໂດຍສະເລ່ຍແລ້ວຫລຸດຫລາຍກວ່າ 1% ຕໍ່ປີ (Percent point). ສປປ ລາວ ໄດ້ເປັນໜຶ່ງໃນບັນດາປະເທດທີ່ມີລະດັບການຂະຫຍາຍຕົວທາງດ້ານເສດຖະກິດສູງທີ່ສຸດໃນຂົງເຂດອາຊີຕາເວັນອອກ ແລະ ອາຊີປາຊີຟິກ[7].

---

3 ລັດຖະບານແຫ່ງ ສປປ ລາວ. 2014. ແຈ້ງການຂອງຫ້ອງວ່າການລັດຖະບານ (ສຳນັກງານນາຍົກລັດຖະມົນຕີ) ສະບັບເລກທີ 1751/ຫລ.ກລຂ, ລົງວັນທີ 8 ທັນວາ 2014, ກ່ຽວກັບການມອບໝາຍໃຫ້ກະຊວງແຜນການ ແລະ ການລົງທຶນເປັນເຈົ້າການສົມທົບກັບກະຊວງການຕ່າງປະເທດ ແລະ ຂະ ແໜງການກ່ຽວຂ້ອງຮັບຜິດຊອບສ້າງຍຸດທະສາດ ແລະ ສູນສົ່ງເສີມການເຕີບໂຕສີຂຽວຂອງ ສປປ ລາວ.

4 ລັດຖະບານແຫ່ງ ສປປ ລາວ. 2016. ວິໄສທັດ 2030 ແລະ ຍຸດທະສາດໄລຍະ 10 ປີ (2016-2025). ນະຄອນຫລວງວຽງຈັນ. 2016.

5 ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ VIII (2016-2020).

6 ແຜນພັດທະນນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ VIII (2016-2020).

7 http://www.worldbank.org/en/country/lao/publication/lao-economic-monitor-may-2016-challenges-in-promoting-more-inclusive-growth-and-shared-prosperity.

ແຕ່ເຖິງຢ່າງໃດກໍ່ຕາມ, ການຂະຫຍາຍຕົວໄວທາງເສດຖະກິດ ແລະ ການຫລຸດລົງຂອງຄວາມທຸກຍາກດັ່ງກ່າວແມ່ນໄດ້ມາຍ້ອນການນຳໃຊ້ຊັບພະຍາກອນທຳມະຊາດຢ່າງຫລວງຫລາຍ, ມີລັກສະນະຟຸມເຟືອຍ, ຂາດປະສິດທິພາບ, ປະສິດທິຜົນ ແລະ ຄວາມຍືນຍົງ ເປັນຕົ້ນເຫດຂອງຫລາຍບັນຫາເປັນຕົ້ນແມ່ນ:

- ***ການເຊື່ອມໂຊມ ແລະ ຫລຸດໜ້ອຍຖອຍລົງຂອງຊັບພະຍາກອນທຳມະຊາດ:*** ການພັດທະນາເສດຖະກິດ-ສັງຄົມ ແລະ ຫລຸດຜ່ອນຄວາມທຸກຍາກໃນໄລຍະຜ່ານມາໄດ້ມາຈາກການນຳໃຊ້ຊັບພະຍາກອນທຳມະຊາດຢ່າງຫລວງຫລາຍ, ຂາດປະສິດທິພາບ, ມີລັກສະນະຟູມເຟືອຍ ແລະ ຂາດຄວາມຍືນຍົງ ເປັນຕົ້ນແມ່ນ: ປ່າໄມ້, ດິນປູກຝັງ, ບໍ່ແຮ່, ຊັບພະຍາກອນນ້ຳ, ຊີວະນາໆພັນ ແລະ ອື່ນໆ. ໄດ້ສົ່ງຜົນກະທົບເຮັດໃຫ້ຊັບພະຍາກອນທຳມະຊາດດັ່ງກ່າວເຊື່ອມໂຊມ ແລະ ບົກແຫ້ງຢ່າງໄວວາ. ຕາມຕົວເລກສະຖິຕິ, ເນື້ອທີ່ປົກຫຸ້ມຂອງປ່າໄມ້ໃນ ສປປ ລາວ ຫລຸດລົງຢ່າງຕໍ່ເນື່ອງ ແລະ ໄວວາຈາກປະມານ 50% ໃນປີ 1982 ມາເປັນປະມານ 40% ໃນປີ 2010[8] ເນື່ອງຈາກການລັກຕັດໄມ້ແບບຜິດກົດໝາຍ, ການຂຸດຄົ້ນເພື່ອການສົ່ງອອກ ແລະ ຕອບສະໜອງຄວາມຕ້ອງການພາຍໃນປະເທດກໍ່ຄືການໃຫ້ສຳປະທານດິນ ເພື່ອຂະຫຍາຍເນື້ອທີ່ຜະລິດກະສິກຳ ແລະ ການພັດທະນາໂຄງການພື້ນຖານໂຄງລ່າງ ແລະ ອື່ນໆ. ຕາມຜົນການລາຍງານຂອງອົງການສະຫະປະຊາຊາດເພື່ອການພັດທະນາ (UNDP), ການຫລຸດລົງຂອງເນື້ອທີ່ປ່າໄມ້ດັ່ງກ່າວສົ່ງຜົນກະທົບຕໍ່ແຫລ່ງນ້ຳ, ຄວາມຫລາກຫລາຍຂອງຊີວະນາໆພັນ ແລະ ວິຖີການດຳລົງຊີວິດແບບດັ້ງເດີມຂອງປະຊາຊົນ[9]. ດິນປູກຝັງທີ່ເຄີຍອຸດົມສົມບູນຫລາຍສິບພັນເຮັກຕາ ໄດ້ກາຍເປັນດິນປອກໂລ້ນ ແລະ ເຊື່ອມໂຊມຍ້ອນການນຳໃຊ້ແບບບໍ່ຍືນຍົງ, ປະຊາກອນຂອງສັດປົກ ແລະ ສັດນ້ຳຫລາຍຊະນິດທີ່ເປັນແຫລ່ງສະບຽງອາຫານຂອງປະຊາຊົນໄດ້ຫລຸດລົງ ແລະ ໃກ້ຈະສູນພັນ; ຫ້ວຍ, ໜອງ, ຄອງ, ບຶງ ແລະ ແມ່ນ້ຳລຳເຊຫລາຍສາຍບົກແຫ້ງ. ແຮ່ທາດຈຳນວນຫລາຍລ້ານໂຕນໄດ້ຮັບການຂຸດຄົ້ນ ແລະ ສົ່ງອອກໃນຮູບວັດຖຸດິບທີ່ມີມູນຄ່າຕ່ຳ.

- ***ຄວາມບອບບາງຂອງເສດຖະກິດ:*** ເນື່ອງຈາກເສດຖະກິດຂອງ ສປປ ລາວ ມີຂະໜາດນ້ອຍ, ມີລັກສະນະເຕົ້າໂຮມສູງໃນຂະແໜງການຈຳນວນໜຶ່ງເທົ່ານັ້ນ ແລະ ເປັນເສດຖະກິດທີ່ເອື່ອຍອີງໃສ່ການນຳໃຊ້ຊັບພະຍາກອນທຳມະຊາດ ແລະ ສະພາບດິນຟ້າອາກາດ ເຊັ່ນ: ການຜະລິດກະສິກຳຂະໜາດນ້ອຍທີ່ມີລັກສະນະກຸ້ມຕົນເອງ, ໄຟຟ້າພະລັງງານນ້ຳ, ບໍ່ແຮ່ ແລະ ການທ່ອງທ່ຽວ ແລະ ຂາດຄວາມຫລາກຫລາຍໃນສາຍພົວພັນການຄ້າກັບຕ່າງປະເທດ ແລະ ຜະລິດຕະພັນສົ່ງອອກ. ເພາະສະນັ້ນ, ເສດຖະກິດຂອງ ສປປ ລາວ ຈຶ່ງຍັງມີຄວາມສ່ຽງ ແລະ ຄວາມບອບບາງສູງຕໍ່ສະພາບການປ່ຽນແປງດິນຟ້າອາກາດ, ໄພພິບັດທາງທຳມະຊາດ ແລະ ການເໜັງຕີງຂອງສະພາບເສດຖະກິດໂລກ. ໃນປີ 2015, ອົງການສະຫະປະຊາດເພື່ອການພັດທະນາ (UNDP) ໄດ້ຄິດໄລ່ດັດຊະນີຄວາມບອບບາງທາງເສດຖະກິດ (Economic Vulnerilbility Index) ເທົ່າກັບປະມານ 36,8[10] ເຊິ່ງຍັງສູງກວ່າມາດຖານການຫລຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ປະມານ 0,8 ຈຸດ. (ມາດຖານການຫລຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາແມ່ນຕ່ຳກວ່າ 36). ການປ່ຽນແປງສະພາບດິນຟ້າອາກາດ, ໄພພິບັດທາງທຳມະຊາດ, ການເໜັງຕີງຂອງລາຄາສິນຄ້າສົ່ງອອກໃດໜຶ່ງຂອງ ສປປ ລາວ ຫລື ວິກິດການເສດຖະກິດ ຢູ່ປະເທດໃດໜຶ່ງທີ່ເປັນຄູ່ຄ້າຂອງ ສປປ ລາວ ກໍ່ສາມາດເຮັດໃຫ້ເສດຖະກິດຂອງ ສປປ ລາວ ປະສົບກັບບັນຫາ.

- ***ຄວາມບໍ່ສະເໝີພາບໃນສັງຄົມ:*** ນອກຈາກບັນຫາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຕ່າງໆທີ່ໄດ້ກ່າວມາຂ້າງເທິງນັ້ນແລ້ວ, ການຂະຫຍາຍຕົວໄວຂອງເສດຖະກິດຂອງ ສປປ ລາວ ໃນໄລຍະຜ່ານມາຍັງມີຜົນເຮັດໃຫ້ຄວາມບໍ່ສະເໝີພາບໃນສັງຄົມນັບມື້ນັບສູງຂຶ້ນ. ດັດຊະນີຄວາມບໍ່ສະເໝີພາບດ້ານລາຍຮັບ (GINI) ຂອງ ສປປ ລາວ ເພີ່ມຂຶ້ນຢ່າງຕໍ່ເນື່ອງ ແລະ ໄວວາ ຈາກ 34,3% ໃນປີ 1992 ເປັນ 36,4% ໃນປີ 2012[11]. ຕາມຕົວ

---

8 Chittana Phompola, et. 2017. Forest Cover Change in Lao Tropical Forest: Physical and Socio-Economic Factors are the Most Important Drivers. 2017. (Electronic publication).

9 UNDP. 2011. Economic, Spcial and Environmental Impacts of Investment in Lao PDR: Case Study in Savannakhet Province. Vientiane Capital. 2011.

10 UNDP. 2017.5th National Human Development Report.Graduation from Least Develelped Country Status. Lao PDR. 2017.

11 https://www.indexmundi.com/facts/lao-pdr/indicator/SI.POV.GINI.

ເລກສະຖິຕິໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ VIII (2016-2020), ຍັງມີປະຊາກອນປະມານ 1,3 ລ້ານຄົນ ຫລື ເທົ່າກັບປະມານ 20%[12] ຂອງຈໍານວນປະຊາກອນທັງໝົດ ທີ່ຍັງດໍາລົງຊີວິດຢູ່ລຸ່ມເສັ້ນຄວາມທຸກຍາກແຫ່ງຊາດ; ໝາຍຄວາມວ່າ ຍັງບໍ່ທັນມີທີ່ຢູ່ອາໄສຖາວອນ, ເຄື່ອງນຸ່ງຫົ່ມ ແລະ ອາຫານການກິນຍັງບໍ່ພຽງພໍ. ຫລາຍກວ່າ 15% ຍັງບໍ່ທັນສາມາດເຂົ້າເຖິງແຫລ່ງນໍ້າທີ່ສະອາດ, ຫລາຍກວ່າ 30% ຍັງບໍ່ທັນສາມາດນໍາໃຊ້ວິດຖ່າຍທີ່ຖືກຕ້ອງຕາມຫລັກສຸຂະອະນາໄມ ແລະ ປະມານ 40% ຂາດສານອາຫານ. ສ່ວນໃຫຍ່ຂອງປະຊາຊົນຜູ້ທຸກຍາກດັ່ງກ່າວດໍາລົງຊີວິດຢູ່ເຂດຊົນນະບົດ, ຫ່າງໄກສອກຫລີກທາງພາກເໜືອ ແລະ ພາກຕາເວັນອອກຂອງປະເທດ[13].

- ***ການເຊື່ອມໂຊມຂອງສະພາບແວດລ້ອມໃນຕົວເມືອງ:*** ນອກຈາກການເຊື່ອມໂຊມ ແລະ ບົກແຫ້ງຂອງຊັບພະຍາກອນທໍາມະຊາດ, ຄວາມບອບບາງຂອງເສດຖະກິດ ແລະ ຄວາມບໍ່ສະເໝີພາບທາງສັງຄົມ ທີ່ໄດ້ກ່າວມາຂ້າງເທິງແລ້ວການພັດທະນາເສດຖະກິດ ແລະ ຫລຸດຜ່ອນຄວາມທຸກຍາກໃນໄລຍະຜ່ານມາ, ຍັງໄດ້ສົ່ງຜົນກະທົບເຮັດໃຫ້ສະພາບແວດລ້ອມໃນຕົວເມືອງນັບມື້ນັບເຊື່ອມໂຊມ ເປັນຕົ້ນແມ່ນ: ການເພີ່ມຂຶ້ນຂອງມົນລະພິດທາງອາກາດ, ກິ່ນ, ສຽງ, ສິ່ງເສດເຫລືອ, ນໍ້າເປື້ອນ, ບັນຫາລົດແອອັດ, ອຸປະຕິເຫດເທິງທ້ອງຖະໜົນ ແລະ ອື່ນໆ ທີ່ເນື່ອງມາຈາກການເພີ່ມຂຶ້ນຢ່າງໄວວາຂອງຈໍານວນປະຊາກອນໃນຕົວເມືອງ, ການຂະຫຍາຍຕົວຢ່າງໄວວາຂອງຈໍານວນພາຫະນະ, ໂຮງງານອຸດສາຫະກໍາ ແລະ ອື່ນໆ ບວກກັບລະບົບການຄຸ້ມຄອງ ແລະ ບໍລິຫານຕົວເມືອງທີ່ຍັງຂາດປະສິດທິພາບ ໄດ້ເຮັດໃຫ້ຄຸນນະພາບຂອງການດໍາລົງຊີວິດຂອງປະຊາຊົນໃນຕົວເມືອງນັບມື້ນັບຫລຸດໜ້ອຍຖອຍລົງ, ໂດຍສະເພາະແມ່ນໃນຕົວເມືອງໃຫຍ່ທີ່ມີພົນລະເມືອງເຄື່ອນຍ້າຍເຂົ້າມາຢູ່ຢ່າງໜາແໜ້ນ ເຊັ່ນ: ນະຄອນຫລວງວຽງຈັນ, ສະຫວັນນະເຂດ, ຫລວງພະບາງ ແລະ ປາກເຊ.

- ***ການເພີ່ມຂຶ້ນຂອງການປ່ອຍທາດອາຍພິດເຮືອນແກ້ວ:*** ເຖິງແມ່ນວ່າ ສປປ ລາວ ຍັງເປັນປະເທດທີ່ປ່ອຍທາດອາຍພິດເຮືອນແກ້ວໃນລະດັບຕໍ່າ ແລະ ມີຂີດຄວາມສາມາດໃນການດູດຊຶມທາດອາຍພິດດັ່ງກ່າວຫລາຍກວ່າການປ່ອຍກໍ່ຕາມ, ແຕ່ການປ່ອຍທາດອາຍພິດເຮືອນແກ້ວໃນ ສປປ ລາວ ໄດ້ເພີ່ມຂຶ້ນຢ່າງວ່ອງໄວຈາກ 24,200KtCo$_2$[14] ທຽບເທົ່າໃນປີ 1990 ເປັນ 51,000KtCo$_2$[15] ທຽບເທົ່າ ໃນປີ 2000 ແລະ ເປັນ 161,517KtCo$_2$[16] ທຽບເທົ່າ ໃນປີ 2012. ໝາຍຄວາມວ່າໂດຍສະເລ່ຍແລ້ວການປ່ອຍທາດອາຍພິດເຮືອນແກ້ວໃນ ສປປ ລາວ ມີອັດຕາການຂະຫຍາຍຕົວສະເລ່ຍປະມານ 10% ໃນຊ່ວງແຕ່ປີ 1990 ເຖິງ 2000 ແລະ ປະມານ 18% ໃນໄລຍະ 2000 ເຖິງ 2012; ເຊິ່ງຖືວ່າເປັນອັດຕາການຂະຫຍາຍຕົວທີ່ສູງເນື່ອງຈາກການເພີ່ມຂຶ້ນຂອງການຕັດໄມ້ເພື່ອການສົ່ງອອກ ແລະ ຂະຫຍາຍເນື້ອທີ່ຜະລິດກະສິກໍາ, ການເພີ່ມຂຶ້ນຂອງພາຫະນະ ແລະ ໂຮງງານອຸດສາຫະກໍາ, ການເພີ່ມຂຶ້ນຂອງການນໍາໃຊ້ພະລັງງານ ແລະ ສິ່ງເສດເຫລືອຕ່າງໆ. ຖ້າການເພີ່ມຂຶ້ນຂອງການປ່ອຍທາດອາຍພິດເຮືອນແກ້ວດັ່ງກ່າວ ຍັງສືບຕໍ່ທ່າອ່ຽງເດີມ, ສປປ ລາວ ຈະສູນເສຍສະຖານະພາບການເປັນປະເທດດູດຊຶມທາດອາຍພິດເຮືອນແກ້ວ. ຕາມຜົນການສໍາຫລວດທາດອາຍພິດເຮືອນແກ້ວຄັ້ງທີ 2 ຂອງອົງການສະຫະປະຊາຊາດເພື່ອການພັດທະນາ (UNDP), 83% ຂອງທາດອາຍພິດເຮືອນແກ້ວຖືກປ່ອຍອອກໃນຂົງເຂດການປ່ຽນແປງການນໍາໃຊ້ທີ່ດິນ ແລະ ປ່າໄມ້ (LUCF); ໝາຍຄວາມວ່າຈາກການຖືກທໍາລາຍຂອງປ່າໄມ້ຍ້ອນສາເຫດຕ່າງໆ ເຊັ່ນ: ການຂຸດຄົ້ນໄມ້, ການຖາງປ່າ ເພື່ອຂະຫຍາຍເນື້ອທີ່ການຜະລິດກະສິກໍາ ແລະ ການພັດທະນາໂຄງການພື້ນຖານໂຄງລ່າງຕ່າງໆ ແລະ ປະມານ 15% ຂອງທາດອາຍພິດເຮືອນແກ້ວດັ່ງກ່າວແມ່ນຖືກປ່ອຍຈາກຂົງເຂດກະສິກໍາ ແລະ ປະມານ 2% ຢູ່ໃນຂົງເຂດພະລັງງານ[17] ການເພີ່ມຂຶ້ນຂອງການປ່ອຍທາດອາຍພິດເຮືອນແກ້ວໃນ ສປປ ລາວ ດັ່ງກ່າວໄດ້ປະ

12 ລັດຖະບານແຫ່ງ ສປປ ລາວ. 2016. ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020).
13 The National Statistical Center. 2014.Poverty Profile in Lao PDR. Vientiane Capital. 2014.
14 The Ministry of Natural Resource and Environment. 2013. Second National Communication on Climate Change. Vientiane Capital. March 2013.
15 The Ministry of Natural Resource and Environment. 2013. Second National Communication on Climate Change. Vientiane Capital. March 2013.
16 https://data.worldbank.org/indicator/EN.ATM.GHGT.KT.CE?locations=US-CN-LA&view=chart.
17 The Ministry of Natural Researces and Environment. 2013. The Second national Communication on Climate Change of Lao PDR. Vientiane Capital. 2013.

ກອບສ່ວນເຮັດໃຫ້ສະພາບດິນຟ້າອາກາດຢູ່ພາຍໃນປະເທດ, ພາກພື້ນ ແລະ ໃນໂລກມີການປ່ຽນແປງ, ໂດຍສະເພາະແມ່ນປະກອບສ່ວນເຂົ້າໃນການເຮັດໃຫ້ອຸນຫະພູມ, ປະລິມານນໍ້າຝົນ ແລະ ການເໜັງຕີງຂອງອາກາດເພີ່ມຂຶ້ນ.

- ***ສະພາບການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດທາງທຳມະຊາດ:*** ການຂະຫຍາຍຕົວຂອງເສດຖະກິດທີ່ນຳໃຊ້ຊັບພະຍາກອນທຳມະຊາດຢ່າງຫລວງຫລາຍ, ຟູມເຟືອຍ ແລະ ບໍ່ມີປະສິດທິພາບດັ່ງກ່າວໄດ້ເຮັດໃຫ້ຊັບພະຍາກອນທຳມະຊາດຂອງ ສປປ ລາວ ນັບມື້ນັບບົກແຫ້ງລົງ, ປະກອບສ່ວນເຂົ້າໃນການເຮັດໃຫ້ສະພາບດິນຟ້າອາກາດ ແລະ ລະບົບນິເວດຢູ່ພາຍໃນປະເທດ, ພາກພື້ນ ແລະ ໃນໂລກມີການປ່ຽນແປງ, ໂດຍສະເພາະແມ່ນການເພີ່ມຂຶ້ນຂອງອຸນຫະພູມ, ການແກ່ຍາວ ແລະ ແຫ້ງແລ້ງຂຶ້ນຂອງລະດູແລ້ງ, ຝົນຕົກຊ້າ, ຝົນຕົກໜັກ, ລົມພາຍຸຮຸນແຮງ ແລະ ອື່ນໆ; ໄດ້ສົ່ງຜົນກະທົບທາງດ້ານລົບຕໍ່ການຜະລິດກະສິກຳ ແລະ ພາໃຫ້ເກີດໄພພິບັດທາງທຳມະຊາດຕ່າງໆ ເຊັ່ນ: ໄພແຫ້ງແລ້ງ, ໄພນໍ້າຖ້ວມ, ພາຍຸ, ພະຍາດລະບາດ, ດິນເຈື່ອນ, ແຜ່ນດິນໄຫວ ແລະ ອື່ນໆ. ຕາມສະຖິຕິຈາກກະຊວງແຜນການ ແລະ ການລົງທຶນ, ນັບແຕ່ປີ 1970 ເຖິງ ປີ 2010, ສປປ ລາວ ປະສົບໄພນໍ້າຖ້ວມຮຸນແຮງ 33 ຄັ້ງ ທີ່ໄດ້ສົ່ງຜົນກະທົບຕໍ່ປະຊາກອນປະມານ 9 ລ້ານເທື່ອຄົນ ແລະ ສ້າງຜົນເສຍຫາຍສູງກວ່າ 400 ລ້ານໂດລາສະຫັດລັດ (ຜທ, 2012). ຕາມຕົວເລກຈາກທະນາຄານໂລກ, ມູນຄ່າຜົນເສຍຫາຍຈາກໄພນໍ້າຖ້ວມໃນແຕ່ລະປີຢູ່ລະຫວ່າງ 2,8% ເຖິງ 3,6% ຂອງ GDP ແລະ ລັດຖະບານໃຊ້ງົບປະມານປະມານ 2,7% ເຂົ້າໃນການປ້ອງກັນ ແລະ ບັນເທົາອຸທົກກະໄພດັ່ງກ່າວ (ບົດລາຍງານທະນາຄານໂລກ, 2014). ສະພາບຜົນກະທົບຂອງສະພາບການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດທາງທຳມະຊາດດັ່ງກ່າວນັບມື້ຖີ່ຂຶ້ນ, ຮຸນແຮງຂຶ້ນ ແລະ ສ້າງຜົນເສຍໃຫ້ແກ່ຊີວິດ ແລະ ຊັບສິນຂອງປະຊາຊົນຫລາຍຂຶ້ນ.

ໃນປີ 2009, ພະຍຸເກດສະນາ (Ketsana) ກະທົບ 4 ແຂວງພາກໃຕ້ຂອງ ສປປ ລາວ ມີຈຳນວນຜູ້ໄດ້ຮັບຜົນກະທົບທັງໝົດ 180.000 ຄົນ, ເສຍຊີວິດ 28 ຄົນ, ມີເຮືອນຂອງປະຊາຊົນໄດ້ຮັບຄວາມເສຍຫາຍຫລາຍກວ່າ 6.100 ຫລັງ, ເນື້ອທີ່ກະສິກຳເສຍຫາຍ 36.000 ເຮັກຕາ ແລະ ອື່ນໆ; ຜົນເສຍຫາຍທັງໝົດຄິດເປັນມູນຄ່າ 518 ລ້ານໂດລາສະຫະລັດ. ໃນປີ 2011, 8 ແຂວງຂອງ ສປປ ລາວ ໄດ້ຮັບຜົນກະທົບຈາກພາຍຸໄຮມາ/ນົກເຕັນ (Haima/Nok-Ten), ມີຈຳນວນຜູ້ໄດ້ຮັບຜົນກະທົບທັງໝົດ 421.000 ຄົນ, ມີຜູ້ເສຍຊີວິດທັງໝົດ 30 ຄົນ, ເຮືອນຂອງປະຊາຊົນເສຍຫາຍຫລາຍກວ່າ 892 ຫລັງ, ເນື້ອທີ່ກະສິກຳເສຍຫາຍ 111.000 ເຮັກຕາ. ລວມມູນຄ່າຜົນເສຍຫາຍຫລາຍກວ່າ 154 ລ້ານໂດລາສະຫະລັດ. ໃນປີ 2013 ມີ 12 ແຂວງ ໄດ້ຮັບຜົນກະທົບຈາກພາຍຸວາລິອຸດ (Varius), ມີຜູ້ໄດ້ຮັບຜົນກະທົບທັງໝົດ 380.000 ຄົນ, ເສຍຊີວິດ 29 ຄົນ, ເຮືອນຂອງປະຊາຊົນເສຍຫາຍຫລາຍກວ່າ 1.700 ຫລັງ, ເນື້ອທີ່ກະສິກຳເສຍຫາຍຫລາຍກວ່າ 47.000 ເຮັກຕາ ລວມມູນຄ່າຜົນເສຍຫາຍທັງໝົດ 280 ລ້ານໂດລາສະຫະລັດ[18]. ໃນປີ 2018, ມີຝົນຕົກໜັກເຮັດໃຫ້ສັນເຂື່ອນເຊປຽນ-ເຊນໍ້ານ້ອຍແຕກ ແລະ ມີນໍ້າຖ້ວມຢູ່ຫລາຍແຂວງໃນ ສປປ ລາວ ໄດ້ສົ່ງຜົນກະທົບຕໍ່ຊີວິດ ແລະ ຊັບສິນຂອງປະຊາຊົນເປັນຈຳນວນຫລວງຫລາຍ.

ການຊຸກຍູ້ການຂະຫຍາຍຂອງເສດຖະກິດ-ສັງຄົມ ແລະ ຫລຸດຜ່ອນຄວາມທຸກຍາກໂດຍໄວ ດ້ວຍການນຳໃຊ້ຊັບພະຍາກອນທຳມະຊາດຢ່າງຫລວງຫລາຍ, ຟູມເຟືອຍ ແລະ ບໍ່ມີປະສິດທິພາບ ໃນທົດສະວັດຜ່ານມາໄດ້ເຮັດໃຫ້ ສປປ ລາວ ມີຄວາມສ່ຽງສູງທີ່ຈະບໍ່ສາມາດບັນລຸເປົ້າໝາຍການພັດທະນາເສດຖະກິດ-ສັງຄົມ ໄລຍະຍາວໄດ້ ເຊັ່ນ: ການຫລຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາຢ່າງຍືນຍົງ ໃນປີ 2020, ກາຍເປັນປະເທດກຳລັງພັດທະນາທີ່ມີລະດັບລາຍຮັບປານກາງສູງ ແລະ ບັນລຸເປົ້າໝາຍການພັດທະນາແບບຍືນຍົງ (SDGs) ໃນປີ 2030. ເພາະສະນັ້ນ, ມະຕິຂອງກອງປະຊຸມໃຫຍ່ຄັ້ງທີ X ຂອງພັກ, ວິໄສທັດ 2030, ຍຸດທະສາດ ໄລຍະ 10 ປີ (2016-2025) ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ VIII (2016-2020) ຈຶ່ງໄດ້ໃຫ້ຄວາມສຳຄັນ

---

18 The Ministry of Planning and Investment, et. 2014. Strenthening institutional capacities for resilient recovery. Vientiane Capital. 2014.

ແລະ ເນັ້ນໃສ່ການພັດທະນາເສດຖະກິດ-ສັງຄົມແຫ່ງຊາດຂອງ ສປປ ລາວ ໃຫ້ໄປຕາມທິດສີຂຽວ-ຍືນຍົງ[19].

ເພາະສະນັ້ນ, ການສ້າງຍຸດທະສາດ ແລະ ສູນສົ່ງເສີມການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ຈຶ່ງແມ່ນຄວາມຮຽກຮ້ອງຕ້ອງການ ແລະ ຈຳເປັນພາວະວິໄສ ເພື່ອຜັນຂະຫຍາຍມະຕິຂອງກອງປະຊຸມໃຫຍ່ຄັ້ງທີ X ຂອງພັກ ກໍ່ຄືວິໄສທັດ 2030, ຍຸດທະສາດໄລຍະ 10 ປີ (2016-2025) ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020) ໃຫ້ເປັນອັນລະອຽດເທື່ອລະກ້າວ.

## 1.3. ສະພາບການພັດທະນາເສດຖະກິດ-ສັງຄົມຂອງ ສປປ ລາວ ຕາມທິດສີຂຽວ-ຍືນຍົງ

ການເຕີບໂຕສີຂຽວ-ຍືນຍົງ ບໍ່ແມ່ນກອບການພັດທະນາເສດຖະກິດ-ສັງຄົມທີ່ເກີດຂຶ້ນໃໝ່ໃນ ສປປ ລາວ ແລະ ຫລາຍປະເທດໃນໂລກ; ແມ່ນຮູບແບບໜຶ່ງຂອງການພັດທະນາແບບຍືນຍົງ ທີ່ ສປປ ລາວ ແລະ ຫລາຍປະເທດໃນໂລກໄດ້ເລີ່ມຈັດຕັ້ງປະຕິບັດມາແລ້ວ. ດັ່ງທີ່ຊ່ຽວຊານຂອງສະຖາບັນການພັດທະນາຂອງ ສ.ເກົາຫລີ ໄດ້ເວົ້າໃນການໄປແລກປ່ຽນບົດຮຽນ ກ່ຽວກັບວຽກງານການເຕີບໂຕສີຂຽວຂອງຄະນະຝ່າຍລາວ ຢູ່ປະເທດ ສ.ເກົາຫລີ ວ່າ: ການເຕີບໂຕສີຂຽວແມ່ນການຕີຄວາມໝາຍ ຫລື ການຈັດຕັ້ງປະຕິບັດກອບການພັດທະນາແບບຍືນຍົງຕາມແບບສະບັບ ແລະ ຄຸນລັກສະນະຂອງແຕ່ລະປະເທດ ໂດຍອີງໃສ່ຄວາມຕ້ອງການຕົວຈິງຂອງການພັດທະນາຂອງແຕ່ລະປະເທດໃນແຕ່ລະໄລຍະ.

ຫລາຍປີຜ່ານມາ, ລັດຖະບານແຫ່ງ ສປປ ລາວ ກໍ່ໄດ້ໃຫ້ຄວາມສຳຄັນ ແລະ ເອົາໃຈໃສ່ການພັດທະນາແບບຍືນຍົງ ເພື່ອຮັບປະກັນໃຫ້ເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມໄດ້ຮັບການພັດທະນາໄປພ້ອມໆກັນ. ລັດຖະບານໄດ້ມີການສ້າງ, ຈັດຕັ້ງປະຕິບັດ ແລະ ປັບປຸງຫລາຍນະໂຍບາຍ, ກົນໄກ ແລະ ລະບົບນິຕິກຳເພື່ອຮັບປະກັນການຈັດຕັ້ງປະຕິບັດການພັດທະນາແບບຍືນຍົງ ເຊັ່ນ: ກົດໝາຍ ແລະ ກົນໄກຄຸ້ມຄອງການລົງທຶນຂອງລັດ, ຂອງເອກະຊົນພາຍໃນ ແລະ ຕ່າງປະເທດ ໂດຍກຳນົດໃຫ້ທຸກໂຄງການລົງທຶນຂອງລັດ, ເອກະຊົນພາຍໃນ ແລະ ຕ່າງປະເທດຕ້ອງໄດ້ຜ່ານຂະບວນການປະເມີນຜົນກະທົບສິ່ງແວດລ້ອມທາງສັງຄົມ ແລະ ທຳມະຊາດ ແລະ ໄດ້ຮັບໃບຢັ້ງຢືນ ພ້ອມທັງຕ້ອງມີແຜນຄຸ້ມຄອງ ແລະ ຕິດຕາມກວດກາ ເພື່ອບັນເທົາຜົນກະທົບດັ່ງກ່າວທີ່ເໝາະສົມ. ລະບົບນິຕິກຳຄຸ້ມຄອງການລົງທຶນດັ່ງກ່າວ ໄດ້ຫ້າມພາກສ່ວນກ່ຽວຂ້ອງອະນຸມັດໂຄງການລົງທຶນທີ່ມີຜົນກະທົບຮຸນແຮງຕໍ່ສິ່ງແວດລ້ອມ, ສັງຄົມ ແລະ ທຳມະຊາດ ຫລື ບໍ່ໄດ້ຜ່ານຂະບວນການປະເມີນຜົນກະທົບ ຫລື ບໍ່ໄດ້ຮັບໃບຢັ້ງຢືນຜົນກະທົບ ຫລື ບໍ່ມີແຜນຄຸ້ມຄອງ ແລະ ຕິດຕາມກວດກາຢ່າງເປັນທາງການ ເພື່ອບັນເທົາຜົນກະທົບຕໍ່ສິ່ງແວດລ້ອມ, ສັງຄົມ ແລະ ທຳມະຊາດທີ່ເໝາະສົມ ໂດຍກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເຮັດໜ້າທີ່ໃນການປະເມີນຜົນກະທົບ ແລະ ອອກໃບຢັ້ງຢືນສິ່ງແວດລ້ອມ ໃຫ້ແກ່ໂຄງການລົງທຶນຕ່າງໆຂອງລັດ, ເອກະຊົນພາຍໃນ ແລະ ຕ່າງປະເທດຕາມລະບຽບກົດໝາຍ.

ນອກນັ້ນ, ຫລາຍຂະແໜງການ ແລະ ທ້ອງຖິ່ນຍັງໄດ້ເລີ່ມເຊື່ອມສານວາລະການເຕີບໂຕສີຂຽວ ເຂົ້າໃນນະໂຍບາຍ, ຍຸດທະສາດ ແລະ ແຜນໃນຂະແໜງການຂອງຕົນ ເຊັ່ນ: ຂະແໜງກະສິກຳ-ປ່າໄມ້ ກໍ່ໄດ້ມີຍຸດທະສາດ ແລະ ຄາດໝາຍເພີ່ມອັດຕາການປົກຫຸ້ມຂອງປ່າໄມ້ຂຶ້ນເປັນ 70% ໃນປີ 2020[20] ສົ່ງເສີມການຜະລິດກະສິກຳສະອາດ, ກະສິກຳອິນຊີ (Organics), ການຜະລິດແບບປະສົມປະສານ ແລະ ເນັ້ນການເພີ່ມສະມັດຕະພາບຜົນຜະລິດດ້ວຍການຍົກສູງປະສິດທິພາບຫລາຍກວ່າການຂະຫຍາຍເນື້ອທີ່[21]. ຂະແໜງໂຍທາທິການ ແລະ ຂົນສົ່ງ ກໍ່ໄດ້ມີວິໄສທັດ,

---

19 ວິໄສທັດ 2030 ແລະ ຍຸດທະສາດໄລຍະ 10 ປີ (2016-2025).

20 The GoL. 2005. Forest Stratey to the Year 2020 of the Lao PDR. Vientiane Capital. 2005.

21 ພະແນກກະສິກຳ ແລະ ປ່າໄມ້ແຂວງ ສາລະວັນ. 2015. ຍຸດທະສາດພັດທະນາກະສິກຳຮອດປີ 2025 ແລະ ວິໄສທັດຮອດປີ 2030. ສາລະວັນ. 2015.

ຍຸດທະສາດ ແລະ ນະໂຍບາຍພັດທະນາຕົວເມືອງ[22] ແລະ ການຂົນສົ່ງຕາມທິດສີຂຽວ-ຍືນຍົງ. ໃນວັນທີ 14 ກໍລະກົດ 2018 ຜ່ານມາກະຊວງໂຍທາທິການ ແລະ ຂົນສົ່ງ ໄດ້ເຊັນສັນຍາຮ່ວມມືກັບບໍລິສັດເອບຕີຊາແອັດສະປາຍ (Eptisa Servicios de Ingerieria SL) ສຶກສາ ແລະ ອອກແບບໂຄງການຂົນສົ່ງສີຂຽວ-ຍືນຍົງໃນຕົວເມືອງ; ໂຄງການ ດັ່ງກ່າວຈະອອກແບບ ແລະ ທົດລອງຈັດຕັ້ງປະຕິບັດຢູ່ 4 ຕົວເມືອງຂອງນະຄອນຫລວງວຽງຈັນ ຄື: ເມືອງ ຈັນທະບູລີ, ສີໂຄດຕະບອງ, ສີສັດຕະນາກ ແລະ ໄຊເສດຖາ[23]; ຂະແໜງພະລັງງານ ແລະ ບໍ່ແຮ່ ກໍ່ໄດ້ມີນະໂຍບາຍ, ຍຸດທະສາດພັດທະນາພະລັງງານສະອາດ ແລະ ພະລັງງານທົດແທນທີ່ມີຢູ່ພາຍໃນປະເທດ ເພື່ອຫລຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ການເອື່ອຍອີງການນຳເຂົ້າພະລັງງານຟອດຊິວຈາກຕ່າງປະເທດ[24]; ກະຊວງພະລັງງານ ແລະ ບໍ່ແຮ່ ໄດ້ມີແນວຄິດລິເລີ່ມການນຳໃຊ້ລົດໄຟຟ້າ ທີ່ໄດ້ຮ່ວມເຮັດວຽກກັບການຊ່ວຍເຫຼືອຂອງສາກົນ (ທຶນຊ່ວຍເຫຼືອຂອງລັດຖະບານ ນິວຊີແລນ ແລະ ສະຖາບັນ ERIA) ເພື່ອດຳເນີນການສຶກສາແຜນ ແລະ ຍຸດທະສາດການນຳໃຊ້ລົດໄຟຟ້າ. ນະຄອນຫລວງວຽງຈັນກໍ່ໄດ້ມີນະໂຍບາຍ ແລະ ຍຸດທະສາດພັດທະນາຕົວເມືອງຕາມທິດ 6 ສ (ສີຂຽວ, ສະອາດ, ສະຫວ່າງ, ສະຫງົບ, ສະເໜ່ ແລະ ສີວິໄລ); ຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມກໍ່ໄດ້ໃຫ້ຄວາມສຳຄັນ ແລະ ເນັ້ນການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທຳມະຊາດທີ່ມີຢູ່ຢ່າງຈຳກັດໃຫ້ມີປະສິດທິພາບ, ປະສິດທິຜົນ ແລະ ຍືນຍົງ. ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໄດ້ມີນະໂຍບາຍສົ່ງເສີມການທ່ອງທ່ຽວສີຂຽວ, ເປັນມິດຕໍ່ສັງຄົມ ແລະ ສິ່ງແວດລ້ອມ[25].

ເຖິງຢ່າງໃດກໍ່ຕາມ, ການພັດທະນາເສດຖະກິດ-ສັງຄົມຂອງ ສປປ ລາວ ຕາມທິດສີຂຽວ-ຍືນຍົງຍັງບໍ່ທັນກຳນົດນະໂຍບາຍທີ່ເປັນລະບົບ, ບໍ່ມີມາດຕະຖານ ແລະ ຄວາມເປັນເອກະພາບກັນໃນລະດັບຊາດຢ່າງຊັດເຈນເທື່ອ; ແຕ່ລະຂະແໜງການ ແລະ ທ້ອງຖິ່ນຍັງເຮັດແບບກະແຈກກະຈາຍ ຕ່າງຝ່າຍຕ່າງເຮັດ, ຍັງຂາດຄວາມເຂົ້າໃຈຢ່າງເລິກເຊິ່ງ ແລະ ເປັນເອກະພາບກັນ, ຂາດຍຸດທະສາດທີ່ເປັນທິດນຳ, ຂາດລະບົບການຕິດຕາມລາຍງານ ແລະ ປະເມີນຜົນເປັນແຕ່ລະໄລຍະ; ແລະ ຂາດໜ່ວຍງານໃຈກາງທີ່ເຮັດໜ້າທີ່ໃນການປະສານງານ ແລະ ສົ່ງເສີມການເຕີບໂຕສີຂຽວ-ຍືນຍົງໃນແຕ່ລະຂະແໜງການ ແລະ ທ້ອງຖິ່ນຢ່າງເປັນລະບົບ ແລະ ມີປະສິດທະພາບສູງຈຶ່ງເຮັດໃຫ້ການພັດທະນາເສດຖະກິດ-ສັງຄົມໃນໄລຍະຜ່ານມາຍັງມີລັກສະນະບໍ່ຍືນຍົງ ແລະ ມີຄວາມສ່ຽງທີ່ຈະບໍ່ສາມາດບັນລຸເປົ້າໝາຍການພັດທະນາເສດຖະກິດ-ສັງຄົມໄລຍະຍາວ ທີ່ພັກ ແລະ ລັດຖະບານແຫ່ງ ສປປ ລາວ ໄດ້ກຳນົດໄວ້. ນອກນັ້ນ, ການຂາດຄວາມເຂົ້າໃຈທີ່ເປັນເອກະພາບກັນ ແລະ ຈຸດປະສານງານທີ່ເຂັ້ມແຂງ ຍັງເຮັດໃຫ້ຂາດການຄົ້ນຄວ້າ-ວິໄຈ, ຈັດສັນ, ສ້າງແຜນການນຳໃຊ້ ແລະ ຄຸ້ມຄອງຊັບພະຍາກອນທຳມະຊາດທີ່ມີຢູ່ຢ່າງຈຳກັດຂອງປະເທດຢ່າງມີປະສິດທິພາບ, ປະສິດທິຜົນ ແລະ ຄວາມຍືນຍົງ; ການນຳໃຊ້ຊັບພະຍາກອນທຳມະຊາດໃນໄລຍະຜ່ານມາຍັງມີລັກສະນະຂັດແຍ່ງກັນໃນຫລາຍຂະແໜງການ ເຊັ່ນ: ການນຳໃຊ້ທີ່ດິນ, ການນຳໃຊ້ນ້ຳ, ປ່າໄມ້ທີ່ຍັງເກີດຄວາມສັບສົນ ຂອງການຈັດລຽງບູລິມະສິດເປັນຕົ້ນແມ່ນທີ່ດິນກະສິກຳ, ທີ່ດິນປຸກສ້າງ, ທີ່ດິນເພື່ອການຄົມມະນາຄົມ ແລະ ອື່ນໆ.

ເພາະສະນັ້ນ, ມະຕິຂອງກອງປະຊຸມໃຫຍ່ຄັ້ງທີ X ຂອງສູນກາງພັກ ກໍ່ຄື ວິໄສທັດ 2030 ແລະ ຍຸດທະສາດ 2025 ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ VIII (2016-2020) ຈຶ່ງໄດ້ກຳນົດທິດທາງການພັດທະນາເສດຖະກິດ-ສັງຄົມໃຫ້ໄປຕາມທິດສີຂຽວ-ຍືນຍົງ. ເພື່ອຜັນຂະຫຍາຍມະຕິຂອງກອງປະຊຸມໃຫຍ່ຂອງພັກກໍ່ຄືຍຸດທະສາດ ແລະ ແຜນພັດທະນາເສດຖະກິດ-ສັງຄົມດັ່ງກ່າວ ໃຫ້ປະກົດຜົນເປັນຈິງເທື່ອລະກ້າວ, ລັດຖະບານແຫ່ງ ສປປ ລາວ ໄດ້ ຕົກລົງແຕ່ງຕັ້ງຄະນະຊີ້ນຳລະດັບຊາດວຽກງານການເຕີບໂຕສີຂຽວຂຶ້ນໃນວັນທີ 8 ທັນວາ 2016 ໂດຍແມ່ນ ທ່ານຮອງນາຍົກລັດຖະມົນຕີເປັນປະທານ ແລະ ມີບັນດາລັດຖະມົນຕີຂອງກະຊວງ

---

[22] ກະຊວງໂຍທາທິການ ແລະ ຂົນສົ່ງ. 2017. ວິໄສທັດຮອດປີ 2030 ແລະ ຍຸດທະສາດພັດທະນາຕົວເມືອງໄລຍະ 10 ປີ (2016-2025) ແລະ ແຜນການລົງທຶນ 4 ປີ (2017-2020). ນະຄອນຫລວງວຽງຈັນ. 2017.

[23] ອາລະສານການເຕີບໂຕສີຂຽວ.

[24] The Ministry of Energy and Mine. 2011. Renewable Energy Development Strategy in Lao PDR. Vientiane Capital. 2011.

[25] ຄຳເຫັນຂອງກົມແຜນການ-ການເງິນ, ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

ແລະ ຂະແໜງການກ່ຽວຂ້ອງຕ່າງໆ ເປັນຄະນະໃນຄະນະຊີ້ນຳດັ່ງກ່າວ. ເພື່ອກຳນົດທິດທາງ, ຈຸດສຸມ ແລະ ສ້າງຈຸດປະສານງານໃນການຊຸກຍູ້-ສົ່ງເສີມວຽກງານການເຕີບໂຕສີຂຽວໃນແຕ່ລະຂະແໜງການ ແລະ ທ້ອງຖິ່ນຢ່າງເປັນລະບົບ ແລະ ມີປະສິດທິພາບສູງ ຄະນະຊີ້ນຳລະດັບຊາດວຽກງານການເຕີບໂຕສີຂຽວ ໄດ້ຕົກລົງແຕ່ງຕັ້ງຄະນະຮັບຜິດຊອບສ້າງຍຸດທະສາດ ແລະ ສູນສົ່ງເສີມການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ໂດຍມີ ທ່ານຫົວໜ້າສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ ເປັນຫົວໜ້າຄະນະ, ຮອງລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ເປັນຮອງ ແລະ ຮອງລັດຖະມົນຕີຂອງບັນດາກະຊວງ ແລະ ຂະແໜງການກ່ຽວຂ້ອງ ເປັນຄະນະ.

ເພາະສະນັ້ນ, ການສ້າງຍຸດທະສາດ ແລະ ສູນສົ່ງເສີມການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ຈຶ່ງເປັນການຈັດຕັ້ງຜັນຂະຫຍາຍມະຕິຂອງກອງປະຊຸມໃຫຍ່ຄັ້ງທີ X ຂອງພັກ, ວິໄສທັດ 2030, ຍຸດທະສາດ 2025 ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020) ໃຫ້ປະກົດຜົນເປັນຈິງເທື່ອລະກ້າວ; ເປັນບາດກ້າວ ແລະ ກົນໄກເສີມສ້າງຄວາມເຂັ້ມແຂງໃຫ້ແກ່ການພັດທະນາແບບຍືນຍົງໃນ ສປປ ລາວ ເພື່ອຮັບປະກັນການບັນລຸເປົ້າໝາຍການພັດທະນາເສດຖະກິດ-ສັງຄົມໄລຍະຍາວທີ່ພັກ ແລະ ລັດຖະບານແຫ່ງ ສປປ ລາວ ກຳນົດໄວ້ຄື: ນຳພາປະເທດຊາດຫລຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ໃນປີ 2020, ກາຍເປັນປະເທດກຳລັງພັດທະນາທີ່ມີລະດັບລາຍຮັບປານກາງສູງ ແລະ ບັນລຸເປົ້າໝາຍການພັດທະນາແບບຍືນຍົງ ໃນປີ 2030.

# ພາກທີ II

# ຄວາມໝາຍ, ທິດທາງ, ຈຸດປະສົງ ແລະ ເປົ້າໝາຍລວມຂອງຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ແລະ ການພົວພັນກັບຍຸດທະສາດ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ຂະແໜງການ ແລະ ທ້ອງຖິ່ນ

## 2.1. ຄວາມໝາຍຂອງການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ

ດັ່ງທີ່ໄດ້ກ່າວມາແລ້ວຂ້າງເທິງ, ການເຕີບໂຕສີຂຽວແມ່ນການຕີຄວາມໝາຍ, ການນໍາໃຊ້ ຫລື ການຈັດຕັ້ງປະຕິບັດກອບການພັດທະນາແບບຍືນຍົງຂອງແຕ່ລະປະເທດ ແລະ ອົງການຈັດຕັ້ງສາກົນຕາມຈຸດປະສົງ ແລະ ຄວາມຮຽກຮ້ອງຕ້ອງການຕົວຈິງຂອງແຕ່ລະປະເທດໃນແຕ່ລະໄລຍະ. ເພາະສະນັ້ນ, ຄວາມໝາຍສະເພາະຂອງການເຕີບໂຕສີຂຽວຂອງແຕ່ລະປະເທດ, ອົງການຈັດຕັ້ງສາກົນໃນແຕ່ລະໄລຍະຈຶ່ງມີຄວາມແຕກຕ່າງກັນ, ຂຶ້ນກັບສະພາບຄວາມຕ້ອງການຂອງການພັດທະນາຂອງແຕ່ລະປະເທດ ແລະ ຂອງອົງການຈັດຕັ້ງສາກົນດັ່ງກ່າວໃນແຕ່ລະໄລຍະ. ຕົວຢ່າງເຊັ່ນ: ອົງການເພື່ອການພັດທະນາ ແລະ ການຮ່ວມມືທາງດ້ານເສດຖະກິດ (OECD) ໄດ້ໃຫ້ນິຍາມການເຕີບໂຕສີຂຽວແມ່ນ ການພັດທະນາ ແລະ ການຂະຫຍາຍຕົວຂອງເສດຖະກິດ ພ້ອມກັບການຮັບປະກັນໃຫ້ລະບົບນິເວດ (Natural Assets) ຍັງສາມາດສືບຕໍ່ສະໜອງຊັບພະຍາກອນ (Resources) ແລະ ການບໍລິການດ້ານສິ່ງແວດລ້ອມທີ່ເປັນພື້ນຖານໃຫ້ແກ່ຄວາມຜາສຸກຂອງພວກເຮົາ[26] ຫລື ອີກຄວາມໝາຍໜຶ່ງຂອງການເຕີບໂຕສີຂຽວທີ່ອົງການເພື່ອການພັດທະນາ ແລະ ຮ່ວມມືທາງເສດຖະກິດ (OECD) ນໍາມາໃຊ້ ແມ່ນ: ການຂະຫຍາຍຕົວຂອງເສດຖະກິດທີ່ປ່ອຍທາດອາຍພິດເຮືອນແກ້ວຕໍ່າ ຫລື ການຂະຫຍາຍຕົວຂອງເສດຖະກິດທີ່ຄົງທົນຕໍ່ການປ່ຽນແປງສະພາບດິນຟ້າອາກາດ[27]. ແຜນງານສິ່ງແວດລ້ອມຂອງອົງການສະຫະປະຊາຊາດ (UnitedNation Environmental Program/ UNEP) ໃຫ້ຄວາມໝາຍການເຕີບໂຕສີຂຽວ ວ່າ: ການເຕີບໂຕສີຂຽວແມ່ນການປັບປຸງຄວາມຜາສຸກຂອງມະນຸດ ແລະ ຄວາມເປັນທໍາໃນສັງຄົມ ໄປພ້ອມໆກັບການຫລຸດຜ່ອນຄວາມສ່ຽງທາງສິ່ງແວດລ້ອມ ແລະ ຄວາມຂາດແຄນຂອງນິເວດ[28]; ການເຕີບໂຕສີຂຽວຂອງ ສ.ເກົາຫລີ ໄດ້ໃຫ້ຄວາມສໍາຄັນ ແລະ ເນັ້ນການສ້າງນະວັດຕະກໍາ ແລະ ພັດທະນາເຕັກໂນໂລຊີທີ່ສະອາດ, ມີປະສິດທິພາບ ແລະ ປະຢັດຊັບພະຍາກອນ; ຄະນະກໍາມະການການເຕີບໂຕສີຂຽວຂອງ ສ.ເກົາຫລີ ໄດ້ນິຍາມການເຕີບໂຕສີຂຽວ ວ່າ: ແມ່ນການຂະຫຍາຍຕົວຂອງເສດຖະກິດ ດ້ວຍການຫລຸດຜ່ອນການນໍາໃຊ້ຊັບພະຍາກອນທໍາມະຊາດ ແລະ ມົນລະພິດທາງສິ່ງແວດລ້ອມ[29] ການຍົກສູງປະສິດທິພາບຂອງການນໍາໃຊ້ຊັບພະຍາກອນທໍາມະຊາດ ແລະ ມົນລະພິດທາງສິ່ງແວດລ້ອມໄດ້ກາຍເປັນຫົວຈັກໃນການຊຸກຍູ້ການຂະຫຍາຍຕົວທາງເສດຖະກິດຂອງປະເທດ ສ.ເກົາຫລີ. ທະນາຄານໂລກ (WB) ໄດ້ນິຍາມການເຕີບໂຕສີຂຽວ ວ່າ: ການເຕີບໂຕຂອງເສດຖະກິດທີ່ນໍາໃຊ້ຊັບພະຍາກອນທໍາມະຊາດຢ່າງມີປະສິດທິພາບ; ແມ່ນການຂະຫຍາຍຕົວທີ່ສະອາດ ຫລຸດຜ່ອນສິ່ງເສດເຫລືອ ແລະ ຜົນກະທົບຕໍ່ສິ່ງແວດລ້ອມ, ແມ່ນການຂະຫຍາຍຕົວຂອງເສດຖະກິດທີ່ທົນ

---

[26] http://www.oecd.org/greengrowth/: "Green growth means fostering economic growth and development, while ensuring that natural assets contionue to provide the resiurces and environmental services on which our well-being relies.

[27] http://sustainabledevelopment.un.org/index.php?menu=1448.

[28] "www.unep.org/greeneconomy/AboutGEI/WhatisGEI/tabid/29784/Default.aspx: "improved human well-being and social equity, while significant reducing environmental risks and ecological scarcities"

[29] http://www.greengrowth.go.kr."...The key to green growth pursuses economic growth by minizing use of natural resources and environmental pollution….."

ທານຕໍ່ໄພພິບັດທາງທຳມະຊາດ ແລະ ແມ່ນການຂະຫຍາຍຕົວຂອງເສດຖະກິດທີ່ທົ່ວເຖິງ[30].

ແຕ່ເຖິງຢ່າງໃດກໍ່ຕາມ, ກໍ່ບໍ່ໄດ້ໝາຍຄວາມວ່າແຕ່ລະປະເທດ ແລະ ອົງການຈັດຕັ້ງສາກົນຕ່າງໆຈະສາມາດໃຫ້ນິຍາມການເຕີບໂຕສີຂຽວໄດ້ໂດຍບໍ່ມີຂອບ ແລະ ຫລັກການພື້ນຖານໃດໆທັງໝົດ. ໃນທາງກົງກັນຂ້າມ, ການນຳນິຍາມຄວາມໝາຍຂອງການເຕີບໂຕສີຂຽວຂອງແຕ່ລະປະເທດ ແລະ ອົງການຈັດຕັ້ງສາກົນຕ່າງໆດັ່ງກ່າວ ຈະຕ້ອງຢູ່ຂອບການພັດທະນາແບບຍືນຍົງທີ່ໃຫ້ຄວາມສຳຄັນ ແລະ ເນັ້ນການພັດທະນາທັງ 3 ດ້ານໄປພ້ອມໆກັນຄື: ທາງດ້ານເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ; ໝາຍຄວາມວ່າການເຕີບໂຕສີຂຽວຈະຕ້ອງໄດ້ປະກອບສ່ວນເຂົ້າໃນການຊຸກຍູ້ ການຂະຫຍາຍຕົວຂອງເສດຖະກິດ, ຫລຸດຜ່ອນຄວາມທຸກຍາກ, ສ້າງວຽກເຮັດງານທຳ ແລະ ກິດຈະກຳສ້າງລາຍໄດ້ໃຫ້ແກ່ປະຊາຊົນ; ປະກອບສ່ວນເຂົ້າໃນການຍົກສູງສິດສະເໝີພາບ ແລະ ປະສິດທິຜົນຂອງການນຳໃຊ້ຊັບພະຍາກອນທຳມະຊາດທີ່ມີຢູ່ຢ່າງຈຳກັດໃຫ້ເກີດຜົນປະໂຫຍດສູງສຸດ, ປະກອບສ່ວນປັບປຸງຄວາມເປັນທຳໃນສັງຄົມ ແລະ ອື່ນໆ. ດັ່ງທີ່ໄດ້ກ່າວມາແລ້ວຂ້າງເທິງ, ສະຖາບັນການພັດທະນາຂອງປະເທດ ສ.ເກົາຫລີ (KDI) ໄດ້ໃຫ້ຄຳນິຍາມການເຕີບໂຕສີຂຽວແບບລວມໆວ່າ: ແມ່ນການຕີຄວາມໝາຍ ຫລື ການຈັດຕັ້ງປະຕິບັດກອບການພັດທະນາແບບຍືນຍົງ ທີ່ມີລັກສະນະສະເພາະຂອງແຕ່ລະປະເທດ (Thenational Interprestation of Sustainable Development) ຕາມສະພາບຈຸດພິເສດ ແລະ ຄວາມຮຽກຮ້ອງຕ້ອງການຕົວຈິງຂອງການພັດທະນາເສດຖະກິດ-ສັງຄົມຂອງແຕ່ລະປະເທດ ແລະ ໃນແຕ່ລະໄລຍະ.

ອີງຕາມກອບການພັດທະນາແບບຍືນຍົງ, ຫລັກການພື້ນຖານທີ່ໄດ້ກ່າວມາຂ້າງເທິງ ແລະ ສະພາບຄວາມຕ້ອງການຕົວຈິງຂອງການພັດທະນາເສດຖະກິດ-ສັງຄົມ ໃນ ສປປ ລາວ ໃນປະຈຸບັນ, ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ໄດ້ກຳນົດຄວາມໝາຍຂອງການເຕີບໂຕສີຂຽວຂອງ ສປປ ລາວ ດັ່ງນີ້:

***ການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ການຂະຫຍາຍຕົວທາງເສດຖະກິດ, ຫລຸດຜ່ອນຄວາມທຸກຍາກ ແລະ ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນຢ່າງກວ້າງຂວາງ, ທົ່ວເຖິງ ແລະ ເປັນທຳໃນສັງຄົມດ້ວຍການຍົກສູງປະສິດທິພາບ, ປະສິດທິຜົນ ແລະ ຄວາມຍືນຍົງຂອງການນຳໃຊ້ຊັບພະຍາກອນທຳມະຊາດທີ່ມີຢູ່ຢ່າງຈຳກັດໃຫ້ເກີດຜົນປະໂຫຍດສູງສຸດ, ຫລຸດຜ່ອນມົນລະພິດ, ສິ່ງເສດເຫລືອ ແລະ ການປ່ອຍທາດອາຍພິດເຮືອນແກ້ວກໍ່ຄືດ້ວຍການຫລຸດຜ່ອນຄວາມສ່ຽງ ແລະ ຄວາມບອບບາງຂອງເສດຖະກິດຕໍ່ໄພພິບັດທຳມະຊາດ ແລະ ສະພາບການເໜັງຕີງຂອງເສດຖະກິດໂລກ.***

ໝາຍຄວາມວ່າ, ການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ແມ່ນການຂະຫຍາຍຕົວຂອງເສດຖະກິດ, ຫລຸດຜ່ອນຄວາມທຸກຍາກ ແລະ ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນທີ່ມີ 4 ຄຸນລັກສະນະພື້ນຖານຄື: (1) ກວ້າງ ຂວາງ, ທົ່ວເຖິງ ແລະ ເປັນທຳ; ແນໃສ່ຮັບປະກັນໃຫ້ທຸກພາກສ່ວນ, ທຸກຊົນຊາດ, ຊົນເຜົ່າ, ທຸກຊັ້ນຄົນ ແລະ ທຸກຄົນ ສາມາດເຂົ້າຮ່ວມຂະບວນການ ແລະ ໄດ້ຮັບຜົນປະໂຫຍດຢ່າງເປັນທຳຈາກການພັດທະນາເສດຖະກິດ-ສັງຄົມດັ່ງກ່າວ; (2) ມີປະສິດທິພາບ, ປະສິດທິຜົນ ແລະ ຄວາມຍືນຍົງສູງ; ນຳໃຊ້ຊັບພະຍາກອນທຳມະຊາດທີ່ມີຢູ່ຢ່າງຈຳກັດຂອງປະເທດໜ້ອຍ ແຕ່ໃຫ້ມີຜົນຮັບສູງ ແລະ ມີຄວາມຍືນຍົງ; (3) ສະອາດ; ໝາຍຄວາມວ່າ ຫລຸດຜ່ອນການປ່ອຍມົນລະພິດ, ສິ່ງເສດເຫລືອ ແລະ ປ່ອຍທາດອາຍພິດເຮືອນແກ້ວ ທີ່ເປັນສາຍເຫດຕົ້ນຕໍຂອງການປ່ຽນແປງສະພາບດິນຟ້າອາກາດ, ໄພພິບັດທາງທຳມະຊາດ ແລະ ໂລກໄພຕ່າງໆ ແລະ (4) ແມ່ນການຂະຫຍາຍຕົວຂອງເສດຖະກິດ, ຫລຸດຜ່ອນຄວາມທຸກຍາກ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນທີ່ທົນທານ ຫລື ມີ

[30] https://whygreeneconomy.org/information/world-banks-green-growth-approach-denounced-bretton-woods-project/: “…green growth as the growth that is efficient in its use of natural ressources, clean that it minimizes pollution and environmental impacts, and resirient in that it accounts for natural hazards and the role of environmental management and natural capital in preventing physical disasters. And this growth need to be inclusive.

ຄວາມສ່ຽງ ແລະ ຄວາມບອບບາງຕໍ່າຕໍ່ສະພາບການປ່ຽນແປງດິນຟ້າອາກາດ, ໄພພິບັດທາງທໍາມະຊາດ ແລະ ການເໜັງຕີງຂອງເສດຖະກິດໂລກ.

ການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ຕາມຄໍານິຍາມຂ້າງເທິງ ຈະບໍ່ລວມເອົາການຂະຫຍາຍຕົວຂອງເສດຖະກິດ, ການຫລຸດຜ່ອນຄວາມທຸກຍາກ ແລະ ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ ດ້ວຍການນໍາໃຊ້ຊັບພະຍາກອນທໍາມະຊາດແບບບໍ່ມີປະສິດທິພາບ, ປະສິດທິຜົນ ແລະ ຄວາມຍືນຍົງ ຫລື ການຂະຫຍາຍຕົວຂອງເສດຖະກິດທີ່ບໍ່ສະອາດ, ເປື້ອນເປິະ, ບໍ່ເປັນມິດຕໍ່ສິ່ງແວດລ້ອມທາງທໍາມະຊາດ ແລະ ສັງຄົມ ຫລື ການຂະຫຍາຍຕົວຂອງເສດຖະກິດ ແລະ ຫລຸດຜ່ອນຄວາມທຸກຍາກທີ່ເພີ່ມຄວາມສ່ຽງ ແລະ ຄວາມບອບບາງຂອງເສດຖະກິດຕໍ່ສະພາບການປ່ຽນແປງຂອງດິນຟ້າອາກາດ ແລະ ໄພພິບັດທາງທໍາມະຊາດ ແລະ ການເໜັງຕີງຂອງສະພາບເສດຖະກິດໂລກ.

ເມື່ອເບິ່ງລວມແລ້ວ, ການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ຕາມຄໍານິຍາມຂ້າງເທິງ ແມ່ນການຜັນຂະຫຍາຍກອບການພັດທະນາແບບຍືນຍົງໃຫ້ເປັນອັນລະອຽດ ຕາມຄວາມຮຽກຮ້ອງຕ້ອງການຕົວຈິງຂອງການພັດທະນາເສດຖະກິດ-ສັງຄົມໃນປະຈຸບັນ. ການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ປະກອບດ້ວຍ 3 ເສົາຄໍ້າຫລັກຕາມກອບການພັດທະນາແບບຍືນຍົງຄື: (1) ເສົາຄໍ້າທາງດ້ານເສດຖະກິດ, ໂດຍສະເພາະແມ່ນເລັ່ງໃສ່ຊຸກຍູ້ການຂະຫຍາຍຕົວຂອງເສດຖະກິດ, ສ້າງວຽກເຮັດງານທໍາ, ສ້າງກິດຈະກໍາສ້າງລາຍໄດ້ໃຫ້ແກ່ປະຊາຊົນ, ເຮັດໃຫ້ລະດັບຊີວິດການເປັນຢູ່ທາງດ້ານວັດຖຸໄດ້ຮັບການປັບປຸງໃຫ້ດີຂຶ້ນ ແລະ ເຮັດໃຫ້ການຂະຫຍາຍຕົວຂອງເສດຖະກິດມີຄວາມໜັກແໜ້ນ ແລະ ທົນທານຕໍ່ການເໜັງຕີງຂອງສະພາບເສດຖະກິດໂລກ, (2) ເສົາຄໍ້າດ້ານສັງຄົມ, ໂດຍສະເພາະແມ່ນການເຕີບໂຕສີຂຽວແຫ່ງຊາດ ຂອງ ສປປ ລາວ ໄດ້ໃຫ້ຄວາມສໍາຄັນ ແລະ ເນັ້ນຄວາມກວ້າງຂວາງ, ທົ່ວເຖິງ ແລະ ເປັນທໍາ; ແນໃສ່ໃຫ້ທຸກຊົນຊາດ, ຊົນເຜົ່າ, ທຸກຊັ້ນຄົນ ແລະ ທຸກຄົນໃນສັງຄົມສາມາດເຂົ້າຮ່ວມຂະບວນການ ແລະ ໄດ້ຮັບຜົນປະໂຫຍດຈາກການພັດທະນາເສດຖະກິດຢ່າງກວ້າງຂວາງ, ທົ່ວເຖິງ ແລະ ເປັນທໍາ, ແນໃສ່ຫລຸດຜ່ອນຄວາມບໍ່ສະເໝີພາບ ແລະ ແຕກໂຕນກັນລະຫວ່າງຊົນຊາດ, ຊົນເຜົ່າ, ຕົວເມືອງ ແລະ ຊົນນະບົດ, ລະຫວ່າງເພດ, ຜູ້ຮັ່ງ ແລະ ຜູ້ທຸກຍາກ ແລະ ອື່ນໆ ແລະ (3) ເສົາຄໍ້າທາງດ້ານສິ່ງແວດລ້ອມ,ໂດຍສະເພາະແມ່ນໄດ້ໃຫ້ຄວາມສໍາຄັນ ແລະ ເນັ້ນປະສິດທິພາບ, ປະສິດທິຜົນ ແລະ ຄວາມຍືນຍົງຂອງການນໍາໃຊ້ຊັບພະຍາກອນທໍາມະຊາດທີ່ມີຢູ່ຢ່າງຈໍາກັດຂອງປະເທດໃຫ້ເກີດຜົນປະໂຫຍດສູງສຸດ, ຄວາມສະອາດ, ຫລຸດຜ່ອນສິ່ງເສດເຫລືອ, ມົນລະພິດທາງອາກາດ, ກິ່ນ, ສຽງ ແລະ ການປ່ອຍທາດອາຍພິດເຮືອນແກ້ວ ແລະ ເນັ້ນການຫລຸດຜ່ອນຄວາມສ່ຽງ ແລະ ຄວາມບອບບາງຂອງເສດຖະກິດຕໍ່ສະພາບການປ່ຽນແປງຂອງດິນຟ້າອາກາດ ແລະ ໄພພິບັດທາງທໍາມະຊາດ ດັ່ງລາຍລະອຽດໃນແຜນວາດ 1 ລຸ່ມນີ້:

**ແຜນວາດທີ 1:** ຄວາມໝາຍຂອງການເຕີບໂຕສີຂຽວຂອງ ສປປ ລາວ.




*ແຫລ່ງຂໍ້ມູນ: ກອງເລຂາຮ່າງຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ.*

ແຕ່ເຖິງຢ່າງໃດກໍ່ຕາມ, ຄວາມໝາຍຂອງການເຕີບໂຕສີຂຽວແຫ່ງຊາດ ຂອງ ສປປ ລາວ ທີ່ໄດ້ກຳນົດໄວ້ໃນຍຸດທະສາດສະບັບນີ້ ກໍ່ບໍ່ແມ່ນຄຳພີຕາຍຕົວທີ່ບໍ່ສາມາດປັບປຸງ ແລະ ປ່ຽນແປງໄດ້. ແຕ່ກົງກັນຂ້າມ, ເປັນຄວາມໝາຍຂອງການເຕີບໂຕສີຂຽວທີ່ມີຊີວິດຊີວາ ທີ່ຈະຕ້ອງໄດ້ມີການປັບປຸງ ແລະ ປ່ຽນແປງຕາມສະພາບຄວາມຮຽກຮ້ອງຕ້ອງການຕົວຈິງຂອງການພັດທະນາເສດຖະກິດ-ສັງຄົມຂອງ ສປປ ລາວ ໃນແຕ່ລະໄລຍະ.

## 2.2. ທິດທາງ, ເປົ້າໝາຍ ແລະ ຈຸດປະສົງຂອງຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ

ຄະນະຊີ້ນຳ ໄດ້ກຳນົດທິດທາງ, ເປົ້າໝາຍ ແລະ ຈຸດປະສົງຂອງການສ້າງຍຸດທະສາດ ແລະ ສູນສົ່ງເສີມການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ດັ່ງຕໍ່ໄປນີ້:

- ການສ້າງ ແລະ ຈັດຕັ້ງປະຕິບັດຍຸດທະສາດເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ຈະຕ້ອງເປັນການຜັນຂະຫຍາຍມະຕິຂອງກອງປະຊຸມໃຫຍ່ຄັ້ງທີ X ຂອງພັກ, ວິໄສທັດ 2030 ແລະ ຍຸດທະສາດໄລຍະ10 ປີ (2016-2025) ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ VIII (2016-2020) ເພື່ອຮັບປະກັນການບັນລຸເປົ້າໝາຍການພັດທະນາເສດຖະກິດ-ສັງຄົມແຫ່ງຊາດໄລຍະກາງ ແລະ ໄລຍະຍາວທີ່ໄດ້ກຳນົດໄວ້ໂດຍສະເພາະແມ່ນ: ຫລຸດພົ້ນອອກຈາກສະຖາ ນະພາບປະເທດດ້ອຍພັດທະນາໃນປີ 2020, ເປັນປະເທດກຳລັງພັດທະນາທີ່ມີລະດັບລາຍຮັບປານກາງສູງ ແລະ ການບັນລຸເປົ້າໝາຍການພັດທະນາແບບຍືນຍົງ (SDGs) ໃນປີ 2030 ຕາມທິດສີຂຽວ-ຍືນຍົງ.

- ການສ້າງ ແລະ ຈັດຕັ້ງປະຕິບັດຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ຈະຕ້ອງປະກອບສ່ວນເຂົ້າໃນການຊຸກຍູ້ການຂະຫຍາຍຂອງເສດຖະກິດຂອງປະເທດ, ປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ, ສ້າງວຽກເຮັດງານທຳ ແລະ ກິດຈະກຳສ້າງລາຍໄດ້ໃຫ້ແກ່ປະຊາຊົນ.

- ການສ້າງ ແລະ ຈັດຕັ້ງປະຕິບັດຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ຕ້ອງປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການພັດທະນາຊົນນະບົດ, ຫລຸດຜ່ອນຄວາມທຸກຍາກ, ຫລຸດຜ່ອນຄວາມແຕກໂຕນດ້ານການພັດທະນາ ລະຫວ່າງຕົວເມືອງ ແລະ ຊົນນະບົດ, ຄວາມແຕກໂຕນລະຫວ່າງຜູ້ຮັ່ງ ແລະ ຜູ້ທຸກ, ລະຫວ່າງຍິງ-ຊາຍ ແລະ ບັນດາເຜົ່າ; ແນໃສ່ເຮັດໃຫ້ທຸກຊົນຊາດ, ຊົນເຜົ່າ ແລະ ທຸກຊັ້ນຄົນໃນສັງຄົມສາມາດເຂົ້າຮ່ວມ ແລະ ໄດ້ຮັບຜົນປະໂຫຍດຈາກພັດທະນາເສດຖະກິດ-ສັງຄົມຢ່າງກວ້າງຂວາງ, ທົ່ວເຖິງ ແລະ ເປັນທຳ.

- ການສ້າງ ແລະ ຈັດຕັ້ງປະຕິບັດຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ຈະຕ້ອງປະກອບສ່ວນເຂົ້າໃນການຍົກສູງປະສິດທິພາບ, ປະສິດຜົນ ແລະ ຄວາມຍືນຍົງຂອງການນຳໃຊ້ຊັບພະຍາກອນທຳມະຊາດທີ່ມີຢູ່ຢ່າງຈຳກັດຂອງປະເທດໃຫ້ເກີດຜົນປະໂຫຍດສູງສຸດ; ໂດຍສະເພາະແມ່ນຊັບພະຍາກອນປ່າໄມ້, ທີ່ດິນ, ບໍ່ແຮ່, ຊັບພະຍາກອນນ້ຳ, ແຫລ່ງນ້ຳ, ຊີວະນາໆພັນ ແລະ ອື່ນໆ.

- ການສ້າງ ແລະ ຈັດຕັ້ງປະຕິບັດຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ຈະຕ້ອງປະກອບສ່ວນເຂົ້າໃນການຫລຸດຜ່ອນຄວາມສ່ຽງ (Risks) ແລະ ຄວາມບອບບາງ (Vulnerability) ຂອງເສດຖະກິດຂອງປະເທດຕໍ່ໄພພິບັດທາງທຳມະຊາດ ແລະ ການເໜັງຕີງຂອງສະພາບເສດຖະກິດໂລກ ທີ່ຈະນັບມື້ນັບຮຸນແຮງຂຶ້ນ ແລະ ຄາດຄະເນລ່ວງໜ້າຍາກ.

- ການສ້າງ ແລະ ຈັດຕັ້ງປະຕິບັດຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ຈະຕ້ອງປະກອບສ່ວນເຂົ້າໃນການຫລຸດຜ່ອນ ຫລື ຈຳກັດການເພີ່ມຂຶ້ນຂອງການສ້າງມົນລະພິດ, ຄວາມເປິະເປື້ອນ, ສິ່ງເສດເຫລືອ ແລະ ການປ່ອຍທາດອາຍພິດເຮືອນແກ້ວທີ່ເປັນສາເຫດຕົ້ນຕໍຂອງການປ່ຽນແປງຂອງສະພາບດິນຟ້າອາກາດ, ໄພພິບັດທາງທຳມະຊາດ ແລະ ພະຍາດຫລາຍຊະນິດ.

## 2.3. ທີ່ຕັ້ງ, ພາລະບົດບາດ ແລະ ການພົວພັນລະຫວ່າງຍຸດທະສາດການເຕີບໂຕສີຂຽວແຫ່ງ ຊາດຂອງ ສປປ ລາວ ກັບຍຸດທະສາດ ແລະ ແຜນພັດທະນາຂະແໜງການ ແລະ ທ້ອງຖິ່ນ

ສະພາບຄວາມເປັນຈິງອັນໜຶ່ງແມ່ນຍຸດທະສາດການເຕີບສີຂຽວແຫ່ງຊາດຂອງ ສປປ ລາວ ໄດ້ສ້າງຂຶ້ນພາຍໃຕ້ເງື່ອນໄຂທີ່ ສປປ ລາວ ຍັງມີຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນພັດທະນາຂະແໜງການ ແລະ ທ້ອງຖິ່ນທີ່ກຳລັງໄດ້ຮັບການຈັດຕັ້ງປະຕິບັດຕາມປົກກະຕິ. ສະນັ້ນ, ການກຳນົດທີ່ຕັ້ງ, ພາລະບົດບາດ ແລະ ສາຍພົວພັນຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ກັບຍຸດທະສາດ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ຂອງຂະແໜງການ ແລະ ທ້ອງຖິ່ນ ຈຶ່ງມີຄວາມຈຳເປັນ ແລະ ຮຽກຮ້ອງຕ້ອງການ.

ຜ່ານການຄົ້ນຄວ້າ, ປຶກສາຫາລືກັບຫລາຍຂະແໜງການ ແລະ ທ້ອງຖິ່ນ ເຫັນວ່າຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ບໍ່ຄວນເປັນຍຸດທະສາດທີ່ສ້າງຂຶ້ນມາເພື່ອປ່ຽນແທນ, ລົບລ້າງ ຫລື ເພື່ອຕີກອບໃຫ້ແກ່ຍຸດທະສາດຂອງຂະແໜງການ ແລະ ທ້ອງຖິ່ນທີ່ມີຢູ່ແລ້ວ, ແຕ່ຄວນຈະເປັນຍຸດທະສາດເສີມທີ່ສ້າງຂຶ້ນມາເພື່ອເສີມຄວາມເຂັ້ມແຂງໃຫ້ແກ່ນະໂຍບາຍ, ຍຸດທະສາດ ແລະ ກົນໄກການພັດທະນາແບບຍືນຍົງໃນ ສປປ ລາວ ເພື່ອຮັບປະກັນການບັນລຸເປົ້າໝາຍການພັດທະນາເສດຖະກິດ-ສັງຄົມໄລຍະກາງແລະໄລຍະຍາວທີ່ໄດ້ກຳນົດໄວ້ໃນວິໄສທັດ 2030 ແລະ ຍຸດທະສາດໄລຍະ 10 ປີ (2016-2025) ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ VIII (2016-2020) ຄື: ຫລຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາໃນປີ 2020, ເປັນປະເທດກຳລັງພັດທະນາ ທີ່ມີລະດັບລາຍຮັບປານກາງສູງ ແລະ ບັນລຸເປົ້າໝາຍການພັດທະນາແບບຍືນຍົງ (SDGs) ໃນປີ 2030 ຕາມທິດສີຂຽວ-ຍືນຍົງ.

ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ມີທີ່ຕັ້ງ ແລະ ພາລະບົດບາດຕົ້ນຕໍ: (1) ປູກຈິດສຳນຶກ ແລະ ສ້າງຄວາມເປັນເອກະພາບກ່ຽວກັບການເຕີບໂຕສີຂຽວໃຫ້ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຕົວຈິງຂອງການພັດທະນາເສດຖະກິດ-ສັງຄົມແຫ່ງຊາດໃນແຕ່ລະໄລຍະ; (2) ເຊື່ອມສານການເຕີບໂຕສີຂຽວເຂົ້າໃນຍຸດທະສາດ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ຂອງຂະແໜງການ ແລະ ທ້ອງຖິ່ນຢ່າງເປັນລະບົບ ແລະ ມີປະສິດ ທິພາບສູງເພື່ອເຮັດໃຫ້ຍຸດທະສາດ ແລະ ແຜນພັດທະນາຂອງຂະແໜງການກາຍເປັນສີຂຽວເທື່ອລະກ້າວ ແລະ (3) ຊຸກຍູ້ ແລະ ສົ່ງເສີມຂະແໜງການ ແລະ ທ້ອງຖິ່ນ ໃນການຈັດຕັ້ງປະຕິບັດນະໂຍບາຍ, ແຜນການ, ແຜນງານ, ໂຄງການ ຫລື/ແລະ ກິດກະກຳຕ່າງໆທີ່ກ່ຽວຂ້ອງການເຕີບໂຕສີຂຽວດ້ວຍວິທີການຊຸກຍູ້ສົ່ງເສີມຕ່າງໆ ເຊັ່ນ: ໃຫ້ຄຳປຶກສາທາງວິຊາການ,ໃຫ້ຂໍ້ມູນຂ່າວສານ, ຂໍ້ສະເໜີແນະທາງດ້ານນະໂຍບາຍ, ຖ່າຍທອດບົດຮຽນ, ປະສົບການທີ່ດີຈາກຕ່າງປະເທດ, ຖ່າຍທອດເຕັກນິກ ແລະ ເຕັກໂນໂລຊີ, ສ້າງຂີດຄວາມສາມາດທາງດ້ານເຕັກນິກ-ວິຊາການໃຫ້ແກ່ພະນັກງານຂອງຂະແໜງການ ແລະ ທ້ອງຖິ່ນ, ຊ່ວຍຂະແໜງການ ແລະ ທ້ອງຖິ່ນ ໃນການລະດົມທຶນເຂົ້າໃສ່ການຈັດຕັ້ງປະຕິບັດບັນດາແຜນງານ, ໂຄງການ ແລະ ກິດຈະກຳການເຕີບໂຕສີຂຽວທີ່ໄດ້ກຳນົດໄວ້ໃນຍຸດທະສາດ ແລະ ແຜນການຂອງຂະແໜງການ ແລະ ທ້ອງຖິ່ນ ແລະ ອື່ນໆ.

ສະນັ້ນ, ບັນດານະໂຍບາຍ, ແຜນງານ, ໂຄງການ ແລະ ກິດຈະກຳທີ່ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ໃຫ້ການສະໜັບສະໜູນ ແລະ ສົ່ງເສີມ ຈະຕ້ອງແມ່ນນະໂຍບາຍ, ແຜນງານ, ໂຄງການ ແລະ ກິດຈະກຳທີ່ກ່ຽວຂ້ອງກັບການເຕີບໂຕສີຂຽວທີ່ໃນຍຸດທະສາດແລະແຜນພັດທະນາຂອງຂະແໜງການແລະທ້ອງຖິ່ນ ຫລື ເປັນນະໂຍບາຍ, ແຜນງານ, ໂຄງການ ແລະ ກິດຈະກຳທີ່ກ່ຽວຂ້ອງກັບການເຕີບໂຕສີຂຽວ ທີ່ຂະແໜງການ ແລະ ທ້ອງຖິ່ນຍອມຮັບ ແລະ ພ້ອມທີ່ຈະໃຫ້ການຮ່ວມມືໃນການຈັດຕັ້ງປະຕິບັດ. ດັ່ງລາຍລະອຽດໃນຮູບສະແດງລຸ່ມນີ້:

**ແຜນວາດທີ 2:** ການພົວພັນລະຫວ່າງຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ກັບຍຸດທະສາດ ແລະ ແຜນການຂອງຂະແໜງການ ແລະ ທ້ອງຖິ່ນ.




*ແຫຼ່ງຂໍ້ມູນ: ກອງເລຂາຮ່າງຍຸດທະສາດການເຕີບໂຕສີຂຽວແຫ່ງຊາດ ຂອງ ສປປ ລາວ.*

ຮູບສະແດງຂ້າງເທິງ ສະແດງໃຫ້ເຫັນວ່າ ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ແມ່ນຈຸດລວມຫລືຄວາມເປັນເອກກະພາບກັນລະຫວ່າງວາລະການເຕີບໂຕສີຂຽວ,ຍຸດທະສາດແລະແຜນການຂອງຂະແໜງການ ແລະ ທ້ອງຖິ່ນ. ເຖິງຢ່າງໃດກໍ່ຕາມ, ກໍບໍ່ໄດ້ໝາຍຄວາມວ່ານະໂຍບາຍໃດ, ແຜນງານໃດ, ໂຄງການໃດ ຫລື ກິດຈະກຳໃດຂອງຂະແໜງການ ແລະ ທ້ອງຖິ່ນ ທີ່ບໍ່ນອນໃນຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ຂະແໜງການ ແລະ ທ້ອງຖິ່ນຈະບໍ່ສາມາດຈັດຕັ້ງປະຕິບັດໄດ້; ພຽງນະໂຍບາຍ, ແຜນງານ, ໂຄງການ ຫລື ກິດຈະກຳຕ່າງໆດັ່ງກ່າວຈະບໍ່ນອນໃນເປົ້າໝາຍສົ່ງເສີມຂອງຍຸດທະສາດການເຕີບໂຕສີຂຽວແຫ່ງຊາດເທົ່ານັ້ນ. ຂະແໜງການ ແລະ ທ້ອງຖິ່ນ ສາມາດສືບຕໍ່ຈັດຕັ້ງປະຕິບັດແຜນການ, ແຜນງານ, ໂຄງການ ແລະ ກິດຈະກຳຂອງຕົນໄດ້ຕາມປົກກະຕິ. ການເຕີບໂຕສີຂຽວຂອງ ສປປ ລາວ ຈະໄດ້ຮັບການຈັດຕັ້ງປະຕິບັດເທື່ອລະກ້າວໂດຍຜ່ານແຜນການ, ແຜນງານ ແລະ ໂຄງການຂອງຂະແໜງການ ແລະ ທ້ອງຖິ່ນ.

ເນື່ອງຈາກຂໍ້ຈຳກັດທາງດ້ານຄວາມສາມາດ ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ອາດບໍ່ສາມາດສົ່ງເສີມໝົດທຸກນະໂຍບາຍ, ແຜນການ, ແຜນງານ ແລະ ໂຄງການທີ່ກ່ຽວຂ້ອງກັບການເຕີບໂຕສີຂຽວຂອງທຸກຂະແໜງການ ແລະ ທ້ອງຖິ່ນໄດ້ໃນເວລາດຽວກັນ. ສະນັ້ນ, ຈະຕ້ອງໄດ້ຈັດບຸລິມະສິດວ່າແຜນງານໃດ, ໂຄງການໃດ ແລະ ກິດຈະກຳໃດຄວນໄດ້ຮັບການຊຸກຍູ້ສົ່ງເສີມກ່ອນ ແລະ ແຜນງານໃດ, ໂຄງການໃດ ຫລື ກິດຈະກຳໃດຄວນມາຕາມຫລັງ.

# ພາກທີ III

# ຂົງເຂດ ແລະ ຂະແໜງການຈຸດສຸມ ແລະ ສະໜັບສະໜູນຂອງ ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດ ຂອງ ສປປ ລາວ

ຕາມຄວາມຈິງແລ້ວ, ການເຕີບໂຕສີຂຽວຕິດພັນກັບທຸກຂົງເຂດ ແລະ ຂະແໜງການ. ແຕ່ເຖິງຢ່າງໃດກໍ່ຕາມ, ເພື່ອເຮັດໃຫ້ການຊຸກຍູ້ ແລະ ສົ່ງເສີມມີຈຸດສຸມ, ປະສິດທິພາບ ແລະ ປະສິດທິຜົນສູງ ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ສະບັບນີ້ໄດ້ແບ່ງຂົງເຂດ ແລະ ຂະແໜງການ ອອກເປັນຈຸດສຸມ ແລະ ສະໜັບສະໜູນຕາມທ່າແຮງພົ້ນເດັ່ນດັ່ງລຸ່ມນີ້:

## 3.1. ຂົງເຂດຈຸດສຸມທີ່ຕິດພັນກັບຫລາຍຂະແໜງການ

### 3.1.1. ສະພາບແວດລ້ອມ ແລະ ການຄຸ້ມຄອງການລົງທຶນ

ການອໍານວຍຄວາມສະດວກ ແລະ ຄຸ້ມຄອງການລົງທຶນແມ່ນມີບົດບາດສໍາຄັນ ແລະ ມີລັກສະນະຕັດສິນສໍາລັບການພັດທະນາເສດຖະກິດ-ສັງຄົມຂອງຊາດ ເວົ້າລວມ, ເວົ້າສະເພາະແມ່ນສໍາລັບການພັດທະນາເສດຖະກິດ-ສັງຄົມຕາມທິດສີຂຽວ-ຍືນຍົງ. ໃນໄລຍະຜ່ານມາ, ລັດຖະບານແຫ່ງ ສປປ ລາວ ກໍ່ເຫັນໄດ້ຄວາມສໍາຄັນ ແລະ ເລັ່ງໃສ່ອໍານວຍຄວາມສະດວກ ແລະ ປັບປຸງລະບົບການຄຸ້ມຄອງການລົງທຶນໃຫ້ມີປະສິດທິພາບ ແລະ ສິດທິຜົນສູງຂຶ້ນເລື້ອຍໆ ເພື່ອຮັບປະກັນໃຫ້ທຸກໂຄງການລົງທຶນທີ່ໄດ້ຮັບການອະນຸມັດຕາມລະບຽບກົດໝາຍ ສາມາດປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການຊຸກຍູ້ການຂະຫຍາຍຕົວຂອງເສດຖະກິດແຫ່ງຊາດ, ສ້າງວຽກເຮັດງານທໍາໃຫ້ແກ່ປະຊາຊົນ, ຫລຸດຜ່ອນຄວາມທຸກຍາກ ໄປພ້ອມກັບການຫລຸດຜ່ອນຜົນກະທົບທາງສິ່ງແວດລ້ອມສັງຄົມ ແລະ ທໍາມະຊາດ. ລັດຖະບານແຫ່ງ ສປປ ລາວ ໄດ້ສ້າງ, ປັບປຸງ ແລະ ຈັດຕັ້ງປະຕິບັດຫລາຍກົດໝາຍ, ກົດລະບຽບ ແລະ ກົນໄກ ເພື່ອອໍານວຍຄວາມສະດວກ ແລະ ຮັບປະກັນປະສິດທິພາບ ແລະ ປະສິດທິຜົນຂອງໂຄງການ ລົງທຶນ ເຊິ່ງໃນນັ້ນລວມມີ, ການສ້າງ ແລະ ຈັດຕັ້ງປະຕິບັດກົນໄກພິຈາລະນາອະນຸມັດການລົງທຶນ ໂດຍຜ່ານປະຕູດຽວຢູ່ກະຊວງແຜນການ ແລະ ການລົງທຶນ, ກະຊວງອຸດສາຫະກໍາ ແລະ ການຄ້າ ກໍ່ຄືຢູ່ພະແນກແຜນການ ແລະ ການລົງທຶນ ແລະ ພະແນກອຸດສາຫະກໍາ ແລະ ການຄ້າແຂວງ ແລະ ຫ້ອງການດັ່ງກ່າວຢູ່ຂັ້ນເມືອງ ແລະ ເຂດເສດຖະກິດພິເສດ, ເຂດເສດຖະກິດສະເພາະ ແຕ່ລະແຫ່ງ ເພື່ອຫລຸດຜ່ອນຂັ້ນຕອນ ແລະ ອໍານວຍຄວາມສະດວກໃຫ້ແກ່ການລົງທຶນ; ການສ້າງ, ປັບປຸງ ແລະ ຈັດຕັ້ງປະຕິບັດກົດໝາຍສົ່ງເສີມການລົງທຶນ, ການສ້າງ, ປັບປຸງ ແລະ ຈັດຕັ້ງປະຕິບັດກົດໝາຍຄຸ້ມຄອງການລົງທຶນຂອງລັດ ແລະ ອື່ນໆ.

ແຕ່ເຖິງຢ່າງໃດກໍ່ຕາມ, ອີງຕາມຜົນການປະເມີນຂອງທະນາຄານໂລກ (WB) ຍັງເຫັນວ່າ ສະພາບແວດລ້ອມໃນການດໍາເນີນທຸລະກິດ/ລົງທຶນ ໃນ ສປປ ລາວ ຍັງຫຍຸ້ງຍາກ, ສັບສົນ, ມີຫລາຍຂັ້ນຕອນ, ມີຫລາຍເອກະສານ, ຕິດພັນກັບຫລາຍຂະແໜງການ ແລະ ມີຄ່າໃຊ້ຈ່າຍສູງ. ທະນາຄານໂລກໄດ້ຈັດລໍາດັບຄວາມສະດວກຂອງການດໍາເນີນທຸລະກິດໃນ ສປປ ລາວ ເປັນລໍາດັບທີ 141 ໃນປີ 2017[31], ຫລຸດຈາກລໍາດັບທີ 139 ໃນປີ 2016; ສປປ ລາວ ຖືກຈັດປະເທດທີ່ມີຄວາມຫຍຸ້ງຍາກລໍາດັບທີ 2 ໃນ 10 ປະເທດອາຊຽນ, ຖັດຈາກປະເທດມຽນມາ.

ນອກນັ້ນ, ຜົນຈາກກໍລະນີສຶກສາຂອງອົງການສະຫະປະຊາຊາດເພື່ອການພັດທະນາ (UNDP) ແລະ ປະກົດການຕົວຈິງຫລາຍປະກົດການໃນຊຸມປີຜ່ານມາຍັງສະແດງໃຫ້ເຫັນວ່າ ລະບົບຄຸ້ມຄອງການລົງທຶນໃນ ສປປ ລາວ ຍັງບໍ່ທັນເຂັ້ມແຂງ, ບໍ່ມີປະສິດທິພາບ, ປະສິດທິຜົນສູງ. ຫລາຍໂຄງການລົງທຶນທີ່ໄດ້ຮັບອະນຸມັດ ນອກຈາກຈະບໍ່ມີ

31 https://tradingeconomics.com/laos/ease-of-doing-business

ປະສິດທິພາບທາງດ້ານເສດຖະກິດແລ້ວຍັງເປັນໂຄງການທີ່ສົ່ງຜົນກະທົບຮຸນແຮງຕໍ່ສິ່ງແວດລ້ອມສັງຄົມແລະທຳມະຊາດ. ຕາມຜົນການປຶກສາຫາລືກັບຂະແໜງການ ແລະ ທ້ອງຖິ່ນ, ສາເຫດຕົ້ນຕໍທີ່ເຮັດໃຫ້ລະບົບການຄຸ້ມຄອງການລົງທຶນດັ່ງກ່າວຍັງບໍ່ມີປະສິດທິພາບ ແລະ ປະສິດທິຜົນສູງ ແມ່ນ: (1) ຊ່ອງຫວ່າງໃນລະບຽບກົດໝາຍ, (2) ຄວາມສາມາດທາງດ້ານວິຊາການຂອງພະນັກງານທີ່ກ່ຽວຂ້ອງກັບການປະເມີນຜົນ ແລະ ພິຈາລະນາອະນຸມັດການລົງທຶນ, (3) ຂາດຂໍ້ມູນທີ່ມີຄຸນນະພາບ ແລະ (4) ຈັນຍາບັນ ແລະ ການສວຍໂອກາດຂອງພະນັກງານທີ່ກ່ຽວຂ້ອງຈຳນວນໜຶ່ງໃນຂະບວນການພິຈາລະນາອະນຸມັດ ແລະ ຄຸ້ມຄອງການລົງທຶນ.

ເພາະສະນັ້ນ, ການສືບຕໍ່ປັບປຸງສະພາບແວດລ້ອມ ແລະ ລະບົບການຄຸ້ມຄອງການລົງທຶນໃນ ສປປ ລາວ ໃຫ້ເຂັ້ມແຂງ, ໂປ່ງໃສ ແລະ ມີປະສິດທິພາບສູງຂຶ້ນ ຈຶ່ງມີຄວາມຈຳເປັນ ແລະ ຮຽກຮ້ອງຕ້ອງການອັນຮີບດ່ວນເພື່ອຮັບປະກັນການພັດທະນາເສດຖະກິດ-ສັງຄົມຕາມທິດສີຂຽວ-ຍືນຍົງທີ່ໄດ້ກຳນົດໄວ້ໃນວິໄສທັດ 2030, ຍຸດທະສາດ ໄລຍະ 10 ປີ (2016-2025) ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ VIII (2016-2020). ຍຸດທະ ສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ສະເໜີໃຫ້ເລັ່ງໃສ່:

- ທົບທວນຄືນ ແລະ ປັບປຸງບັນດາກົດໝາຍ, ກົດລະບຽບ ແລະ ກົນໄກຕ່າງໆທີ່ກ່ຽວຂ້ອງກັບການສົ່ງເສີມ/ອຳນວຍຄວາມສະດວກ ແລະ ຄຸ້ມຄອງການລົງທຶນໃນ ສປປ ລາວ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງຂຶ້ນ; ແນໃສ່ຫລຸດຜ່ອນ ແລະ ລົບສິ່ງອຸດຕັນ, ສິ່ງກີດຂວາງທີ່ເຮັດໃຫ້ການລົງທຶນພົບຄວາມຫຍຸ້ງຍາກ ໄປພ້ອມໆກັບການປິດຊ່ອງຫວ່າງໃນລະບຽບ, ກົດໝາຍ ແລະ ກົນໄກຄຸ້ມຄອງການລົງທຶນທີ່ເຮັດໃຫ້ການອະນຸມັດການລົງທຶນບໍ່ມີປະສິດທິພາບ, ປະສິດທິຜົນ ແລະ ບໍ່ສາມາດຮັບປະກັນໄດ້ປະສິດທິພາບທາງເສດຖະກິດ ແລະ ການຫລຸດຜ່ອນຜົນກະທົບທາງສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ, ໂດຍສະເພາະ ແມ່ນຂົງເຂດເສດຖະກິດສີຂຽວ-ຍືນຍົງ ເຊັ່ນ: ຂະແໜງການທ່ອງທ່ຽວ, ກະສິກຳສະອາດ, ພະລັງງານສະອາດ ແລະ ອື່ນໆ.

- ເພີ່ມຂີດຄວາມສາມາດທາງດ້ານວິຊາການໃຫ້ແກ່ການຈັດຕັ້ງ ແລະ ພະນັກງານຂອງຂະແໜງການ ແລະ ໜ່ວຍງານຕ່າງໆທີ່ກ່ຽວຂ້ອງກັບການພິຈາລະນາອະນຸມັດ ແລະ ຄຸ້ມຄອງການລົງທຶນຂອງລັດ, ເອກະຊົນພາຍໃນ ແລະ ຕ່າງປະເທດ ເພື່ອໃຫ້ການຈັດຕັ້ງ ແລະ ພະນັກງານດັ່ງກ່າວສາມາດປະຕິບັດໜ້າທີ່ວິຊາສະເພາະຂອງຕົນໃນການອຳນວຍຄວາມສະດວກ ແລະ ຄຸ້ມຄອງການລົງທຶນໃຫ້ໄດ້ຢ່າງມີປະສິດທິພາບ ແລະ ປະສິດທິຜົນສູງຂຶ້ນ. ຕົ້ນຕໍແມ່ນສະເໜີໃຫ້ເລັ່ງໃສ່ເພີ່ມຂີດຄວາມສາມາດຂອງການຈັດຕັ້ງ ແລະ ພະນັກງານດັ່ງກ່າວຢູ່ຂັ້ນທ້ອງຖິ່ນ (ຂັ້ນແຂວງ ແລະ ຂັ້ນເມືອງ).

- ເພີ່ມຄວາມເຂັ້ມແຂງໃຫ້ແກ່ລະບົບການຕິດຕາມ-ກວດກາ, ມາດຕະການຕໍ່ຜູ້ສວຍໂອກາດ ແລະ ຜູ້ລະເມີດລະບຽບກົດໝາຍໃນຂະບວນການພິຈາລະນາອະນຸມັດ ແລະ ຄຸ້ມຄອງການລົງທຶນຂອງລັດ, ເອກະຊົນພາຍໃນ ແລະ ຕ່າງປະເທດເພື່ອສະກັດກັ້ນ, ຈຳກັດ ແລະ ຫລຸດຜ່ອນປະກົດການຫຍໍ້ທໍ້ໃນຂະບວນການດັ່ງກ່າວ ກໍ່ຄືເພື່ອເຮັດໃຫ້ການອຳນວຍຄວາມສະດວກ ແລະ ຄຸ້ມຄອງການລົງທຶນເປັນໄປຕາມລະບຽບກົດໝາຍຢ່າງເຄັ່ງຄັດ, ມີປະສິດທິພາບ ແລະ ປະສິດທິຜົນສູງ.

### 3.1.2. ພັດທະນາຊົນນະບົດ ແລະ ຫລຸດຜ່ອນຄວາມທຸກຍາກ

ຄຸນລັກສະນະໜຶ່ງທີ່ສຳຄັນຂອງການເຕີບໂຕສີຂຽວຂອງ ສປປ ລາວ ຕາມຄວາມໝາຍທີ່ໄດ້ກຳນົດໄວ້ໃນຍຸດທະສາດສະບັບນີ້ ແມ່ນການຂະຫຍາຍຕົວຂອງເສດຖະກິດ ແລະ ການຫລຸດຜ່ອນຄວາມທຸກຍາກຢ່າງກວ້າງຂວາງ, ທົ່ວເຖິງ ແລະ ເປັນທຳ; ເລັ່ງໃສ່ເຮັດໃຫ້ທຸກຊົນຊາດ, ຊົນເຜົ່າ, ທຸກຊັ້ນຄົນ, ທຸກເພດ, ທຸກໄວ ແລະ ທຸກໆຄົນໃນສັງຄົມສາມາດເຂົ້າຮ່ວມຂະບວນການ ແລະ ໄດ້ຮັບຜົນປະໂຫຍດການຈາກການພັດທະນາຢ່າງກວ້າງຂວາງ, ທົ່ວເຖິງ ແລະ ເປັນທຳ. ສະນັ້ນ, ການພັດທະນາຊົນນະບົດ ແລະ ຫລຸດຜ່ອນຄວາມທຸກຍາກ ຈຶ່ງເປັນຂົງເຂດຈຸດສຸມໜຶ່ງຂອງຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ສະບັບນີ້ ເພື່ອເຮັດປະຊາຊົນຜູ້ທຸກຍາກທີ່ອາໄສຢູ່ເຂດຊົນນະບົດ,

ຫ່າງໄກ-ສອກຫລີກ ສາມາດປະກອບສ່ວນເຂົ້າໃນຂະບວນການ ແລະ ໄດ້ຮັບຜົນປະໂຫຍດຈາກການພັດທະນາເສດຖະກິດ-ສັງຄົມຢ່າງກວ້າງຂວາງ, ທົ່ວເຖິງ ແລະ ເປັນທຳ.

ໃນໄລຍະຜ່ານມາ, ການພັດທະນາຊົນນະບົດ ແລະ ຫລຸດຜ່ອນຄວາມທຸກຍາກ ກໍ່ໄດ້ເປັນຈຸດສຸມຕົ້ນຕໍຂອງການພັດທະນາເສດຖະກິດ-ສັງຄົມຂອງ ສປປ ລາວ. ໂດຍໄດ້ຮັບການສະໜັບສະໜູນຢ່າງແຂງແຮງຈາກຄູ່ຮ່ວມພັດທະນາ, ອົງການ ຈັດຕັ້ງສາກົນ ແລະ ລັດຖະບານຂອງຕ່າງປະເທດ, ລັດຖະບານແຫ່ງ ສປປ ລາວ ໄດ້ມີນະໂຍບາຍ, ກົນໄກ ແລະ ສຸມໃສ່ງົບປະມານຈຳນວນຫລວງຫລາຍເຂົ້າໃນວຽກງານດັ່ງກ່າວ. ໂດຍສະເພາະແມ່ນລັດຖະບານໄດ້ສ້າງຕັ້ງຄະນະພັດທະນາຊົນນະບົດ ແລະ ຫລຸດຜ່ອນຄວາມທຸກຍາກທີ່ປະກອບດ້ວຍຫລາຍຂະແໜງການ, ສ້າງຕັ້ງກອງທຶນຫລຸດຜ່ອນຄວາມທຸກຍາກ ເພື່ອສະໜອງທຶນໃຫ້ແກ່ວຽກງານດັ່ງກ່າວ, ສ້າງ ແລະ ຈັດຕັ້ງປະຕິບັດນະໂຍບາຍໂຮມບ້ານນ້ອຍເຂົ້າເປັນບ້ານໃຫຍ່ ແລະ ໂຮມບ້ານໃຫຍ່ໃຫ້ເປັນຕົວເມືອງນ້ອຍ ເພື່ອເພີ່ມປະສິດທິພາບ ແລະ ປະສິດທິຜົນຂອງການພັດທະນາພື້ນຖານໂຄງລ່າງ ແລະ ການໃຫ້ການບໍລິການສາທາລະນະຕ່າງໆ ເຊັ່ນ: ການສຶກສາ, ສາທາລະນະສຸກ ແລະ ອື່ນໆ ກໍ່ຄືເພື່ອສ້າງເງື່ອນໄຂ ແລະ ປະຖົມປັດໄຈໃຫ້ແກ່ການຜະລິດເປັນສິນຄ້າ ເພື່ອຍົກສູງປະສິດທິພາບຂອງການຜະລິດ. ໄດ້ເຮັດໃຫ້ຄວາມທຸກຍາກ ແລະ ລະດັບຊີວິການເປັນຢູ່ຂອງປະຊາຊົນລາວໃນຊົນນະບົດໄດ້ຮັບການປັບປຸງໃຫ້ດີຂຶ້ນເລື້ອຍໆ.

ແຕ່ເຖິງຢ່າງໃດຕາມ, ການພັດທະນາຊົນນະບົດ ແລະ ຫລຸດຜ່ອນຄວາມທຸກຍາກໃນ ສປປ ລາວ ຍັງຊັກຊ້າ, ບໍ່ທັນຫັນ ປ່ຽນໂດຍພື້ນຖານ, ຍັງພົບກັບຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍຫລາຍປະການ; ຮຽກຮ້ອງໃຫ້ທຸກພາກສ່ວນໃຫ້ຄວາມສຳຄັນ ແລະ ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນວຽກງານດັ່ງກ່າວ. ໂດຍລວມແລ້ວ, ສະພາບຈຸດພິເສດຂອງຊົນນະບົດໃນ ສປປ ລາວ ແມ່ນຍັງເປັນເຂດທີ່ມີພົນລະເມືອງໜ້ອຍ, ດຳລົງຊີວິດຢູ່ແບບກະແຈກກະຈາຍ ແລະ ຄວາມໜາແໜ້ນຕ່ຳ ອັນຍັງສືບຕໍ່ເຮັດໃຫ້ການລົງທຶນເຂົ້າໃນການພັດທະນາພື້ນຖານໂຄງລ່າງ ແລະ ການສະໜອງບໍລິການສາທາລະນະມີປະສິດທິພາບ ແລະ ປະສິດທິຜົນຕ່ຳ; ການແບ່ງງານໃນສັງຄົມ ແລະ ການຜະລິດເປັນສິນຄ້າບໍ່ສາມາດເກີດຂຶ້ນໄດ້ ແລະ ໄດ້ເຮັດໃຫ້ການຜະລິດກະສິກຳແບບກຸ້ມຕົນເອງທີ່ມີປະສິດທິພາບ ແລະ ປະສິດທິຜົນຕ່ຳ ແລະ ມີຄວາມສ່ຽງ ແລະ ຄວາມບອບບາງສູງຕໍ່ໄພພິບັດທາງທຳມະຊາດຍັງເປັນວິຖີການດຳລົງຊີວິດຂອງປະຊາຊົນໃນຊົນນະບົດຂອງ ສປປ ລາວ. ການເຂົ້າເຖິງການບໍລິການດ້ານການສຶກສາ ແລະ ສາທາລະນະສຸກຍັງຫຍຸ້ງຍາກ ແລະ ບໍ່ທັນທົ່ວເຖິງ; ປະຊາຊົນຈຳນວນຫລວງຫລາຍຍັງບໍ່ທັນສາມາດເຂົ້າເຖິງແຫລ່ງນ້ຳສະອາດ ແລະ ນຳໃຊ້ວິດຖ່າຍທີ່ຖືກຕ້ອງຕາມຫລັກສຸຂະອະນາໄມ.

ເພື່ອເຮັດທຸກຊັ້ນຄົນ ແລະ ທຸກພາກສ່ວນໃນສັງຄົມສາມາດເຂົ້າຮ່ວມ ແລະ ໄດ້ຮັບຜົນປະໂຫຍດຈາກການພັດທະນາເສດຖະກິດ-ສັງຄົມຢ່າງກວ້າງຂວາງ, ທົ່ວເຖິງ ແລະ ເປັນທຳເທື່ອລະກ້າວ ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ສະເໜີສຸມໃສ່ພັດທະນາຊົນນະບົດ ແລະ ຫລຸດຜ່ອນຄວາທຸກຍາກ ດັ່ງລຸ່ມນີ້:

- ສຸມໃສ່ສືບຕໍ່ຈັດຕັ້ງປະຕິບັດນະໂຍບາຍໂຮມບ້ານນ້ອຍເປັນບ້ານໃຫຍ່ ແລະ ສ້າງບ້ານໃຫຍ່ໃຫ້ກາຍເປັນຕົວເມືອງນ້ອຍສີຂຽວທີ່ໜ້າຢູ່, ມີສະເໜ່ ແລະ ໃຫ້ປະກົດຜົນເປັນຈິງເທື່ອລະກ້າວ ເພື່ອຍົກສູງປະສິດທິພາບ ແລະ ປະສິດທິຜົນຂອງການລົງທຶນເຂົ້າໃນການກໍ່ສ້າງພື້ນຖານໂຄງລ່າງ ແລະ ການໃຫ້ການບໍລິການສາທາລະນະຕ່າງໆ ກໍ່ຄືເພື່ອສ້າງເງື່ອນໄຂ ແລະ ປະຖົມປັດໄຈພື້ນຖານໃຫ້ເກີດການແບ່ງງານໃນສັງຄົມ, ຜະລິດເປັນສິນຄ້າ, ຂະຫຍາຍກຳລັງການຜະລິດ ແລະ ເຮັດແບບວິທີການຜະລິດ ແລະ ວິຖີການດຳລົງຊີວິດຂອງປະຊົນໃນຊົນນະບົດຫັນປ່ຽນໂດຍພື້ນຖານ.

- ສຸມໃສ່ພັດທະນາພື້ນຖານໂຄງລ່າງທາງດ້ານການຄົມມະນາຄົມ ເພື່ອເຊື່ອມຕໍ່ຕົວເມືອງກັບຊົນນະບົດ ເພື່ອເຮັດໃຫ້ຊົນນະບົດກາຍເປັນບ່ອນຜະລິດ ແລະ ປຸງແຕ່ງອາຫານທີ່ມີຄຸນນະພາບເພື່ອສະໜອງໃຫ້ແກ່ຕົວເມືອງຕ່າງໆທີ່ເປັນສູນກາງທາງເສດຖະກິດ, ການຄ້າ, ການເມືອງ ແລະ ວັດທະນະທຳ-ສັງຄົມຂອງປະເທດ ແລະ ຜະລິດວັດຖຸດິບເພື່ອສະໜອງໃຫ້ແກ່ໂຮງງານອຸດສາຫະກຳໃນຕົວເມືອງ ແລະ ໃນເຂດອຸດສາຫະກຳຕ່າງໆ ແລະ ເພື່ອການສົ່ງອອກ ພ້ອມທັງເປັນບ່ອນ

ອະນຸລັກວັດທະນະທຳ ແລະ ວິຖີການດຳລົງຊີວິດຂອງປະຊາຊົນລາວ ເພື່ອເຮັດໃຫ້ຊົນນະບົດກາຍເປັນສະຖານທີ່ທ່ອງທ່ຽວ ແລະ ແຫລ່ງພັກຜ່ອນຂອງນັກທ່ອງທ່ຽວຕ່າງປະເທດ ແລະ ເປັນສະຖານທີ່ທ່ອງທ່ຽວຂອງປະຊາຊົນລາວທີ່ດຳລົງຊີວິດໃນຕົວເມືອງ.

- ສຸມໃສ່ປັບປຸງພື້ນຖານໂຄງລ່າງ ແລະ ສະໜອງການບໍລິການດ້ານການສຶກສາ, ສາທາລະນະສຸກ, ນໍ້າປະປາ, ໂທລະຄົມມະນາຄົມ ແລະ ຂໍ້ມູນຂ່າວສານທີ່ມີຄຸນນະພາບ ໃຫ້ແກ່ຊົນນະບົດຢ່າງພຽງພໍ ແລະ ທົ່ວເຖິງ ເພື່ອຍົກສູງຄຸນນະພາບຂອງການດຳລົງຊີວິດຂອງປະຊາຊົນໃນຊົນນະບົດໃຫ້ນັບມື້ນັບສູງຂຶ້ນ.

- ສຸມໃສ່ຝຶກທັກສະການດຳລົງຊີວິດ ແລະ ສີມືແຮງງານໃຫ້ປະຊາຊົນໃນຊົນນະບົດ, ໂດຍສະເພາະແມ່ນຝຶກກ່ຽວກັບວິທີການປູກຝັງ, ການລ້ຽງສັດ, ການປຸງແຕ່ງຜະລິດຕະພັນກະສິກຳ, ການຜະລິດຫັດຖະກຳ, ການຫຸ້ມຫໍ່, ການຕະຫລາດ, ການຄ້າຂາຍ, ການບໍລິຫານທຸລະກິດຂະໜາດນ້ອຍ ແລະ ອື່ນໆ ຕາມວິຖີຂອງການເຕີບໂຕສີຂຽວ ເພື່ອເຮັດໃຫ້ຊາວກະສິກອນໃນຊົນນະບົດສາມາດກາຍເປັນຜູ້ຜະລິດສິນຄ້າ ແລະ ສະໜອງການບໍລິການໃນຕະຫລາດພາຍໃນ ແລະ ຕ່າງປະເທດເທື່ອລະກ້າວ. ໂດຍສະເພາະແມ່ນ ເລັ່ງໃສ່ຝຶກທັກສະ ແລະ ສີມືແຮງງານທີ່ຕິດພັນກັບພື້ນຖານວັດທະນາທຳ ແລະ ທ່າແຮງທີ່ໄດ້ປຽບຂອງແຕ່ລະທ້ອງຖິ່ນ.

- ສຸມໃສ່ສ້າງກອງທຶນການເງິນຈຸລະພາກ ແລະ ກົນໄກການເງິນຊົນນະບົດອື່ນໆເພື່ອອຳນວຍຄວາມສະດວກໃຫ້ແກ່ຊາວກະສິກອນໄດ້ເຂົ້າເຖິງແຫລ່ງທຶນເພື່ອຜະລິດເປັນທຸລະກິດກະສິກຳ ແລະ ຫັດຖະກຳຂະໜາດນ້ອຍ ເພື່ອຕອບສະໜອງຄວາມຕ້ອງການຂອງຕະຫລາດພາຍໃນ ແລະ ຕ່າງປະເທດ.

- ສົ່ງເສີມການຜະລິດເປັນສິນຄ້າ ແລະ ຊົມໃຊ້ຜະລິດຕະພັນພື້ນເມືອງຂອງລາວທີ່ຜະລິດຢູ່ຊົນນະບົດ ເຊັ່ນ: ຜ້າຝ້າຍ, ຜ້າໄໝ, ເຄື່ອງຫັດຖະກຳຈັກສານ ແລະ ອື່ນໆ.

### 3.1.3. ບົດບາດ-ຍິງຊາຍ : ການປົກປ້ອງ ແລະ ສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ

ໃນໄລຍະຜ່ານມາ, ເຖິງແມ່ນວ່າ ພັກ ແລະ ລັດຖະບານແຫ່ງ ສປປ ລາວ ຈະເຫັນໄດ້ຄວາມສຳຄັນ ແລະ ໄດ້ເອົາໃຈໃສ່ບົດບາດຍິງ-ຊາຍ ແລ້ວກໍ່ຕາມ; ແຕ່ຖານະຂອງເພດຍິງ ໃນ ສປປ ລາວ ໃນຫລາຍຂົງເຂດຍັງບໍ່ທັນເທົ່າທຽມກັບເພດຊາຍ ແລະ ເພດຍິງ ຍັງຖືກເອົາປຽບດ້ວຍຫລາຍຮູບການ. ສະນັ້ນ, ເພື່ອຮັບປະກັນໃຫ້ທຸກເພດໄວ ແລະ ທຸກຊັ້ນຄົນສາມາດເຂົ້າຮ່ວມຂະບວນການ ແລະ ໄດ້ຜົນປະໂຫຍດຈາກການພັດທະນາຢ່າງກວ້າງຂວາງ, ທົ່ວເຖິງ ແລະ ເປັນທຳ ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ໄດ້ກຳນົດໃຫ້ບົດບາດຍິງ-ຊາຍ ວຽກງານປົກປ້ອງ ແລະ ສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ ເປັນຈຸດສຸມໜຶ່ງທີ່ສຳຄັນຂອງການເຕີບໂຕສີຂຽວ, ໂດຍສະເພາະແມ່ນຈະສຸມໃສ່:

- ເຊື່ອມສານບົດບາດຍິງ-ຊາຍ/ການປົກປ້ອງ ແລະ ສົ່ງເສີມຄວາມກ້າວໜ້າຂອງແມ່ຍິງເຂົ້າໃນຍຸດທະສາດ, ແຜນພັດທະນາຂອງຂະແໜງການ ແລະ ທ້ອງຖິ່ນເພື່ອຮັບປະກັນໃຫ້ແມ່ຍິງໄດ້ຮັບການປົກປ້ອງ ແລະ ສົ່ງເສີມໃຫ້ມີຄວາມກ້າວໜ້າໃນທຸກຂະແໜງການ ແລະ ທ້ອງຖິ່ນຢ່າງເປັນລະບົບ ແລະ ມີປະສິດທິພາບສູງ; ເລັ່ງໃສ່ຫລຸດຜ່ອນຄວາມແຕກຕ່າງລະຫວ່າງ ຍິງ-ຊາຍໃນທຸກຂົງເຂດ, ຂະແໜງການ ແລະ ທ້ອງຖິ່ນ.

- ສົ່ງເສີມການເຂົ້າເຖິງການສຶກສາຂອງແມ່ຍິງ, ໂດຍສະເພາະແມ່ນການເຂົ້າເຖິງການສຶກສາຂັ້ນສູງ (ຂັ້ນມັດທະຍົມຂຶ້ນໄປ) ເພື່ອຫລຸດຜ່ອນຄວາມແຕກໂຕນລະຫວ່າງຍິງ-ຊາຍ. ຕາມສະຖິຕິຈາກກະຊວງສຶກສາທິການ ແລະ ກິລາ, ອັດຕາສ່ວນຍິງ-ຊາຍ ໃນການສຶກສາຊັ້ນປະຖົມຈະສູງປະມານ 0,97 (ໃນສົກປີ 2008-2009); ຄວາມແຕກຕ່າງລະຫວ່າງຍິງ-ຊາຍ ໃນການເຂົ້າໂຮງຮຽນຊັ້ນປະຖົມຍັງຕໍ່າ ຫລື ມີຄວາມສະເໝີພາບກັນ. ແຕ່ອັດຕາສ່ວນດັ່ງກ່າວຈະຫລຸດລົງເລື້ອຍໆໃນລະດັບການສຶກສາທີ່ສູງຂຶ້ນ; ອັດຕາສ່ວນດັ່ງກ່າວຈະເທົ່າກັບປະມານ 0,86 ໃນການສຶກສາ

ຊັ້ນມັດທະຍົມຕົ້ນ; 0,79 ໃນການສຶກສາຊັ້ນມັດທະຍົມປາຍ ໃນສົກປີ 2008 ແລະ 0,78 ໃນລະດັບການສຶກສາຂັ້ນມະຫາວິທະຍາໄລໃນສົກປີ 2016. ພິເສດແມ່ນຈະສຸມໃສ່ສົ່ງເສີມການເຂົ້າເຖິງການສຶກສາຂອງແມ່ຍິງທີ່ທຸກຍາກ, ຊົນຊາດ-ຊົນເຜົ່າ, ຜູ້ດ້ອຍໂອກາດ ແລະ ດໍາລົງຊີວິດຢູ່ເຂດຊົນນະບົດຫ່າງໄກສອກຫລີກ.

- ສົ່ງເສີມການຝຶກອົບຮົມວິຊາຊີບ, ສີມືແຮງງານ, ສ້າງວຽກເຮັດງານທໍາ ແລະ ກິດຈະກໍາສ້າງ ລາຍຮັບໃຫ້ແກ່ແມ່ຍິງ, ໂດຍສະເພາະແມ່ນໃນຂະແໜງການເສດຖະກິດສີຂຽວ; ໝາຍຄວາມວ່າ ໃນຂະແໜງການເສດຖະກິດທີ່ສະອາດ, ເປັນມິດຕໍ່ສຸຂະພາບ ແລະ ໝັ້ນຄົງ ຫລື ຄວາມສ່ຽງ ແລະ ຄວາມບອບບາງຕໍ່າຕໍ່ໄພພິບັດທາງທໍາມະຊາດ ແລະ ການເໜັງຕີງຂອງສະພາບເສດຖະກິດໂລກ ແລະ ໃນຂະແໜງການເສດຖະກິດສີຂຽວທີ່ຕິດພັນກັບການອະນຸລັກວັດທະນະທໍາ, ຮີດຄອງປະເພນີ ແລະ ວິຖີການດໍາລົງຊີວິດຂອງປະຊາຊົນລາວ ເຊັ່ນ: ການຕໍ່າຫູກທໍໄໝ, ການແຕ່ງຢູ່ຄືວກິນ, ການຫຍິບປັກຖັກແຊ່ວ ແລະ ອື່ນໆ; ແນໃສ່ເຮັດໃຫ້ແມ່ຍິງມີອາຊີບ, ມີວຽກເຮັດງານທໍາ, ມີລາຍຮັບທີ່ໝັ້ນຄົງ, ມີບົດບາດໃນຄອບຄົວ ແລະ ສັງຄົມ ແລະ ແນໃສ່ເຮັດແມ່ຍິງເປັນຕົວແທນຄຸນຄ່າທາງດ້ານວັດທະນະທໍາຂອງປະຊົນລາວບັນດາເຜົ່າ. ຕົ້ນຕໍແມ່ນຈະສຸມໃສ່ ແມ່ຍິງທີ່ທຸກຍາກ, ດໍາລົງຊີວິດຢູ່ເຂດຊົນນະບົດຫ່າງໄກສອກຫລີກ, ຊົນຊາດ-ຊົນເຜົ່າ ແລະ ຜູ້ດ້ອຍໂອກາດ.

- ສົ່ງເສີມການມີສ່ວນຮ່ວມຂອງແມ່ຍິງໃນທຸກການເຄື່ອນໄຫວທາງດ້ານເສດຖະກິດ, ການເມືອງ ແລະ ວັດທະນະທໍາ-ສັງຄົມ; ໂດຍສະເພາະແມ່ນໃນກົງຈັກການຈັດຕັ້ງຂອງພັກ-ລັດ ແລະ ໃນຕໍາແໜ່ງການນໍາຂັ້ນສູງ ແລະ ຂັ້ນກາງຂອງປະເທດ.

- ສົ່ງເສີມການໃຫ້ການປົກປ້ອງ ແລະ ຊ່ວຍເຫລືອຜູ້ຍິງ ແລະ ເດັກນ້ອຍທີ່ໄດ້ຮັບຜົນກະທົບຈາກການໃຊ້ຄວາມຮຸນແຮງໃນຄອບຄົວ, ທາງເພດ ແລະ ການຄ້າມະນຸດ.

### 3.1.4. ການປັບຕົວເຂົ້າກັບສະພາບການປ່ຽນແປງດິນຟ້າອາກາດ ແລະ ການຄຸ້ມຄອງໄພພິບັດທາງ ທໍາມະຊາດ

ສປປ ລາວ ເປັນປະເທດມີຄວາມສ່ຽງ ແລະ ຄວາມບອບບາງສູງຕໍ່ສະພາບການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດທາງທໍາມະຊາດເນື່ອງຈາກ ເປັນປະເທດທີ່ມີຂະໜາດເສດຖະກິດນ້ອຍ ແລະ ມີລັກສະນະເອື່ອຍອີງທໍາມະຊາດສູງ. ສະພາບການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດທາງທໍາມະຊາດດັ່ງກ່າວ ສາມາດສົ່ງຜົນກະທົບເຮັດໃຫ້ ສປປ ລາວ ບໍ່ສາມາດບັນລຸ ເປົ້າໝາຍພັດທະນາເສດຖະກິດ-ສັງຄົມໄລຍະກາງ ແລະ ໄລຍະຍາວ ຕາມກໍານົດເວລາທີ່ໄດ້ກໍານົດໄວ້. ຕາມການຄາດຂະເນຂອງສູນຄົ້ນຄວ້າຂອງອາຊີຕາເວັນອອກສ່ຽງໃຕ້ (SEA START), ສປປ ລາວ ນອນໃນເຂດທີ່ສະພາບດິນຟ້າອາກາດຈະມີການ ປ່ຽນແປງໃນລະດັບປານກາງ. ຄາດວ່າອຸນຫະພູມສະເລ່ຍຈະສູງຂຶ້ນລະຫວ່າງ 0,5-0,7 ˚C ແລະ ປະລິມານນໍ້າຝົນປະມານ 14%, ຕົ້ນຕໍແມ່ນເນື່ອງມາຈາກຝົນຕົກໜັກບໍ່ແມ່ນຍ້ອນການແກ່ຍາວຂອງລະດູຝົນໃນປີ 2050. ຕາມຜົນການພະຍາກອນດັ່ງກ່າວ, ລະດູແລ້ງຈະແກ່ຍາວ ແລະ ແຫ້ງແລ້ງຂຶ້ນ ແລະ ລະດູຝົນສັ້ນເຂົ້າ ແລະ ມີຝົນຕົກແຮງຂຶ້ນ[32]. ຜົນການພະຍາກອນດັ່ງກ່າວໄດ້ຊີ້ໃຫ້ເຫັນວ່າສະພາບໄພພິບັດທາງທໍາມະຊາດໃນ ສປປ ລາວ ຈະເພີ່ມຄວາມຖີ່, ຄວາມຮຸນແຮງ ແລະ ສ້າງຜົນເສຍຫາຍໃຫ້ແກ່ຊີວິດ ແລະ ຊັບສິນຂອງປະຊາຊົນຫລາຍຂຶ້ນ; ໂດຍສະເພາະແມ່ນໄພແຫ້ງແລ້ງ, ໄພນໍ້າຖ້ວມ, ລົມພາຍຸ ແລະ ພະຍາດລະບາດ (ພືດ, ສັດ ແລະ ຄົນ). ເພາະສະນັ້ນ, ການປັບຕົວເຂົ້າກັບສະພາບການປ່ຽນແປງດິນຟ້າອາກາດ ແລະ ຄຸ້ມຄອງໄພພິບັດທາງທໍາມະຊາດຈຶ່ງແມ່ນຄວາມຈໍາເປັນພາວະວິໄສ ເພື່ອຮັບປະກັນການບັນລຸເປົ້າໝາຍການພັດທະນາເສດຖະກິດ-ສັງຄົມໄລຍະກາງ ແລະ ໄລຍະຍາວທີ່ໄດ້ກໍານົດໄວ້.

[32] Phaivanh, et. Basin-Wide Climate Change Impact and Vulnerability Assessment for Wetlands of the Lower Mekong Basin for Adaptation Planning.

ເຖິງປະຈຸບັນ, ລັດຖະບານແຫ່ງ ສປປ ລາວ ກໍ່ເຫັນໄດ້ຄວາມສຳຄັນ ແລະ ໄດ້ສ້າງ ແລະ ຈັດຕັ້ງປະຕິບັດຫລາຍນະໂຍບາຍ, ຍຸດທະສາດ ແລະ ກົນໄກປັບຕົວເຂົ້າກັບສະພາບການປ່ຽນແປງດິນຟ້າອາກາດ ເຊັ່ນ: ຍຸດທະສາດແຫ່ງຊາດກ່ຽວກັບການປັບຕົວເຂົ້າກັບສະພາບການປ່ຽນແປງດິນຟ້າອາກາດ (The National Adaptation Plan for Action/NAPA), ແຜນຍຸດທະສາດຄຸ້ມຄອງຄວາມສ່ຽງຕໍ່ໄພພິບັດແຫ່ງຊາດ (Strategic Plan on Disaster Risk Management, 2020), ລັດຖະບານໄດ້ສ້າງຕັ້ງຄະນະກຳມະການຄຸ້ມຄອງໄພພິບັດແຫ່ງຊາດ (The National Committee for Disaster Management/NCDM) ພາຍໃຕ້ການເປັນປະທານຂອງທ່ານລັດຖະມົນຕີກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ຄະນະກຳມະການດັ່ງກ່າວມີຫ້ອງການ ຫລື ຈຸດປະສານງານຢູ່ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ເຄືອຂ່າຍປະສານງານລົງຮອດຂັ້ນເມືອງ; ໝາຍຄວາມວ່າ ມີຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງຢູ່ແຕ່ລະແຂວງ ແລະ ຂັ້ນເມືອງຢູ່ແຕ່ລະເມືອງ. ຄະນະກຳມະການດັ່ງກ່າວມີພາລະບົດບາດຕົ້ນໃນການເຝົ້າລະວັງ, ເຕືອນໄພລ່ວງໜ້າ, ຊ່ວຍເຫລືອສຸກເສີນ ແລະ ຟື້ນຟູຫລັງໄພພິບັດ. ສ່ວນການແກ້ໄຂບັນຫາໄພພິບັດ ແລະ ສະພາບການປ່ຽນແປງດິນຟ້າອາກາດໄລຍະຍາວ ແມ່ນພາລະບົດບາດຂອງກົມຄຸ້ມຄອງໄພພິບັດ ແລະ ການປ່ຽນແປງສະພາບດິນຟ້າອາກາດ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ. ບັນດາຍຸດທະສາດ, ນະໂຍບາຍ, ກົງຈັກການຈັດຕັ້ງ ແລະ ກົນໄກປະສານງານທີ່ມີໃນປະຈຸບັນເປັນພື້ນຖານ ແລະ ປະຖົມປັດໄຈທີ່ສຳຄັນໃນການປັບຕົວເຂົ້າກັບສະພາບການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດທາງທຳມະຊາດ.

ແຕ່ເຖິງຢ່າງໃດກໍ່ຕາມ, ຕາມປະສົບການຕົວຈິງໃນໄລຍະຜ່ານມາເຫັນວ່າ ການຈັດຕັ້ງປະຕິບັດຍຸດທະສາດ ແລະ ນະໂຍບາຍຕ່າງໆດັ່ງກ່າວຍັງບໍ່ທັນມີປະສິດທິພາບ ແລະ ປະສິດທິຜົນສູງ ເນື່ອງມາຈາກຫລາຍສາຍເຫດເປັນຕົ້ນແມ່ນ: (1) ຄວາມຮັບຮູ້, ເຂົ້າໃຈ ແລະ ຂີດຄວາມສາມາດຂອງພະນັກງານ ແລະ ການຈັດຕັ້ງທີ່ກ່ຽວຂ້ອງກ່ຽວກັບການປັບຕົວເຂົ້າກັບສະພາບການປ່ຽນແປງດິນຟ້າອາກາດຍັງບໍ່ທັນສູງ, (2) ຂາດງົບປະມານໃນການເຄື່ອນໄຫວດຳເນີນກິດຈະກຳຊຸກຍູ້ການເຊື່ອມສານການປັບຕົວເຂົ້າກັບສະພາບການປ່ຽນແປງດິນຟ້າອາກາດເຂົ້າໃນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ຂອງຂະແໜງການ ແລະ ທ້ອງຖິ່ນຢ່າງເປັນລະບົບ ແລະ ມີປະສິທິພາບສູງ, (3) ຂາດເຕັກນິກ ແລະ ເຕັກໂນໂລຊີທີ່ມີປະສິດທິພາບໃນໃນການປັບຕົວ ແລະ ອື່ນໆ.

ເພາະສະນັ້ນ, ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ສະບັບນີ້ ຈຶ່ງກຳນົດເອົາການປັບຕົວເຂົ້າກັບສະພາບການປ່ຽນແປງດິນຟ້າອາກາດເປັນຂົງເຂດຈຸດສຸມໜຶ່ງເພື່ອຫລຸດຜ່ອນຄວາມສ່ຽງ ແລະ ຄວາມບອບບາງຂອງເສດຖະກິດຂອງ ສປປ ລາວ ຕໍ່ສະພາບການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດທາງທຳມະຊາດ, ໂດຍສະເພາະແມ່ນຈະເລັ່ງໃສ່:

- ເພີ່ມຄວາມຮັບຮູ້, ເຂົ້າໃຈ ແລະ ຂີດຄວາມສາມາດຂອງພະນັກງານ ແລະ ອົງການຈັດຕັ້ງຕ່າງໆທີ່ກ່ຽວຂ້ອງກັບການປັບຕົວເຂົ້າກັບສະພາບການປ່ຽນແປງດິນຟ້າອາກາດ, ໂດຍສະເພາະຈະສຸມໃສ່ ຈຸດປະສານງານ/ຫ້ອງການປະສານງານຂອງຄະນະຄຸ້ມຄອງໄພພິບັດແຫ່ງຊາດ, ຂັ້ນແຂວງ ແລະ ຂັ້ນເມືອງ ແລະ ກົມຄຸ້ມຄອງໄພພິບັດ ແລະ ການປ່ຽນແປງສະພາບດິນຟ້າອາກາດ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອໃຫ້ສາມາດເຊື່ອມສານວຽກງານດັ່ງກ່າວເຂົ້າໃນ ນະໂຍບາຍ, ຍຸດທະສາດ, ແຜນງານ ແລະ ໂຄງການຂອງຂະແໜງການ ແລະ ທ້ອງຖິ່ນໄດ້ຢ່າງມີປະສິດທິພາບ ແລະ ປະສິດທິຜົນສູງຂຶ້ນ.

- ສົ່ງເສີມການປັບປຸງລະບົບເຕືອນໄພລ່ວງໜ້າໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງຂຶ້ນເພື່ອຫລຸດຜ່ອນຜົນເສຍຫາຍທາງດ້ານຊີວິດ ແລະ ຊັບສິນຂອງປະຊາຊົນຈາກໄພພິບັດທາງທຳມະຊາດ.

- ສົ່ງເສີມການສ້າງຕັ້ງ ແລະ ເພີ່ມຂີດຄວາມສາມາດຂອງຄັງແຮຊ່ວຍເຫລືອສຸກເສີນແຫ່ງຊາດ, ຂັ້ນແຂວງ, ເມືອງ ແລະ ບ້ານເພື່ອໃຫ້ສາມາດເຂົ້າໄປຊ່ວຍເຫລືອບັນເທົາທຸກໃຫ້ແກ່ຜູ້ປະສົບເຄາະຮ້າຍຈາກໄພພິບັດທາງທຳມະຊາດໄດ້ຢ່າງມີປະສິດທິພາບ, ປະສິດທິຜົນ ແລະ ທັນກັບເວລາ.

- ສົ່ງເສີມການຂະຫຍາຍອັດຕາການປົກຫຸ້ມ ແລະ ການຄຸ້ມຄອງຂອງລະບົບປະກັນສັງຄົມແຫ່ງຊາດໃຫ້ກວ້າງຂວາງ ແລະ ທົ່ວເຖິງເພື່ອໃຫ້ການປົກປ້ອງຄຸ້ມຄອງສຸຂະພາບ, ຊັບສິນ ແລະ ການຜະລິດກະສິກຳ (ພືດປູກ, ສັດລ້ຽງ ແລະ ອື່ນໆ) ຈາກຜົນກະທົບຂອງສະພາບການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດທາງທຳມະຊາດ.

- ສົ່ງເສີມການຂະຫຍາຍຕົວຂອງເສດຖະກິດທີ່ປ່ອຍອາຍພິດເຮືອນແກ້ວຕ່ຳເພື່ອປະກອບສ່ວນເຂົ້າໃນການບັນເທົາການປ່ຽນແປງຂອງສະພາບດິນຟ້າອາກາດດ້ວຍການສົ່ງເສີມການນຳໃຊ້ເຕັກນິກ ແລະ ເຕັກໂນໂລຊີທີ່ທັນສະໄໝ, ມີປະສິດທິພາບ ແລະ ປະສິດທິຜົນສູງ, ສ້າງສິ່ງເສດເຫລືອໜ້ອຍ, ປະຢັດພະລັງງານ ແລະ ນຳໃຊ້ພະລັງງານທີ່ສະອາດ-ເປັນມິດຕໍ່ສິ່ງແວດລ້ອມ ແລະ ສົ່ງເສີມການປົກປັກຮັກສາ ແລະ ຂະຫຍາຍແຫລ່ງຊຶມຊັບທາດອາຍພິດເຮືອນແກ້ວເປັນຕົ້ນແມ່ນປ່າໄມ້, ດິນ ແລະ ອື່ນໆ.

- ສົ່ງເສີມການສ້າງແຫລ່ງລາຍຮັບຂອງປະຊາຊົນໃຫ້ມີຄວາມຫລາກຫລາຍ ເພື່ອຫລຸດຜ່ອນຄວາມບອບບາງຕໍ່ໄພພິບັດທາງທຳມະຊາດ.

## 3.2. ຂະແໜງການຈຸດສຸມຂອງຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ

ນອກຈາກ 4 ຂົງເຂດຈຸດສຸມທີ່ຕິດພັນກັບຫລາຍຂະແໜງການ ທີ່ໄດ້ກ່າວມາຂ້າງເທິງແລ້ວ ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ຍັງໄດ້ກຳນົດ 7 ຂະແໜງການຕົ້ນຕໍດັ່ງລາຍລະອຽດລຸ່ມນີ້:

### 3.2.1. ຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທຳມະຊາດທີ່ມີຢູ່ຈຳກັດຂອງຊາດໃຫ້ເກີດຜົນປະໂຫຍດສູງສຸດ ແລະ ການປົກປັກຮັກສາສິ່ງແວດລ້ອມແມ່ນຂະແໜງການ/ຂົງເຂດບູລິມະສິດໜຶ່ງຂອງການເຕີບໂຕສີຂຽວ. ເຖິງປະຈຸບັນ, ລັດຖະບານແຫ່ງ ສປປ ລາວ ກໍ່ໄດ້ໃຫ້ຄວາມສຳຄັນຕໍ່ກັບບັນຫາດັ່ງກ່າວ ແລະ ໄດ້ມີຫລາຍນະໂຍບາຍ, ລະບຽບກົດໝາຍ ແລະ ກົນໄກຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທຳມະຊາດໃຫ້ມີປະສິດທິພາບ, ປະສິດທິຜົນ ແລະ ມີຄວາມຍືນຍົງ ແລະ ປົກປັກຮັກສາສິ່ງແວດລ້ອມ ເຊັ່ນ: ກົດໝາຍສິ່ງແວດລ້ອມ, ກົດໝາຍນ້ຳ ແລະ ຊັບພະຍາກອນນ້ຳ, ກົດໝາຍປ່າໄມ້, ກົດໝາຍທີ່ດິນ, ກົດລະບຽບກ່ຽວກັບການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ສັງຄົມ ແລະ ທຳມະຊາດ (ESIA) ແລະ ອື່ນໆ. ລັດຖະບານແຫ່ງ ສປປ ລາວ ໄດ້ສ້າງຕັ້ງ ແລະ ມອບໝາຍໃຫ້ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ປະຕິບັດພາລະບົດບາດເປັນໃຈກາງໃນການຄົ້ນຄວ້າ, ຈັດສັນ, ສ້າງແຜນຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທຳມະຊາດທີ່ມີຢູ່ຢ່າງຈຳກັດຂອງປະເທດໃຫ້ມີປະສິດທິພາບ, ປະສິດທິຜົນ ແລະ ມີຄວາມຍືນຍົງ ແລະ ປະຕິບັດພາລະບົດບາດເປັນໃຈກາງໃນການປົກປັກຮັກສາສິ່ງແວດລ້ອມໂດຍປະສານສົມທົບກັບຂະແໜງການ ແລະ ທ້ອງຖິ່ນ; ກະຊວງດັ່ງກ່າວມີເຄືອຂ່າຍປະສານງານລົງຮອດຂັ້ນເມືອງ; ໝາຍຄວາມວ່າ ມີພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຢູ່ທຸກແຂວງ ແລະ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຢູ່ທຸກເມືອງໃນທົ່ວ ສປປ ລາວ.

ບັນດານະໂຍບາຍ, ນິຕິກຳ, ໂຄງປະກອບ ແລະ ກົນໄກການປະສານດັ່ງກ່າວໄດ້ເປັນພື້ນຖານ ແລະ ປະຖົມປັດໄຈທີ່ສຳຄັນໃນການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມໃນ ສປປ ລາວ ໃນປະຈຸບັນ. ເຖິງຢ່າງໃດກໍ່ຕາມ, ວຽກງານຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມໃນ ສປປ ລາວ ຍັງເປັນວຽກງານທີ່ຂ້ອນຂ້າງໃໝ່ ຖ້າທຽບກັບວຽກງານອື່ນ. ສະນັ້ນ, ການຈັດຕັ້ງປະຕິບັດວຽກງານດັ່ງກ່າວຍັງບໍ່ທັນເປັນລະບົບ, ເຂັ້ມແຂງ ແລະ ມີປະສິດທິພາບສູງ, ໂດຍສະເພາະແມ່ນ: (1) ການແບ່ງພາລະບົດບາດ ແລະ ຄວາມຮັບຜິດຊອບລະຫວ່າງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ກັບບັນດາກະຊວງ ແລະ ຂະແໜງການອື່ນໆຍັງບໍ່ທັນຈະແຈ້ງ, ມີລັກສະນະສັບສົນ ແລະ ຊໍ້າຊ້ອນກັນ; (2) ການສ້າງ ແລະ ຈັດຕັ້ງປະຕິບັດລະບຽບກົດໝາຍທີ່ກ່ຽວຂ້ອງກັບການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມຍັງບໍ່ທັນຄົບຊຸດ, ເປັນລະບົບ ແລະ ເຂັ້ມງວດ; (3) ມາດຕະຖານໃນການຄຸ້ມຄອງຄຸນນະພາບຂອງສິ່ງແວດ

ລ້ອມຍັງບໍ່ທັນຄົບຖ້ວນເປັນຕົ້ນແມ່ນ: ມາດຖານຄຸນນະພາບນ້ຳ, ອາກາດ, ດິນ, ສຽງ, ກິ່ນ ແລະ ອື່ນໆ, (4) ການສຳຫລວດ, ຈັດສັນ, ນຳໃຊ້ ແລະ ຄຸ້ມຄ້ອງຊັບພະຍາກອນທຳມະຊາດ (ຊັບພະຍາກອນນ້ຳ, ດິນ, ປ່າໄມ້, ຊີວະນາໆພັນ, ບໍ່ແຮ່ ແລະ ອື່ນໆ) ຍັງບໍ່ທັນເປັນລະບົບ, ບໍ່ມີປະສິດທິພາບ, ບໍ່ມີປະສິດທິຜົນ, ບໍ່ມີຄວາມຍືນຍົງ ແລະ ຍັງຂາດການມີສ່ວນຮ່ວມຈາກຂະແໜງການທີ່ກ່ຽວຂ້ອງຢ່າງກວ້າງຂວາງ. ເພາະສະນັ້ນ, ການນຳໃຊ້ຊັບພະຍາກອນທຳມະຊາດໃນປະຈຸບັນຍັງບໍ່ທັນມີປະສິດທິພາບ, ປະສິດທິຜົນ ແລະ ຄວາມຍືນຍົງເທົ່າທີ່ຄວນ.

ສະນັ້ນ, ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ຈຶ່ງກຳນົດເອົາການປັບປຸງຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເປັນເປົ້າໝາຍບູລິມະສິດ, ໂດຍສະເພາະແມ່ນຈະເລັ່ງໃສ່:

- ສ້າງກົນໄກການປະສານງານໃນການຄົ້ນຄວ້າ, ສຳຫລວດ, ຈັດສັນ, ສ້າງແຜນການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທຳມະຊາດແບບມີສ່ວນຮ່ວມຂອງຫລາຍຂະແໜງການ ແລະ ທ້ອງຖິ່ນ ເພື່ອຮັບປະກັນການນຳໃຊ້ຢ່າງມີປະສິດທິພາບ, ປະສິດທິຜົນສູງ ແລະ ມີຄວາມຍືນຍົງ ກໍ່ຄື ເພື່ອຮັບປະກັນຄວາມເປັນເອກະພາບ ແລະ ຫລີກລ້ຽງການນຳໃຊ້ຊັບພະຍາກອນທຳມະຊາດທີ່ມີລັກສະນະຂັດແຍ່ງກັນ.

- ເພີ່ມທະວີພາລະບົດບາດ ແລະ ຄວາມເຂັ້ມແຂງຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ກໍ່ຄືຂອງພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ແລະ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ ໃນການຄຸ້ມຄອງມະຫາພາກທາງດ້ານຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ; ໝາຍຄວາມວ່າໃຫ້ເປັນໃຈກາງໃນການຄຸ້ມຄອງ, ຈັດສັນ ແລະ ສ້າງແຜນການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທຳມະຊາດແບບມີສ່ວນຮ່ວມຂອງຫລາຍຂະແໜງການ ແລະ ທ້ອງຖິ່ນໃຫ້ມີປະສິດທິພາບ, ປະສິດທິຜົນ ແລະ ຄວາມຍືນຍົງ. ແນໃສ່ເຮັດໃຫ້ການນຳໃຊ້ຊັບພະຍາກອນທຳມະຊາດ (ປ່າໄມ້, ຊັບພະຍາກອນນ້ຳ, ທີ່ດິນ, ບໍ່ແຮ່ ແລະ ອື່ນໆ) ຂອງແຕ່ລະຂະແໜງການ ແລະ ທ້ອງຖິ່ນເປັນເອກະພາບກັນພາຍໃຕ້ລະບຽບກົດໝາຍ ແລະ ການຄຸ້ມຄອງດູແລດ້ານມະຫາພາກຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

- ເພີ່ມທະວີບົດບາດເປັນໃຈກາງຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ກໍ່ຄື ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂອງແຂວງ ແລະ ຫ້ອງການຂອງເມືອງ ໃນການປະສານສົມທົບກັບຂະແໜງການກະສິກຳ ແລະ ປ່າໄມ້, ພະລັງງານ ແລະ ບໍ່ແຮ່, ທ່ອງທ່ຽວ, ໂຍທາທິການ ແລະ ຂົນສົ່ງ ແລະ ຂະແໜງການອື່ນໆທີ່ກ່ຽວຂ້ອງໃນການສຳຫລວດ, ຈັດສັນ ແລະ ສ້າງແຜນການຄຸ້ມຄອງ ແລະ ນຳໃຊ້ທີ່ດິນແຫ່ງຊາດແບບມີສ່ວນຮ່ວມໃຫ້ສຳເລັດໂດຍໄວ ເພື່ອຮັບປະກັນການນຳໃຊ້ທີ່ດິນທີ່ເປັນຊັບສົມບັດອັນລ້ຳຄ່າຂອງຊາດໃຫ້ມີປະສິດທິພາບ, ປະສິດທິຜົນສູງ ແລະ ມີຄວາມຍືນຍົງ. ການຈັດສັນ ແລະ ສ້າງແຜນການຄຸ້ມຄອງ ແລະ ນຳໃຊ້ທີ່ດິນແຫ່ງຊາດ ຕ້ອງໃຫ້ສອດຄ່ອງກັບຄວາມຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ມີປະສິດທິພາບທາງເສດຖະກິດ ແລະ ມີລັກສະນະວິທະຍາສາດ ສອດຄ່ອງກັບຄຸນລັກສະນະທາງດ້ານທຳມະຊາດຂອງດິນແຕ່ລະບ່ອນເຊັ່ນ: ດິນບ່ອນໃດຄວນເປັນດິນກະສິກຳ, ດິນປຸກສ້າງ, ປ່າຜະລິດ, ປ່າສະຫງວນ, ເຂດອະນຸລັກສັດປ່າ ແລະ ພັນພືດ ແລະ ອື່ນໆ. ສ້າງ ແລະ ຈັດຕັ້ງປະຕິບັດລະບຽບກົດໝາຍຄຸ້ມຄອງການນຳໃຊ້ດິນແຕ່ລະປະເພດໃຫ້ມີປະສິດທິພາບ, ປະສິດທິຜົນ ແລະ ມີຄວາມຍືນຍົງ. ການປ່ຽນແປງດິນປະເພດໜຶ່ງໄປເປັນດິນອີກປະເພດໜຶ່ງ ຕ້ອງໄດ້ຮັບການພິຈາລະນາອະນຸມັດຈາກກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຫລື ຈາກພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ຫລື ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ; ຂຶ້ນກັບການແບ່ງຂັ້ນຄຸ້ມຄອງພາຍໃນຂອງຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

- ນ້ຳ ແລະ ຊັບພະຍາກອນນ້ຳ ເປັນຊັບພະຍາກອນທຳມະຊາດທີ່ສຳຄັນຂອງ ສປປ ລາວ. ການຂະຫຍາຍຕົວເສດຖະກິດຂອງ ສປປ ລາວ ແມ່ນຕິດພັນກັບການຄຸ້ມຄອງ ແລະ ນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳຢ່າງມີປະສິດທິພາບ, ປະສິດທິຜົນ ແລະ ຄວາມຍືນຍົງ. ສະນັ້ນ, ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ

ສະບັບນີ້ ຈຶ່ງໄດ້ໃຫ້ຄວາມສຳຄັນ ແລະ ເລັ່ງໃສ່ຊຸກຍູ້ສົ່ງເສີມການຄຸ້ມຄອງ ແລະ ນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳຢ່າງມີປະສິດທະພາບ, ປະສິດທິຜົນ ແລະ ຄວາມຍືນຍົງ, ໂດຍສະເພາະແມ່ນເລັ່ງໃສ່: (1) ຊຸກຍູ້ສົ່ງເສີມການສ້າງກົນໄກປະສານງານໃນການຄຸ້ມຄອງ, ຈັດສັນ ແລະ ນຳໃຊ້ແບບມີສ່ວນຮ່ວມຂອງຫລາຍຂະແໜງການ ແລະທ້ອງຖິ່ນເພື່ອຮັບປະກັນປະສິດທິພາບ, ປະສິດທິຜົນ ແລະ ຄວາມຍືນຍົງຂອງການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳ ກໍ່ຄື ເພື່ອຮັບປະກັນຄວາມເປັນເອກະພາບ ແລະ ການສະໜອງນ້ຳຢ່າງພຽງພໍທາງດ້ານປະລິມານ ແລະ ຄຸນນະພາບໃຫ້ແກ່ການອຸປະໂພກ ແລະ ບໍລິໂພກຂອງປະຊາຊົນ, ການຜະລິດກະສິກຳ, ການອະນຸລັກສັດນ້ຳ, ການປະມົງ, ການຜະລິດພະລັງງານໄຟຟ້ານ້ຳຕົກ, ການຊົມໃຊ້ໃນພາກອຸດສາຫະກຳ ແລະ ອື່ນໆ, (2) ປົກປັກຮັກສາ ແລະ ປັບປຸງຄຸນນະພາບຂອງປ່າຕົ້ນນ້ຳ/ແຫລ່ງນ້ຳທີ່ຕິດພັນກັບອ່າງເກັບນ້ຳຕ່າງໆ, (3) ປົກປັກຮັກສາ, ປັບປຸງ ແລະ ຂະຫຍາຍອ່າງເກັບນ້ຳທຳມະຊາດ (ຫ້ວຍ, ໜອງ, ຄອງ, ບຶງ ຕ່າງໆ) ແລະ ແຫລ່ງນ້ຳທີ່ຄົນສ້າງຂຶ້ນໃຫ້ມີປະສິດທິພາບສູງຂຶ້ນ ແລະມີຄວາມຍືນຍົງ ເພື່ອເກັບກັກ ແລະ ສະໜອງນ້ຳໄດ້ຢ່າງພຽງພໍ ເພື່ອຮັບສະພາບການປ່ຽນແປງດິນຟ້າອາກາດ ແລະການຂາດແຄນນ້ຳ, (4) ປົກປັກຮັກສາຄຸນນະພາບນ້ຳ ແລະ (5) ສ້າງແຜນຄຸ້ມຄອງ, ຈັດສັນ ແລະ ນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳຢ່າງມີປະສິດທິພາບ, ປະສິທິຜົນ ແລະ ຍືນຍົງ.

- ການຄວບຄຸມມົນລະພິດ ແມ່ນຈຸດສຸມໜຶ່ງທີ່ສຳຄັນໃນຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ. ໃນປະຈຸບັນ, ລັດຖະບານ ແຫ່ງ ສປປ ລາວ ກຳລັງສ້າງ ແລະ ຈັດຕັ້ງປະຕິບັດຫລາຍນະໂຍບາຍ, ນິຕິກຳ ແລະ ກົນໄກທີ່ກ່ຽວຂ້ອງກັບການຄວບຄຸມມົນລະພິດເປັນຕົ້ນແມ່ນ ເຊັ່ນ: ດຳລັດ ແລະ ປຶດແນະນຳການປະເມີນຜົນກະທົບທາງສິ່ງແວດລ້ອມ, ສັງຄົມ ແລະ ທຳມະຊາດ (ESIA) ສະບັບປັບປຸງລ່າສຸດ, ມາດຕະຖານສິ່ງແວດລ້ອມແຫ່ງຊາດ ແລະ ອື່ນໆ. ແຕ່ເຖິງຢ່າງໃດກໍ່ຕາມ, ການສ້າງ ແລະ ຈັດຕັ້ງປະຕິບັດນະໂຍບາຍ, ນິຕິກຳ ແລະ ກົນໄກຄວບຄຸມມົນລະພິດໃນ ສປປ ລາວ ກໍ່ຍັງແມ່ນວຽກງານທີ່ຂ້ອນຂ້າງໃໝ່. ການສ້າງ ແລະ ຈັດຕັ້ງປະຕິບັດລະບົບນິຕິກຳ ເພື່ອເປັນບ່ອນອີງໃຫ້ແກ່ວຽກງານດັ່ງກ່າວກໍ່ຍັງບໍ່ທັນເປັນລະບົບ, ຄົບຊຸດ ແລະ ເຂັ້ມແຂງ, ບຸກຄະລາກອນທີ່ມີຄວາມຮູ້, ຄວາມສາມາດ ແລະ ປະສົບການສູງໃນຂົງເຂດດັ່ງກ່າວຍັງມີໜ້ອຍ, ບໍ່ທັນພຽງພໍກັບຄວາມຕ້ອງການ, ຂາດເຕັກນິກ, ເຕັກໂນໂລຊີ ແລະ ມາດຖານສິ່ງແວດລ້ອມທີ່ຊັດເຈນໃນແຕ່ລະດ້ານ (ມາດຕະຖານທາງອາກາດ, ຄຸນນະພາບນ້ຳ, ດິນ, ສຽງ ແລະ ອື່ນໆ). ເພາະສະນັ້ນ, ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ສະບັບນີ້ຈຶ່ງສຸມໃສ່ຊຸກຍູ້ການປັບປຸງລະບົບຄຸ້ມຄອງມົນລະພິດໃຫ້ເຂັ້ມແຂງ ແລະ ມີປະສິດທິພາບສູງຂຶ້ນ ເປັນຕົ້ນແມ່ນຈະສຸມໃສ່: (1) ສືບຕໍ່ສ້າງ, ປັບປຸງ ແລະ ຈັດຕັ້ງປະຕິບັດລະບຽບກົດໝາຍຕ່າງໆ ທີ່ກ່ຽວຂ້ອງໃຫ້ມີປະສິດທະພາບ, ປະສິດທິຜົນ ແລະ ຮັດກຸມ, (2) ເພີ່ມຂີດຄວາມສາມາດໃຫ້ແກ່ພະນັກງານຂອງຂະແໜງການ ແລະ ທ້ອງຖິ່ນກ່ຽວຂ້ອງ, (3) ສ້າງມາດຕະຖານຄຸນນະພາບສິ່ງແວດລ້ອມໃນແຕ່ລະດ້ານໃຫ້ລະອຽດ ແລະ ຊັດເຈນ (ມາດຕະຖານຄຸນນະພາບອາກາດ, ນ້ຳ, ດິນ, ກິ່ນ, ສຽງ ແລະ ອື່ນໆ), (4) ສະໜອງອຸປະກອນເຄື່ອງມືວັດແທກຄຸນນະພາບສິ່ງແວດລ້ອມໃຫ້ແກ່ໜ່ວຍງານກ່ຽວຂ້ອງ ແລະ (5) ສ້າງລະບົບຕິດຕາມ ແລະ ລາຍງານຄຸນນະພາບສິ່ງແວດລ້ອມຢ່າງເປັນລະບົບ ແລະ ເປັນປະຈຳ ເພື່ອສະໜອງຂໍ້ມູນຂ່າວສານ ແລະ ຂໍ້ສະເໜີແນະທາງດ້ານນະໂຍບາຍໃຫ້ແກ່ການຄຸ້ມຄອງຄຸນນະພາບສິ່ງແວດລ້ອມ.

### 3.2.2. ຂະແໜງການກະສິກຳ ແລະ ປ່າໄມ້

#### 3.2.2.1. ຂະແໜງກະສິກຳ

ກວມເອົາ 3 ຂະແໜງການຍ່ອຍ ຄື: ປູກຝັງ, ລ້ຽງສັດ ແລະ ການປະມົງ. ໂດຍລວມແລ້ວ ຂະແໜງກະສິກຳເປັນຂະແໜງການເສດຖະກິດໜຶ່ງທີ່ສຳຄັນໃນ ສປປ ລາວ. ໃນປີ 2015, ລວມຍອດມູນຄ່າຜະລິດຕະພັນຂອງຂະແໜງການດັ່ງກ່າວກວມປະມານ 23%[33] ຂອງລວມຍອດມູນຜະລິດຕະພັນພາຍໃນ (GDP) ຂອງ ສປປ ລາວ ແລະປະມານ 78% ຂອງກຳລັງແຮງງານຂອງປະເທດປະກອບອາຊີບຕົ້ນຕໍໃນຂະແໜງການດັ່ງກ່າວ; ແລະ ສິ່ງສຳຄັນ

[33] ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020).

ທີ່ສຸດ ແມ່ນຂະແໜງການດັ່ງກ່າວເປັນຂະແໜງທີ່ຮັບປະກັນຄວາມໝັ້ນຄົງທາງດ້ານສະບຽງອາຫານ ໃນ ສປປ ລາວ, ເປັນຂະແໜງການທີ່ປະຊາຊົນຜູ້ທຸກຍາກ ແລະ ດ້ອຍໂອກາດສ່ວນໃຫຍ່ປະກອບອາຊີບຕົ້ນຕໍ ແລະ ເປັນຂະແໜງການທີ່ມີຄວາມສ່ຽງ ແລະ ຄວາມບອບບາງສູງຕໍ່ໄພພິບັດທາງທຳມະຊາດ ແລະ ສະພາບການເໜັງຕີງຂອງເສດຖະກິດໂລກ.

ເພາະສະນັ້ນ, ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ, ຂະແໜງກະສິກຳໄດ້ເປັນຂະແໜງຈຸດສຸມ ຫລື ເປັນບູລິມະສິດ ເພື່ອແນໃສ່ຊຸກຍູ້ການພັດທະນາຂະແໜງການດັ່ງກ່າວໃຫ້ເຂັ້ມແຂງ ແລະ ກາຍເປັນຂະແໜງການທີ່ສຳຄັນໃນການສ້າງວຽກເຮັດງານທຳ ແລະ ກິດຈະກຳສ້າງລາຍຮັບໃຫ້ແກ່ປະຊາຊົນ, ຫລຸດຜ່ອນຄວາມທຸກຍາກ, ຫລຸດຜ່ອນຄວາມບໍ່ສະເໝີພາບທາງສັງຄົມ ກໍ່ຄືເພື່ອຫລຸດຜ່ອນຄວາມສ່ຽງ ແລະ ຄວາມບອບບາງຕໍ່ໄພພິບັດທາງທຳມະຊາດ ແລະ ການເໜັງຕີງຂອງສະພາບເສດຖະກິດໂລກ.

ໃນຫລາຍທົດສະວັດຜ່ານມາການຜະລິດກະສິກຳໃນ ສປປ ລາວ ສ່ວນໃຫຍ່ແມ່ນການຜະລິດຂະໜາດນ້ອຍ, ມີລັກສະນະຄອບຄົວ-ກຸ້ມຕົນເອງ, ນຳໃຊ້ເຕັກນິກ ແລະ ເຕັກໂນໂລຊີແບບພື້ນເມືອງທີ່ມີປະສິດທິພາບຕ່ຳ ແລະ ຂຶ້ນກັບທຳມະຊາດ. ການຜະລິດກະສິກຳແບບພື້ນເມືອງດັ່ງກ່າວ ເຖິງວ່າຈະມີຄວາມຍືນຍົງ ແຕ່ກໍ່ມີປະສິດທະພາບຕ່ຳ; ບໍ່ສາມາດຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນໄດ້. ສະນັ້ນ, ຊຸມປີ 2010 ລັດຖະບານແຫ່ງ ສປປ ລາວ ໄດ້ມີນະໂຍບາຍ ໃຫ້ສຳປະທານທີ່ດິນຂະໜາດໃຫຍ່ເປັນເວລາຍາວນານແກ່ນັກລົງທຶນພາຍໃນ ແລະ ຕ່າງປະເທດ ເພື່ອລົງທຶນເຂົ້າໃນການຜະລິດກະສິກຳຂະໜາດໃຫຍ່ນຳໃຊ້ເຕັກໂນໂລຊີ ເພື່ອຜະລິດເປັນສິນຄ້າ. ແຕ່ເນື່ອງຈາກຂາດລະບົບຄຸ້ມຄອງທີ່ມີປະສິດທິພາບການໃຫ້ສຳປະທານທີ່ດິນດັ່ງກ່າວ, ນອກຈາກມີປະສິດທິພາບທາງເສດຖະກິດຕ່ຳແລ້ວຍັງໄດ້ສ້າງຜົນກະທົບຮ້າຍແຮງຕໍ່ສັງຄົມ ແລະ ສິ່ງແວດລ້ອມ, ໂດຍສະເພາະແມ່ນຕໍ່ວິຖີການດຳລົງຊີວິດແບບດັ່ງເດີມຂອງປະຊາຊົນ, ເກີດຂໍ້ຂັດແຍ່ງຮຸນແຮງກ່ຽວກັບທີ່ດິນ, ການປົກຫຸ້ມຂອງປ່າໄມ້, ແຫລ່ງນ້ຳ, ຊີວະນາໆພັນ ແລະ ອື່ນໆ[34]. ອັນໄດ້ເຮັດໃຫ້ລັດຖະບານຕ້ອງໄດ້ຍຸດຕິການໃຫ້ສຳປະທານທີ່ດິນຂະໜາດໃຫຍ່ຊົ່ວຄາວແກ່ນັກລົງທຶນພາຍໃນ ແລະ ຕ່າງປະເທດເພື່ອປູກຕົ້ນໄມ້ອຸດສາຫະກຳ ໃນປີ 2013 ເພື່ອປະເມີນຄືນຜົນການຄຸ້ມຄອງການສຳປະທານຄືນໃໝ່. ມາເຖິງປະຈຸບັນ, ລັດຖະບານຍັງສືບຕໍ່ການກວດຄືນການຈັດຕັ້ງປະຕິບັດຄຳສັ່ງ ເລກທີ 13/ນຍ ແລະ ໄດ້ເປີດການລົງທຶນໃຫມ່ໃນບາງພືດອຸດສະຫະກຳ[35] ແຕ່ການຊຸກຍູ້ການລົງທຶນດັ່ງກ່າວນັ້ນແມ່ນຈະຕ້ອງເຂັ້ມງວດ ແລະ ມີການພິຈາລະນາເປັນແຕ່ລະໂຄງການຢ່າງລະອຽດ ແລະ ສຳຫລວດລັກແນ່ເຖິງຜົນກະທົບຕໍ່ສິ່ງແວດລ້ອມ ແລະ ການດຳລົງຊີວິດຂອງປະຊາຊົນ. ການຈັດສັນເນື້ອທີ່ດິນຍັງສືບຕໍ່ຄົ້ນຄວ້າ ເຊິ່ງຂໍ້ຄົງຄ້າງໜຶ່ງແມ່ນການນຳໃຊ້ທີ່ດິນໄປໃນຫລາຍຈຸດປະສົງ ເຮັດໃຫ້ການອາໄສແຕ່ການຂະຫຍາຍເນື້ອທີ່ການຜະລິດຢ່າງດຽວນັ້ນບໍ່ພຽງພໍກັບການເພີ່ມມູນ ຄ່າໃຫ້ການຜະລິດທາງດ້ານກະສິກຳ, ດັ່ງນັ້ນ, ທິດທາງການພັດທະນາຂະແໜງກະສິກຳ ໃນ ສປປ ລາວ ໃນຕໍ່ໜ້າຈະຕ້ອງໄດ້ເລັ່ງໃສ່ຍົກສູງປະສິດທິພາບ, ປະສິດທິຜົນ ແລະ ຄວາມຍືນຍົງຂອງການນຳໃຊ້ຊັບພະຍາກອນທຳມະຊາດ (ທີ່ດິນ, ຊັບພະຍາກອນນ້ຳ ແລະ ອື່ນໆ) ທີ່ມີຢູ່ໃຫ້ເກີດຜົນປະໂຫຍດສູງສຸດດັ່ງລາຍລະອຽດຕໍ່ໄປນີ້:

- ຍົກສູງປະສິດທິພາບ, ປະສິດທິຜົນຂອງການຜະລິດໃຫ້ສູງຂຶ້ນ ດ້ວຍການນຳໃຊ້ແບບວິທີການຜະລິດ ແລະ ເຕັກນິກການຜະລິດກະສິກຳທາງເລືອກທີ່ສະອາດ, ມີປະສິດທິພາບ ແລະ ຍືນຍົງ ທີ່ສາມາດປັບຕົວເຂົ້າກັບສະພາບແວດລ້ອມທີ່ມີເງື່ອນໄຂທີ່ແຕກຕ່າງກັນໃນທົ່ວ ສປປ ລາວ[36].

- ຫລຸດຜ່ອນສິ່ງເສດເຫລືອ ແລະ ມົນລະພິດທີ່ເກີດຈາກການຜະລິດກະສິກຳ ແລະ ກ້າວໄປສູ່ການຜະລິດກະສິກຳແບບຄົບວົງຈອນ[37] ນຳເອົາສິ່ງເສດເຫລືອທີ່ເກີດຈາກຂະບວນການຜະລິດກະສິກຳມາເປັນວັດຖຸດິບຜະລິດຝຸ່ນຊີ

[34] Green Growth Potential Assessment.

[35] ດັ່ງໃນຄຳສັ່ງເລກທີ 09/ນຍ, ລົງວັນທີ 02 ກັນຍາ 2018.

[36] ຕາມຄຳເຫັນ ແລະ ຄຳສະເໜີຂອງກະຊວງກະສິກຳ-ປ່າໄມ້.

[37] ຕາມຄຳເຫັນ ແລະ ຄຳສະເໜີຂອງກະຊວງກະສິກຳ-ປ່າໄມ້.

ວະພາບເພື່ອບຳລຸງດິນ, ແກ໊ສຊີວະພາບ ຫລື ເປັນເຊື້ອໄຟ.

- ພັດທະນາຄວາມຮູ້ ແລະ ທັກສະຂອງຜູ້ຜະລິດ ເພື່ອໃຫ້ບັນລຸເຕັກນິກທີ່ຖືກປັບປຸງ ແລະ ການຜະລິດທີ່ມີປະສິດທິພາບ ເຊັ່ນດຽວກັນກັບການເປີດໂອກາດສຳຫລັບທາງເລືອກໃນການດຳລົງຊີວິດ. ໃນນີ້ແມ່ນລວມເຖິງການສົ່ງເສີມ ແລະ ພັດທະນາຜົນຜະລິດທີ່ເປັນເອກະລັກຂອງທ້ອງຖິ່ນ ເຊິ່ງເຊື່ອມໂຍງກັບການທ່ອງທ່ຽວ, ການສົ່ງອອກ ແລະ ການຄໍ້າປະກັນສະບຽງອາຫານ[38].

- ສົ່ງເສີມການຜະລິດກະສິກຳແບບປະສົມປະສານ ແລະ ໝູນວຽນປູກພືດ ເພື່ອຫລຸດຜ່ອນການເຊື່ອມໂຊມຂອງດິນ; ຈຳກັດ ແລະ ຫລຸດຜ່ອນການປູກພືດຕະກູນດຽວ ແລະ ຊະນິດດຽວ (Mono-Culture) ເປັນເວລາດົນນານທີ່ສົ່ງຜົນກະທົບຕໍ່ຄວາມອຸດົມສົມບູນຂອງດິນ ແລະ ຄວາມຫລາກຫລາຍຂອງຊີວະນາໆພັນ ດ້ວຍການສົ່ງເສີມການປູກພືດຫລາຍຊະນິດ ໂດຍຄຳນຶງເຖິງປະສິດທິພາບທາງເສດຖະກິດ, ຄວາມເປັນໄປໄດ້ທາງດ້ານເຕັກນິກ, ການປ່ຽນແປງຂອງສະພາບດິນຟ້າອາກາດ, ຄວາມສາມາດໃນການຄໍ້າປະກັນທາງດ້ານສະບຽງອາຫານ ແລະ ຄຸນຄ່າດ້ານໂພສະນາການ[39].

- ເປັນເຈົ້າການໃນການປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ໃນການຄຸ້ມຄອງການຜະລິດ, ການນຳເຂົ້າ, ການຈຳໜ່າຍ ແລະ ການນຳໃຊ້ຢາປາບສັດຕູພືດ ແລະ ສານເຄມີທີ່ເປັນອັນຕະລາຍຕໍ່ສຸຂະພາບຂອງຄົນ, ສັດ ແລະ ສິ່ງແວດລ້ອມໃນການຜະລິດກະສິກຳ; ເພີ່ມທະວີຄວາມເຂັ້ມແຂງ ແລະ ປະສິດທິພາບຂອງການຄຸ້ມຄອງການຜະລິດເພື່ອຫລຸດຜ່ອນການເຊື່ອມໂຊມຄຸນນະພາບຂອງດິນ, ແຫລ່ງນໍ້າ ແລະ ຊີວະນາໆພັນ ກໍຄື ຕໍ່ສຸຂະພາບຂອງຄົນ ແລະ ສັດ ໃນການຜະລິດກະສິກຳດ້ວຍການປັບປຸງລະບຽບ, ກົດໝາຍ, ກົນໄກຈັດຕັ້ງປະຕິບັດ ແລະ ມາດຕະການຕໍ່ຜູ້ລະເມີດໃຫ້ເຂັ້ມງວດຂຶ້ນ.

- ຊຸກຍູ້ ແລະ ສົ່ງເສີມການການຜະລິດກະສິກຳທີ່ດີ (GAP) ແລະ ອິນຊີ (Organic) ກໍ່ຄືການປູກ ແລະ ການລ້ຽງທີ່ເປັນພື້ນຖານໃຫ້ແກ່ການຜະລິດຫັດຖະກຳທີ່ເປັນມູນເຊື້ອ ແລະ ເປັນເອກະລັກຂອງຊາດ ເພື່ອຕອບສະໜອງຄວາມຕ້ອງການຂອງການທ່ອງທ່ຽວ ແລະ ສົ່ງອອກທີ່ນັບມື້ນັບສູງຂຶ້ນ ເຊັ່ນ: ການປູກມອນ-ລ້ຽງມ້ອນ ແລະ ການປູກຝ້າຍ ເພື່ອສະໜອງວັດຖຸດິບໃຫ້ການຕໍ່າຫູກທໍໄໝ ແລະ ອື່ນໆ ແລະ ເປັນພື້ນຖານໃຫ້ແກ່ອຸດສາຫະກຳປຸງແຕ່ງພາຍໃນ.

- ປັບປຸງ ແລະ ຂະຫຍາຍລະບົບໂຄງລ່າງພື້ນຖານການຜະລິດກະສິກຳ ເພື່ອຍົກສູງປະສິດທິພາບຂອງການຜະລິດ, ການຄຸ້ມຄອງຊັບພະຍາກອນນໍ້າ (ທັງຄຸນນະພາບ ແລະ ປະລິມານ) ໃຫ້ເກີດປະໂຫຍດສູງສຸດ ເພື່ອຫລຸດຜ່ອນໂອກາດທີ່ຈະເກີດຂໍ້ຂັດແຍ່ງໃນການນຳໃຊ້, ຄວາມສ່ຽງ ແລະ ຄວາມບອບບາງຕໍ່ສະພາບການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດທາງທຳມະຊາດ.

### 3.2.2.2. ຂະແໜງປ່າໄມ້

ປ່າໄມ້ເປັນຊັບພະຍາກອນທຳມະຊາດທີ່ສຳຄັນ ສຳລັບການປົກປັກຮັກສາສິ່ງແວດລ້ອມ ແລະ ສົ່ງເສີມການພັດທະນາແບບຍືນຍົງ, ເປັນແຫລ່ງສະບຽງອາຫານ, ແຫລ່ງນໍ້າສຳລັບການບໍລິໂພກ, ການຜະລິດກະສິກຳ ແລະ ອຸດສາຫະກຳ; ເປັນທີ່ຢູ່ອາໄສຂອງສັດປ່າ, ເປັນແຫລ່ງຜະລິດອົກຊີເຢັນ, ບ່ອນເກັບກັກທາດກາກໂບນິກທີ່ເປັນສາຍເຫດຕົ້ນຕໍຂອງການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດທາງທຳມະຊາດ ແລະ ອື່ນໆ. ສະນັ້ນ, ການປົກປັກຮັກສາ ແລະ ນຳໃຊ້ປ່າໄມ້ແບບຍືນຍົງຈຶ່ງເປັນ ບູລິມະສິດຂອງການພັດທະນາເສດຖະກິດ-ສັງຄົມຕາມທິດສີຂຽວ-ຍືນຍົງ.

---

[38] ຕາມຄຳເຫັນ ແລະ ຄຳສະເໜີຂອງກະຊວງກະສິກຳ-ປ່າໄມ້.

[39] ສາມາດເບິ່ງຕົວເລກອ້າງອີງຈາກບົດຄົ້ນຄວ້າຂອງ MODA.

ເຖິງຢ່າງໃດກໍ່ຕາມ, ຄຸນນະພາບ ແລະ ເນື້ອທີ່ປົກຫຸ້ມຂອງປ່າໄມ້ໃນ ສປປ ລາວ ໃນສອງທົດສະວັດຜ່ານມາໄດ້ເຊື່ອມໂຊມ ແລະ ຫລຸດລົງຢ່າງໄວວາຍ້ອນຫລາຍສາເຫດ ເປັນຕົ້ນແມ່ນ: ຍ້ອນການລັກຕັດໄມ້ ແລະ ສົ່ງອອກໄມ້ທີ່ບໍ່ຖືກຕ້ອງຕາມກົດໝາຍ, ການສຳປະທານດິນເພື່ອຂະຫຍາຍເນື້ອທີ່ການຜະລິດກະສິກຳ ແລະ ໂຄງການພັດທະນາຕ່າງໆ, ການຂະຫຍາຍຕົວຂອງຕົວເມືອງ, ການຖາງປ່າເຮັດໄຮ່ແບບເລື່ອນລອຍ ແລະ ອື່ນໆ[40].

ເນື່ອງຈາກຄວາມສຳຄັນທາງເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມຂອງປ່າໄມ້, ລັດຖະບານຈຶ່ງໄດ້ມີນະໂຍບາຍເພີ່ມອັດຕາການປົກຫຸ້ມຂອງປ່າໃຫ້ 70% ຂອງເນື້ອທີ່ທົ່ວປະເທດໃນປີ 2020. ເພື່ອບັນລຸເປົ້າໝາຍດັ່ງກ່າວ, ລັດຖະບານແຫ່ງ ສປປ ລາວ ໄດ້ສ້າງ, ຈັດຕັ້ງປະຕິບັດ ແລະ ປັບປຸງຫລາຍກົດໝາຍ, ກົດລະບຽບການ ແລະ ນະໂຍບາຍທີ່ກ່ຽວຂ້ອງກັບການປົກປັກຮັກສາ ແລະ ນຳໃຊ້ປ່າແບບຍືນຍົງເຊັ່ນ: ກົດໝາຍປ່າໄມ້, ດຳລັດເລກທີ 95/ນຍ, ວ່າດ້ວຍການຍຸດຕິການສົ່ງອອກໄມ້ທ່ອນ, ນະໂຍບາຍຫລຸດຜ່ອນການຖາງປ່າເຮັດໄຮ່ ແລະ ອື່ນໆ. ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ສະບັບນີ້ ກຳນົດເອົາການພັດທະນາປ່າໄມ້ຕາມແລວທາງຂອງລັດຖະບານເປັນຂະແໜງການບູລິມະສິດ,ໂດຍສະເພາະແມ່ນຈະເລັ່ງໃສ່:

- ຊຸກຍູ້ ແລະ ສົ່ງເສີມການສ້າງກົນໄກການສ້າງ ແລະ ຈັດຕັ້ງປະຕິບັດແຜນການຄຸ້ມຄອງ, ປົກປັກຮັກສາ ແລະ ນຳໃຊ້ປ່າແບບມີສ່ວນຮ່ວມຂອງທຸກຂະແໜງການ ແລະ ທ້ອງຖິ່ນກ່ຽວຂ້ອງພາຍໃຕ້ບົດບາດເປັນໃຈກາງຂອງກະຊວງກະສິກຳ-ປ່າໄມ້ແລະ/ຫລືພະແນກກະສິກຳ-ປ່າໄມ້ຂອງແຂວງແລະ/ຫລືຫ້ອງການຂອງເມືອງເພື່ອຮັບປະກັນປະສິດທິພາບ, ປະສິດທິຜົນ ແລະ ຄວາມຍືນຍົງຂອງການນຳໃຊ້.

- ຊຸກຍູ້ ແລະ ສົ່ງເສີມ ສຳຫລວດ, ຈັດແບ່ງ, ໝາຍເຂດປ່າ ແລະ ປະເພດປ່າໃຫ້ສຳເລັດໂດຍໄວ ພ້ອມທັງເລັ່ງໃສ່ສ້າງ, ປັບປຸງ, ຈັດຕັ້ງປະຕິບັດ ແລະ ຕິດຕາມກວດກາການຈັດຕັ້ງປະຕິບັດ ກົດລະບຽບ, ກົດໝາຍ ແລະ ກົນໄກປົກປັກຮັກສາ ແລະ ນຳໃຊ້ປ່າແຕ່ລະປະເພດໃຫ້ມີປະສິດທິພາບ, ປະສິດທິຜົນ ແລະ ຍືນຍົງ.

- ສົ່ງເສີມການຄຸ້ມຄອງ, ປົກປັກຮັກສາ ແລະ ນຳໃຊ້ປ່າແບບຍືນຍົງຂອງຊຸມຊົນ ເພື່ອຊຸກຍູ້ການຂະຫຍາຍຕົວຂອງເສດຖະກິດ, ສ້າງລາຍຮັບ ແລະ ຫລຸດຜ່ອນຄວາມທຸກຍາກຂອງຊຸມຊົນ ເຊັ່ນ: ການເກັບເຄື່ອງປ່າຂອງດົງແບບຍືນຍົງ, ການລ່າສັດແບບຍືນຍົງ, ການນຳໃຊ້ປ່າເປັນແຫລ່ງທ່ອງທ່ຽວທາງທຳມະຊາດທີ່ຊຸມຊົນເປັນຜູ້ຄຸ້ມຄອງ, ການຂຸດຄົ້ນ, ປຸງແຕ່ງ ແລະ ຂາຍຜະລິດຕະພັນໄມ້ສຳເລັດຮູບແບບຍືນຍົງຂອງຊຸມຊົນຕອບສະໜອງຄວາມຕ້ອງການຂອງການທ່ອງທ່ຽວທີ່ນັບມື້ນັບສູງຂຶ້ນ.

- ຊຸກຍູ້ ແລະ ສົ່ງເສີມການລົງທຶນຂອງນັກລົງທຶນພາຍໃນ ແລະ ຕ່າງປະເທດທີ່ລົງທຶນເຂົ້າໃນການປູກປ່າ ຫລືຕົ້ນໄມ້ອຸດສາຫະກຳແບບປະສົມປະສານ ແລະ ໝູນວຽນໃສ່ດິນປອກໂລ້ນ ແລະ ດິນເຊື່ອມໂຊມ ເພື່ອຂະຫຍາຍເນື້ອທີ່ການປົກຫຸ້ມຂອງປ່າ, ຟື້ນຟູຄຸນນະພາບຂອງດິນ, ສະໜອງໄມ້ເພື່ອຕອບສະໜອງຄວາມຕ້ອງການຂອງອຸດສາຫະກຳປຸງແຕ່ງພາຍໃນ ແລະ ການສົ່ງອອກ ກໍ່ຄື ເພື່ອຊຸກຍູ້ການຂະຫຍາຍຕົວຂອງເສດຖະກິດ, ສ້າງວຽກເຮັດງານທຳ ແລະ ຫລຸດຜ່ອນຄວາມທຸກຍາກ; ຈຳກັດ ແລະ ຫລຸດຜ່ອນການປູກໄມ້ຊະນິດດຽວແກ່ຍາວເປັນເວລາດົນນານ ທີ່ສົ່ງຜົນກະທົບຕໍ່ຄຸນນະພາບຂອງດິນ.

- ເພີ່ມທະວີການປັບປຸງ ແລະ ຟື້ນຟູຄຸນນະພາບຂອງປ່າ, ໂດຍສະເພາະແມ່ນປ່າແຫລ່ງນ້ຳ, ປ່າສະຫງວນແຫ່ງຊາດ, ຂອງແຂວງ ແລະ ຂອງເມືອງດ້ວຍວິທີການ ແລະ ມາດຕາການຕ່າງໆເຊັ່ນ: (1) ສົ່ງເສີມຂະບວນການປູກຕົ້ນໄມ້ທົດແທນໃນວັນສຳຄັນຕ່າງໆຂອງຊາດ ແລະ ຂອງສາກົນເຊັ່ນ: ວັນປູກຕົ້ນໄມ້ແຫ່ງຊາດ, ວັນສິ່ງແວດລ້ອມໂລກ, ສັບປະດານ້ຳສາກົນ (International Water Week) ແລະ ອື່ນໆ; (2) ເພີ່ມທະວີການຕິດຕາມ, ກວດກາ, ສະກັດກັ້ນ ແລະ ປາບປາມການຂຸດ, ປຸງແຕ່ງ, ນຳໃຊ້ ແລະ ສົ່ງອອກໄມ້ແບບບໍ່ຖືກຕ້ອງຕາມກົດໝາຍ ແລະ ບໍ່ຍືນຍົງ (3)

40 Green Growth Potential Assessment.

ຊຸກຍູ້ສົ່ງເສີມໃຫ້ທຸກຂະແໜງການ, ທ້ອງຖິ່ນ, ຊຸມຊົນ ແລະ ພາກເອກະຊົນເຂົ້າຮ່ວມຂະບວນການປົກປັກຮັກສາ ແລະ ນຳໃຊ້ປ່າໃຫ້ຍືນຍົງ; (4) ສ້າງເຂດອຸທິຍານແຫ່ງຊາດເພື່ອປົກປັກຮັກສາສັດປ່າ ແລະ ພັນພືດໃຫ້ໄດ້ຢ່າງໜ້ອຍ 1 ແຫ່ງ ແລະ ອື່ນໆ.

- ເພີ່ມທະວີການຕິດຕາມກວດກາ, ສະກັດກັ້ນ ແລະ ຫລຸດຜ່ອນການທຳລາຍເນື້ອທີ່ປົກຫຸ້ມຂອງປ່າໄມ້ດ້ວຍນະໂຍບາຍ ແລະ ມາດຕາການຕ່າງໆ ເຊັ່ນ: (1) ປັບປຸງຄວາມເຂັ້ມແຂງ ແລະ ປັບປຸງກົນໄກຄຸ້ມຄອງການສຳປະທານທີ່ດິນໃຫ້ໂຄງການລົງທຶນຂອງລັດ, ເອກະຊົນພາຍໃນ ແລະ ຕ່າງປະເທດ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງຂຶ້ນເພື່ອຫລຸດຜ່ອນຜົນກະທົບຂອງການອະນຸມັດການສຳປະທານໂຄງການພັດທະນາຕ່າງໆ ຕໍ່ເນື້ອທີ່ການປົກຫຸ້ມຂອງປ່າໄມ້; (2) ຈັດສັນ ແລະ ສ້າງອາຊີບຄົງທີ່ໃຫ້ແກ່ປະຊາຊົນ/ຊາວກະສິກຳ ທີ່ດຳເນີນການຜະລິດກະສິກຳແບບເລື່ອນລອຍ ທີ່ສົ່ງຜົນກະທົບຕໍ່ເນື້ອທີ່ປົກຫຸ້ມຂອງປ່າ ແລະ ອື່ນໆ.

- ຄົ້ນຄວ້າ, ສ້າງ ແລະ ຈັດຕັ້ງປະຕິບັດກົນໄກທາງການເງິນເພື່ອປົກປັກຮັກສາປ່າ, ໂດຍສະເພາະແມ່ນປ່າສະຫງວນແຫ່ງຊາດ ແລະ ຂອງທ້ອງຖິ່ນ ກໍ່ຄືປ່າປ້ອງກັນ ແລະ ປ່າຜະລິດ.

### 3.2.3. ຂະແໜງອຸດສາຫະກຳ ແລະ ການຄ້າ

#### 3.2.3.1. ອຸດສາຫະກຳປຸງແຕ່ງ

ເປັນຂະແໜງການເສດຖະກິດທີ່ສຳຄັນໃນ ສປປ ລາວ. ໃນປີ 2015, ລວມຍອດມູນຄ່າຜະລິດຕະພັນອຸດສາຫະກຳທັງໝົດ (ລວມໄຟຟ້າ, ບໍ່ແຮ່ ແລະ ຫັດຖະກຳ) ເທົ່າກັບປະມານ 4.926,5 ລ້ານໂດລາສະຫະລັດ[41] ກວມປະມານ 39%[42] ຂອງລວມຍອດມູນຄ່າຜະລິດຕະພັນພາຍໃນທັງໝົດຂອງ ສປປ ລາວ ແລະ ປະມານ 15% ຂອງກຳລັງແຮງງານປະກອບອາຊີບຕົ້ນຕໍໃນຂະແໜງການດັ່ງກ່າວ[43] ແລະ ສິ່ງສຳຄັນທີ່ສຸດແມ່ນຂະແໜງອຸດສາຫະກຳເປັນຂະແໜງການທີ່ມີຄວາມສ່ຽງ ແລະ ຄວາມບອບບາງຕໍ່ສະພາບການປ່ຽນແປງດິນຟ້າອາກາດ, ໄພພິບັດທາງທຳມະຊາດ ແລະ ການເໜັງຕີງຂອງສະພາບເສດຖະກິດໂລກຕໍ່າກວ່າຂະແໜງການອື່ນ.

ແຕ່ເຖິງຢ່າງໃດກໍ່ຕາມ, ນອກຈາກບໍ່ແຮ່ ແລະ ໄຟຟ້າແລ້ວ, ຂະແໜງອຸດສາກະກຳປຸງແຕ່ງ ແລະ ຫັດຖະກຳໃນ ສປປ ລາວ ຍັງແມ່ນອຸດສາຫະກຳປຸງແຕ່ງຂະໜາດນ້ອຍ ແລະ ກາງທີ່ກວມອັດຕາສ່ວນຫລາຍທີ່ມີຈຳນວນແຮງງານຕໍ່າກວ່າ 100 ຄົນ, ມີລະບົບການບໍລິຫານແບບຄອບຄົວ, ນຳໃຊ້ເຕັກນິກ ແລະ ເຕັກໂນໂລຊີທີ່ຍັງມີປະສິດທະພາບ ແລະ ປະສິດທິຜົນຕໍ່າ ແລະ ຄວາມເປັນມິດຕໍ່ສິ່ງແວດລ້ອມບໍ່ສູງ (ບໍ່ປະຢັດພະລັງງານ, ບໍ່ປະຢັດວັດຖຸດິບ, ມີສິ່ງເສດເຫລືອຫລາຍ, ຍັງນຳໃຊ້ພະລັງງານທີ່ບໍ່ສະອາດ ແລະ ອື່ນໆ), ມີຂີດຄວາມສາມາດໃນການແຂ່ງຂັນຍັງຕໍ່າ ແລະ ອື່ນໆ. ນອກນັ້ນ, ການຈັດສັນ ແລະ ຄຸ້ມຄອງບັນດາໂຮງງານອຸດສາຫະກຳໃນ ສປປ ລາວ ກໍ່ຍັງບໍ່ທັນເປັນລະບົບ, ເຂັ້ມແຂງ ແລະ ມີປະສິດທິພາບສູງ. ຫລາຍໂຮງງານອຸດສາຫະກຳທີ່ຕັ້ງຢູ່ໃນຕົວເມືອງ ທີ່ມີປະຊາຊົນອາໄສຢູ່ຢ່າງໜາແໜ້ນຍັງຂາດລະບົບບຳບັດສິ່ງເສດເຫລືອ ເປັນຕົ້ນ: ລະບົບບຳບັດນໍ້າເປື້ອນ, ອາກາດ ແລະ ລະບົບກຳຈັດສິ່ງເສດເຫລືອອັນຕະລາຍ (ປະເພດແຂງ) ສ່ວນຫລາຍຍັງບໍ່ຖືກຕາມມາດຕະຖານເຕັກນິກ. ເນື່ອງຈາກຫລາຍສາເຫດເປັນຕົ້ນແມ່ນ: (1) ການເຂົ້າເຖິງແຫລ່ງທຶນສຳຫລັບການນຳເຂົ້າເຕັກນິກ ແລະ ເຕັກໂນໂລຊີທີ່ທັນສະໄໝຂອງຜູ້ປະກອບການອຸດສາຫະກຳຍັງຫຍຸ້ງຍາກ ເຖິງວ່າລັດຖະບານຈະມີນະໂຍບາຍ ແລະ ໄດ້ສ້າງຕັ້ງກອງທຶນສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ແລ້ວກໍ່ຕາມ; (2) ຂາດພື້ນຖານໂຄງລ່າງ (Landfill) ສຳລັບການກຳຈັດຂີ້ເຫຍື້ອຈາກໂຮງງານອຸດສາຫະກຳທີ່ໄດ້ມາດຕະຖານສິ່ງແວດລ້ອມ, (3) ການຈັດຕັ້ງປະຕິບັດກົດລະບຽບ ແລະ ກົດໝາຍທີ່ກ່ຽວຂ້ອງກັບການຄຸ້ມຄອງສິ່ງເສດເຫລືອອຸດສາຫະກຳຍັງບໍ່ເປັນລະບົບ ແລະ ເຂັ້ມງວດ ແລະ ອື່ນໆ.

41 ຕົວເລກຄິດໄລ່ ໂດຍໃສ່ຂໍ້ມູນໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020).

42 ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020).

43 ສຳຫລວດກຳລັງແຮງງານປີ 2018.

ເພາະສະນັ້ນ, ເພື່ອຊຸກຍູ້ການຂະຫຍາຍຕົວຂອງເສດຖະກິດ ຫລຸດຜ່ອນຄວາມທຸກຍາກ ແລະ ສ້າງວຽກເຮັດງານທຳໃຫ້ແກ່ປະຊາຊົນບັນດາເຜົ່າຕາມທິດສີຂຽວ-ຍືນຍົງ ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ຈຶ່ງໄດ້ກຳນົດເອົາການພັດທະນາຂະແໜງອຸດສາຫະກຳ ເປັນຂະແໜງການບູລິມະສິດສຳລັບການເຕີບໂຕສີຂຽວ, ໂດຍສະເພາະແມ່ນຈະເລັ່ງໃສ່:

- ຊຸກຍູ້ ແລະ ສົ່ງເສີມຂະບວນການຫັນເປັນອຸດສາຫະກຳ ແລະ ທັນສະໄໝຢ່າງແຂງແຮງເພື່ອເພີ່ມສັດສ່ວນມູນຄ່າຜະລິດຕະພັນອຸດສາຫະກຳໃນລວມຍອດມູນຄ່າຜະລິດຕະພັນພາຍໃນຂອງປະເທດ ແລະ ໃຫ້ກາຍເປັນຂະແໜງການເສດຖະກິດຕົ້ນຕໍຂອງປະເທດເທື່ອລະກ້າວເພື່ອຫລຸດຜ່ອນຄວາມສ່ຽງ ແລະ ຄວາມບອບບາງຕໍ່ສະພາບການປ່ຽນແປງດິນຟ້າອາກາດ, ໄພພິບັດທາງທຳມະຊາດ ແລະ ການເພິ່ງພິງຂອງສະພາບເສດຖະກິດໂລກ. ຕົ້ນຕໍແມ່ນຈະເລັ່ງໃສ່ຊຸກຍູ້ ແລະ ສົ່ງເສີມອຸດສາຫະກຳທີ່ ສປປ ລາວ ມີທ່າແຮງໄດ້ປຽບເປັນຕົ້ນແມ່ນອຸດສາຫະກຳພະລັງງານໄຟຟ້ານ້ຳຕົກ, ອຸດສາຫະກຳປຸງແຕ່ງກະສິກຳ, ປຸງແຕ່ງໄມ້ສຳເລັດຮູບ, ປຸງແຕ່ງແຮ່ທາດ ແລະ ອື່ນໆ.

- ຊຸກຍູ້ສົ່ງເສີມການຜະລິດເປັນສິນຄ້າ ແລະ ເພີ່ມຂີດຄວາມສາມາດໃນການແຂ່ງຂັນໃນພາກພື້ນ ແລະ ສາກົນຂອງອຸດສາຫະກຳປຸງແຕ່ງໃນ ສປປ ລາວ ດ້ວຍການນຳໃຊ້ນະວັດຕະກຳດ້ານເຕັກນິກ ແລະ ເຕັກໂນໂລຊີການຜະລິດທີ່ທັນສະໄໝ.

- ສົ່ງເສີມ ແລະ ພັດທະນາອຸດສາຫະກຳປຸງແຕ່ງທີ່ເປັນທ່າແຮງຢູ່ແລ້ວເຊັ່ນ: ອຸດສາຫະກຳປຸງແຕ່ງອາຫານ ແລະ ເຄື່ອງດື່ມ; ອຸດສາຫະກຳແຜ່ນແພ ແລະ ເຄື່ອງນຸ່ງຫົ່ມ; ອຸດສາຫະກຳວັດສະດຸກໍ່ສ້າງ, ອຸດສາຫະກຳປຸງແຕ່ງຜະລິດຕະພັນກະສິກຳ ແລະ ໄມ້ ແລະ ອຸດສາຫະກຳທີ່ມີທ່າແຮງໃໝ່ເປັນຕົ້ນແມ່ນ: ອຸດສາຫະກຳປຸງແຕ່ງແຮ່ທາດໂລຫະ, ອະໂລຫະ ແລະ ອຸດສາຫະກຳເຄມີ; ອຸດສາຫະກຳເຄື່ອງໃຊ້ໄຟຟ້າ ແລະ ເອເລັກໂຕຣນິກ; ອຸດສາຫະກຳພາຫະນະ ແລະ ເຄື່ອງຮັບໃຊ້ກະສິກຳ; ອຸດສາຫະກຳສິ່ງພິມ ແລະ ເຄື່ອງຫຸ້ມຫໍ່; ອຸດສາຫະກຳຢາງພາລາ.

- ຄົ້ນຄວ້າ, ປັບປຸງ ແລະ ຈັດຕັ້ງປະຕິບັດກົນໄກການເງິນເພື່ອອຳນວຍຄວາມສະດວກໃຫ້ແກ່ຜູ້ປະກອບການໂຮງງານອຸດສາຫະກຳໃນການນຳເຂົ້າ ແລະ ນຳໃຊ້ເຕັກນິກ ແລະ ເຕັກໂນໂລຊີທີ່ທັນສະໄໝ, ມີປະສິດທິພາບ ແລະ ປະສິດທິຜົນສູງ, ສະອາດ, ເປັນມິດຕໍ່ສິ່ງແວດລ້ອມ, ປະຢັດວັດຖຸດິບ ແລະ ພະລັງງານ, ໂດຍສະເພາະແມ່ນເລັ່ງໃສ່ສົ່ງເສີມການເຂົ້າເຖິງແຫລ່ງທຶນດັ່ງກ່າວຂອງຜູ້ປະກອບການໂຮງງານອຸດສາຫະກຳຂະໜາດນ້ອຍ ແລະ ຂະໜາດກາງ. ໃນອຸດສາຫະກຳປຸງແຕ່ງທີ່ຕິດພັນກັບການຜະລິດກະສິກຳ, ປ່າໄມ້, ແຮ່ທາດ, ໂຮງງານແປຮູບຂີ້ເຫຍື້ອ ແລະ ອື່ນໆ ເຊັ່ນ: ອຸດສາຫະກຳປຸງແຕ່ງໄມ້ສຳເລັດຮູບ, ປຸງແຕ່ງຢາງພາລາ, ໂຮງງານອຸດສາຫະກຳປຸງແຕ່ງອາຫານສັດ, ໂຮງງານປຸງແຕ່ງອາຫານ, ໂຮງງານຜະລິດປຸ໋ຍຊີວະພາບຈາກສິ່ງເສດເຫລືອຂອງການກະສິກຳ ແລະ ອື່ນໆ ເພື່ອສ້າງມູນຄ່າເພີ່ມໃຫ້ແກ່ຜະລິດຕະພັນດັ່ງກ່າວ.

- ສົ່ງເສີມການພັດທະນາອຸດສາຫະກຳແບບຄົບວົງຈອນທີ່ນຳເອົາເສດວັດຖຸດິບຈາກໂຮງງານໜຶ່ງໄປເປັນວັດຖຸດິບປ້ອນໂຮງງານອື່ນ ເພື່ອເພີ່ມປະສິດທິພາບຂອງການນຳໃຊ້ຊັບພະຍາກອນທຳມະຊາດທີ່ມີຢູ່ຢ່າງຈຳກັດໃຫ້ເກີດປະໂຫຍດສູງສຸດກໍ່ຄືເພື່ອການຫລຸດຜ່ອນສິ່ງເສດເຫລືອ.

- ສ້າງພື້ນຖານໂຄງລ່າງສຳລັບການຖິ້ມ ຫລື ທຳລາຍສິ່ງເສດເຫລືອ ຫລື ຂີ້ເຫຍື້ອອຸດສາຫະກຳທີ່ເປັນພິດທີ່ບໍ່ໄດ້ມາດຕະຖານທາງສິ່ງແວດລ້ອມເພື່ອຮັບປະກັນຄວາມສະອາດ, ປອດໄພ ແລະ ຜົນກະທົບຕໍ່ສິ່ງແວດລ້ອມ[44].

- ປັບປຸງ ແລະ ຈັດຕັ້ງປະຕິບັດມາດຕະຖານໂຮງງານອຸດສາຫະກຳ, ກົດລະບຽບ ແລະ ກົດໝາຍທີ່ກ່ຽວຂ້ອງກັບການຄຸ້ມຄອງສິ່ງແວດລ້ອມໃນຂະແໜງອຸດສາຫະກຳຢ່າງເປັນລະບົບ ແລະ ເຂັ້ມງວດເພື່ອຮັບປະກັນບໍ່ໃຫ້ນ້ຳເປື້ອນ, ມົນລະພິດທາງກິ່ນ, ສຽງ, ທາງອາກາດ ແລະ ສິ່ງເສດເຫລືອທີ່ເປັນພິດຈາກໂຮງງານອຸດສາຫະກຳ ແລະ ເຂດອຸດສາຫະ

[44] ການສະເໜີຂອງຄະນະວິຊາການ ກະຊວງອຸດສາຫະ ແລະ ການຄ້າ.

ກໍາທີ່ສົ່ງຜົນກະທົບຕໍ່ສິ່ງແວດລ້ອມທໍາມະຊາດ ກໍ່ຄືຕໍ່ສຸຂະພາບຂອງຄົນ ແລະ ສັດ.

- ສົ່ງເສີມອຸດສະຫະກໍາປຸງແຕ່ງຂະໜາດນ້ອຍ ແລະ ກາງຕາມທິດສີຂຽວ-ຍືນຍົງດ້ວຍນະໂຍບາຍ ແລະ ມາດຕະການພິເສດຕ່າງໆ ເຊັ່ນ: ອໍານວຍຄວາມສະດວກໃນການເຂົ້າເຖິງແຫລ່ງທຶນ, ເຕັກໂນໂລຊີທີ່ສະອາດ, ທັນສະໄໝ ແລະ ມີປະສິດທິພາບ, ປະສິດທິຜົນສູງ, ການເຂົ້າເຖິງຕະຫລາດ, ແຮງງານທີ່ມີຄຸນນະພາບ ແລະ ໄປພ້ອມໆກັບການຍົກສູງຂີດຄວາມສາມາດຂອງຜູ້ປະກອບການ.

### 3.2.2.2. ຂະແໜງຫັດຖະກໍາ

ເປັນຂະແໜງການຍ່ອຍໜຶ່ງທີ່ສໍາຄັນ ໃນຂະແໜງອຸດສະຫະກໍາ ແລະ ການຄ້າ. ການຜະລິດຫັດຖະກໍາບໍ່ພຽງແຕ່ເປັນກິດຈະກໍາທາງເສດຖະກິດເພື່ອສ້າງລາຍຮັບ ແລະ ສ້າງວຽກເຮັດງານທໍາໃຫ້ແກ່ປະຊາຊົນເທົ່ານັ້ນ ແຕ່ຍັງເປັນການອະນຸລັກສິລະປະ, ວັດທະນະທໍາ, ຮີດຄອງປະເພນີ ແລະ ວິຖີການດໍາລົງຊີວິດຂອງປະຊາຊົນລາວບັນດາເຜົ່າ. ສະນັ້ນ, ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ຈຶ່ງກໍານົດເອົາການຜະລິດຫັດຖະກໍາເປັນບູລິມະສິດໃນການສົ່ງເສີມ, ໂດຍສະເພາະແມ່ນຈະເລັ່ງໃສ່ ສົ່ງເສີມການຜະລິດຫັດຖະກໍາຕາມແຜນງານບູລິມະສິດໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020) ແລະ ແຜນພັດທະນາຂະແໜງອຸດສາຫະກໍາປຸງແຕ່ງ ແລະ ການຄ້າ ດັ່ງລຸ່ມນີ້:

- ສ້າງເງື່ອນໄຂ, ສະພາບແວດລ້ອມທາງດ້ານລະບຽບກົດໝາຍ ກໍ່ຄືການເຂົ້າເຖິງປັດໄຈການຜະລິດ, ຕະຫລາດ ແລະ ແຫລ່ງທຶນຂອງນາຍຊ່າງຫັດຖະກໍາ ແລະ ຜູ້ປະກອບການຜະລິດສິນຄ້າຫັດຖະກໍາ, ໂດຍສະເພາະແມ່ນນາຍຊ່າງຫັດຖະກໍາ ແລະ ຜູ້ປະກອບການຜະລິດສິນຄ້າຫັດຖະກໍາທີ່ມີລັກສະນະມູນເຊື້ອ, ສິລະປະ ແລະ ວັດທະນະທໍາຂອງຊາດ ແລະ ຂອງທ້ອງຖິ່ນ ແລະ ໂຄງສ້າງຫັດຖະກໍານ້ອຍ ແລະ ກາງ.

- ສົ່ງເສີມການສ້າງກຸ່ມນາຍຊ່າງ ແລະ/ຫລື ຜູ້ປະກອບການຜະລິດເຄື່ອງຫັດຖະກໍາເປັນສິນຄ້າດ້ວຍວິທີການຕ່າງໆ ເຊັ່ນ: ສ້າງຕັ້ງເປັນກຸ່ມຫັດຖະກໍາຕົວແບບເພື່ອໃຫ້ມີຄວາມເຂັ້ມແຂງໃນການປັບປຸງຄຸນນະພາບ ແລະ ມາດຕະຖານການຜະລິດສິນຄ້າຫັດຖະກໍາໃຫ້ສອດຄ່ອງກັບຄວາມຕ້ອງການຂອງຕະຫລາດພາຍໃນ ແລະ ຕ່າງປະເທດ ກໍ່ຄືເພື່ອປົກປ້ອງຕະຫລາດ ແລະ ລິຂະສິດ.

- ສົ່ງເສີມການຜະລິດເປັນສິນຄ້າ, ການຕະຫລາດ, ການຂາຍ ແລະ ການຊົມໃຊ້ຜະລິດຕະພັນຫັດຖະກໍາດ້ວຍວິທີການ ແລະ ກິດຈະກໍາຕ່າງໆເຊັ່ນ: ສ້າງຖານ ແລະ ສະໜອງຂໍ້ມູນທາງດ້ານການຕະຫລາດໃຫ້ແກ່ຜູ້ຜະລິດ, ຈັດງານວາງສະແດງສິນຄ້າຫັດຖະກໍາ, ໂຄສະນາໂດຍຜ່ານສື່ຕ່າງໆ ແລະ ອື່ນໆ. ໂດຍສະເພາະແມ່ນເລັ່ງໃສ່ການຜະລິດ, ການຕະຫລາດ, ການຂາຍ ແລະ ການຊົມໃຊ້ ຜະລິດຕະພັນຫັດຖະກໍາທີ່ເປັນເອກະລັກ, ມູນເຊື້ອ ແລະ ສິລະປະ-ວັດທະນະທໍາຂອງຊາດ ແລະ ຂອງທ້ອງຖິ່ນ ເພື່ອຕອບສະໜອງຄວາມຕ້ອງການຂອງການທ່ອງທ່ຽວ ແລະ ການສົ່ງອອກໃຫ້ນັບມື້ນັບເພີ່ມຂຶ້ນເຊັ່ນ: ການຕໍ່າຫູກ-ທໍໄໝ, ການຍ້ອມສີທໍາມະຊາດ, ການຕີໂລຫະ (ເຄື່ອງປະດັບ), ເຄື່ອງປັ້ນດິນເຜົາ, ການແກະສະຫລັກໄມ້, ການຈັກສານ, ການຕີເຫລັກ, ການປຸງແຕ່ງອາຫານພື້ນເມືອງ, ເຄື່ອງປະດັບເອ້ຍ້ອງ ແລະ ອື່ນໆ ພ້ອມທັງສ້າງເງື່ອນໄຂໃຫ້ກາຍເປັນສິນຄ້າໜຶ່ງເມືອງໜຶ່ງຜະລິດຕະພັນ (ODOP).

### 3.2.2.3. ຂະແໜງການຄ້າ

ໃນປີ 2017, ທົ່ວປະເທດມີຕະຫລາດທັງໝົດ 753 ແຫ່ງ, ໃນນັ້ນ ຕະຫລາດຂະໜາດໃຫຍ່ມີ 60 ແຫ່ງ, ຂະໜາດກາງ 131 ແຫ່ງ, ຂະໜາດນ້ອຍ 350 ແຫ່ງ ແລະ ຕະຫລາດນັດ 212 ແຫ່ງ. ລວມຍອດມູນຄ່າການຈໍລະຈອນສິນຄ້າພາຍໃນປະເທດໃນປີ 2017 ເທົ່າກັບປະມານ 51.688 ຕື້ກີບ ຫລື ເທົ່າກັບປະມານ 18 ຕື້ໂດລາສະຫະລັດ; ມີອັດຕາການຂະຫຍາຍ ຕົວປະມານ 13% ຕໍ່ປີ, ເຊິ່ງເປັນອັດຕາການຂະຫຍາຍຕົວທີ່ຂ້ອນຂ້າງສູງ.

ແຕ່ເຖິງຢ່າງໃດກໍ່ຕາມ, ພຶດຕິກຳການຊື້ຂາຍ ແລະ ການບໍລິໂພກສິນຄ້າໃນຕະຫລາດຂອງ ສປປ ລາວ ຍັງບໍ່ທັນໄດ້ຄຳນຶງເຖິງປະສິດທິພາບທາງເສດຖະກິດ ແລະ ຄວາມເປັນມິດຕໍ່ສິ່ງແວດລ້ອມເທົ່າທີ່ຄວນຕົວຢ່າງ ເຊັ່ນ: ນຳໃຊ້ຖົງຢາງປຣາສະຕິກທີ່ບໍ່ຍ່ອຍສະຫລາຍເປັນຈຳນວນຫລວງຫລາຍ ແລະ ມີລັກສະນະຟຸມເຟືອຍ (ໃຊ້ເທື່ອດຽວແລ້ວຖິ້ມ) ໃນບັນຈຸ ແລະ ການຫຸ້ມຫໍ່ຜະລິດຕະພັນ ແລະ ໃຊ້ແຜ່ນພັບໂຄສະນາເພື່ອສົ່ງເສີມການຂາຍສິນຄ້າ ແລະ ອື່ນໆ. ການນຳໃຊ້ຖົງຢາງປຣາສະຕິກ ແລະ ແຜ່ນພັບດັ່ງກ່າວນອກຈາກຈະເປັນການສິ້ນເປືອງຕົ້ນທຶນແລ້ວຍັງເປັນການສ້າງສິ່ງເສດເຫລືອທີ່ບໍ່ຈຳເປັນໄດ້ສົ່ງຜົນກະທົບຕໍ່ສິ່ງແວດລ້ອມ.

ລວມຍອດມູນຄ່າສິນຄ້າສົ່ງອອກຂອງ ສປປ ລາວ ເທົ່າກັບປະມານ 4.803 ລ້ານໂດລາໃນປີ 2017[45] ແລະ ມີອັດຕາການຂະຫຍາຍຕົວປະມານ 13,4% ຕໍ່ປີ; ເຊິ່ງເປັນອັດຕາການຂະຫຍາຍຕົວທີ່ຂ້ອນຂ້າງສູງ. ແຕ່ເຖິງຢ່າງໃດກໍ່ຕາມ, ສິນຄ້າ ແລະ ຕະຫລາດສົ່ງອອກຂອງ ສປປ ລາວ ຍັງມີລັກສະນະເຕົ້າໂຮມສູງ. ຕາມສະຖິຕິ, ສິນຄ້າສົ່ງອອກຕົ້ນຕໍຂອງ ສປປ ລາວ ແມ່ນແຮ່ທາດກວມປະມານ 47% ຂອງລວມຍອດມູນຄ່າສິນຄ້າສົ່ງອອກທັງໝົດ, ຖັດມາແມ່ນຜະລິດຕະພັນອຸດສາຫະກຳຕັດຫຍິບ ແລະ ອຸດສາຫະກຳປຸງແຕ່ງອື່ນໆກວມປະມານ 24%, ພະລັງງານໄຟຟ້າກວມປະມານ 15%, ຜະລິດຕະພັນກະສິກຳກວມປະມານ 8%, ໄມ້ ແລະ ຜະລິດຕະພັນໄມ້ກວມປະມານ 4% ແລະ ອື່ນໆກວມປະມານ **2%** ແລະ ຕະຫລາດສົ່ງອອກຕົ້ນຕໍຂອງ ສປປ ລາວແມ່ນປະເທດໄທກວມ 46%, ຈີນ 14%, ອິດສະຕາລີ 13%, ຫວຽດນາມ 12% ແລະ ປະເທດອື່ນໆ 15%. ລັກສະນະເຕົ້າໂຮມຂອງຜະລິດຕະພັນ ແລະ ຕະຫລາດສົ່ງອອກດັ່ງກ່າວ ໄດ້ເຮັດໃຫ້ເສດຖະກິດຂອງ ສປປ ລາວ ມີຄວາມສ່ຽງ ແລະ ຄວາມບອບບາງຕໍ່ສະພາບການເໜັງຕີງຂອງສະພາບເສດຖະກິດໂລກ. ນອກນັ້ນ, ສປປ ລາວ ຍັງເປັນປະເທດທີ່ຂາດດຸນການຄ້າກັບຕ່າງປະເທດເປັນຈຳນວນຫລວງຫລາຍ. ຈາກສະຖິຕິ, ຕົວເລກການນຳເຂົ້າອຸປະກອນການກໍ່ສ້າງ (20%), ເຄື່ອງອາໄຫລ່ (18%), ນ້ຳມັນເຊື້ອໄຟ ແລະ ອາຍແກັສ (17%), ສິນຄ້າຮັບໃຊ້ການຜະລິດກະສິກຳ (12%), ເຄື່ອງໃຊ້ໄຟຟ້າ (11%), ເຄື່ອງໃຊ້ສອຍ (6%) ແລະ ອື່ນໆ (16%).

ເພາະສະນັ້ນ, ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ຈຶ່ງໄດ້ກຳນົດເອົາການຄ້າເປັນຂະແໜງການບູລິມະສິດຂະແໜງການໜຶ່ງຂອງການສົ່ງເສີມ, ໂດຍສະເພາະແມ່ນຈະເລັ່ງໃສ່:

- ສົ່ງເສີມການນຳໃຊ້ຖົງທີ່ຜະລິດຈາກຝ້າຍທຳມະຊາດ ທີ່ສາມາດຍ່ອຍສະຫລາຍ ແລະ ສາມາດນຳໃຊ້ໄດ້ຫລາຍເທື່ອ ແລະ ນຳໃຊ້ໃບຕອງ ແລະ ໃບໄມ້ອື່ນໆໃນການຫຸ້ມຫໍ່ຜະລິດຕະພັນ ເພື່ອຫລຸດຜ່ອນຕົ້ນທຶນການຄ້າ, ສິ່ງເສດເຫລືອ ແລະ ຄວາມເປັນມິດຕໍ່ສິ່ງແວດລ້ອມ.

- ສົ່ງເສີມການໂຄສະນາ ແລະ ການຂາຍສິນຄ້າທາງອອນລາຍ (Online) ເພື່ອເພີ່ມປະສິດທິພາບ, ຫລຸດຜ່ອນຕົ້ນທຶນ, ເພີ່ມຂີດຄວາມສາມາດໃນການແຂ່ງຂັນ, ເພີ່ມຄວາມທັນສະໄໝ ແລະ ຄວາມເປັນມິດຕໍ່ສິ່ງແວດລ້ອມໃນການສົ່ງເສີມການຂາຍສິນຄ້າກໍ່ຄືເພື່ອຫລຸດຜ່ອນເວລາ ແລະ ພະລັງງານໃນການຂາຍສິນຄ້າ.

- ເພີ່ມຄວາມຫລາກຫລາຍຂອງຜະລິດຕະພັນ, ໂດຍສະເພາະແມ່ນຜະລິດຕະພັນສຳເລັດຮູບ ຫລື ເຄິ່ງສຳເລັດຮູບ ແລະ ຕະຫລາດສົ່ງອອກ ເພື່ອຫລຸດຜ່ອນຄວາມສ່ຽງ ແລະ ຄວາມບອບບາງຕໍ່ການເໜັງຕີງຂອງສະພາບເສດຖະກິດໂລກ ກໍ່ຄື ການເພີ່ມປະສິດທິພາບຂອງການນຳໃຊ້ຊັບພະຍາກອນທຳມະຊາດທີ່ມີຢູ່ຢ່າງຈຳກັດຂອງປະເທດໃຫ້ສູງຂຶ້ນ.

- ເພີ່ມທະວີການອຳນວຍຄວາມສະດວກໃຫ້ແກ່ການລົງທຶນເຂົ້າໃນການຜະລິດ, ການເຄື່ອນຍ້າຍສິນຄ້າພາຍໃນ, ການສົ່ງອອກ ແລະ ນຳເຂົ້າຜະລິດຕະພັນ/ສິນຄ້າທີ່ມີຂະບວນການຜະລິດສີຂຽວ-ເປັນມິດຕໍ່ສັງຄົມ ແລະ ສິ່ງແວດລ້ອມ.

[45] https://tradingeconomics.com/laos/exports.

- ອອກໃບຢັ້ງຢືນ, ສົ່ງເສີມການຜະລິດ, ການຂາຍ, ການຕະຫລາດ ແລະ ການບໍລິໂພກ/ຊື້ຜະລິດຕະພັນສີຂຽວເປັນມິດຕໍ່ສິ່ງແວດລ້ອມໃນຕະຫລາດພາຍໃນ ແລະ ຕ່າງປະເທດຢ່າງແຂງແຮງດ້ວຍວິທີການ ແລະ ກິດຈະກໍາຕ່າງໆເຊັ່ນ: ໂຄສະນາປະຊາສໍາພັນຢູ່ພາຍໃນ ແລະ ຕ່າງປະເທດໂດຍສື່ຕ່າງໆ, ຈັດງານວາງສະແດງສິນຄ້າສີຂຽວເປັນມິດຕໍ່ສິ່ງແວດລ້ອມ, ງານພົບປະແລກປ່ຽນຊື້ຂາຍ ແລະ ອື່ນໆ.

### 3.2.4. ຂະແໜງການໂຍທາທິການ ແລະ ຂົນສົ່ງ

ປະກອບດ້ວຍຫລາຍຂະແໜງການຍ່ອຍ, ແຕ່ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ໄດ້ກໍານົດເອົາການພັດທະນາຕົວເມືອງ ແລະ ການຂົນສົ່ງທາງບົກ ເປັນບູລິມະສິດດັ່ງລາຍລະອຽດລຸ່ມນີ້:

#### 3.2.4.1. ການພັດທະນາຕົວເມືອງ

ການພັດທະນາຕົວເມືອງ ແລະ ເຂດທີ່ຢູ່ອາໄສສີຂຽວແມ່ນອົງປະກອບໜຶ່ງທີ່ສໍາຄັນຂອງການເຕີບໂຕສີຂຽວເພື່ອຍົກສູງຄຸນນະພາບຂອງການດໍາລົງຊີວິດຂອງປະຊາຊົນໃນ ສປປ ລາວ. ໂດຍລວມແລ້ວ, ອັດຕາສ່ວນປະຊາກອນທີ່ດໍາລົງຊີວິດໃນຕົວເມືອງຍັງຂ້ອນຂ້າງຕໍ່າເມື່ອທຽບກັບຫລາຍປະເທດ. ຜົນການສໍາຫລວດພົນລະເມືອງ ປີ 2015 ສປປ ລາວ ມີພົນລະເມືອງທັງໝົດ 6,5 ລ້ານຄົນ; ປະມານ 30% ຂອງປະຊາກອນດັ່ງກ່າວ ດໍາລົງຊີວິດໃນຕົວເມືອງ. ໃນ ສປປ ລາວ ມີເມືອງໃຫຍ່ລະດັບໜຶ່ງພຽງ 1 ຕົວເມືອງ ຄື: ນະຄອນຫລວງວຽງຈັນ ມີພົນລະເມືອງປະມານ 800.000 ຄົນ; ຕົວເມືອງລະດັບສອງ 4 ຕົວເມືອງ ຄື: ຫລວງພະບາງ, ທ່າແຂກ, ສະຫວັນນະເຂດ ແລະ ປາກເຊ; ພົນລະເມືອງລະຫວ່າງ 40.000-80.000 ຄົນ; ມີເທດສະບານແຂວງ 12 ເທດສະບານ; ມີພົນລະເມືອງລະຫວ່າງ 6.000-40.000 ຄົນ ແລະ ເທດສະບານເມືອງ 106 ເທດສະບານ; ມີພົນລະເມືອງ ລະຫວ່າງ 500-15.000 ຄົນ[46].

ໂດຍລວມແລ້ວ, ສະພາບຕົວເມືອງໃນ ສປປ ລາວ ຫາກໍ່ເລີ່ມໄດ້ຮັບການພັດທະນາ, ຍັງມີພົນລະເມືອງໜ້ອຍ ແລະ ມີຄວາມໜາແໜ້ນບໍ່ສູງ ຖ້າທຽບກັບຕົວເມືອງໃນຫລາຍປະເທດໃນອາຊີ ແລະ ໃນໂລກ. ສະນັ້ນ, ສປປ ລາວ ຈຶ່ງຍັງມີໂອກາດໃນການສ້າງ ແລະ ຈັດສັນຕົວເມືອງໃຫ້ກາຍເປັນຕົວເມືອງທີ່ສວຍສົດງົດງາມ, ມີຄຸນຄ່າທາງດ້ານສິລະປະ-ວັດທະນະທໍາ, ເປັນຕົວເມືອງສີຂຽວ ແລະ ໜ້າຢູ່ທີ່ສຸດ; ໃນຂະນະທີ່ຫລາຍປະເທດໄດ້ສູນເສຍໂອກາດນີ້ໄປແລ້ວ.

ເຖິງຢ່າງໃດກໍ່ຕາມ, ຕົວເມືອງດັ່ງກ່າວ ກໍ່ມີການຂະຫຍາຍຕົວຢ່າງວ່ອງໄວໃນທົດສະວັດຜ່ານມາ; ມີປະຊາຊົນຈໍານວນຫລວງຫລາຍໄດ້ຍ້າຍຖິ່ນຖານຈາກຊົນນະບົດເຂົ້າມາປະກອບອາຊີບ ແລະ ທໍາມາຫາກິນໃນຕົວເມືອງ. ໄດ້ເຮັດໃຫ້ຈໍານວນປະຊາກອນໃນຕົວເມືອງໃຫຍ່ຈໍານວນໜຶ່ງເພີ່ມຂຶ້ນຢ່າງວ່ອງໄວ ເຊັ່ນ: ນະຄອນຫລວງວຽງຈັນ, ສະຫວັນນະເຂດ ແລະ ປາກເຊ. ໃນຂະນະທີ່ການພັດທະນາພື້ນຖານໂຄງລ່າງ ແລະ ການສະໜອງການບໍລິການສາທາລະນຸປະໂພກຍັງບໍ່ທັນສາມາດຮອງຮັບການຂະຫຍາຍຕົວຂອງປະຊາກອນດັ່ງກ່າວ. ຈຶ່ງພາໃຫ້ເກີດມີຫລາຍບັນຫາເປັນຕົ້ນ: ສະພາບຄວາມແອອັດໃນຕົວເມືອງ, ບັນຫາສິ່ງເສດເຫລືອ, ນໍ້າເສຍ, ມົນລະພິດທາງອາກາດ, ສຽງ, ກິ່ນ, ລົດຕິດ, ອຸປະຕິເຫດ, ເສັ້ນທາງເສຍຫາຍ, ຂົວເປ່ເພ ແລະ ອື່ນໆ; ໄດ້ເຮັດໃຫ້ຄຸນນະພາບຂອງການດໍາລົງຊີວິດໃນຫລາຍຕົວເມືອງໃຫຍ່ນັບມື້ຫລຸດລົງ. ນອກຈາກນັ້ນ, ບັນຫາການປ່ຽນແປງດິນຟ້າອາກາດ (ຄື້ນຄວາມຮ້ອນ, ຝົນຕົກໜັກ, ນໍ້າຖ້ວມ, ແຫ້ງແລ້ງ ແລະ ອື່ນໆ) ຍັງສົ່ງຜົນກະທົບໃຫ້ຕາໜ່າງຖະໜົນຫົນທາງ, ໂຄງສ້າງຕຶກອາຄານ ແລະ ສິ່ງປຸກສ້າງຕ່າງໆໃນຕົວເມືອງເຊື່ອມຄຸນນະພາບ, ອາຍຸການໃຊ້ງານສັ້ນລົງ, ເປ່ເພ, ເສຍຫາຍ, ສ່ຽງຕໍ່ໄພພິບັດທາງທໍາມະຊາດ ແລະ ອື່ນໆ. ສະນັ້ນ, ໃນຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ຈຶ່ງກໍານົດເອົາການພັດທະນາຕົວເມືອງເປັນຂະແໜງການບູລິມະສິດໜຶ່ງ, ໂດຍສະເພາະແມ່ນຈະເລັ່ງໃສ່:

[46] GGPA.

- ອອກແບບ ແລະ ຄຸ້ມຄອງຜັງເມືອງ, ອາຄານສະຖານທີ່ ແລະ ການປຸກສ້າງອາຄານໃນຕົວເມືອງ (ເທດສະບານແຂວງ, ເມືອງ ແລະ ເຂດຊຸມຊົນ) ແນໃສ່ພັດທະນາຕົວເມືອງດັ່ງກ່າວໃຫ້ກາຍເປັນຕົວເມືອງສີຂຽວທີ່ສວຍສົດງົດງາມ, ມີຄຸນຄ່າທາງສິລະປະ ແລະ ວັດທະນະທໍາທີ່ເປັນເອກະລັກຂອງຊາດ, ມີໂຄງສ້າງໝັ້ນຄົງ, ທົນທານຕໍ່ການປ່ຽນແປງຂອງສະພາບດິນຟ້າອາກາດ ແລະ ໄພພິບັດທາງທໍາມະຊາດ; ຮັບປະກັນໃຫ້ມີທາງຍ່າງທີ່ສະດວກສະບາຍ ແລະປອດໄພ, ມີພື້ນທີ່ສີຂຽວ, ສວນສາທາລະນະ, ສະໜາມກິລາ, ສະໜາມຫລິ້ນເດັກນ້ອຍ ແລະ ອື່ນໆ.

- ສົ່ງເສີມການນໍາໃຊ້ວັດສະດຸກໍ່ສ້າງທີ່ມີປະສິດທິພາບ, ເປັນມິດຕໍ່ສິ່ງແວດລ້ອມ ຫລື/ແລະ ຜະລິດຢູ່ພາຍໃນປະເທດເພື່ອຫລຸດຜ່ອນການນໍາເຂົ້າ, ການຂາດດຸນການຄ້າ ແລະ ເອື່ອຍອີງການນໍາເຂົ້າ.

- ປັບປຸງລະບົບຄຸ້ມຄອງສິ່ງເສດເຫລືອໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງຂຶ້ນ, ໂດຍສະເພາະແມ່ນໃນຕົວເມືອງໃຫຍ່ເຊັ່ນ: ນະຄອນຫລວງວຽງຈັນ, ສະຫວັນນະເຂດ, ຈໍາປາສັກ, ຫລວງພະບາງ ແລະ ຄໍາມ່ວນ. ຕາມຜົນການສຶກສາຂອງກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ແລະ ກະຊວງໂຍທາທິການ ແລະ ຂົນສົ່ງເຫັນວ່າ: ມີພຽງ 40%-50% ຂອງສິ່ງເສດເຫລືອໃນຕົວເມືອງດັ່ງກ່າວເທົ່ານັ້ນ ທີ່ຖືກຈັດເກັບໄປນໍາໃຊ້ຄືນ ຫລື ທໍາລາຍຖິ້ມດ້ວຍວິທີທີ່ຖືກຕ້ອງ ແລະ ໃນເຂດທີ່ໄດ້ກໍານົດໄວ້; ໝາຍຄວາມວ່າ 50%-60% ຂອງສິ່ງເສດເຫລືອດັ່ງກ່າວແມ່ນຖືກຖິ້ມຊະຊາຍ ຫລື ບໍ່ຖືກຕ້ອງຕາມຫລັກສຸຂະອະນາໄມ. ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ຈຶ່ງກໍານົດເອົາການຄຸ້ມຄອງສິ່ງເສດເຫລືອເປັນຈຸດສຸມໜຶ່ງຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ, ໂດຍສະເພາະແມ່ນຈະເລັ່ງໃສ່: (1) ປູກຈິດສໍານຶກໃຫ້ປະຊາຊົນບໍ່ໃຫ້ຖິ້ມຂີ້ເຫຍື້ອຊະຊາຍ, ຄັດແຍກຂີ້ເຫຍື້ອເພື່ອໃຫ້ສາມາດນໍາໄປຜະລິດຄືນ ແລະ ນໍາໃຊ້ຄືນໄດ້; (2) ຄົ້ນຄວ້າສ້າງ, ປັບປຸງ ແລະ ຈັດຕັ້ງປະຕິບັດກົນໄກການເງິນ ແລະກົນໄກຄຸ້ມຄອງສິ່ງເສດເຫລືອໃຫ້ມີປະສິດທິພາບ ແລະ ສິດທິຜົນສູງຂຶ້ນ; (3) ກໍ່ສ້າງ ແລະ ປັບປຸງພື້ນຖານໂຄງລ່າງ (Landfill) ໃຫ້ມີປະສິດທະພາບ, ປະສິດທິຜົນສູງຂຶ້ນ ແລະ ຖືກຕ້ອງຕາມຫລັກສຸຂະອະນາໄມ ແລະ ອື່ນໆ, ໂດຍສະເພາະແມ່ນເລັ່ງໃສ່ຕົວເມືອງໃຫຍ່ ເລີ່ມທີ່ບັນຫາສິ່ງແວດລ້ອມໃນຕົວເມືອງ ເຊັ່ນ: ນະຄອນຫລວງວຽງຈັນ, ສະຫວັນນະເຂດ, ປາກເຊ ແລະ ຫລວງພະບາງ.

- ຊຸກຍູ້, ສົ່ງເສີມນັກລົງທຶນພາຍໃນ ແລະ ຕ່າງປະເທດ ລົງທຶນເຂົ້າໃນທຸລະກິດສິ່ງເສດເຫລືອ ເພື່ອນໍາເອົາຂີ້ເຫຍື້ອມານໍາໃຊ້ຄືນ ຫລື ເປັນວັດຖຸດິບຜະລິດວັດຖຸສິ່ງຂອງເພື່ອສ້າງມູນຄ່າທາງເສດຖະກິດ, ສ້າງວຽກເຮັດງານທໍາ ແລະ ກິດຈະກໍາສ້າງລາຍຮັບໃຫ້ແກ່ປະຊາຊົນ ພ້ອມທັງຫລຸດຜ່ອນການນໍາໃຊ້ຊັບພະຍາກອນທໍາມະຊາດໃໝ່. ຕາມຕົວເລກສະຖິຕິ, ໂດຍສະເລ່ຍແລ້ວ ປະຊາກອນຜູ້ໜຶ່ງໃນນະຄອນຫລວງວຽງຈັນ ສ້າງສິ່ງເສດເຫລືອປະມານ 237 ກິໂລກຣາມຕໍ່ປີ; ປະມານ 70% ຂອງສິ່ງເສດເຫລືອດັ່ງກ່າວສາມາດນໍາມາໃຊ້ຄືນໃໝ່ໄດ້. ສ່ວນໃຫຍ່ຂອງສິ່ງເສດເຫລືອດັ່ງກ່າວປະກອບມີເຈ້ຍ, ຢາງປຣາສະຕິກ, ແກ້ວ ແລະ ໂລຫະ. ປະຈຸບັນມີພຽງ 10% ຂອງສິ່ງເສດເຫລືອດັ່ງກ່າວເທົ່ານັ້ນທີ່ຖືກເກັບມານໍາໃຊ້ຄືນໃໝ່. ຕົວເລກສະຖິຕິດັ່ງກ່າວຊີ້ໃຫ້ເຫັນວ່າ ການນໍາເອົາຂີ້ເຫຍື້ອມາໃຊ້ຄືນ ຍັງແມ່ນໂອກາດການລົງທຶນເພື່ອສ້າງວຽກເຮັດງານທໍາ ແລະ ກິດຈະກໍາສ້າງລາຍໄດ້ໃຫ້ແກ່ປະຊາຊົນ.

- ເພີ່ມການປັບປຸງພື້ນຖານໂຄງລ່າງ(ລະບົບບໍາບັດ)ແລະລະບົບປົກປັກຮັກສາແລະຄຸ້ມຄອງສິ່ງແວດລ້ອມໃນຕົວເມືອງ ເພື່ອຫລຸດຜ່ອນການປ່ອຍສິ່ງເສດເຫລືອຈາກໂຮງງານອຸດສາຫະກໍາ, ໂຮງແຮມ, ເຮືອນພັກ, ຮ້ານອາຫານ ແລະ ເຮືອນຂອງປະຊາຊົນກັບຄືນສູ່ທໍາມະຊາດກ່ອນການໄດ້ຮັບການບໍາບັດຕາມມາດຕາຖານສິ່ງແວດລ້ອມ ແລະຕາມຫລັກສຸຂະອະນາໄມ ເພື່ອຫລຸດຜ່ອນມົນລະພິດທາງກິ່ນ ແລະ ການຕິດເຊື້ອພະຍາດຕ່າງໆທີ່ກ່ຽວຂ້ອງກັບຄຸນນະພາບນໍ້າ.

- ເລັ່ງໃສ່ປູຢາງ, ປູເບຕົງໃສ່ເສັ້ນທາງດິນແດງໃນຕົວເມືອງ ໂດຍສະເພາະແມ່ນໃນເຂດທີ່ມີປະຊາຊົນອາໄສຢູ່ຢ່າງໜາແໜ້ນ ແລະ ມີພາຫະນະສັນຈອນຫລາຍ ເພື່ອຫລຸດຜ່ອນຂີ້ຝຸ່ນທີ່ເປັນສາເຫດຂອງພະຍາດປອດ ແລະ ພະຍາດລະບົບທາງເດີນຫາຍໃຈ.

- ຄົ້ນຄວ້າ ແລະ ທົດລອງສ້າງຕົວເມືອງ ແລະ ຊຸມຊົນ (ຊຸມຊົນ) ສີຂຽວຕົວແບບເພື່ອຖອດບົດຮຽນ ແລະ ປະສົບການກ່ຽວກັບການສ້າງ ແລະ ຄຸ້ມຄອງຕົວເມືອງ ແລະ ຊຸມນະບົດດັ່ງກ່າວ, ໂດຍສະເພາະແມ່ນເລັ່ງໃສ່ຖອດຖອນບົດຮຽນ ແລະ ປະສົບການກ່ຽວກັບ: (1) ການສ້າງສະພາບແວດລ້ອມ, ເງື່ອນໄຂ ແລະ ປະຖົມປັດໄຈເພື່ອອຳນວຍຄວາມສະດວກໃຫ້ແກ່ການສ້າງຕົວເມືອງ ແລະ ຊຸມນະບົດ, (2) ກົນໄກການເງິນ ຫລື ວິທີລະດົມທຶນເພື່ອຈັດຕັ້ງປະຕິບັດໂຄງການ, (3) ກົງຈັກການຈັດຕັ້ງ ແລະ ກົນໄກຄຸ້ມຄອງບໍລິການຕົວເມືອງ ແລະ ຊຸມນະບົດດັ່ງກ່າວໃຫ້ຍືນຍົງ ແລະ ອື່ນໆ.

### 3.2.4.2. ຂະແໜງຂົນສົ່ງ

ເປັນຂະແໜງການຍ່ອຍໜຶ່ງຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ ທີ່ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ກຳນົດເປັນບູລິມະສິດ. ຕາມຕົວເລກສະຖິຕິຈາກກົມຂົນສົ່ງ, ກະຊວງໂຍທາທິການ ແລະ ຂົນສົ່ງ ໃນ ສປປ ລາວ ມີພາຫະນະຂົນສົ່ງທາງບົກທັງໝົດປະມານ 1,6 ລ້ານຄັນ ແລະ ມີອັດການຂະຫຍາຍຕົວສະເລ່ຍປະມານ 10-12%, ເຊິ່ງເປັນອັດຕາການຂະຫຍາຍຕົວທີ່ຂ້ອນຂ້າງສູງ ແລະ ສູງກວ່າອັດຕາການຂະຫຍາຍຕົວຂອງເສດຖະກິດ; 75% ຂອງພາຫະນະຂົນສົ່ງດັ່ງກ່າວແມ່ນລົດຈັກ ແລະ ຫລາຍກວ່າ 40% ຂອງພາຫະນະດັ່ງກ່າວເຕົ້າໂຮມຢູ່ນະຄອນຫລວງວຽງຈັນ.

ພຶດຕິກຳ ຫລື ຄວາມລຶ້ງເຄີຍໃນການເດີນທາງຂອງປະຊາຊົນລາວ, ໂດຍສະເພາະແມ່ນປະຊາຊົນໃນຕົວເມືອງແມ່ນນຳໃຊ້ພາຫະນະສ່ວນຕົວ. ການຍ່າງ, ຂີ່ລົດຖີບ ຫລື ນຳໃຊ້ລົດຂົນສົ່ງສາທາລະນະແມ່ນຍັງມີໜ້ອຍເນື່ອງຈາກຫລາຍສາຍເຫດ, ໂດຍສະເພາະແມ່ນ: (1) ສະພາບແວດລ້ອມ (ອາກາດຮ້ອນ) ແລະ ພື້ນຖານໂຄງລ່າງບໍ່ອຳນວຍຄວາມສະດວກ ແລະ ຮັບປະກັນຄວາມປອດໄພຂອງຜູ້ຍ່າງ ຫລື ໃຊ້ລົດຖີບ ແລະ (2) ປະລິມານລົດຂົນສົ່ງສາທາລະນະຍັງມີໜ້ອຍ, ບໍ່ສາມາດໃຫ້ບໍລິການຕາມເວລາ ແລະ ຄຸນນະພາບຂອງການບໍລິການຍັງຕ່ຳ, (3) ຄ່າບໍລິການຂົນສົ່ງສາທາລະນະຍັງສູງຖ້າທຽບກັບຄຸນນະພາບຂອງການບໍລິການ ແລະ ການນຳໃຊ້ລົດຈັກສ່ວນຕົວ ແລະ ອື່ນໆ.

ພາຫະນະຂົນສົ່ງທີ່ໃຊ້ໃນ ສປປ ລາວ ສ່ວນໃຫຍ່ແມ່ນໃຊ້ນ້ຳມັນທີ່ນຳເຂົ້າຈາກຕ່າງປະເທດ ໄດ້ເຮັດໃຫ້ ສປປ ລາວ ຈະຕ້ອງນຳເຂົ້ານ້ຳມັນເຊື້ອໄຟເປັນຈຳນວນຫລວງຫລາຍໃນແຕ່ລະປີ. ໃນປີ 2015 ລວມຍອດມູນຄ່າການນຳເຂົ້າ ນ້ຳມັນເຊື້ອໄຟໃນ ສປປ ລາວ ສູງເຖິງ 2.930 ລ້ານໂດລາສະຫະລັດ, ກວມ 16,6% ຂອງລວມຍອດມູນຄ່າສິນຄ້ານຳເຂົ້າທັງໝົດ ຫລື ເທົ່າກັບປະມານ 5,7% ຂອງລວມຍອດມູນຄ່າຜະລິດຕະພັນພາຍໃນຂອງປະເທດໃນປີດັ່ງກ່າວ[47]. ຫລາຍກວ່າ 80% ຂອງນ້ຳມັນເຊື້ອໄຟດັ່ງກ່າວແມ່ນນຳໃຊ້ໃນຂະແໜງການຂົນສົ່ງ, ໂດຍສະເພາະໃນການຂົນສົ່ງພາກຄົວເຮືອນ, ໝາຍຄວາມວ່າ ແມ່ນພາຫະນະສ່ວນຕົວ. ການນຳເຂົ້າ ແລະ ນຳໃຊ້ນ້ຳມັນດັ່ງກ່າວໄດ້ປະກອບສ່ວນເຮັດໃຫ້ເສດຖະກິດຂອງ ສປປ ລາວ ຂຶ້ນກັບຕ່າງປະເທດ ແລະ ເຮັດໃຫ້ ສປປ ລາວ ຂາດດຸນການຄ້າກັບຕ່າງປະເທດເປັນຈຳນວນຫລວງຫລາຍໃນແຕ່ລະປີ. ນອກນັ້ນ, ການນຳເຂົ້າ ແລະ ນຳໃຊ້ນ້ຳມັນດັ່ງກ່າວໃນຂະແໜງການຂົນສົ່ງ ຍັງເປັນແຫລ່ງປ່ອຍທາດອາຍພິດເຮືອນແກ້ວທີ່ສຳຄັນໃນ ສປປ ລາວ.

ນອກນັ້ນ, ການເພີ່ມຂຶ້ນຂອງຈຳນວນ ແລະ ການນຳໃຊ້ພາຫະນະສ່ວນຕົວໃນຕົວເມືອງໃຫຍ່, ໂດຍສະເພາະແມ່ນໃນນະຄອນຫລວງວຽງຈັນ ຍັງພາໃຫ້ເກີດມີບັນຫາຫລາຍຢ່າງ ເຊັ່ນ: ບັນຫາລົດຕິດ, ບັນຫາອຸປະຕິເຫດທ້ອງຖະໜົນ ແລະ ອື່ນໆ. ຕາມສະຖິຕິຈາກກະຊວງໂຍທາທິການ ແລະ ຂົນສົ່ງ ໃນແຕ່ລະປີມີອຸປະຕິເຫດທາງຖະໜົນຫລາຍກວ່າ 6.000 ກໍລະນີ, ມີຜູ້ເສຍຊີວິດຫລາຍກວ່າ 1.000 ຄົນ, ບາດເຈັບຫລາຍກວ່າ 16.000 ຄົນ ແລະ ພາຫະນະເປ່ເພເປັນຈຳນວນຫລວງຫລາຍ. ຈຳນວນອຸປະຕິເຫດດັ່ງກ່າວຍັງມີທ່າອ່ຽງເພີ່ມຂຶ້ນ ຕາມການເພີ່ມຂຶ້ນຂອງຈຳນວນພາຫະນະ. ສະນັ້ນ, ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ຈຶ່ງກຳນົດເອົາຂະແໜງການຂົນ

[47] ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ VIII (2016-2020).

ສົ່ງໂດຍສານໃນຕົວເມືອງເປັນຂົງເຂດບູລິມະສິດໜຶ່ງ, ໂດຍສະເພາະແມ່ນຈະເລັ່ງໃສ່:

- ປັບປຸງພື້ນຖານໂຄງລ່າງດ້ານການຂົນສົ່ງໃນຕົວເມືອງເພື່ອສ້າງເງື່ອນໄຂ ແລະ ອໍານວຍຄວາມສະດວກໃຫ້ແກ່ການຍ່າງ, ການໃຊ້ພາຫະນະຂົນສົ່ງທີ່ບໍ່ໃຊ້ເຄື່ອງຈັກ (ລົດຖີບ) ແລະ ການໃຫ້ບໍລິການລົດຂົນສົ່ງສາທາລະນະ (ລົດເມ); ໂດຍສະເພາະແມ່ນທາງຍ່າງ ແລະ ຂີ່ລົດຖີບທີ່ສະດວກ, ສະບາຍ ແລະ ປອດໄພ; ແລະ ທາງ/ເລນສະເພາະລົດຂົນສົ່ງສາທາລະນະ (ລົດເມ) ເພື່ອຫລີກລ່ຽງບັນຫາລົດຕິດ ແລະ ຮັບປະກັນການໃຫ້ການບໍລິການຕາມເວລາ.

- ອອກແບບ ແລະ ຄຸ້ມຄອງໂຄງລ່າງພື້ນຖານຕາໜ່າງຖະໜົນຫົນທາງໃຫ້ມີໂຄງສ້າງທີ່ໝັ້ນຄົງ, ທົນທາງຕໍ່ໄພພິບັດທາງທໍາມະຊາດ.

- ປູກຈິດສໍານຶກ ແລະ ສ້າງຄ່ານິຍົມໃຫ້ປະຊາຊົນຫັນມານິຍົມການຍ່າງ, ໃຊ້ພາຫະນະເດີນທາງທີ່ບໍ່ໃຊ້ເຄື່ອງຈັກ (ລົດຖີບ) ເພື່ອສຸຂະພາບ ແລະ ລົດຂົນສົ່ງສາທາລະນະ ດ້ວຍການຂະຫຍາຍຕາໜ່າງການບໍລິການ, ປັບປຸງຄຸນນະພາບ ແລະ ຄ່າບໍລິການໃຫ້ສົມເຫດສົມຜົນ ເພື່ອຫລຸດຜ່ອນການນໍາໃຊ້ພາຫະນະສ່ວນຕົວ ກໍ່ຄືການນໍາເຂົ້າ, ການນໍາໃຊ້ນໍ້າມັນເຊື້ອໄຟ, ການປ່ອຍທາດອາຍພິດເຮືອນແກ້ວ ແລະ ການປະຢັດຄ່າໃຊ້ຈ່າຍ.

- ສົ່ງເສີມການຜະລິດ, ນໍາເຂົ້າ ແລະ ນໍາໃຊ້ພາຫະນະຂົນສົ່ງທີ່ນໍາໃຊ້ພະລັງງານສະອາດ ຫລື ພະລັງງານທີ່ມີຢູ່ພາຍໃນປະເທດ ເຊັ່ນ: ລົດໄຟຟ້າທີ່ນໍາໃຊ້ພະລັງງານນໍ້າ ແລະ ພະລັງງານແສງອາທິດ ເພື່ອຫລຸດຜ່ອນການນໍາເຂົ້າ ແລະ ນໍາໃຊ້ນໍ້າມັນເຊື້ອໄຟ ແລະ ການປ່ອຍທາດອາຍພິດເຮືອນແກ້ວ.

### 3.2.5. ຂະແໜງພະລັງງານ ແລະ ບໍ່ແຮ່

#### 3.2.5.1. ຂະແໜງພະລັງງານ

ສປປ ລາວ ເປັນປະເທດທີ່ມີທ່າແຮງທາງດ້ານພະລັງງານສະອາດ ເປັນຕົ້ນແມ່ນ: ພະລັງງານໄຟຟ້ານໍ້າຕົກ, ພະລັງງານແສງຕາເວັນ ແລະ ພະລັງງານລົມ. ລັດຖະບານ ສປປ ລາວ ໄດ້ມີນະໂຍບາຍ ແລະ ຍຸດທະສາດຜະລິດ ແລະ ສົ່ງອອກໄຟຟ້າພະລັງງານໄຟຟ້ານໍ້າຕົກ ເພື່ອຕອບສະໜອງຄວາມຕ້ອງການຂອງບັນດາປະເທດໃນຂົງເຂດອາຊຽນ, ໂດຍສະເພາະແມ່ນປະເທດໃກ້ຄຽງ. ນະໂຍບາຍ ແລະ ຍຸດທະສາດດັ່ງກ່າວຂອງລັດຖະບານແຫ່ງ ສປປ ລາວ ເລັ່ງໃສ່ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການຫລຸດຜ່ອນການນໍາໃຊ້ພະລັງງານຟອດຊິວ ແລະ ພະລັງງານຈາກແຫລ່ງອື່ນໆທີ່ບໍ່ເປັນມິດກັບສິ່ງແວດລ້ອມ ກໍ່ຄື ເລັ່ງໃສ່ຮັບປະກັນສະຖຽນລະພາບ ແລະ ຄວາມໝັ້ນຄົງທາງດ້ານພະລັງງານໃນປະເທດ ແລະ ຂົງເຂດອາຊຽນ ແລະ ຊຸກຍູ້ການຂະຫຍາຍຕົວຂອງເສດຖະກິດ, ຫລຸດຜ່ອນຄວາມທຸກຍາກ ແລະ ສ້າງລາຍຮັບເຂົ້າງົບປະມານຂອງລັດ.

ໃນທົ່ວ ສປປ ລາວ ມີເຂື່ອນໄຟຟ້າທີ່ດໍາເນີນການຜະລິດໄຟຟ້າແລ້ວຈໍານວນ 63 ເຂື່ອນ ລວມກໍາລັງຕິດຕັ້ງ 5.172 ເມກາວັດ[48]. ນອກຈາກນີ້, ຍັງມີໂຄງການຜະລິດພະລັງງານໄຟຟ້າທີ່ຢູ່ໃນໄລຍະກໍ່ສ້າງ ແລະ ສຶກສາຄວາມເປັນໄປໄດ້ຫລາຍໂຄງການໃນທົ່ວປະເທດ. ເຊິ່ງໃນນັ້ນ, ລວມມີໂຄງການກໍ່ສ້າງ ແລະ ສຶກສາຄວາມເປັນໄປໄດ້ໃນການຜະລິດພະລັງງານທົດແທນ ເຊັ່ນ: ພະລັງງານລົມ, ພະລັງງານຊີວະມວນ ແລະ ແກັສຊີວະພາບ. ລັດຖະບານແຫ່ງ ສປປ ລາວ ໄດ້ມີນະໂຍບາຍພັດທະນາພະລັງງານໄຟຟ້ານໍ້າຕົກແບບຍືນຍົງ ແລະ ໄດ້ມີກົດໝາຍວ່າດ້ວຍໄຟຟ້າ (ສະບັບປັບປຸງ ປີ 2017). ນະໂຍາຍ ແລະ ກົດໝາຍດັ່ງກ່າວໄດ້ກໍານົດໃຫ້ການພັດທະນາໂຄງການໄຟຟ້າພິຈາລະນາ, ເອົາໃຈໃສ່ແລະໃຫ້ຄວາມສໍາຄັນຕໍ່ການປົກປັກຮັກສາແລະນໍາໃຊ້ຊັບພະຍາກອນທໍາມະຊາດຕ່າງໆທີ່ຕິດພັນກັບການພັດທະນາໂຄງການໄຟຟ້າ ເຊັ່ນ: ປ່າໄມ້, ດິນ ແລະ ແຫລ່ງນໍ້າ ແລະ ອື່ນໆ ໃຫ້ເກີດປະໂຫຍດສູງສຸດແກ່ປະເທດຊາດ, ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ມີຄວາມຍືນຍົງ.

48 ຂໍ້ມູນຈາກປຶ້ມສະຖິຕິໄຟຟ້າ ປີ 2017, ກນຜ..

ນອກນັ້ນ, ລັດຖະບານແຫ່ງ ສປປ ລາວ ຍັງມີນະໂຍບາຍສົ່ງເສີມການປະຢັດ ແລະ ອະນຸລັກພະລັງງານ; ສົ່ງເສີມພະລັງງານທາງເລືອກ, ສົ່ງເສີມວຽກງານພັດທະນານໍ້າມັນເຊື້ອໄຟຊີວະພາບ ແລະ ພັດທະນາໄຟຟ້າຊົນນະບົດ: ດັ່ງມີລາຍລະອຽດຕໍ່ໄປນີ້: (1) ນະໂຍບາຍການປະຢັດ ແລະ ອະນຸລັກພະລັງງານເພື່ອຫລຸດຜ່ອນການປ່ອຍອາຍພິດເຮືອນແກ້ວ ທີ່ເປັນຕົ້ນເຫດຂອງການປ່ຽນແປງດິນຟ້າອາກາດ ກໍ່ຄື ເພື່ອສ້າງລາຍຮັບຈາກການແລກປ່ຽນສິນເຊື່ອກາກບອນໃນຕະຫລາດສາກົນ. ນະໂຍບາຍອະນຸລັກ ແລະ ປະຢັດພະລັງງານ ຂອງ ສປປ ລາວ ໄດ້ສຸມໃສ່ຫລາຍຂະແໜງການເປັນຕົ້ນແມ່ນ: ຂະແໜງອຸດສາຫະກໍາ, ທີ່ຢູ່ອາໄສ, ພາກຕຶກ-ອາຄານທຸລະກິດ, ຂະແໜງຂົນສົ່ງ. ປະຈຸບັນ, ກະຊວງພະລັງງານ ແລະ ບໍ່ແຮ່ ໄດ້ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຮ່າງນະໂຍບາຍການສົ່ງເສີມການນໍາໃຊ້ພະລັງງານທີ່ສະອາດ ໃນພາກຄົມມະນາຄົມຂົນສົ່ງເພື່ອບັນລຸວິໄສທັດ: ທັນ ສປປ ລາວ ໃຫ້ກາຍເປັນປະເທດປອດມົນລະພິດໃນປີ 2050 ກໍ່ຄື ເພື່ອຫລຸດຜ່ອນການເອື່ອຍອີງການນໍາເຂົ້ານໍ້າມັນເຊື້ອໄຟຈາກຟອດຊິວໃນການຂົນສົ່ງ ແລະ ເພື່ອສົ່ງເສີມການນໍາໃຊ້ພະລັງງານທີ່ສະອາດເປັນທ່າແຮງຂອງປະເທດ ເພື່ອຊຸກຍູ້ການພັດທະນາຕາມທິດສີຂຽວ ແລະ ຍືນຍົງ; (2) ການສົ່ງເສີມພະລັງງານທາງເລືອກດ້ວຍການເສີມຂະຫຍາຍການຮ່ວມມືພາຍໃນ ແລະ ສາກົນ, ພາກພື້ນ, ອາຊຽນ ກ່ຽວກັບວຽກງານສຶກສາ, ສ້າງຄວາມອາດສາມາດໃຫ້ແກ່ພະນັກງານລັດຖະກອນໃຫ້ມີຄວາມເຂັ້ມແຂງທາງດ້ານວິຊາການ, ລິ້ງເລີກວຽກງານຮ່ວມມືສາກົນດ້ານຄວາມປອດໄພ, ແກ້ໄຂບັນຫາສຸກເສີນດ້ານພະລັງງານທາງເລືອກເຊັ່ນ:ພະລັງງານນິວເຄຣຍແລະພະລັງງານໄຮໂດຣເຈນ;(3)ວຽກງານພັດທະນານໍ້າມັນເຊື້ອໄຟຊີວະພາບດ້ວຍການຊຸກຍູ້, ສົ່ງເສີມການລົງທຶນຂອງລັດ ທຸກພາກສ່ວນເສດຖະກິດພາຍໃນ ແລະ ຕ່າງປະເທດ ເພື່ອພັດທະນາການຜະລິດນໍ້າມັນເຊື້ອໄຟຊີວະພາບ ດ້ວຍຮູບແບບການສົ່ງເສີມການປູກ, ການຜະລິດ, ການປຸງແຕ່ງ ຫລືປະສົມ, ການຈໍາໜ່າຍ, ການເກັບຊື້ວັດຖຸດິບ, ການເຂົ້າຫາແຫລ່ງທຶນ, ການເຂົ້າເຖິງຕະຫລາດ, ເຕັກໂນໂລຊີ ແລະ ອໍານວຍຄວາມສະດວກໃຫ້ແກ່ຜູ້ປະກອບການ; (4) ວຽກງານສົ່ງເສີມ ແລະ ພັດທະນາໄຟຟ້າຊົນນະບົດ ເພື່ອສະໜອງພະລັງງານໄຟຟ້າທີ່ມີປະສິດທິຜົນ, ປອດໄພ ແລະ ທົ່ວເຖິງ ເພື່ອປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ, ສູ້ຊົນໃຫ້ອັດຕາການຊົມໃຊ້ໄຟຟ້າຂອງຄົວເຮືອນໃນຂອບເຂດທົ່ວປະເທດບັນລຸ 98%.

ເຖິງຢ່າງໃດກໍ່ຕາມ, ສປປ ລາວ ຍັງນໍາເຂົ້າໄຟຟ້າຈາກປະເທດໄທ, ສສ.ຫວຽດນາມ ແລະ ສປ.ຈີນ ຢູ່ບາງເຂດເນື່ອງຈາກການພັດທະນາຕາໜ່າງສາຍສົ່ງໄຟຟ້າຍັງບໍ່ທັນທົ່ວເຖິງ. ນອກນັ້ນ, ອັດຕາສ່ວນການນໍາໃຊ້ພະລັງງານສະອາດ-ເປັນມິດຕໍ່ສິ່ງແວດລ້ອມ (ພະລັງງານໄຟຟ້ານໍ້າຕົກ) ຍັງຕໍ່າ. ພະລັງງານທີ່ໃຊ້ໃນ ສປປ ລາວ ແມ່ນມາຈາກແຫລ່ງອື່ນທີ່ມີຄວາມສະອາດ ແລະ ເປັນມິດຕໍ່ສິ່ງແວດລ້ອມໜ້ອຍກວ່າ ເຊັ່ນ: ຊີວະມວນ (Bio-Mass/ຕົ້ນຕໍແມ່ນຟືນ), ຖ່ານໄມ້, ນໍ້າມັນຈາກຟອດຊິວ ແລະ ຖ່ານຫີນ[49] ເນື່ອງຈາກຕາໜ່າງສາຍສົ່ງໄຟຟ້າໃນ ສປປ ລາວ ຍັງບໍ່ທັນທົ່ວເຖິງ. ເຊັ່ນດຽວກັບຫລາຍປະເທດໃນອານຸພາກພື້ນແມ່ນນໍ້າຂອງ (GMS), ປະສິດທິພາບຂອງການນໍາໃຊ້ພະລັງງານ (Energy Intensity) ຍັງບໍ່ທັນສູງ ຖ້າທຽບກັບຫລາຍປະເທດໃນຂົງເຂດອື່ນ. ອັດຕາສ່ວນການນໍາໃຊ້ພະລັງງານຕໍ່ລວມຍອດມູນຄ່າຜະລິດຕະພັນພາຍໃນ (GDP) ເທົ່າກັບປະມານ 296,21 ໂຕນນໍ້າມັນດິບ/ລ້ານໂດລາສະຫະລັດ (296,21teo/million$GDP) ໃນປີ 2012[50] ໝາຍຄວາມວ່າຈະຕ້ອງໃຊ້ພະລັງງານເທົ່າກັບ 296,21 ໂຕນນໍ້າມັນດິບ ເພື່ອຜະລິດສິນຄ້າ ຫລື ສະໜອງບໍລິການທີ່ມີມູນຄ່າ 1 ລ້ານໂດລາສະຫະລັດ. ເນື່ອງຈາກເຕັກນິກ ແລະ ເຕັກໂນໂລຊີທີ່ນໍາໃຊ້ໃນ ສປປ ລາວ ກໍ່ຄືໃນຫລາຍປະເທດ, ໃນອານຸພາກພື້ນແມ່ນນໍ້າຂອງ ສ່ວນໃຫຍ່ແມ່ນເຕັກໂນໂລຊີເກົ່າທີ່ບໍ່ປະຢັດພະລັງງານ.

ສະນັ້ນ, ຂະແໜງພະລັງງານໃນ ສປປ ລາວ ຈຶ່ງເປັນຂະແໜງການທີ່ມີທ່າແຮງໃນການພັດທະນາຕາມທິດສີຂຽວ-ຍືນຍົງ. ການຜະລິດ ແລະ ສົ່ງອອກພະລັງງານຂອງ ສປປ ລາວ ບໍ່ພຽງແຕ່ຈະເປັນການປະກອບສ່ວນເຂົ້າໃນການປົກປັກຮັກສາສິ່ງແວດລ້ອມ ແລະ ຊຸກຍູ້ການພັດທະນາຕາມທິດສີຂຽວ-ຍືນຍົງຢູ່ພາຍໃນປະເທດເທົ່ານັ້ນ ແຕ່ຍັງຈະເປັນການປະກອບສ່ວນເຂົ້າໃນພາລະກິດດັ່ງກ່າວໃນສາກົນອີກດ້ວຍ. ດ້ວຍເຫດນັ້ນ, ຍຸດທະສາດການເຕີບໂຕສີ

49 The Ministry of Energy and Mine. 2011. Renewable Energy Development Strategy.
50 http://portal.gms-eoc.org/charts/overview/energy-intensity?gid=19.

ຂຽວແຫ່ງຊາດຂອງ ສປປ ລາວ ຈຶ່ງກໍານົດເອົາຂະແໜງພະລັງງານ ເປັນຂະແໜງບູລິມະສິດຂະແໜງໜຶ່ງ ໂດຍສະເພາະແມ່ນຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ຈະເລັ່ງໃສ່:

- ຊຸກຍູ້-ສົ່ງເສີມການສ້າງກົນໄກພັດທະນາ ແລະ ຄຸ້ມຄອງຂະແໜງການໄຟຟ້າແບບມີສ່ວນຮ່ວມຂອງຂະແໜງການ ແລະ ທ້ອງຖິ່ນຢ່າງກວ້າງຂວາງ ເພື່ອຫລຸດຜ່ອນຜົນກະທົບທາງດ້ານລົບ ກໍ່ຄື ຮັບປະກັນການນໍາໃຊ້ຊັບພະຍາກອນທໍາມະຊາດຢ່າງມີປະສິດທິພາບ, ປະສິດທິຜົນ ແລະ ມີຄວາມຍືນຍົງ ແລະ ຮັບປະກັນຄວາມເປັນທໍາໃນການກະຈາຍຜົນປະໂຫຍດ ແລະ ຄວາມສ່ຽງທີ່ໄດ້ຮັບຈາກໂຄງການພັດທະນາໄຟຟ້າ, ໂດຍສະເພາະແມ່ນເລັ່ງໃສ່ ການອອກແບບ ແລະ ກໍ່ສ້າງເຂື່ອນໄຟຟ້ານໍ້າຕົກ, ການກໍ່ສ້າງລະບົບສາຍສົ່ງ, ການຄຸ້ມຄອງ-ບໍລິຫານນໍ້າ, ການຄຸ້ມຄອງ ແລະ ປົກປັກຮັກສາແຫລ່ງນໍ້າ ແລະ ອື່ນໆ.

- ຂະຫຍາຍຕາຂ່າຍໄຟຟ້າ (ລະບົບສາຍສົ່ງ)ໃຫ້ກວ້າງຂວາງ, ທົ່ວເຖິງ, ເຊື່ອມຈອດກັນໃນຂອບເຂດທົ່ວປະເທດ ແລະ ເຊື່ອມໂຍງກັບພາກພື້ນ ແລະ ສາກົນ,ໂດຍສະເພາະແມ່ນເລັ່ງໃສ່ສ້າງລະບົບສາຍສົ່ງແຫ່ງຊາດ ເພື່ອເພີ່ມປະສິດທິພາບ ແລະ ປະສິດທິຜົນຂອງການລົງທຶນ, ຮັບປະກັນສະຖຽນລະພາບ ແລະ ການກະຈາຍໄຟຟ້າຢ່າງກວ້າງຂວາງ ແລະ ທົ່ວເຖິງ ເພື່ອຫລຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ.

- ຊຸກຍູ້ສົ່ງເສີມການລົງທຶນຂອງລັດ, ເອກະຊົນພາຍໃນ ແລະ ຕ່າງປະເທດ ເຂົ້າໃນການຜະລິດໄຟຟ້າພະລັງງານນໍ້າ, ພະລັງງານແສງຕາເວັນ ແລະ ພະລັງງານລົມ ເພື່ອຕອບສະໜອງຄວາມຕ້ອງການທາງດ້ານພະລັງງານຢູ່ພາຍໃນ ແລະ ຕ່າງປະເທດທີ່ນັບມື້ນັບສູງຂຶ້ນ ໂດຍສະເພາະແມ່ນເລັ່ງໃສ່ການປັບປຸງກົດໝາຍ, ລະບຽບການ, ກົນໄກການປະສານງານ ເພື່ອອໍານວຍຄວາມສະດວກ ແລະ ດຶງດູດນັກລົງທຶນ.

- ເສີມຂະຫຍາຍການຮ່ວມມືກັບພາກພື້ນ ແລະ ສາກົນໃນການສຶກສາ, ສ້າງຄວາມອາດສາມາດໃຫ້ແກ່ພະນັກງານລັດຖະກອນ ໃຫ້ມີຄວາມເຂັ້ມແຂງທາງດ້ານວິຊາການ, ລົງເລິກວຽກງານຮ່ວມມືສາກົນດ້ານຄວາມປອດໄພ, ແກ້ໄຂສຸກເສີນດ້ານພະລັງງານທາງເລືອກ ເຊັ່ນ: ພະລັງງານນິວເຄຣຍ ແລະ ພະລັງງານໄຮໂດຣເຈນ.

- ຍົກສູງປະສິດທິພາບການນໍາໃຊ້ພະລັງງານທີ່ສະອາດ ໂດຍການຊຸກຍູ້ ແລະ ອໍານວຍຄວາມສະດວກ ໃຫ້ແກ່ການຜະລິດ, ນໍາໃຊ້ເຄື່ອງໃຊ້ອຸປະກອນການຜະລິດ, ພາຫະນະຂົນສົ່ງ, ເຕັກນິກ ແລະ ເຕັກໂນໂລຊີ ທີ່ປະຢັດພະລັງງານ ແລະ ຈໍາກັດການນໍາເຂົ້າເຄື່ອງໃຊ້, ອຸປະກອນການຜະລິດພາຫະນະຂົນສົ່ງ, ເຕັກນິກ ແລະ ເຕັກໂນໂລຊີ ທີ່ສິ້ນເປືອງພະລັງງານ.

- ຫລຸດຜ່ອນປະລິມານການນໍາໃຊ້ພະລັງງານທີ່ບໍ່ສະອາດ ເຊັ່ນ: ພະລັງງານຊີວະມວນ (ຟືນ, ຖ່ານໄມ້ ແລະ ອື່ນໆ) ທັງນີ້ກໍ່ເພື່ອຫລຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສຸຂະພາບຂອງປະຊາຊົນ ດ້ວຍການເພີ່ມປະສິດທິພາບ ແລະ ສົ່ງເສີມການນໍາໃຊ້ພະລັງງານທີ່ສະອາດ.

- ສະໜອງພະລັງງານໄຟຟ້າທີ່ມີປະສິດທິຜົນ, ປອດໄພ ແລະ ທົ່ວເຖິງ ເພື່ອປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ, ສູ້ຊົນໃຫ້ອັດຕາການຊົມໃຊ້ໄຟຟ້າຂອງຄົວເຮືອນໃນຂອບເຂດທົ່ວປະເທດບັນລຸ 98%.

- ປູກຈິດສໍານຶກ, ນໍາໃຊ້ເຄື່ອງມືທາງເສດຖະກິດ (ກົນໄກລາຄາ ຫລື ອາກອນ) ແລະ ເຜີຍແຜ່ນິຕິກໍາທີ່ກ່ຽວຂ້ອງພ້ອມທັງເຊື່ອມສານກັບບັນດາຂະແໜງການຕ່າງໆ ເພື່ອຊຸກຍູ້ໃຫ້ທຸກພາກສ່ວນນໍາໃຊ້ພະລັງງານຢ່າງປະຢັດ, ມີປະສິດທິພາບ ແລະ ປະສິດທິຜົນ ເພື່ອຫລຸດຜ່ອນຄວາມຈໍາເປັນໃນການຜະລິດ ແລະ ສະໜອງກໍ່ຄືການຫລຸດຜ່ອນການປ່ອຍທາດອາຍພິດເຮືອນແກ້ວ.

### 3.2.5.2. ຂະແໜງບໍ່ແຮ່

ຂະແໜງບໍ່ແຮ່ ເປັນຂະແໜງໜຶ່ງ ທີ່ລັດຖະບານ ສປປ ລາວ ໃຫ້ຄວາມສໍາຄັນ ເພາະເປັນຂະແໜງການທີ່ສ້າງລາຍຮັບເຂົ້າງົບປະມານຂອງລັດ. ລັດຖະບານ ສປປ ລາວ ໄດ້ມີວິໄສທັດໃນການພັດທະນາແຮ່ທາດແບບມີສ່ວນຮ່ວມ ໃຫ້ໄປຕາມທິດສີຂຽວ ແລະ ຍືນຍົງ ໂດຍໄດ້ວ່າງຍຸດທະສາດການພັດທະນາແຮ່ທາດ ແລະ ນໍາໃຊ້ກົດໝາຍວ່າດ້ວຍແຮ່ທາດ (ສະບັບປັບປຸງໃໝ່) ທີ່ກໍານົດໃຫ້ການພັດທະນາແຮ່ທາດ ຕ້ອງສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນພັດທະນານໍາໃຊ້ທີ່ດິນແບບຮອບດ້ານ, ເອົາໃຈໃສ່ການອະນຸລັກຊັບພະຍາກອນທໍາມະຊາດ, ການປົກປັກຮັກສາສິ່ງແວດລ້ອມ ແລະ ຄວາມປອດໄພ-ສຸຂະພາບຂອງຜູ້ອອກແຮງງານ; ສ້າງແຜນການປິດບໍ່ ແລະ ຟື້ນຟູເນື້ອທີ່ເຂດບໍ່ແຮ່ໃຫ້ສາມາດນໍາໃຊ້ຄືນ, ນໍາໃຊ້ຊັບພະຍາກອນແຮ່ທາດໃຫ້ເກີດຜົນປະໂຫຍດສູງສຸດ ໂດຍສົ່ງເສີມການປຸງແຕ່ງແຮ່ທາດພາຍໃນປະເທດໃຫ້ເປັນຜະລິດຕະພັນສໍາເລັດຮູບ ຫລື ເຄິ່ງສໍາເລັດຮູບ ແລ້ວຈຶ່ງສົ່ງອອກ ເພື່ອເພີ່ມມູນຄ່າທາງເສດຖະກິດ, ປະກອບສ່ວນໃນການສ້າງວຽກເຮັດງານທໍາໃຫ້ປະຊາຊົນນັບມື້ນັບຫລາຍຂຶ້ນ.

ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ເລັ່ງໃສ່ຊຸກຍູ້ສົ່ງເສີມຂະແໜງການບໍ່ແຮ່ຕາມແນວທາງນະໂຍບາຍຂອງລັດຖະບານ ແຫ່ງ ສປປ ລາວ, ໂດຍສະເພາະຈະເລັ່ງໃສ່ ຊຸກຍູ້ສົ່ງເສີມການສ້າງກົນໄກພັດທະນາໂຄງການບໍ່ແຮ່ແບບມີສ່ວນຮ່ວມຂອງຂະແໜງການ ແລະ ທ້ອງຖິ່ນຢ່າງກວ້າງຂວາງເພື່ອຫລຸດຜ່ອນຜົນກະທົບທາງດ້ານລົບຕໍ່ສິ່ງແວດລ້ອມ ກໍ່ຄື ຮັບປະກັນການນໍາໃຊ້ຊັບພະຍາກອນທໍາມະຊາດຢ່າງມີປະສິດທິພາບ, ປະສິດທິຜົນ ແລະ ມີຄວາມຍືນຍົງ ແລະ ຮັບປະກັນຄວາມເປັນທໍາໃນການກະຈາຍຜົນປະໂຫຍດຈາກໂຄງການພັດທະນາບໍ່ແຮ່.

### 3.2.6. ຂະແໜງຖະແຫລງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ

### 3.2.6.1. ຂະແໜງຖະແຫລງຂ່າວ

ເປັນຂະແໜງການຍ່ອຍໜຶ່ງທີ່ສໍາຄັນ ໃນການຊຸກຍູ້ການເຕີບໂຕສີຂຽວ ທົ່ວປະເທດມີສະຖານີວິທະຍຸກະຈາຍສຽງທັງໝົດ 76 ສະຖານີ. ໃນນັ້ນ, ຢູ່ສູນກາງມີ 11 ສະຖານີ, ຢູ່ແຂວງມີ 19 ສະຖານີ ແລະ ຢູ່ເມືອງມີ 33 ສະຖານີ. ຄົ້ນວິທະຍຸກະຈາຍສຽງລວມ 95% ຂອງພື້ນທີ່ທົ່ວປະເທດ. ມີສະຖານີໂທລະພາບທັງໝົດ 37 ສະຖານີ; ໃນນັ້ນຢູ່ສູນກາງມີ 9 ສະຖານີ, ຢູ່ແຂວງມີ 17 ສະຖານີ ແລະ ຢູ່ເມືອງມີ 11 ສະຖານີ; ສາມາດສົ່ງສັນຍານພາກພື້ນດິນກວມ 80% ຂອງພື້ນທີ່ທົ່ວປະເທດ ແລະ ຜ່ານດາວທຽມກວມ 100%. ສື່ສິ່ງພິມທັງໝົດ 148 ສະບັບ, ໃນນັ້ນມີໜັງສືພິມ 33 ສະບັບ ມີໜັງສືພິມລາຍວັນ 11 ສະບັບ. ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ໄດ້ກໍານົດເອົາວຽກງານຖະແຫລງຂ່າວເປັນຂະແໜງການບູລິມະສິດ ໂດຍສະເພາະແມ່ນຈະເລັ່ງໃສ່: (1) ປູກຈິດສໍານຶກ ແລະ ສົ່ງເສີມການເຕີບໂຕສີຂຽວ ຜ່ານລາຍການວິທະຍຸ, ໂທລະພາບ ແລະ ສື່ສິ່ງພິມຕ່າງໆ, (2) ປະສານສົມທົບກັບຂະແໜງອຸດສາຫະກໍາ ແລະ ການຄ້າໃນການໂຄສະນາເຜີຍແຜ່ ແລະ ສົ່ງເສີມການການຜະລິດ, ການຕະຫລາດ, ການຂາຍ ແລະ ການບໍລິໂພກຜະລິດຕະພັນສະອາດເປັນມິດຕໍ່ສິ່ງແວດລ້ອມ, (3) ປະສານສົມທົບກັບຂະແໜງວັດທະນະທໍາ ແລະ ທ່ອງທ່ຽວ ໂຄສະນາເຜີຍແຜ່ແຫລ່ງທ່ອງທ່ຽວທາງທໍາມະຊາດ, ປະຫວັດສາດ ແລະ ວັດທະນະທໍາ ເພື່ອດຶງດູດນັກທ່ອງທ່ຽວມາດໍາເນີນກິດຈະການທ່ອງທ່ຽວໃນ ສປປ ລາວ ແລະ (4) ໂຄສະນາເຜີຍແຜ່ບັນດານະໂຍບາຍ ແລະ ນິຕິກໍາຕ່າງໆຂອງພັກ ແລະ ລັດຖະບານທີ່ກ່ຽວຂ້ອງກັບການເຕີບໂຕສີຂຽວໃຫ້ປະຊາຊົນ, ຂະແໜງການ ແລະ ທ້ອງຖິ່ນຮັບຮູ້ ແລະ ນໍາໄປຜັນຂະຫຍາຍເຂົ້າໃນການດໍາລົງຊີວິດ ແລະ ໜ້າທີ່ວຽກງານຂອງຕົນໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ.

### 3.2.6.2. ຂະແໜງວັດທະນະທໍາ

ເປັນຂະແໜງການຍ່ອຍໜຶ່ງທີ່ສໍາຄັນໃນການປົກປັກຮັກສາ ແລະ ສ້າງຄວາມເປັນເອກະລັກຂອງຊາດ. ວັດທະນະທໍາຕິດພັນກັບຫລາຍຂະແໜງການບູລິມະສິດຂອງການເຕີບໂຕສີຂຽວ ເປັນຕົ້ນແມ່ນ: ຂະແໜງທ່ອງທ່ຽວ,

ຖະແຫລງຂ່າວ ແລະ ເຄຫາ-ຜັງເມືອງ. ສະນັ້ນ, ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ, ວັດທະນະທຳເປັນຂະແໜງການໜຶ່ງທີ່ສຳຄັນ ໂດຍສະເພາະຈະສຸມໃສ່: (1) ປະສານສົມທົບກັບຂະແໜງການທ່ອງທ່ຽວ ເພື່ອສ້າງກິດຈະກຳ ແລະ ພັດທະນາສະຖານທີ່ທ່ອງທ່ຽວທາງປະຫວັດສາດ ແລະ ວັດທະນະທຳຂອງຊາດໃຫ້ມີຄວາມຫລາກຫລາຍ ແລະ ຈີບງາມ ເພື່ອດຶງດູດນັກທ່ອງທ່ຽວມາທ່ອງທ່ຽວໃນ ສປປ ລາວ ເພື່ອຊຸກຍູ້ການຂະຫຍາຍຕົວຂອງເສດຖະກິດ, ສ້າງວຽກເຮັດງານທຳ ແລະ ຫລຸດຜ່ອນຄວາມທຸກຍາກ; (2) ປະສານສົມທົບກັບວຽກງານຖະແຫລງຂ່າວ ເພື່ອເຜີຍແຜ່ວັດທະນະທຳ ແລະ ວິຖີການດຳລົງຊີວິດທີ່ເປັນເອກກະລັກຂອງຊາດ, ສຶກສາອົບຮົມໃຫ້ປະຊາຊົນລາວມີຊີວິດແບບລຽບງ່າຍ, ປະຢັດມັດທະຍັດ, ຖະໜອມຖ່ອມຕົນ, ມີຈິດໃຈເອື້ອເຟື້ອເພື່ອແຜ່ ແລະ ຊ່ວຍເຫລືອຜູ້ອື່ນ, ເຄົາລົບ ແລະ ໃຫ້ກຽດແຂກທີ່ມາຢ້ຽມຢາມ ແລະ (3) ປະສານສົມທົບກັບຂະແໜງໂຍທາທິການ ແລະ ຂົນສົ່ງ ໃນການອອກແບບຕົວເມືອງ, ອາຄານສະຖານທີ່ ແລະ ປະດັບປະດາຕົວເມືອງໃຫ້ມີຄຸນຄ່າທາງດ້ານສິລະປະວັດທະນະທຳທີ່ເປັນເອກະລັກຂອງຊາດລາວ.

### 3.2.6.3. ຂະແໜງທ່ອງທ່ຽວ

ເປັນຂະແໜງການທີ່ສະອາດ, ເປັນມິດຕໍ່ສັງຄົມ ແລະ ສິ່ງແວດລ້ອມ ແລະ ເປັນຂະແໜງການທີ່ຕິດພັນ, ເປັນໃຈກາງ ແລະ ຊຸກຍູ້ຫລາຍຂະແໜງການເປັນຕົ້ນແມ່ນຂະແໜງຂົນສົ່ງ, ຫັດຖະກຳ, ກະສິກຳສະອາດ, ໂຮງແຮມ, ຣີສອດ, ເຮືອນພັກ, ຮ້ານອາຫານ ແລະ ອື່ນໆ. ເພາະສະນັ້ນ, ຂະແໜງທ່ອງທ່ຽວ ຈຶ່ງເປັນຂະແໜງການໜຶ່ງທີ່ມີຄວາມສາມາດສູງໃນການຊຸກຍູ້ການຂະຫຍາຍຕົວຂອງເສດຖະກິດ, ຫລຸດຜ່ອນຄວາມທຸກຍາກ ແລະ ສ້າງວຽກເຮັດງານທຳໃຫ້ແກ່ປະຊາຊົນທັງໃນຕົວເມືອງ ແລະ ຊົນນະບົດຕາມທິດສີຂຽວ-ຍືນຍົງ ສປປ ລາວ ເປັນປະເທດໜຶ່ງທີ່ມີທິວທັດທຳມະຊາດສວຍສົດງົດງາມ, ມີຮ່ອງຮອຍປະຫວັດສາດທີ່ເກົ່າແກ່, ມີຄວາມຫລາກຫລາຍທາງດ້ານສິລະປະ-ວັດທະນະທຳ, ຮີດຄອງປະເພນີ ແລະ ວິຖີການດຳລົງຊີວິດຂອງປະຊາຊົນບັນດາເຜົ່າ. ເພາະສະນັ້ນ, ສປປ ລາວ ຈຶ່ງເປັນປະເທດທີ່ມີທ່າແຮງສູງໃນການພັດທະນາເປັນແຫລ່ງທ່ອງທ່ຽວທາງທຳມະຊາດ, ປະຫວັດສາດ ແລະ ວັດທະນະທຳທີ່ມີຄວາມຮຽກຮ້ອງຕ້ອງການສູງ ແລະ ມີທ່າອ່ຽງທີ່ເພີ່ມຂຶ້ນຢູ່ພາຍໃນ ແລະ ຕ່າງປະເທດ. ລັດຖະບານ ໄດ້ມີນະໂຍບາຍໃນການສົ່ງເສີມ, ຄຸ້ມຄອງ ແລະ ພັດທະນາແຫລ່ງທ່ອງທ່ຽວທາງທຳມະຊາດ, ປະຫວັດສາດ ແລະ ວັດທະນະທຳ, ເປັນຕົ້ນແມ່ນ ການຄຸ້ມຄອງອະນຸລັກເຂດສະຫງວນ, ການອະນຸລັກສັດປ່າ ແລະ ຢຸດຕິການຕັດໄມ້ທຳລາຍປ່າທີ່ຜິດກົດໝາຍ, ສົ່ງເສີມຮີດຄອງປະເພນີອັນດີງາມຂອງບັນດາເຜົ່າແຕ່ລະທ້ອງຖິ່ນ.

ໃນປີ 2018 ທົ່ວປະເທດມີແຫລ່ງທ່ອງທ່ຽວທັງໝົດປະມານ 2.094 ແຫ່ງ. ໃນນັ້ນ, ເປັນແຫລ່ງທ່ອງທ່ຽວທາງວັດທະນະທຳ 632 ແຫ່ງ, ແຫລ່ງທ່ອງທ່ຽວທາງທຳມະຊາດ 1.184 ແຫ່ງ ແລະ ແຫລ່ງທ່ອງທ່ຽວທາງປະຫວັດສາດ 278 ແຫ່ງ; ໄດ້ເປີດບໍລິການແລ້ວ 896 ແຫ່ງ, ສຳຫລວດແລ້ວ 891 ແຫ່ງ, ພັດທະນາແລ້ວ 366 ແຫ່ງ; ມີບໍລິສັດທ່ອງທ່ຽວທັງໝົດ 433 ບໍລິສັດ ໃນນັ້ນມີບໍລິສັດແມ່ 391 ບໍລິສັດ, 49 ສາຂາບໍລິສັດທ່ອງທ່ຽວ, ຈຳນວນພະນັກງານນຳທ່ຽວທັງໝົດ 1.275 ທ່ານ, ມີໂຮງແຮມ 545 ແຫ່ງ, ມີຫ້ອງນອນປະມານ 21.617 ຫ້ອງ; ເຮືອນພັກ ແລະ ຣີສອດ 2.452 ແຫ່ງ, ມີຫ້ອງນອນ 24.896 ຫ້ອງ; ມີຮ້ານອາຫານທັງໝົດ 1.664 ແຫ່ງ, ພັດຕະຄານ 6 ແຫ່ງ ແລະ ສະຖານບັນເທີງປະມານ 164 ແຫ່ງ, ຮ້ານຄາຣາໂອເກະທັງໝົດຈຳນວນ 195 ແຫ່ງ ແລະ ມີນັກທ່ອງທ່ຽວຕ່າງປະເທດ ເຂົ້າມາທ່ອງທ່ຽວປະເທດລາວທັງໝົດ 4,2 ລ້ານເທື່ອຄົນ ແລະ ສ້າງລາຍຮັບ 755,3 ລ້ານໂດລາສະຫະລັດ[51].

ແຕ່ເຖິງຢ່າງໃດກໍ່ຕາມ, ທ່າແຮງດ້ານການທ່ອງທ່ຽວໃນ ສປປ ລາວ ຍັງບໍ່ທັນໄດ້ຮັບການຂຸດຄົ້ນ ແລະ ນຳໃຊ້ຢ່າງມີປະສິດທິພາບ ແລະ ເຕັມອັດຕາ ໂດຍສະເພາະແມ່ນ ທ່າແຮງດ້ານການທ່ອງທ່ຽວທາງທຳມະຊາດ. ຕາມຂໍ້ມູນຈາກກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ. ປະຈຸບັນມີພຽງປະມານ 20% ຂອງແຫລ່ງທ່ອງ

[51] ກົມພັດທະນາການທ່ອງທ່ຽວ, ກະຊວງຖະແຫລງຂ່າວວັດທະນາທຳ ແລະ ທ່ອງທ່ຽວ.

ທ່ຽວທັງໝົດທີ່ໄດ້ນຳໃຊ້ ເປີດບໍລິການທີ່ໄດ້ຮັບການພັດທະນາ. ນອກນັ້ນ, ການໂຄສະນາເຜີຍແຜ່ການທ່ອງທ່ຽວໃນ ສປປ ລາວ ກໍ່ຍັງບໍ່ທັນກວ້າງຂວາງ ແລະ ທົ່ວເຖິງ; ນັກທ່ອງທ່ຽວຫລາຍປະເທດຍັງບໍ່ທັນຮູ້ຈັກ ສປປ ລາວ, ກິດຈະກຳການທ່ອງທ່ຽວຍັງບໍ່ທັນຫລາກຫລາຍ ແລະ ປະທັບໃຈນັກທ່ອງທ່ຽວ ຄຸນນະພາບຂອງການບໍລິການບໍ່ທັນສູງ ແລະ ບໍ່ທັນໄດ້ຕາມມາດຕະຖານ, ການຜະລິດເຄື່ອງຫັດຖະກຳ ແລະ ສະບຽງອາຫານ ເພື່ອຕອບສະໜອງຄວາມຕ້ອງການຂອງການທ່ອງທ່ຽວຍັງບໍ່ທັນພຽງພໍທາງດ້ານປະລິມານ ແລະ ຄຸນນະພາບ, ການຄຸ້ມຄອງ ແລະ ນຳໃຊ້ແຫລ່ງທ່ອງທ່ຽວຫລາຍແຫ່ງຍັງບໍ່ທັນຮັບປະກັນປະສິດທິພາບ, ປະສິດທິຜົນ ແລະ ຄວາມຄວາມຍືນຍົງ ແລະ ອື່ນໆ.

ເພາະສະນັ້ນ, ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ຈຶ່ງກຳນົດເອົາ ການສົ່ງເສີມການພັດທະນາຂະແໜງທ່ອງທ່ຽວເປັນຂະແໜງບຸລິມະສິດໜຶ່ງ ເພື່ອຊຸກຍູ້ການຂະຫຍາຍຕົວຂອງເສດຖະກິດ, ຫລຸດຜ່ອນຄວາມທຸກຍາກ, ສ້າງວຽກເຮັດງານທຳ ແລະ ກິດຈະກຳສ້າງລາຍຮັບໃຫ້ແກ່ປະຊາຊົນຕາມທິດສີຂຽວ-ຍືນຍົງ ໂດຍສະເພາະແມ່ນຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ຈະເລັ່ງໃສ່:

- ເພີ່ມທະວີການປົກປັກຮັກສາ ແລະ ພັດທະນາກິດຈະກຳ ແລະ ສະຖານທີ່ທ່ອງທ່ຽວທາງທຳມະຊາດ, ປະຫວັດສາດ ແລະ ວັດທະນະທຳໃນ ສປປ ລາວ ໃຫ້ມີຄວາມຫລາກຫລາຍ ແລະ ສວຍສົດງົດງາມ. ເປັນຕົ້ນແມ່ນ ນ້ຳຕົກຕາດ, ປ່າໄມ້, ແມ່ນ້ຳ, ຖ້ຳ, ວັດວາອາຮາມ, ຮີດຄອງປະເພນີ, ວິຖີການດຳລົງຊີວິດຂອງປະຊາຊົນບັນດາເຜົ່າ ແລະ ອື່ນໆເພື່ອແກ່ຍາວໄລຍະເວລາພັກເຊົາຂອງນັກທ່ອງທ່ຽວ.

- ໂຄສະນາເຜີຍແຜ່ສະຖານທີ່ທ່ອງທ່ຽວທຳມະຊາດ, ປະຫວັດສາດ ແລະ ວັດທະນະທຳໃນ ສປປ ລາວ ໃຫ້ທົ່ວໂລກຮັບຮູ້ຢ່າງກວ້າງຂວາງ ເພື່ອດຶງດູດນັກທ່ອງທ່ຽວໃນພາກພື້ນ ແລະ ສາກົນມາທ່ອງທ່ຽວໃນ ສປປ ລາວ ໃຫ້ຫລາຍຂຶ້ນ ເພື່ອປະກອບສ່ວນເຂົ້າໃນການຊຸກຍູ້ການຂະຫຍາຍຕົວຂອງເສດຖະກິດ ແລະ ຫລຸດຜ່ອນຄວາມທຸກຍາກ ກໍ່ຄືເພື່ອສ້າງວຽກເຮັດງານທຳ ແລະ ກິດຈະກຳສ້າງລາຍໄດ້ໃຫ້ແກ່ປະຊາຊົນ.

- ປັບປຸງຄຸນນະພາບຂອງການບໍລິການການທ່ອງທ່ຽວ ແລະ ຂະແໜງການທີ່ຕິດພັນໃຫ້ໄດ້ມາດຕະຖານ ເຊັ່ນ: ບໍລິການຂົນສົ່ງໂດຍສານ, ບໍລິການໂຮງແຮມ, ເຮືອນພັກ-ຣີສອດ, ຮ້ານອາຫານ, ສະຖານບັນເທີງຕ່າງໆດ້ວຍການສະໜອງການຝຶກອົບຮົມ ແລະ ເພີ່ມທັກສະໃຫ້ແກ່ພະນັກງານໃນຂະແໜງການດັ່ງກ່າວ.

- ປະສານສົມທົບກັບຂະແໜງການກ່ຽວຂ້ອງ ເປັນຕົ້ນແມ່ນ: ກະສິກຳ ແລະ ຫັດຖະກຳເພື່ອຊຸກຍູ້ການຜະລິດສະບຽງອາຫານ ແລະ ເຄື່ອງທີ່ລະນຶກ ເພື່ອຕອບສະໜອງຄວາມຕ້ອງການຂອງການທ່ອງທ່ຽວໃຫ້ພຽງພໍທາງດ້ານປະລິມານ ແລະ ຄຸນນະພາບ, ປະສານສົມທົບກັບຂະແໜງໂຍທາທິການ ແລະ ຂົນສົ່ງ ເພື່ອປັບປຸງເສັ້ນທາງເຂົ້າເຖິງສະຖານທີ່ທ່ອງທ່ຽວໃຫ້ມີຄວາມສະດວກປອດໄພ; ປະສານສົມທົບກັບຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃນການຈັດສັນຂອບເຂດການປົກປັກຮັກສາ ແລະ ການນຳໃຊ້ຊັບພະຍາກອນທຳມະຊາດໃຫ້ມີປະສິດທິພາບສູງສຸດ; ປະສານສົມທົບກັບຂະແໜງວັດທະນາທຳ ສ້າງກິດຈະກຳການທ່ອງທ່ຽວທາງວັດທະນະທຳໃຫ້ມີຄວາມຫລາກຫລາຍ ແລະ ປະທັບໃຈແກ່ນັກທ່ອງທ່ຽວ ເພື່ອແກ່ຍາວເວລາ ແລະ ຄ່າໃຊ້ຈ່າຍດ້ວຍຄວາມພໍໃຈຂອງບັນດານັກທ່ອງທ່ຽວ ເພື່ອເພີ່ມມູນຄ່າທາງເສດຖະກິດ, ສ້າງວຽກເຮັດງານທຳ ແລະ ກິດຈະກຳສ້າງລາຍໄດ້ໃຫ້ແກ່ປະຊາຊົນ.

- ປະສານສົມທົບກັບບັນດາຫົວໜ່ວຍທຸລະກິດໃນຂະແໜງການທ່ອງທ່ຽວ ເປັນຕົ້ນແມ່ນ: ບໍລິສັດທ່ອງທ່ຽວ, ພາກສ່ວນບໍລິການຂົນສົ່ງໂດຍສານ, ສະຖານທີ່ພັກແຮມ, ຮ້ານອາຫານ-ກິນດື່ມ, ບໍລິການທ່ອງທ່ຽວປະເພດອື່ນໆ ນຳໃຊ້ພະລັງງານແບບປະຢັດ ແລະ ນຳໃຊ້ຜະລິດຕະພັນທີ່ສະອາດ ແລະ ເປັນມິດກັບສິ່ງແວດລ້ອມ ເພື່ອປະກອບສ່ວນເຂົ້າໃນການປົກປັກຮັກສາສິ່ງແວດລ້ອມ ແລະ ສົ່ງເສີມການພັດທະນາແບບຍືນຍົງ.

- ສ້າງ ແລະ ຈັດຕັ້ງປະຕິບັດມາດຕະຖານເມືອງທ່ອງທ່ຽວ, ແຫລ່ງທ່ອງທ່ຽວ ແລະ ສະຖານບໍລິການການທ່ອງທ່ຽວ (ບໍລິສັດທ່ອງທ່ຽວ, ໂຮງແຮມ, ຣີສອດ, ເຮືອນພັກ, ຮ້ານອາຫານ ແລະ ສະຖານບັນເທີງ) ສີຂຽວ; ໝາຍຄວາມວ່າ ສ້າງມາດຕະຖານ, ດຳເນີນການປະເມີນ, ອອກໃບຢັ້ງຢືນ ແລະ ສົ່ງເສີມການໃຊ້ບໍລິການສະຖານບໍລິການທ່ອງທ່ຽວສີຂຽວດັ່ງກ່າວ.

- ຊຸກຍູ້, ສົ່ງເສີມການພັດທະນາ, ການຄຸ້ມຄອງການທ່ອງທ່ຽວ ແບບມີສ່ວນຮ່ວມຢ່າງກວ້າງຂວາງຈາກປະຊາຊົນ ແລະ ຊຸມຊົນຢູ່ໃນທ້ອງຖິ່ນ ແລະ ໃນເຂດທ່ອງທ່ຽວນັ້ນໆ ເພື່ອຮັບປະກັນການສ້າງວຽກເຮັດງານທຳ, ລາຍຮັບ ແລະ ຮັບປະກັນການກະຈາຍຜົນປະໂຫຍດທີ່ໝັ້ນຄົງຂອງປະຊາຊົນ, ຊຸມຊົນໃນທ້ອງຖິ່ນ ຢ່າງກວ້າງຂວາງ ແລະ ເປັນທຳ.

### 3.2.7. ຂະແໜງວິທະຍາສາດ ແລະ ເຕັກໂນໂລຊີ

ເປັນຂໍກຸນແຈທີ່ສຳຄັນໃນການຊຸກຍູ້ການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ກໍ່ຄື ການເຕີບໂຕສີຂຽວ. ໃນໄລຍະຜ່ານມາ ລັດຖະບານແຫ່ງ ສປປ ລາວ ເຫັນໄດ້ຄວາມສຳຄັນ ແລະ ໄດ້ເລີ່ມຕົ້ນພັດທະນາລະບົບຄົ້ນຄວ້າວິທະຍາສາດ ແລະ ເຕັກໂນໂລຊີຂຶ້ນ ເພື່ອຄົ້ນຄວ້າ-ວິໄຈ ແລະ ສະໜອງຂໍ້ມູນການພັດທະນາເສດຖະກິດ-ສັງຄົມຂອງປະເທດ. ລັດຖະບານໄດ້ສ້າງຕັ້ງກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ແລະ ສະຖາບັນຄົ້ນຄວ້າຂຶ້ນຫລາຍສະຖາບັນ ແລະ ສູນຄົ້ນຄວ້າທີ່ເປັນເອກກະລາດ (ລະດັບກະຊວງ) ແລະ ຂຶ້ນກັບຂະແໜງການ ແລະ ທ້ອງຖິ່ນ ເພື່ອຈັດຕັ້ງປະຕິບັດວຽກງານຄົ້ນຄວ້າວິທະຍາສາດ ແລະ ເຕັກໂນໂລຊີ ເພື່ອຮັບໃຊ້ການສ້າງ ແລະ ຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນຂະແໜງການ ແລະ ທ້ອງຖິ່ນ ເຊັ່ນ: ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ, ສະຖາບັນຄົ້ນຄວ້າວິທະຍາສາດສັງຄົມແຫ່ງຊາດ, ສະຖະບັນຄົ້ນຄວ້າເສດຖະກິດ-ການຄ້າ, ກະຊວງອຸດສາຫະກຳ ແລະ ການຄ້າ, ສູນຄົ້ນຄວ້ານະໂຍບາຍການພັດທະນາ, ກະຊວງແຜນການ ແລະ ການລົງທຶນ, ສະຖາບັນຄົ້ນຄວ້າກະສິກຳ-ປ່າໄມ້, ກະຊວງກະສິກຳ-ປ່າໄມ້, ສະຖາບັນຄົ້ນຄວ້າພະລັງງານທົດແທນ, ກະຊວງພະລັງງານ ແລະ ບໍ່ແຮ່ ແລະ ສະຖາບັນອື່ນໆ.

ເຖິງຢ່າງໃດກໍ່ຕາມ, ການພັດທະນາລະບົບການຄົ້ນຄວ້າວິທະຍາສາດ ແລະ ເຕັກໂນໂລຊີໃນ ສປປ ລາວ ກໍ່ຍັງຂ້ອນຂ້າງໃໝ່, ບໍ່ທັນເປັນລະບົບ, ເຂັ້ມແຂງ ແລະ ມີປະສິດທິພາບສູງ. ບັນດາສະຖາບັນ ແລະ ສູນຄົ້ນຄວ້າຕ່າງໆທີ່ລັດຖະບານສ້າງຕັ້ງຂຶ້ນຍັງຂາດນັກຄົ້ນຄວ້າທີ່ມີປະສົບການສູງ, ຂາດງົບປະມານໃນການຄົ້ນຄວ້າ ແລະ ຂາດເຄືອຂ່າຍປະສານງານທີ່ເຂັ້ມແຂງ. ເພາະສະນັ້ນ, ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ຈຶ່ງໄດ້ກຳນົດເອົາຂະແໜງຄົ້ນຄວ້າວິທະຍາສາດ ແລະ ເຕັກໂນໂລຊີ ເປັນຂະແໜງການບູລິມະສິດຂະແໜງໜຶ່ງ ໂດຍສະເພາະແມ່ນຈະເລັ່ງໃສ່:

- ສ້າງຕັ້ງ ແລະ ສ້າງຂີດຄວາມສາມາດຂອງເຄືອຂ່າຍຄົ້ນຄວ້າ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ; ເຊິ່ງຈະເປັນຈຸດປະສານງານລະຫວ່າງບັນດາມະຫາວິທະຍາໄລ, ສະຖາບັນ ແລະ ສູນຄົ້ນຄວ້າຂອງກະຊວງຕ່າງໆ ເຊັ່ນ: ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ, ສະຖາບັນຄົ້ນຄວ້າກະສິກຳ-ປ່າໄມ້ ຂອງກະຊວງກະສິກຳ-ປ່າໄມ້, ສູນຄົ້ນຄວ້າພະລັງງານທົດແທນ ຂອງກະຊວງພະລັງງານ-ບໍ່ແຮ່, ສະຖາບັນຄົ້ນຄວ້າສິ່ງແວດລ້ອມ ຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ມະຫາວິທະຍາໄລແຫ່ງຊາດ ແລະ ສະຖາບັນອື່ນໆທີ່ເປັນສະມາຊິກເຄືອຂ່າຍດັ່ງກ່າວ.

- ເພີ່ມຂີດຄວາມສາມາດໃນດ້ານການຄົ້ນຄວ້າໃຫ້ແກ່ບັນດານັກຄົ້ນຄວ້າ, ສະຖາບັນ ແລະ ສູນຄົ້ນຄວ້າທີ່ເປັນສະມາຊິກຂອງເຄືອຂ່າຍຄົ້ນຄວ້າເພື່ອຮັບໃຊ້ການຈັດຕັ້ງປະຕິບັດຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ.

- ຄົ້ນຄວ້າ, ສ້າງຕັ້ງ ແລະ ຈັດຕັ້ງປະຕິບັດກົນໄກການເງິນ ເພື່ອສະໜອງງົບປະມານໃຫ້ວຽກງານຄົ້ນຄວ້າຮັບໃຊ້ການຈັດຕັ້ງປະຕິບັດຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ໃຫ້ພຽງພໍ. (ອາດສ້າງເປັນປະຕູໜຶ່ງໃນກອງທຶນສົ່ງເສີມການເຕີບໂຕສີຂຽວ ຫລື ກອງທຶນສົ່ງເສີມການຄົ້ນຄວ້າ).

- ຄົ້ນຄວ້າ-ຖອດຖອນບົດຮຽນກ່ຽວກັບນະໂຍບາຍ, ວິທະຍາສາດ, ເຕັກນິກ, ເຕັກໂນໂລຊີ ແລະ ນະວັດຕະກໍາສີຂຽວທີ່ດີຂອງສາກົນ ແລະ ຕ່າງປະເທດມາປັບປຸງ ແລະ ນໍາໃຊ້ໃນ ສປປ ລາວ ໃຫ້ແທດເໝາະກັບສະພາບຕົວຈິງຂອງ ສປປ ລາວ, ໂດຍສະເພາະແມ່ນນະໂຍບາຍ, ວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກໍາໃນຂົງເຂດ ແລະ ຂະແໜງການບູລິມະສິດຂອງຍຸດທະສາດການເຕີບໂຕສີຂຽວແຫ່ງຊາດ ຂອງ ສປປ ລາວ ເຊັ່ນ: ຂະແໜງກະສິກໍາ-ປ່າໄມ້, ໂຍທາທິການ ແລະ ຂົນສົ່ງ, ພະລັງງານ ແລະ ບໍ່ແຮ່, ອຸດສາຫະກໍາ ແລະ ການຄ້າ ແລະ ອື່ນໆ.

- ຈັດຕັ້ງປະຕິບັດບັນດາຫົວຂໍ້, ໂຄງການ ແລະ ແຜນງານຄົ້ນຄວ້ານະໂຍບາຍ, ວິທະຍາສາດ, ເຕັກນິກ, ເຕັກໂນ ໂລຊີ ແລະ ສ້າງນະວັດຕະກໍາ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ກໍ່ຄື ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດຍຸດທະສາດ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຕາມທິດສີຂຽວ-ຍືນຍົງ.

- ຄົ້ນຄວ້າ ແລະ ນໍາເຂົ້າເຕັກນິກ ແລະ ເຕັກໂນໂລຊີ ທີ່ມີປະສິດທິພາບ ແລະ ປະສິດທິຜົນສູງ, ເປັນມິດຕໍ່ສັງຄົມ ແລະ ສິ່ງແວດລ້ອມຈາກຕ່າງປະເທດມາປັບປຸງ ແລະ ນໍາໃຊ້ໃນ ສປປ ລາວ.

- ເຊື່ອມສານຜົນການຄົ້ນຄວ້າ ແລະ ບົດຮຽນທີ່ຖອດຖອນໄດ້ຈາກສາກົນ ແລະ ຕ່າງປະເທດເຂົ້າໃນການສ້າງ ແລະ ຈັດຕັ້ງປະຕິບັດຍຸດທະສາດການເຕີບໂຕສີຂຽວແຫ່ງຊາດ, ຂອງຂະແໜງການ ແລະ ທ້ອງຖິ່ນຢ່າງເປັນລະບົບ ແລະ ມີປະສິດທິພາບສູງ.

## 3.3. ຂະແໜງການສະໜັບສະໜູນ

ນອກຈາກ 4 ຂົງເຂດ ແລະ 7 ຂະແໜງການຈຸດສຸມຂ້າງເທິງແລ້ວຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ 5 ຂະແໜງການສະໜັບສະໜູນ ຫລື ປົ່ນອ້ອມດັ່ງຕໍ່ໄປນີ້:

### 3.3.1. ຂະແໜງການເງິນ

ນອກຈາກການສະໜອງງົບປະມານແລ້ວ ນະໂຍບາຍການເງິນຍັງເປັນເຄື່ອງມືທີ່ສໍາຄັນໃນການຊຸກຍູ້ສົ່ງເສີມການເຕີບໂຕສີຂຽວ. ສະນັ້ນ, ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ຈຶ່ງຖືເອົາຂະແໜງການເງິນເປັນຂະແໜງການສະໜັບສະໜູນໜຶ່ງທີ່ສໍາຄັນຂອງການເຕີບໂຕສີຂຽວ, ໂດຍສະເພາະແມ່ນເລັ່ງໃສ່ຊຸກຍູ້ສົ່ງເສີມ: (1) ການສ້າງ ແລະ ຈັດຕັ້ງປະຕິບັດອາກອນສິ່ງແວດລ້ອມ ເພື່ອຫລຸດຜ່ອນການສ້າງມົນລະພິດ, ສິ່ງເສດເຫລືອ ແລະ ການປ່ອຍທາດອາຍພິດເຮືອນແກ້ວ; (2) ການສ້າງ ແລະ ຈັດຕັ້ງປະຕິບັດນະໂຍບາຍການເງິນສົ່ງເສີມການປະຢັດພະລັງງານ, ຊັບພະຍາກອນທໍາມະຊາດ ແລະ ການກະຈາຍຜົນປະໂຫຍດຈາກການພັດທະນາເສດຖະກິດ-ສັງຄົມໃຫ້ກວ້າງຂວາງ, ທົ່ວເຖິງ ແລະ ເປັນທໍາ ແລະ (3) ການສ້າງ ແລະ ຈັດຕັ້ງປະຕິບັດນະໂຍບາຍການເງິນສະໜັບສະໜູນການຜະລິດ ແລະ ການບໍລິໂພກຜະລິດຕະພັນສີຂຽວ-ເປັນມິດຕໍ່ສັງຄົມ ແລະ ສິ່ງແວດລ້ອມ ເຊັ່ນ: ຫລຸດຜ່ອນ ຫລື ຍົກເວັ້ນພາສີນໍາເຂົ້າເຕັກນິກ ແລະ ເຕັກໂນໂລຊີທີ່ມີປະສິດທິພາບ, ປະສິດທິຜົນ ແລະ ຄວາມເປັນມິດຕໍ່ສິ່ງແວດລ້ອມ, ຫລຸດຜ່ອນ ຫລື ຍົກເວັ້ນອາກອນການຜະລິດ ແລະ ການຊົມໃຊ້ຜະລິດຕະພັນສີຂຽວ ແລະ ອື່ນໆ, (4) ໃຫ້ບູລິມະສິດແກ່ຜະລິດຕະພັນສີຂຽວ, ຜູ້ຜະລິດສິນຄ້າ ແລະ ສະໜອງບໍລິການສີຂຽວໃນຂະບວນການຈັດຊື້-ຈັດຈ້າງຂອງລັດ.

### 3.3.2. ຂະແໜງທະນາຄານ

ເຊັ່ນດຽວກັບນະໂຍບາຍການເງິນ, ນະໂຍບາຍເງິນຕາກໍ່ເປັນເຄື່ອງມືທີ່ມີປະສິດທິພາບ ແລະ ປະສິດທິຜົນສູງໃນການສົ່ງເສີມການເຕີບໂຕສີຂຽວ. ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ເລັ່ງໃສ່ຊຸກຍູ້ສົ່ງເສີມການສ້າງ ແລະ ຈັດຕັ້ງປະຕິບັດນະໂຍບາຍເງິນຕາ ທີ່ອຳນວຍຄວາມສະດວກໃຫ້ແກ່ການເຕີບໂຕສີຂຽວ, ເປັນຕົ້ນແມ່ນຈະເລັ່ງໃສ່: (1) ອຳນວຍຄວາມສະດວກໃຫ້ບັນດາວິສາຫະກິດຕ່າງໆ ເຂົ້າເຖິງແຫລ່ງເງິນກູ້ດອກເບ້ຍຕ່ຳ ແລະ ໄລຍະຍາວ ເພື່ອນຳເຂົ້າອຸປະກອນການຜະລິດ, ເຄື່ອງຈັກ, ເຕັກນິກ ແລະ ເຕັກໂນໂລຊີທີ່ມີປະສິດທິພາບ, ປະສິດທິຜົນ ແລະ ເປັນມິດຕໍ່ສິ່ງແວດລ້ອມສູງຈາກຕ່າງປະເທດ, (2) ອຳນວຍຄວາມສະດວກໃຫ້ແກ່ການເຂົ້າເຖິງແຫລ່ງທຶນດອກເບ້ຍຕ່ຳຂອງບັນດາວິສາຫະກິດຂະໜາດນ້ອຍ ແລະ ກາງ ເພື່ອຂະຫຍາຍກິດຈະການລົງທຶນຂົງເຂດ ແລະ ຂະແໜງການທີ່ຕິດພັນກັບການເຕີບໂຕສີຂຽວ, (3) ອຳນວຍຄວາມສະດວກໃຫ້ແກ່ການສ້າງຕັ້ງ ແລະ ເຄື່ອນໄຫວຂອງກອງທຶນການເງິນຈຸລະພາກ ເພື່ອອຳນວຍຄວາມສະດວກໃຫ້ແກ່ການເຂົ້າເຖິງແຫລ່ງທຶນຂອງທຸລະກິດຄອບຄົວ ແລະ ອື່ນໆ.

### 3.3.3. ຂະແໜງສຶກສາທິການ ແລະ ກິລາ

ເປັນຂະແໜງການທີ່ມີບົດບາດສຳຄັນ ໃນການສະໜັບສະໜູນການເຕີບໂຕສີຂຽວໃນໄລຍະຍາວ. ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ຊຸກຍູ້ສົ່ງເສີມ: (1) ປູກຈິດສຳນຶກໃຫ້ແກ່ນັກນັກຮຽນ-ນັກສຶກສາ ແລະ ການເຊື່ອມສານການເຕີບໂຕສີຂຽວເຂົ້າໃນຫລັກສູດການຮຽນ-ການສອນໃນໂຮງຮຽນປະຖົມ ແລະ ມັດທະຍົມ, (2) ປະສານສົມທົບກັບພາກວິສາຫະກິດ ພັດທະນາຫລັກສູດການຮຽນວິຊາຊີບ ສາຂາທີ່ຕິດພັນການເຕີບໂຕສີຂຽວ/ການພັດທະນາແບບຍືນຍົງ ເຊັ່ນ: ການບໍລິຫານການທ່ອງທ່ຽວທຳມະຊາດ, ການຜະລິດກະສິກຳສະອາດ, ກະສິກຳອິນຊີ ແລະ ອື່ນໆ ເພື່ອສະໜອງແຮງງານທີ່ມີຄຸນນະພາບໃຫ້ແກ່ການເຕີບໂຕສີຂຽວ ໃນບັນດາໂຮງຮຽນອາຊີວະສຶກສາ, (3) ສ້າງຫລັກສູດ ແລະ ເປີດສາຂາວິຊາຮຽນທີ່ກ່ຽວຂ້ອງກັບການເຕີບໂຕສີຂຽວ/ການພັດທະນາແບບຍືນຍົງ ເຊັ່ນ: ເສດຖະກິດສິ່ງແວດລ້ອມ, ການຄຸ້ມຄອງຊັບ ພະຍາກອນທຳມະຊາດ, ການຄຸ້ມ ຄອງ ແລະ ບໍລິຫານຊັບພະຍາກອນນ້ຳ ແລະ ອື່ນໆໃນໂຮງຮຽນມະຫາວິທະຍາໄລຕ່າງໆ ແລະ (4) ເພີ່ມການຄົ້ນຄວ້າ-ວິໄຈວິທະຍາສາດ ແລະ ນະໂຍບາຍທີ່ກ່ຽວຂອງກັບການເຕີບໂຕສີຂຽວ.

### 3.3.4. ຂະແໜງແຮງງານ ແລະ ສະຫວັດດີການສັງຄົມ

ເປັນຂະແໜງການໜຶ່ງທີ່ມີບົດບາດສຳຄັນ ໃນການສະໜັບສະໜູນການເຕີບໂຕສີຂຽວ. ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ຈະສຸມໃສ່: (1) ປະສານສົມທົບກັບວິສາຫະກິດສ້າງຫລັກສູດການຝຶກອົບຮົມວິຊາຊີບໄລຍະສັ້ນ ໃນຂະແໜງການທີ່ຕິດພັນກັບການເຕີບໂຕສີຂຽວ ເຊັ່ນ: ການປຸງແຕ່ງອາຫານ, ການບໍລິການໂຮງແຮມ, ການຕ່ຳຫູກ-ທໍໄໝ, ການຜະລິດເຄື່ອງຫັດຖະກຳ ແລະ ອື່ນໆໃນສູນຝຶກອົບຮົມວິຊາຊີບຕ່າງໆ ເພື່ອສະໜອງແຮງງານທີ່ມີສີມືໃຫ້ກັບພາກວິສາຫະກິດໃຫ້ພຽງພໍທາງດ້ານປະລິມານ ແລະ ຄຸນນະພາບ, ໂດຍສະເພາະແມ່ນຈະເລັ່ງໃສ່ປະຊາຊົນຜູ້ທຸກຍາກໃນຊົນນະບົດ, ແມ່ຍິງ, ຊົນຊາດ-ຊົນເຜົ່າ ແລະ ຜູ້ດ້ອຍໂອກາດ (2) ສ້າງສູນຂໍ້ມູນຂ່າວສານດ້ານແຮງງານ ເພື່ອສະໜອງຂໍ້ມູນໃຫ້ກັບວິສາຫະກິດທີ່ຕ້ອງການແຮງງານ ແລະ ຜູ້ອອກແຮງງານທີ່ຊອກຫາວຽກເຮັດງານທຳ, (3) ຂະຫຍາຍອັດຕາການປົກຫຸ້ມ ແລະ ການຄຸ້ມຄອງຂອງລະບົບປະກັນສັງຄົມໃຫ້ກວ້າງຂວາງ, ທົ່ວເຖິງ ແລະ ມີປະສິດທິພາບສູງ, (4) ເພີ່ມປະສິດທິພາບ ແລະ ປະສິດທິຜົນຂອງການໃຫ້ການຊ່ວຍເຫລືອສຸກເສີນແກ່ຜູ້ປະສົບເຄາະຮ້າຍຈາກໄພພິບັດທາງທຳມະຊາດ ແລະ ອື່ນໆ.

### 3.3.5. ຂະແໜງສາທາລະນະສຸກ

ເປັນຂະແໜງການບູລິມະສິດຂອງລັດຖະບານ ເພື່ອບັນລຸເປົ້າໝາຍການພັດທະນາແບບຍືນຍົງ. ເຖິງປະຈຸບັນ, ຍ້ອນການເອົາໃຈໃສ່ຂອງລັດຖະບານ ແລະ ການຊ່ວຍເຫລືອຂອງອົງການຈັດຕັ້ງສາກົນ ແລະ ຕ່າງປະເທດ ການພັດທະນາຂະແໜງການສາທາລະນະສຸກໃນ ສປປ ລາວ ໄດ້ປະສົບຜົນສໍາເລັດໃຫຍ່ຫລວງພໍສົມຄວນ: ໂດຍສະເພາະແມ່ນການເຂົ້າເຖິງ ແລະ ຄຸນນະພາບຂອງການບໍລິການສາທາລະນະສຸກນັບມື້ນັບໄດ້ຮັບການປັບປຸງໃຫ້ດີຂຶ້ນ. ແຕ່ເຖິງຢ່າງໃດກໍ່ຕາມ, ລະດັບການພັດທະນາຂະແໜງການນີ້ຍັງຂ້ອນຂ້າງຕໍ່າເມື່ອທຽບກັບຫລາຍປະເທດອ້ອມຂ້າງ. ເປັນຕົ້ນແມ່ນ ອັດຕາການຕາຍຂອງແມ່ ແລະ ເດັກກໍ່ຄືອັດຕາການຂາດໂພສະນາການຂອງປະຊາຊົນຍັງສູງ ແລະ ອັດຕາການເຂົ້າເຖິງນໍ້າສະອາດ ແລະ ສຸຂະອະນາໄມຍັງຕໍ່າ. ສະນັ້ນ, ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ຈຶ່ງກໍານົດຂະແໜງສາທາລະນະສຸກ ເປັນຂະແໜງສະໜັບສະໜູນໜຶ່ງທີ່ສໍາຄັນ, ໂດຍສະເພາະແມ່ນຈະສຸມໃສ່: (1) ວຽກງານໂພສະນາການ ເພື່ອຫລຸດຜ່ອນອັດຕາການຂາດສານອາຫານຂອງປະຊາຊົນ, (2) ການເຂົ້າເຖິງນໍ້າສະອາດ ແລະ ສຸຂະອະນາໄມ ເພື່ອຫລຸດຜ່ອນການເຈັບເປັນຂອງປະຊາຊົນ, (3) ຫລຸດຜ່ອນອັດຕາການຕາຍຂອງແມ່ ແລະ ເດັກ, (4) ປັບປຸງການເຂົ້າເຖິງການບໍລິການສາທາລະນະສຸກທີ່ມີຄຸນນະພາບ.

ຕາຕະລາງສະຫລຸບຫຍໍ້ຂົງເຂດ ແລະ ຂະແໜງການຈຸດສຸມ ແລະ ຂະແໜງການປິ່ນອ້ອມຂອງຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ໄດ້ຄັດຕິດໃນເອກະສານຊ້ອນທ້າຍທີ 1.

# ພາກທີ IV

# ກົນໄກຈັດຕັ້ງປະຕິບັດຍຸດທະສາດການເຕີບໂຕສີຂຽວແຫ່ງຊາດ ຂອງສປປລາວ

ເພື່ອຈັດຕັ້ງປະຕິບັດຍຸດທະສາດສະບັບນີ້ໃຫ້ປະກົດຜົນສໍາເລັດຢ່າງມີປະສິດທິພາບ ແລະ ປະສິດທິຜົນສູງ ກໍ່ຄື ຊຸກຍູ້ການພັດທະນາເສດຖະກິດ-ສັງຄົມຂອງ ສປປ ລາວ ໃຫ້ໄປຕາມທິດສີຂຽວ-ຍືນຍົງ, ຍຸດທະສາດການເຕີບໂຕສີ ຂຽວຂອງ ສປປ ລາວ ສະເໜີມາດຕາການຈັດຕັ້ງປະຕິບັດຕ່າງໆດັ່ງຕໍ່ໄປນີ້:

## 4.1. ກົນໄກການດ້ານການຈັດຕັ້ງ

- **ຄະນະຊີ້ນໍາລະດັບຊາດວຽກງານການເຕີບໂຕສີຂຽວ:** ຕາມຄວາມຈິງແລ້ວ, ເພື່ອຜັນຂະຫຍາຍມະຕິຂອງກອງປະຊຸມໃຫຍ່ຄັ້ງທີ X ຂອງພັກ, ວິໄສທັດ 2030, ຍຸດທະສາດໄລຍະ 10 ປີ (2016-2025) ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020) ລັດຖະບານແຫ່ງ ສປປ ລາວ ໄດ້ອອກຂໍ້ຕົກລົງສະບັບເລກທີ 95/ນຍ, ລົງວັນທີ 8 ທັນວາ 2016 ວ່າດ້ວຍການແຕ່ງຕັ້ງຄະນະຊີ້ນໍາລະດັບຊາດວຽກງານການເຕີບໂຕສີຂຽວ; ໂດຍມີ ທ່ານຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ ເປັນປະທານ, ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ເປັນຮອງປະທານ, ຫົວໜ້າສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ ແລະ ລັດຖະມົນຕີຂອງບັນດາກະຊວງທີ່ກ່ຽວຂ້ອງຈໍານວນໜຶ່ງ ເປັນຄະນະ. ຄະນະຊີ້ນໍາດັ່ງກ່າວມີສິດ ແລະ ໜ້າທີ່ໃນການຊີ້ນໍາລວມວຽກງານການເຕີບໂຕສີຂຽວໃຫ້ສໍາເລັດຢ່າງມີປະສິດທິພາບ, ປະສິດທິຜົນ ແລະ ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຕົວຈິງຂອງການພັດທະນາເສດຖະກິດ-ສັງຄົມແຫ່ງຊາດໃນແຕ່ລະໄລຍະ, ພິຈາລະນາຮັບຮອງເອົາບັນດານະໂຍບາຍທີ່ຕິດພັນກັບວຽກງານການເຕີບໂຕສີຂຽວ, ເປັນຕົ້ນແມ່ນ ວຽກງານການກໍານົດກອບແນວຄວາມຄິດດ້ານນະໂຍບາຍການພັດທະນາການເຕີບໂຕສີຂຽວ ຂອງ ສປປ ລາວ, ວຽກງານສ້າງຍຸດທະສາດການເຕີບໂຕສີຂຽວ ແລະ ວຽກອື່ນໆທີ່ປິ່ນອ້ອມ.

ພ້ອມດຽວກັນນັ້ນ, ຂໍ້ຕົກລົງສະບັບດັ່ງກ່າວ ໄດ້ແຕ່ງຕັ້ງກອງເລຂາຊ່ວຍວຽກຄະນະຊີ້ນໍາລະດັບຊາດວຽກງານການເຕີບໂຕສີຂຽວ ເຊິ່ງມີທ່ານຮອງລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ເປັນຫົວໜ້າ, ທ່ານຮອງຫົວໜ້າສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ ເປັນຮອງຫົວໜ້າກອງເລຂາ ແລະ ບັນດາຮອງລັດຖະມົນຕີຂອງກະຊວງ ແລະ ຂະແໜງການກ່ຽວຂ້ອງຈໍານວນໜຶ່ງ ເປັນຄະນະ ແລະ ໄດ້ແຕ່ງຕັ້ງຄະນະຊ່ວຍວຽກກອງເລຂາວຽກງານການເຕີບໂຕສີຂຽວ; ໂດຍທ່ານຫົວໜ້າກົມແຜນການ, ກະຊວງແຜນການ ແລະ ການລົງທຶນ ເປັນຫົວໜ້າ, ຮອງຫົວໜ້າກົມການເງິນຕ່າງປະເທດ, ກະຊວງການເງິນ ແລະ ຮອງຫົວໜ້າສູນຝຶກອົບຮົມ ແລະ ຂໍ້ມູນຂ່າວສານ (ປະຈຸບັນແມ່ນວ່າການຫົວໜ້າສູນຄົ້ນຄວ້າວິທະຍາສາດ ແລະ ນະໂຍບາຍເສດຖະກິດ-ສັງຄົມ), ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ ເປັນຮອງ ແລະ ຮອງຫົວໜ້າກົມແຜນການຂອງບັນດາກະຊວງ ແລະ ຂະແໜງການກ່ຽວຂ້ອງຈໍານວນໜຶ່ງເປັນຄະນະ. ຄະນະຊ່ວຍວຽກກອງເລຂາດັ່ງກ່າວມີສິດ ແລະ ໜ້າທີ່: (1) ຄົ້ນຄວ້າ, ເກັບກໍາຂໍ້ມູນ, ປະສານກັບຂະແໜງການ ແລະ ທ້ອງຖິ່ນ, ອົງການຈັດຕັ້ງຕ່າງໆທັງພາຍໃນ ແລະ ຕ່າງປະເທດ ໃນການກະກຽມ ແລະ ຈັດຕັ້ງປະຕິບັດວຽກງານການເຕີບໂຕສີຂຽວໃຫ້ສໍາເລັດຕາມການຊີ້ນໍາຂອງຄະນະຊີ້ນໍາ ແລະ ກອງເລຂາໃຫ້ມີປະສິດທິພາບ, ປະສິດທິຜົນ ແລະ ທັນຕາມກໍານົດເວລາ, (2) ກໍານົດ ແລະ ຄົ້ນຄວ້າບັນດາຫົວຂໍ້ວິທະຍາສາດຕ່າງໆທີ່ຈໍາເປັນ ເພື່ອສາມາດນໍາມາເປັນຂໍ້ມູນໃຫ້ແກ່ການວາງນະໂຍບາຍ ແລະ ການຈັດຕັ້ງປະຕິບັດວຽກງານການເຕີບໂຕສີຂຽວ, (3) ຄົ້ນຄວ້າ ແລະ ປະຕິບັດແຜນວຽກທີ່ໄດ້ກໍານົດໃນຂອບເຂດແນວຄວາມຄິດດ້ານນະໂຍບາຍການພັດທະນາການເຕີບໂຕສີຂຽວຂອງ ສປປ ລາວ ໃຫ້ທັນຕາມກໍານົດເວລາ, (4) ຊີ້ນໍາຈັດກອງປະຊຸມ, ສໍາມະນາວິຊາການ ແລະ ເຜີຍແຜ່ກ່ຽວກັບການເຊື່ອມສານວຽກງານການເຕີບໂຕສີຂຽວໃນແຕ່ລະໄລຍະ ແລະ ຕາມໜ້າວຽກຂອງຕົນຮັບຜິດຊອບຂອງແຕ່

ລະຂະແໜງການ, (5) ສ້າງແຜນປະຕິບັດງານ ແລະ ແຜນງົບປະມານຂອງໜ່ວຍງານຕົນຢ່າງລະອຽດ ແລະ ແທດເໝາະກັບຕົວຈິງ ແລະ (6) ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງກອງເລຂາ. ແຕ່ສິ່ງສຳຄັນທີ່ສຸດແມ່ນຄະນະຊີ້ນຳລະດັບຊາດວຽກງານການເຕີບໂຕສີຂຽວດັ່ງກ່າວ ຍັງບໍ່ທັນມີຫ້ອງການປະຈຳການ. ດັ່ງນັ້ນ, ຈຶ່ງຍັງເຮັດໃຫ້ການປະສານງານ ແລະ ຊຸກຍູ້ວຽກງານການເຕີບໂຕສີຂຽວຍັງບໍ່ທັນເປັນລະບົບ. ລາຍລະອຽດໃນເອກະສານຊ້ອນທ້າຍທີ 2.

- **ຄະນະຮັບຜິດຊອບສ້າງຍຸດທະສາດ ແລະ ສູນສົ່ງເສີມການເຕີບໂຕສີຂຽວຂອງ ສປປ ລາວ:** ຄະນະຊີ້ນຳລະດັບຊາດວຽກງານການເຕີບໂຕສີຂຽວດັ່ງກ່າວ ໄດ້ອອກຂໍ້ຕົກລົງ ສະບັບເລກທີ 01/ຄຊຕຂ, ລົງວັນທີ 19 ເມສາ 2017 ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບສ້າງຍຸດທະສາດ ແລະ ສູນສົ່ງເສີມການເຕີບໂຕສີຂຽວຂອງ ສປປ ລາວ; ໂດຍມີທ່ານຫົວໜ້າສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ ເປັນຫົວໜ້າ, ຮອງລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ແລະ ຮອງຫົວໜ້າສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ ເປັນຮອງ ແລະ ຮອງລັດຖະມົນຕີຂອງກະຊວງ ແລະ ຂະແໜງການກ່ຽວຂ້ອງຈຳນວນໜຶ່ງ ເປັນຄະນະ. ຄະນະຮັບຜິດຊອບສ້າງຍຸດທະສາດ ແລະ ສູນສົ່ງເສີມການເຕີບໂຕສີຂຽວຂອງ ສປປ ລາວ ດັ່ງກ່າວມີໜ້າທີ່: (1) ຊີ້ນຳ ແລະ ນຳພາການສ້າງຍຸດທະສາດ ແລະ ສູນສົ່ງເສີມການເຕີບໂຕສີຂຽວໃຫ້ສຳເລັດຢ່າງມີປະສິດທິພາບ, ປະສິດທິຜົນ ແລະ ທັນເວລາ, (2) ສະເໜີຄະນະຊີ້ນຳລະດັບຊາດວຽກງານການເຕີບໂຕສີຂຽວ ພິຈາລະນາຮັບຮອງເອົາຮ່າງຍຸດທະສາດການເຕີບໂຕສີຂຽວຂອງ ສປປ ລາວ, (3) ສະເໜີຮ່າງຍຸດທະສາດການເຕີບໂຕສີຂຽວ ເຂົ້າກອງປະຊຸມລັດຖະບານ ຕາມການຕົກລົງເຫັນດີຂອງຄະນະຊີ້ນຳລະດັບຊາດວຽກງານການເຕີບໂຕສີຂຽວ; (4) ສະເໜີນາຍົກລັດຖະມົນຕີ ພິຈາລະນາຮັບຮອງເອົາຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ຕາມການຕົກລົງເຫັນດີຂອງກອງປະຊຸມລັດຖະບານ ແລະ (5) ຈັດຕັ້ງປະຕິບັດວຽກງານອື່ນໆທີ່ກ່ຽວຂ້ອງກັບການສ້າງຍຸດທະສາດ ແລະ ສູນສົ່ງເສີມການເຕີບໂຕສີຂຽວ. ພ້ອມດຽວກັນນັ້ນ, ຂໍ້ຕົກລົງສະບັບດັ່ງກ່າວ ໄດ້ແຕ່ງຕັ້ງກອງເລຂາຄະນະຮັບຜິດຊອບຮ່າງຍຸດທະສາດ ແລະ ສູນສົ່ງເສີມການເຕີບໂຕສີຂຽວ ຂອງ ສປປ ລາວ; ໂດຍມີທ່ານຫົວໜ້າກົມແຜນການ, ກະຊວງແຜນການ ແລະ ການລົງທຶນ ເປັນຫົວໜ້າ, ຫົວໜ້າສູນຄົ້ນຄວ້າວິທະຍາສາດ ແລະ ນະໂຍບາຍເສດຖະກິດ-ສັງຄົມ, ທ່ານຮອງຫົວໜ້າກົມແຜນການ, ກະຊວງແຜນການ ແລະ ການລົງທຶນ ແລະ ທ່ານຮອງຫົວໜ້າກົມແຜນການ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຮອງ ແລະ ບັນດາທ່ານຮອງຫົວໜ້າກົມແຜນການຂອງບັນດາກະຊວງ ແລະ ຂະແໜງການຈຳນວນໜຶ່ງເປັນຄະນະ. ກອງເລຂາຄະນະຮັບຜິດຊອບສ້າງຍຸດທະສາດ ແລະ ສູນສົ່ງເສີມການເຕີບໂຕສີຂຽວຂອງ ສປປ ລາວ ມີສິດ ແລະ ໜ້າທີ່ຕົ້ນຕໍໃນການຮ່າງຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ໃຫ້ສຳເລັດຢ່າງມີປະສິດທິພາບ, ປະສິດທິຜົນ, ທັນກັບເວລາ ແລະ ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຕົວຈິງຂອງການພັດທະນາເສດຖະກິດ-ສັງຄົມຂອງປະເທດ ຕາມຄຳເຫັນຂອງບັນດາຂະແໜງການ ແລະ ທ້ອງຖິ່ນກ່ຽວຂ້ອງ ແລະ ຕາມການຊີ້ນຳຂອງຄະນະຊີ້ນຳການສ້າງຍຸດທະສາດ ແລະ ສູນສົ່ງເສີມການເຕີບໂຕສີຂຽວແຫ່ງຊາດ ຂອງ ສປປ ລາວ.

ຄະນະຮັບຜິດຊອບສ້າງຍຸດທະສາດ ແລະ ສູນສົ່ງເສີມການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ເປັນຄະນະສະເພາະກິດ ແລະ ຈະສິ້ນສຸດລົງເມື່ອຍຸດທະສາດໄດ້ຮັບການຮັບຮອງ ແລະ ປະກາດໃຊ້ຢ່າງເປັນທາງການຈາກນາຍົກລັດຖະມົນຕີແຫ່ງ ສປປ ລາວ ລາຍລະອຽດໃນເອກະສານຊ້ອນທ້າຍທີ 3.

- **ສູນສົ່ງເສີມການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ:** ພາຍຫລັງໄດ້ຮັບການຮັບຮອງ, ເພື່ອຈັດຕັ້ງປະຕິບັດຍຸດທະສາດສະບັບນີ້ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ ພ້ອມທັງຮັບປະກັນລັກສະນະຕໍ່ເນື່ອງ, ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ສະເໜີສ້າງຕັ້ງສູນສົ່ງເສີມການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ຕາມແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ (ຫ້ອງວ່າການລັດຖະບານໃນເມື່ອກ່ອນ) ສະບັບເລກທີ 1751/ຫລ.ກລຂ, ລົງວັນທີ 8 ທັນວາ 2014 ເພື່ອເປັນອົງການຂອງຄະນະຊີ້ນຳລະດັບຊາດວຽກງານການເຕີບໂຕສີຂຽວ. ລາຍລະອຽດໃນເອກະສານຊ້ອນທ້າຍທີ 4.

ເພື່ອບໍ່ໃຫ້ມີຜົນກະທົບໃສ່ຈໍານວນລັດຖະກອນ ແລະ ຖັງເງິນເດືອນຂອງລັດຖະບານ ຍຸດທະສາດສະບັບນີ້ ສະເໜີສ້າງຕັ້ງສູນສົ່ງເສີມການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ດ້ວຍການຊັບຊ້ອນເອົາພະນັກງານ-ລັດຖະກອນຈໍານວນໜຶ່ງຈາກສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ ແລະ ຈາກກະຊວງຂະແໜງການອື່ນໆ, ຜູ້ທີ່ສົນໃຈ ແລະ ສະໝັກໃຈມາປະກອບສ່ວນເຂົ້າວຽກງານດັ່ງກ່າວ. ພະນັກງານທີ່ມີປະສົບການ ແລະ ໄດ້ປະກອບສ່ວນເຂົ້າໃນຂະບວນການສ້າງຍຸດທະສາດ ແລະ ສູນສົ່ງເສີມການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ຈະໄດ້ຮັບບູລິມະສິດ.

ເນື່ອງຈາກຄວາມສອດຄ່ອງ ແລະ ໃກ້ຄຽງກັນດ້ານພາລະບົດບາດ ສູນສົ່ງເສີມການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ຄວນຈະເປັນສູນໜຶ່ງ ທີ່ມີຖານະບົດບາດເທົ່າສູນອື່ນໆ ໃນໂຄງປະກອບການຈັດຕັ້ງຂອງສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ (ສຄສຊ) ຫລື ກະຊວງແນການ ແລະ ການລົງທຶນ (ກຜທ) ແລະ ຂຶ້ນກັບການຊີ້ນໍາໂດຍກົງຂອງຫົວໜ້າສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ ຫລື ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ (ຂຶ້ນກັບການພິຈາລະນາຕົກລົງຂອງຄະນະຊີ້ນໍາລະດັບຊາດວຽກງານການເຕີບໂຕສີຂຽວ) ໃນຖານະຄະນະຊີ້ນໍາລະດັບຊາດວຽກງານການເຕີບໂຕສີຂຽວ. ສູນສົ່ງເສີມການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ມີພາລະບົດບາດຕົ້ນຕໍໃນການປະສານງານ, ຊຸກຍູ້ ແລະ ສົ່ງເສີມການເຕີບໂຕສີຂຽວໃນແຕ່ລະຂະແໜງການ ແລະ ທ້ອງຖິ່ນຢ່າງເປັນລະບົບ ແລະ ມີປະສິດທິພາບສູງ ດ້ວຍວິທີການຕ່າງໆ ເຊັ່ນ: (1) ໂຄສະນາເຜີຍແຜ່ ແລະ ປູກຈິດສໍານຶກກ່ຽວກັບການເຕີບໂຕສີຂຽວໃຫ້ແກ່ປະຊາຊົນ, ສາທາລະນະຊົນ ກໍ່ຄືຂະແໜງການ ແລະ ທ້ອງຖິ່ນຮັບຮູ້, ເຂົ້າໃຈຢ່າງເລິກເຊິ່ງ ແລະ ນໍາໄປຜັນຂະຫຍາຍເຂົ້າໃນໜ້າທີ່ວຽກງານ ແລະ ຊີວິດປະຈໍາວັນຂອງຕົນໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ, (2) ຄົ້ນຄວ້າ-ວິໄຈທາງດ້ານນະໂຍບາຍ ກໍ່ຄືເຕັກນິກ, ເຕັກໂນໂລຊີ ແລະ ນະວັດຕະກໍາສີຂຽວເພື່ອສະໜັບສະໜູນການສ້າງ ແລະ ຈັດຕັ້ງປະຕິບັດນະໂຍບາຍ, ຍຸດທະສາດ, ແຜນການ ແລະ ແຜນງານຂອງຂະແໜງການ ແລະ ທ້ອງຖິ່ນ, (3) ສະໜອງຂໍ້ມູນ, ຖ່າຍທອດຄວາມຮູ້ ແລະ ປະສົບການທີ່ດີເລີດຈາກຕ່າງປະເທດໃຫ້ກັບຂະແໜງການ ແລະ ທ້ອງຖິ່ນ ເພື່ອສາມາດນໍາໄປນໍາໃຊ້ເຂົ້າໃນວຽກງານຕົວຈິງໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ, (4) ເຊື່ອມສານວາລະການເຕີບໂຕສີຂຽວເຂົ້າໃນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນຂະແໜງການ ແລະ ທ້ອງຖິ່ນ, (5) ສະໜັບສະໜູນ ຫລື ສົ່ງເສີມຂະແໜງການ ແລະ ທ້ອງຖິ່ນໃນການຈັດຕັ້ງປະຕິບັດແຜນການ, ແຜນງານ, ໂຄງການ ແລະ ກິດຈະກໍາທີ່ກ່ຽວຂ້ອງກັບການເຕີບໂຕສີຂຽວ, (6) ຊ່ວຍຂະແໜງການ ແລະ ທ້ອງຖິ່ນໃນການຊອກຫາ ແລະ ລະດົມແຫລ່ງທຶນເຂົ້າໃນການຈັດຕັ້ງປະຕິບັດບັນດາແຜນການ, ແຜນງານ, ໂຄງການ ແລະ ກິດຈະກໍາທີ່ກ່ຽວຂ້ອງກັບການເຕີບໂຕສີຂຽວ, (7) ຄົ້ນຄວ້າສ້າງແບບຈໍາລອງພື້ນທີ່ເຂດສີຂຽວ (ຕົວເມືອງ, ຊຸມຊົນ, ເຂດອຸດສາຫະກໍາ, ເຂດທີ່ຢູ່ອາໄສ ແລະ ອື່ນໆ), ການຜະລິດສີຂຽວ, ເຕັກໂນໂລຊີສີຂຽວ ແລະ ອື່ນໆເພື່ອເປັນບ່ອນຖ່າຍທອດປະສົບການ ແລະ ຄວາມຮູ້ກ່ຽວກັບການເຕີບໂຕສີຂຽວໃຫ້ຂະແໜງການ ແລະ ທ້ອງຖິ່ນກ່ຽວຂ້ອງນໍາໄປປະຕິບັດໃຫ້ປະກົດຜົນເປັນຈິງ, (8) ສ້າງລະບົບຕິດຕາມ ແລະ ລາຍງານຜົນຂອງການພັດທະນາເສດຖະກິດ-ສັງຄົມຕາມທິດສີຂຽວ-ຍືນຍົງໃຫ້ແກ່ສາທາລະນະ ແລະ ລັດຖະບານຢ່າງເປັນປົກກະຕິ, (9) ສ້າງຄວາມສາມາດ ແລະ ໃຫ້ຄໍາແນະນໍາແກ່ຂະແໜງການ ແລະ ທ້ອງຖິ່ນກ່ຽວກັບການເຊື່ອມສານວາລະການເຕີບໂຕສີຂຽວເຂົ້າໃນຍຸດທະສາດ, ແຜນການ ແລະ ແຜນງານຂອງຕົນ. ລາຍລະອຽດເພີ່ມເຕີມກ່ຽວກັບສິດ, ພາລະບົດບາດ ແລະ ໜ້າທີ່ຂອງສູນສົ່ງເສີມການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ຈະລະບຸໄວ້ໃນນິຕິກໍາຕ່າງຫາກ.

ເພື່ອຈັດຕັ້ງປະຕິບັດພາລະບົດບາດດັ່ງກ່າວ ໃຫ້ໄດ້ຢ່າງມີປະສິດທິພາບ ແລະ ປະສິດທິຜົນສູງ ສູນສົ່ງເສີມການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ຄວນມີຈຸດປະສານງານ ຫລື ຜູ້ປະສານງານຢູ່ໃນກົມແຜນການຂອງແຕ່ລະກະຊວງ, ຂະແໜງການ ແລະ ພະແນກແຜນການ ແລະ ການລົງທຶນຂອງແຂວງກ່ຽວຂ້ອງ, ເປັນຕົ້ນແມ່ນກະຊວງ, ຂະແໜງການ ແລະ ແຂວງທີ່ເປັນບູລິມະສິດໃນຍຸດທະສາດສະບັບນີ້ ເຊັ່ນ: ກົມແຜນການ ຂອງກະຊວງແຜນການ ແລະ ການລົງທຶນ, ກະຊວງກະສິກໍາ-ປ່າໄມ້, ກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງອຸດສາຫະກໍາ ແລະ ການຄ້າ, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ, ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ,

ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ສູນກາງສະຫະພັນແມ່ຍິງລາວ ແລະ ອື່ນໆ ດັ່ງລາຍລະອຽດ ໃນແຜນວາດລຸ່ມນີ້.

ເຖິງຢ່າງໃດກໍ່ຕາມ, ກໍ່ບໍ່ໄດ້ໝາຍຄວາມວ່າ ທຸກກົມແຜນການຂອງກະຊວງ, ຂະແໜງການ ແລະ ພະແນກແຜນການຂອງແຂວງກ່ຽວຂ້ອງຈະຕ້ອງໄດ້ສ້າງຕັ້ງພະແນກໜຶ່ງ, ຂະແໜງໜຶ່ງ ຫລື ໜ່ວຍງານໜຶ່ງຂຶ້ນ ເພື່ອເປັນຈຸດປະສານງານການເຕີບໂຕສີຂຽວສະເພາະ. ເພື່ອບໍ່ໃຫ້ກົງຈັກການຈັດຕັ້ງຂອງລັດໃຫຍ່ໂຕຂຶ້ນຕື່ມ ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ສະເໜີໃຫ້ພິຈາລະນາມອບໝາຍວຽກດັ່ງກ່າວໃຫ້ພະແນກໃດພະແນກໜຶ່ງຂອງກົມແຜນການ ຂອງກະຊວງ ແລະ ຂະແໜງການກ່ຽວຂ້ອງຂັ້ນສູນກາງ ຫລື ຂະແໜງໃດຂະແໜງໜຶ່ງຂອງພະແນກແຜນການ ແລະ ການລົງທຶນ ຂອງແຂວງທີ່ກ່ຽວຂ້ອງທີ່ມີພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບຕາມຄວາມເໝາະສົມ.

**ແຜນວາດທີ 3:** ແຜນວາດທີ່ຕັ້ງ ແລະ ກົນໄກປະສານງານຂອງສູນສົ່ງເສີມການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ




ຈຸດປະສານງານ ຫລື ຜູ້ປະສານງານການເຕີບໂຕສີຂຽວທີ່ປະຈຳຢູ່ຂະແໜງການ ແລະ ທ້ອງຖິ່ນກ່ຽວຂ້ອງຈະໄດ້ຮັບການຝຶກອົບຮົມ, ຖ່າຍທອດຄວາມຮູ້, ຂໍ້ມູນຂ່າວສານ ແລະ ຍົກລະດັບຄວາມສາມາດກ່ຽວກັບວຽກງານການເຕີບໂຕສີຂຽວ ແລະ ມີພາລະບົດບາດຕົ້ນຕໍໃນການເປັນຜູ້ປະສານງານເຊື່ອມຕໍ່ລະຫວ່າງຂະແໜງການ ຫລື ທ້ອງຖິ່ນຂອງຕົນກັບສູນສົ່ງເສີມການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ. ຈຸດປະສານງານ ຫລື ຜູ້ປະສານງານການເຕີບໂຕສີຂຽວທີ່ປະຈຳຢູ່ຂະແໜງການ ແລະ ທ້ອງຖິ່ນມີໜ້າທີ່ຕົ້ນຕໍໃນການ: (1) ເຊື່ອມສານວາລະການເຕີບໂຕສີຂຽວເຂົ້າໃນຍຸດທະສາດ, ແຜນການ, ແຜນງານ, ໂຄງການ ແລະ ກິດຈະກຳຂອງຂະແໜງການ ແລະ ທ້ອງຖິ່ນຂອງ

ຕົນໂດຍການປະສານສົມທົບກັບສູນສົ່ງເສີມການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ, (2) ເປັນຕົວແທນໃຫ້ແກ່ສູນສົ່ງເສີມການເຕີບໂຕສີຂຽວໃນການສະໜອງຂໍ້ມູນ, ໃຫ້ການປຶກສາ ແລະ ຂໍ້ສະເໜີແນະຕ່າງໆ ກ່ຽວກັບການເຕີບໂຕສີຂຽວແກ່ຂະແໜງການ ແລະ ທ້ອງຖິ່ນຂອງຕົນ, (3) ຕິດຕາມ ແລະ ລາຍງານຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແຜນການ, ແຜນງານ, ໂຄງການ ແລະ ກິດຈະກໍາຕ່າງໆໃນຂະແໜງການຂອງຕົນໃຫ້ແກ່ສູນສົ່ງເສີມການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ຊາບເປັນແຕ່ລະໄລຍະ, (4) ປະຕິບັດວຽກງານອື່ນໆ ຕາມການມອບໝາຍຂອງສູນສົ່ງເສີມການເຕີມໂຕສີຂຽວແຫ່ງຊາດ ກໍ່ຄື ຂອງຄະນະຊີ້ນໍາລະດັບຊາດວຽກງານການເຕີບໂຕສີຂຽວ. ລາຍລະອຽດກ່ຽວກັບພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງຈຸດປະສານງານ ຫລື ຜູ້ປະສານງານວຽກງານການເຕີບໂຕສີຂຽວ ຈະລະບຸໄວ້ໃນນິຕິກໍາຕ່າງຫາກ.

## 4.2. ກົນໄກການເງິນ

ເນື່ອງຈາກວ່າຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ບໍ່ແມ່ນຍຸດທະສາດທີ່ສ້າງຂຶ້ນມາເພື່ອປ່ຽນແທນຍຸດທະສາດ ແລະ ແຜນການຂອງຂະແໜງການ ແລະ ທ້ອງຖິ່ນທີ່ມີຢູ່ແລ້ວ; ແຕ່ເປັນຍຸດທະສາດໜຶ່ງ ຫລື ກົນໄກໜຶ່ງທີ່ສ້າງຂຶ້ນມາເພື່ອຊຸກຍູ້ ຫລື ສົ່ງເສີມການຈັດຕັ້ງປະຕິບັດບັນດາແຜນງານ, ໂຄງການ, ກິດຈະກໍາ ຫລື ອົງປະກອບທີ່ເປັນສີຂຽວໃນຍຸດທະສາດ ແລະ ແຜນການດັ່ງກ່າວ ເພື່ອຮັບປະກັນການບັນລຸເປົ້າໝາຍການພັດທະນາເສດຖະກິດ-ສັງຄົມໄລຍະຍາວທີ່ໄດ້ກໍານົດໄວ້ໃນວິໄສທັດ 2030, ຍຸດທະສາດໄລຍະ 10 ປີ (2016-2025) ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020) ເຊັ່ນ: ຫລຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາຢ່າງຍືນຍົງໃນປີ 2020, ເປັນປະເທດກໍາລັງພັດທະນາທີ່ມີລະດັບລາຍຮັບປານກາງສູງ ແລະ ເປົ້າໝາຍການພັດທະນາແບບຍືນຍົງ (SDGs) ໃນປີ 2030.

ສະນັ້ນ, ງົບປະມານຕົ້ນຕໍເພື່ອຈັດຕັ້ງປະຕິບັດຍຸດທະສາດ ແລະ ແຜນການຂອງຂະແໜງການ ແລະ ທ້ອງຖິ່ນ ກໍ່ຄື ເພື່ອພັດທະນາເສດຖະກິດ-ສັງຄົມ ຕາມທິດສີຂຽວ-ຍືນຍົງ ຈະແມ່ນງົບປະມານປົກກະຕິຂອງຂະແໜງການ ແລະ ທ້ອງຖິ່ນທີ່ມີຢູ່ແລ້ວ. ເຊິ່ງຕາມປົກກະຕິແລ້ວ ກໍ່ຈະມາຈາກຫລາຍແຫລ່ງ ເຊັ່ນ: ງົບປະມານຂອງລັດ, ການຊ່ວຍເຫລືອລ້າ ແລະ ການກູ້ຢືມຈາກອົງການຈັດຕັ້ງສາກົນ ແລະ ຕ່າງປະເທດ ທີ່ຂະແໜງການ ແລະ ທ້ອງຖິ່ນໄດ້ຮັບການຈັດສັນໂດຍກົງ, ການລົງທຶນໂດຍກົງຂອງນັກລົງທຶນພາຍໃນ ແລະ ຕ່າງປະເທດ ດ້ວຍແບບຕ່າງໆ ເຊັ່ນ: ການລົງທຶນໂດຍກົງຂອງຕ່າງປະເທດ (FDI), ການຮ່ວມມືລະຫວ່າງພາກລັດ ແລະ ເອກະຊົນ (PPP) ພາຍໃຕ້ຮູບແບບຕ່າງໆ ເຊັ່ນ: BOT, BTO ແລະ ອື່ນໆ. ແຕ່ເຖິງຢ່າງໃດກໍ່ຕາມ, ເພື່ອເປັນການເພີ່ມຄວາມເຂັ້ມແຂງທາງດ້ານການເງິນໃຫ້ແກ່ວຽກງານເຕີບໂຕສີຂຽວ ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ຈະພິຈາລະນາສ້າງຕັ້ງກອງທຶນສົ່ງເສີມການເຕີບໂຕສີຂຽວ.

### 4.2.1. ແຫລ່ງລາຍຮັບຂອງກອງທຶນສົ່ງເສີມການເຕີບໂຕສີຂຽວ

ກອງທຶນດັ່ງກ່າວເປັນກອງທຶນການເງິນຂັ້ນສອງຢູ່ພາຍໃຕ້ການຄຸ້ມຄອງຂອງສູນສົ່ງເສີມການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ແລະ ມີລາຍຮັບຈາກຫລາຍແຫລ່ງເປັນຕົ້ນແມ່ນ:

- **ການປະກອບສ່ວນຂອງງົບປະມານຂອງລັດ:** ຕົ້ນຕໍຈະແມ່ນເງິນເດືອນ ແລະ ສະຫວັດດີການຕ່າງໆ ຂອງພະນັກງານ-ລັດຖະກອນ ທີ່ປະຕິບັດໜ້າທີ່ໃນການຄຸ້ມຄອງ ແລະ ບໍລິຫານກອງທຶນ, ການປະກອບສ່ວນທາງດ້ານວັດຖຸ ເຊັ່ນ: ສະຖານທີ່ເຮັດວຽກຂອງກອງທຶນ, ພາຫະນະ ແລະ ເຄື່ອງໃຊ້ຫ້ອງການຕ່າງໆທີ່ຈໍາເປັນສໍາລັບການຄຸ້ມຄອງ ແລະ ບໍລິຫານກອງທຶນ ແລະ ງົບປະມານເຄື່ອນໄຫວປົກກະຕິຕາມພາລະບົດບາດຂອງສູນສົ່ງເສີມການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ. ນອກນັ້ນ, ລັດຖະບານຈະຈັດສັນງົບປະມານສ່ວນໜຶ່ງຈາກອາກອນສິ່ງແວດລ້ອມ (ອາກອນທີ່ເກັບຕາມກົດໝາຍອາກອນສິ່ງແວດລ້ອມທີ່ກະຊວງການເງິນ ແລະ ກະຊວງຊັບພະຍາກອນ

ທຳມະຊາດ ແລະ ສິ່ງແວດລ້ອມທີ່ກຳລັງຮ່າງຂຶ້ນ) ເຂົ້າໃນກອງທຶນດັ່ງກ່າວ[52]. ອັດຕາສ່ວນລະອຽດແມ່ນຍັງຈະໄດ້ປຶກສາຫາລື ແລະ ກຳນົດຕາມພາຍຫລັງ. ເນື່ອງຈາກກອງທຶນດັ່ງກ່າວເປັນການເງິນຂັ້ນສອງ ການປະກອບສ່ວນງົບປະມານຂອງລັດເຂົ້າໃນກອງທຶນດັ່ງກ່າວ ຈະຕ້ອງຜ່ານກົນໄກງົບປະມານສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ ຫລື ຂອງກະຊວງແຜນການ ແລະ ການລົງທຶນ. ເຖິງຢ່າງໃດກໍ່ຕາມ, ໃນໄລຍະເບື້ອງຕົ້ນໃຫ້ໄປປຶກສາຫາລືກັບກອງທຶນປົກປັກຮັກສາສິ່ງແວດລ້ອມ ເພື່ອເປີດຊ່ອງງົບປະມານສະເພາະວຽກງານການເຕີບໂຕສີຂຽວໄປກ່ອນຊົ່ວຄາວ ຈົນກວ່າສູນສົ່ງເສີມການເຕີບໂຕສີຂຽວສາມາດສ້າງກົນໄກຄຸ້ມຄອງກອງທຶນດັ່ງກ່າວ.

- ການຊ່ວຍເຫລືອລ້າ, ການກູ້ຢືມດອກເບ້ຍຕ່ຳ ແລະ ບໍ່ມີດອກເບ້ຍຈາກອົງການຈັດຕັ້ງສາກົນ ແລະ ຕ່າງປະເທດ ທີ່ຕິດພັນກັບການສົ່ງເສີມການເຕີບໂຕສີຂຽວ-ຍືນຍົງ ທີ່ສູນສົ່ງເສີມການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ສາມາດລະດົມທຶນໄດ້: ປະຈຸບັນ, ການເຕີບໂຕສີຂຽວ-ຍືນຍົງເປັນທ່າອ່ຽງລວມຂອງໂລກ. ຫລາຍອົງການຈັດຕັ້ງສາກົນ, ທະນາຄານ ແລະ ລັດຖະບານຂອງຫລາຍປະເທດໃຫ້ການສະໜັບສະໜູນທ່າອ່ຽງດັ່ງກ່າວ ແລະ ໄດ້ສ້າງຕັ້ງຫລາຍກອງທຶນຂຶ້ນ ເພື່ອສົ່ງເສີມການພັດທະນາເສດຖະກິດ-ສັງຄົມຕາມທິດດັ່ງກ່າວ ເປັນຕົ້ນແມ່ນ: ກອງທຶນການປ່ຽນແປງດິນຟ້າອາກາດສີຂຽວ (Green Climate Fund), ກອງທຶນສົ່ງເສີມການເຕີບໂຕສີຂຽວຂອງໂລກ (Global Green Growth Fund/GGF), ກອງທຶນສິ່ງແວດລ້ອມໂລກ (Global Environmental Fund/GEF), ກອງທຶນພັດທະນາປ່າໄມ້ (ForestResource Fund/FRDF), ກອງທຶນພັດທະນາໄຟຟ້າຊົນນະບົດ (Rural Electricification Fund/RAF), ກອງທຶນພະລັງງານທົດແທນ (Renewable Energy Fund/RAEF), ກອງທຶນອະນຸລັກໂລກ (Global Conservation Fund/GCF) ແລະ ອື່ນໆ.

ສະນັ້ນ, ການພັດທະນາເສດຖະກິດ-ສັງຄົມຕາມທິດສີຂຽວ-ຍືນຍົງ ຈຶ່ງເປັນເງື່ອນໄຂ ແລະ ກາລະໂອກາດໃຫ້ ສປປ ລາວ ສາມາດໄດ້ຮັບການຊ່ວຍເຫລືອລ້າ ກໍ່ຄື ເຂົ້າເຖິງແຫລ່ງເງິນກູ້ດອກເບ້ຍຕ່ຳ ຫລື ບໍ່ມີດອກເບ້ຍ ຈາກອົງການຈັດຕັ້ງສາກົນ, ທະນາຄານ ແລະ ລັດຖະບານຂອງປະເທດດັ່ງກ່າວ. ເພາະສະນັ້ນ, ພາລະບົດບາດ ແລະ ໜ້າທີ່ສຳຄັນຕົ້ນຕໍຂອງສູນສົ່ງເສີມການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ແມ່ນການລະດົມທຶນເຂົ້າກອງທຶນສົ່ງເສີມການເຕີບໂຕສີຂຽວ ແລະ ເຂົ້າໃນການຈັດຕັ້ງປະຕິບັດແຜນການ, ແຜນງານ ແລະ ໂຄງການທີ່ກ່ຽວຂ້ອງກັບການເຕີບໂຕສີຂຽວຂອງຂະແໜງການ ແລະ ທ້ອງຖິ່ນ.

- **ລາຍຮັບວິຊາການຂອງສູນສົ່ງເສີມການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ:** ສູນສົ່ງເສີມການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ຈະເປັນໜ່ວຍງານວິຊາການທີ່ໃຫ້ການບໍລິການທາງດ້ານເຕັກນິກ ແລະ ການຕະຫລາດທີ່ກ່ຽວຂ້ອງກັບການສົ່ງເສີມການເຕີບໂຕສີຂຽວ ດ້ວຍວິທີການຕ່າງໆ ເຊັ່ນ: ໂຄສະນາສົ່ງເສີມການນຳໃຊ້ເຕັກນິກ ແລະ ເຕັກໂນໂລຊີສີຂຽວ, ການບໍລິໂພກຜະລິດຕະພັນສີຂຽວ, ສົ່ງເສີມການຂາຍຜະລິດຕະພັນສີຂຽວ, ອອກໃບຢັ້ງຢືນຜະລິດຕະພັນສີຂຽວ ແລະ ອື່ນໆ. ສູນສົ່ງເສີມການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ສາມາດເກັບຄ່າບໍລິການຈາກການໃຫ້ບໍລິການດ້ານເຕັກນິກ ແລະ ການຕະຫລາດດັ່ງກ່າວຈຳນວນໜຶ່ງ ເພື່ອມາຮັບໃຊ້ວຽກງານສົ່ງເສີມການເຕີບໂຕສີຂຽວ. ເຖິງຢ່າງໃດກໍ່ຕາມ, ການເກັບຄ່າທຳນຽມດັ່ງກ່າວຕ້ອງໃຫ້ມີລັກສະນະສົ່ງເສີມ ແລະ ເພື່ອຄວາມຍືນຍົງຂອງກອງທຶນເທົ່ານັ້ນ ຈະບໍ່ແມ່ນເພື່ອຜົນກຳໄລ.

- **ດອກເບ້ຍທະນາຄານ:** ໃນກໍລະນີກອງທຶນມີເງິນຄ້າງຈ່າຍຈຳນວນຫລາຍ ແລະ ມີແຜນນຳໃຊ້ໄລຍະຍາວກໍ່ສາມາດນຳເງິນຈຳນວນດັ່ງກ່າວໄປຝາກທະນາຄານເພື່ອເອົາດອກເບ້ຍມານຳໃຊ້ເຂົ້າໃນການຈັດຕັ້ງປະຈິບັດກິດຈະກຳສົ່ງເສີມສີຂຽວຕ່າງໆ.

---

[52] ລາຍລະອຽດຕົວເລກງົບປະມານຕົວຈິງທີ່ຈະຖືກຈັດສັນເຂົ້າໃນກອງທຶນແມ່ນຍັງຈະໄດ້ປຶກສາຫາລືຮ່ວມກັນ (ກະຊວງການເງິນ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງແຜນການ ແລະ ການລົງທຶນ ແລະ ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ).

- **ການສະໝັກໃຈປະກອບສ່ວນຂອງບຸກຄົນ ແລະ ນິຕິບຸກຄົນພາຍໃນ ແລະ ຕ່າງປະເທດ:** ບຸກຄົນ ແລະ ນິຕິບຸກຄົນທີ່ຢູ່ພາຍໃນ ແລະ ຕ່າງປະເທດທີ່ມີຈຸດປະສົງ ແລະ ມີຄວາມຕັ້ງໃຈ ແລະ ມີຈິດໃຈສັດທາຕ້ອງການທີ່ຈະປະກອບສ່ວນທຶນຮອນ ສາມາດປະກອບສ່ວນເປັນເງິນ ຫລື ວັດຖຸເຂົ້າໃນກອງທຶນສົ່ງເສີມການເຕີບໂຕສີຂຽວຂອງ ສປປ ລາວ ໄດ້ໂດຍບໍ່ມີເງື່ອນໄຂ.

### 4.2.2. ເປົ້າໝາຍການໃຊ້ຈ່າຍຂອງກອງທຶນສົ່ງເສີມການເຕີບໂຕສີຂຽວ

ເປົ້າໝາຍຂອງກອງທຶນສົ່ງເສີມການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ບໍ່ແມ່ນເພື່ອສະໜອງງົບປະມານຕົ້ນຕໍ, ສ່ວນໃຫຍ່ ຫລື ທັງໝົດໃຫ້ແກ່ຈັດຕັ້ງປະຕິບັດແຜນການ, ແຜນງານ ແລະ ໂຄງການທີ່ກ່ຽວຂ້ອງກັບການເຕີບໂຕສີຂຽວຂອງຂະແໜງການແລະທ້ອງຖິ່ນໂດຍກົງເຊັ່ນ: ການກໍ່ສ້າງພື້ນຖານໂຄງລ່າງ, ການປ່ອຍກູ້ໃຫ້ປະຊາຊົນ ຫລື ພາກທຸລະກິດ ແລະ ອື່ນໆ ແຕ່ການໃຊ້ຈ່າຍດັ່ງກ່າວ ຕ້ອງແມ່ນເພື່ອຈັດຕັ້ງປະຕິບັດແຜນການ, ແຜນງານ ແລະ ກິດຈະກໍາທີ່ມີລັກສະນະສົ່ງເສີມການເຕີບໂຕສີຂຽວ ເຊັ່ນ: ການປູກຈິດສໍານຶກ, ສ້າງຂີດຄວາມສາມາດກ່ຽວກັບການເຕີບໂຕສີຂຽວໃຫ້ແກ່ພະນັກງານຂອງຂະແໜງການ ແລະ ທ້ອງຖິ່ນ, ສົ່ງເສີມການຜະລິດ, ການຕະຫລາດ ແລະ ການບໍລິໂພກສີຂຽວ, ການຄົ້ນຄວ້າ-ວິໄຈ, ການສ້າງນະວັດຕະກໍາ, ການຖ່າຍທອດຂໍ້ມູນຂ່າວສານ ແລະ ເຕັກໂນໂລຊີສີຂຽວ, ເປັນເງິນສົມທົບໃນໂຄງການໃດໜຶ່ງທີ່ກ່ຽວຂ້ອງກັບການເຕີບໂຕສີຂຽວ, ຄໍ້າປະກັນເງິນກູ້ ຫລື ອຸດໜູນອັດຕາດອກເບ້ຍຕໍ່າໃຫ້ແກ່ປະຊາຊົນ ຫລື ພາກທຸລະກິດທີ່ກ່ຽວຂ້ອງກັບການເຕີບໂຕສີຂຽວ ແລະ ອື່ນໆ. ແຫລ່ງທຶນຕົ້ນຕໍຂອງການຈັດຕັ້ງປະຕິບັດແຜນການ, ແຜນງານ ແລະ ໂຄງການຂອງຂະແໜງການ ແລະ ທ້ອງຖິ່ນ ແມ່ນແຫລ່ງທຶນປົກກະຕິຂອງຂະແໜງການ ແລະ ທ້ອງຖິ່ນ ດັ່ງທີ່ໄດ້ກ່າວມາແລ້ວຂ້າງເທິງ. ຜູ້ຮັບຜິດຊອບຕົ້ນຕໍໃນການຈັດຕັ້ງປະຕິບັດແຜນການ, ແຜນງານ ແລະ ໂຄງການຕ່າງໆດັ່ງກ່າວ ກໍ່ຈະແມ່ນຂະແໜງການ ແລະ ທ້ອງຖິ່ນກ່ຽວຂ້ອງເປັນຜູ້ຮັບຜິດຊອບ.

ລາຍລະອຽດເພີ່ມເຕີມກັບເປົ້າໝາຍ, ຈຸດປະສົງ ແລະ ກົນໄກການໃຊ້ຈ່າຍເງິນກອງທຶນສົ່ງເສີມການເຕີບໂຕສີຂຽວຈະໄດ້ຄົ້ນຄວ້າ, ພິຈາລະນາ ແລະ ກໍານົດໄວ້ໃນນິຕິກໍາສະເພາະ (ກົດລະບຽບຂອງກອງທຶນ).

## 4.3. ມາດຕະການດ້ານນະໂຍບາຍ ແລະ ນິຕິກໍາ

ເພື່ອຈັດຕັ້ງປະຕິບັດໃຫ້ປະສົບຜົນສໍາເລັດຢ່າງມີປະສິດທິພາບ ແລະ ປະສິດທິຜົນສູງ ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ຈຶ່ງສະເໜີມາດຕະການດ້ານນະໂຍບາຍ ແລະ ນິຕິກໍາຕ່າງໆດັ່ງລຸ່ມນີ້:

- ນາຍົກລັດຖະມົນຕີຮັບຮອງ ແລະ ອອກດໍາລັດ ວ່າດ້ວຍການຈັດຕັ້ງປະຕິບັດຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ.

- ນາຍົກລັດຖະມົນຕີອອກດໍາລັດ ວ່າດ້ວຍການສ້າງຕັ້ງສູນສົ່ງເສີມການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ຕາມແຈ້ງການຂອງສໍານັກງານນາຍົກລັດຖະມົນຕີ (ຫ້ອງວ່າການລັດຖະບານໃນເມື່ອກ່ອນ) ສະບັບເລກທີ 1751/ຫລ.ກລຂ, ລົງວັນທີ 8 ທັນວາ 2014 ແລະ ຕາມການສະເໜີໃນຍຸດທະສາດສະບັບນີ້.

- ປັບປຸງຂໍ້ຕົກລົງຂອງນາຍົກລັດຖະມົນຕີ ສະບັບເລກທີ 95/ນຍ, ລົງວັນທີ 8 ທັນວາ 2016, ວ່າດ້ວຍການແຕ່ງຕັ້ງຄະນະຊີ້ນໍາລະດັບຊາດວຽກງານການເຕີບໂຕສີຂຽວ, ໂດຍໃຫ້ສູນສົ່ງເສີມການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ເປັນຈຸດປະສານງານ ແລະ ເປັນອົງການປະຈໍາການຂອງຄະນະຊີ້ນໍາລະດັບຊາດວຽກງານການເຕີບໂຕສີຂຽວ ພາຍໃຕ້ການຊີ້ນໍາຂອງຫົວໜ້າສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ ຫລື ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ໃນຖານະຄະນະຊີ້ນໍາລະດັບຊາດວຽກງານການເຕີບໂຕສີຂຽວ ຕາມທີ່ໄດ້ກໍານົດໄວ້ໃນຍຸດທະສາດສະບັບນີ້.

- ປັບປຸງຂໍ້ຕົກລົງ ເລກທີ 205/ນຍ, ລົງວັນທີ 1 ກໍລະກົດ 2016 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ ຫລື ພາລະບົດບາດຂອງກະຊວງແຜນການ ແລະ ການລົງທຶນ ເພື່ອເພີ່ມພາລະບົດບາດ, ສິດ, ໜ້າທີ່ ແລະ ໂຄງປະກອບການຈັດຕັ້ງຂອງສູນສົ່ງເສີມການເຕີບໂຕສີຂຽວເຂົ້າໃນໂຄງປະກອບການຈັດຕັ້ງ, ສິດ ແລະ ໜ້າທີ່ຂອງສະຖາບັນ ຫລື ກະຊວງດັ່ງກ່າວ.

- ຫົວໜ້າສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ ຫລື ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ອອກຂໍ້ຕົກລົງຮັບຮອງພາລະບົດບາດ, ໂຄງປະກອບການຈັດຕັ້ງ ແລະ ການເຄື່ອນໄຫວຂອງສູນສົ່ງເສີມການເຕີບໂຕສີຂຽວແຫ່ງຊາດ ຂອງ ສປປ ລາວ ຕາມລະບຽບກົດໝາຍ.

- ສູນສົ່ງເສີມການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ຄົ້ນຄວ້າຮ່າງກົດລະບຽບກ່ຽວກັບການຄຸ້ມຄອງ ແລະ ສະເໜີນາຍົກລັດຖະມົນຕີພິຈາລະນາຕົກລົງສ້າງຕັ້ງກອງທຶນສົ່ງເສີມການເຕີບໂຕສີຂຽວ ໂດຍຜ່ານຄະນະຊີ້ນຳລະດັບຊາດວຽກງານການເຕີບໂຕສີຂຽວ.

- ຂະແໜງການ ແລະ ທ້ອງຖິ່ນກ່ຽວຂ້ອງອອກຂໍ້ຕົກລົງສ້າງຕັ້ງຈຸດປະສານງານ ຫລື ຜູ້ປະສານງານວຽກງານການເຕີບໂຕສີຂຽວຂອງຕົນ.

- ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ຫລື ຫົວໜ້າສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດອອກຂໍ້ແນະນຳໃຫ້ຂະແໜງການກ່ຽວຂ້ອງ (ຂະແໜງບຸລິມະສິດ) ປະສານສົມທົບກັບສູນສົ່ງເສີມການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ແລະ ກົມແຜນການ, ກະຊວງແຜນການ ແລະ ການລົງທຶນ ປັບປຸງຍຸດທະສາດ ແລະ ແຜນການຂອງຕົນເພື່ອເຊື່ອມສານວາລະການເຕີບໂຕສີຂຽວເຂົ້າໃນຍຸດທະສາດ ແລະ ແຜນການຂອງຕົນ.

# ພາກທີ V

# ການຕິດຕາມ, ປະເມີນຜົນ ແລະ ລາຍງານຄວາມຄືບໜ້າ ຂອງການພັດທະນາເສດຖະກິດຕາມທິດສີຂຽວ-ຍືນຍົງ ໃນ ສປປ ລາວ

ເພື່ອວັດແທກ ແລະ ຕິດຕາມ ການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຕາມທິດສີຂຽວ-ຍືນຍົງ, ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ສ້າງລະບົບຕິດຕາມປະເມີນຜົນ ການເຕີບໂຕສີຂຽວ ຂອງ ສປປ ລາວ ດັ່ງລາຍລະອຽດລຸ່ມນີ້:

## 5.1. ຂົງເຂດ, ມິຕິ ແລະ ຕົວຊີ້ວັດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ

ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ສະເໜີສ້າງລະບົບຕິດຕາມປະເມີນຜົນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດຕາມທິດສີຂຽວ-ຍືນຍົງ ໂດຍອີງໃສ່ຄໍານິຍາມຂອງການເຕີບໂຕສີຂຽວ ທີ່ໄດ້ກໍານົດໄວ້ໃນຍຸດທະສາດສະບັບນີ້. ຕາມຄໍານິຍາມດັ່ງກ່າວ, ການເຕີບໂຕສີຂຽວ-ຍືນຍົງຂອງ ສປປ ລາວ ປະກອບດ້ວຍ 3 ຂົງເຂດ ຫລື ເສົາຄໍ້າຂອງການພັດທະນາເສດຖະກິດ-ສັງຄົມຄື: (1) ຂົງເຂດ ຫລື ເສົາຄໍ້າເສດຖະກິດ, (2) ຂົງເຂດ ຫລື ເສົາຄໍ້າດ້ານສັງຄົມ ແລະ (3) ຂົງເຂດ ຫລື ເສົາຄໍ້າດ້ານສິ່ງແວດລ້ອມ.

ນອກນັ້ນ, ນິຍາມດັ່ງກ່າວຍັງໄດ້ກໍານົດມິຕິ (Dimension) ຂອງການເຕີບໂຕສີຂຽວ-ຍືນຍົງ ໃນແຕ່ລະຂົງເຂດຢ່າງຈະແຈ້ງ. ໃນນັ້ນ, ຂົງເຂດເສດຖະກິດຈະປະກອບມີ 3 ມິຕິ ຫລື ດ້ານ ຕາມຄຸນລັກສະນະຂອງການເຕີບໂຕສີຂຽວ-ຍືນຍົງ ຄື: (1) ການຂະຫຍາຍຕົວຂອງເສດຖະກິດ, (2) ຫລຸດຜ່ອນຄວາມທຸກຍາກ ແລະ ຍົກລະດັບຊີວິການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ ແລະ (3) ຫລຸດຜ່ອນຄວາມສ່ຽງ ແລະ ຄວາມບອບບາງຕໍ່ການເພິ່ງພິງຂອງສະພາບເສດຖະກິດໂລກ; ໃນຂົງເຂດສັງຄົມຈະປະກອບມີ 2 ມິຕິ ຫລື ດ້ານ ຄື: (1) ຄວາມສະເໝີພາບ ແລະ ເປັນທໍາໃນສັງຄົມ ແລະ (2) ຄວາມກ້ວາງຂວາງ ແລະ ທົ່ວເຖິງຂອງການເຂົ້າຮ່ວມຂະບວນການ ແລະ ການກະຈາຍຜົນປະໂຫຍດຂອງການພັດທະນາເສດຖະກິດ-ສັງຄົມ ແລະ ຂົງເຂດສິ່ງແວດລ້ອມຈະມີ 3 ມິຕິ ຫລື ດ້ານ ຕາມຄຸນລັກສະນະຂອງການເຕີບໂຕສີຂຽວ-ຍືນຍົງ ທີ່ໄດ້ກໍານົດໄວ້ໃນຍຸດທະສາດສະບັບນີ້ຄື: (1) ປະສິດທິພາບຂອງການນໍາໃຊ້ຊັບພະຍາກອນທໍາມະຊາດທີ່ມີຢູ່ຢ່າງຈໍາກັດຂອງປະເທດໃຫ້ເກີດຜົນປະໂຫຍດສູງສຸດ, (2) ຄວາມສະອາດ ແລະ ເປັນມິດຕໍ່ສິ່ງແວດລ້ອມຂອງການຂະຫຍາຍຕົວຂອງເສດຖະກິດ ແລະ (3) ການຫລຸດຜ່ອນຄວາມສ່ຽງ ແລະ ຄວາມບອບບາງຕໍ່ໄພພິບັດທາງທໍາມະຊາດ.

ເຖິງຢ່າງໃດກໍ່ຕາມ, ເພື່ອໃຫ້ສາມາດວັດແທກ ແລະ ຕິດຕາມການພັດທະນາເສດຖະກິດ-ສັງຄົມຕາມທິດສີຂຽວ-ຍືນຍົງໄດ້ຢ່າງມີປະສິດທິພາບ ແລະ ປະສິດທິຜົນສູງ ຈະໄດ້ພິຈາລະນາຄັດເລືອກຕົວຊີ້ວັດຕົວຊີ້ວັດຍ່ອຍ ເພື່ອວັດແທກ ແລະ ຕິດຕາມຄວາມຄືບໜ້າຂອງແຕ່ລະຂົງເຂດ ແລະ ມິຕິຂອງການເຕີບໂຕສີຂຽວ-ຍືນຍົງ. ການພິຈາ ລະນາ ແລະ ຄັດເລືອກ/ກໍານົດແມ່ນມີຄວາມສໍາຄັນ ແລະ ຈະຕ້ອງໄດ້ເອົາໃຈໃສ່ ຄື: (1) ຕ້ອງເປັນຕົວຊີ້ວັດທີ່ສາມາດສ່ອງແສງເຖິງຄຸນລັກສະນະຂອງແຕ່ລະມິຕິ ຫລື ແຕ່ລະດ້ານໄດ້ຢ່າງຈະແຈ້ງ, (2) ຕ້ອງມາຈາກແຫລ່ງຂໍ້ມູນທີ່ໜ້າເຊື່ອຖືໄດ້ ແລະ ສາມາດເຂົ້າເຖິງໄດ້ໃນແຕ່ລະໄລຍະ ແລະ (3) ຕ້ອງເປັນຕົວຊີ້ວັດທີ່ເປັນອິດສະຫລະ ຫລື ບໍ່ມີຄວາມສໍາພັນທາງສະຖິຕິກັບຕົວຊີ້ວັດອື່ນທີ່ຖືກນໍາໃຊ້ໃນລະບົບດຽວກັນໃນລະດັບທີ່ສູງ (60%); ຖ້າຕົວຊີ້ວັດໃດຫາກມີຄວາມສໍາພັນກັບຕົວຊີ້ວັດອື່ນຄວນນໍາໃຊ້ພຽງໂຕດຽວ.

ໂດຍອີງໃສ່ຫລັກການດັ່ງກ່າວ, ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ໄດ້ຄົ້ນຄວ້າ ແລະ ກໍານົດຕົວຊີ້ວັດຫລັກ, ຕົວຊີ້ວັດຍ່ອຍດັ່ງກ່າວ ແລະ ໄດ້ກໍານົດຄາດໝາຍສໍາລັບປີ 2025 ແລະ 2030 ເພື່ອເປັນ

ພື້ນຖານໃຫ້ການວັດແທກ ແລະ ຕິດຕາມການພັດທະນາເສດຖະກິດ-ສັງຄົມຕາມທິດສີຂຽວ-ຍືນຍົງຂອງ ສປປ ລາວ ດັ່ງລາຍລະອຽດໃນຕາຕະລາງລຸ່ມນີ້:

### ຕາຕະລາງທີ 1: ຂົງເຂດ, ມິຕິ ແລະ ຕົວຊີ້ວັດການເຕີບໂຕສີຂຽວຂອງ ສປປ ລາວ

| **ຕົວຊີ້ວັດການເຕີບໂຕສີຂຽວ** | **ປີຖານ** | **ຄາດໝາຍປີ 2025** | **ຄາດໝາຍປີ 2030** | **ແຫລ່ງຂໍ້ມູນ** |
|---|---|---|---|---|
| I. ເສດຖະກິດ/ການຂະຫຍາຍຕົວຂອງເສດຖະກິດ, ຫລຸດຜ່ອນຄວາມທຸກຍາກ, ຫລຸດຜ່ອນຄວາມທຸກຍາກ, ການຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນ ແລະ ການຫລຸດຜ່ອນຄວາມສ່ຽງ ແລະ ຄວາມບອບບາງຕໍ່ສະພາບການເໜັງຕີງຂອງເສດຖະກິດໂລກ | | | | |
| **1.1 ການຂະຫຍາຍຕົວຂອງເສດຖະກິດ** | | | | |
| 1.1.1 ອັດຕາການຂະຫຍາຍຕົວຂອງ GDP ສະເລ່ຍ (%) | 7,9 (2011-2015) | 7 (2020-2025) | 7 (2025-2030) | ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ VIII (2016-2020) |
| **1.2. ຫລຸດຜ່ອນຄວາມທຸກຍາກ ແລະ ລະດັບຊີວິດການເປັນຢູ່ຂອງປະຊາຊົນ** | | | | |
| 1.2.1. ລາຍຮັບສະເລ່ຍຕໍ່ຫົວຄົນ (ໂດລາ/ຄົນ) | 1,860 (2015) | 3,000 | 3500 | ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020) |
| 1.2.2. ອັດຕາສ່ວນຜູ້ທຸກຍາກ (%) | 20% (2015) | <10 | <5 | ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020) |
| **1.3. ຫລຸດຜ່ອນຄວາມສ່ຽງ ແລະ ຄວາມບອບບາງຕໍ່ຄວາມຜັນຜວນຂອງສະພາບເສດຖະກິດໂລກ** | | | | |
| 1.3.1. ອັດຕາການເຕົ້າໂຮມຂອງການສົ່ງອອກ (ຜົນບວກອັດຕາສ່ວນມູນຄ່າສິນຄ້າສົ່ງອອກໄປ 3 ປະເພດທີ່ສົ່ງອອກຫລາຍທີ່ສຸດ (%) | 67 (2015) | 45 | 35 | ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020) |
| 1.3.2. ອັດຕາການເຕົ້າໂຮມຂອງປະເທດສົ່ງອອກ (ຜົນບວກອັດຕາສ່ວນມູນຄ່າສິນຄ້າສົ່ງອອກໄປ 3 ປະເພດທີ່ສົ່ງອອກໄປຫລາຍທີ່ສຸດ) | 73 (2015) | 60 | 50 | ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020) |
| 1.3.3. ອັດຕາສ່ວນແຮງງານໃນລະບົບທີ່ໄດ້ຮັບການປົກປ້ອງຈາກກົດໝາຍແຮງງານ (%) | 32.4 (2017) | 35 | 38 | Lao PDR Labor Forece Survey 2017 |
| II. ຄວາມສະເໝີພາບ, ເປັນທຳ ແລະ ທົ່ວເຖິງໃນສັງຄົມ | | | | |
| **2.1. ຄວາມສະເໝີພາບ ແລະ ເປັນທຳ** | | | | |
| 2.1.1. ຄວາມສະເໝີພາບດ້ານລາຍຮັບ (GINI) | 36.4 (2012) | <33 | <30 | https://www.indexmundi.com/facts/lao-pdr/indicator/SI.POV.GINI |
| 2.1.2. ບົດບາດຍິງ-ຊາຍ | | | | |
| 2.1.2.1. ອັດຕາສ່ວນສະມາຊິກສະພາແຫ່ງຊາດເພດຍິງ (%) | 25 (2015) | >30 | >35 | UNDP, County Analysis Report. |
| 2.1.2.2. ອັດຕາສ່ວນຜູ້ຍິງໃນຄະນະລັດຖະບານ (%) | 5 (2012) | >15 | >25 | UNDP, County Analysis Report. 2015. |

| | | | | |
|---|---|---|---|---|
| 2.1.2.3. ອັດຕາສ່ວນຜູ້ຍິງຕໍ່ຜູ້ຊາຍໃນການສຶກສາຂັ້ນສູງ (%) | 0.78 (2016) | >0.9 | >0.95 | ຄິດໄລ່ໂດຍອີງໃສ່ຂໍ້ມູນຈາກກົມການສຶກສາຊັ້ນສູງ, ກະຊວງສຶກສາທິການ ແລະ ກິລາ (http://ched.gov.ph/wp-content/uploads/2017/12/6.-ASEAN-Status-of-Gender-Mainstreaming-Lao-PDR.pdf) |
| 2.1.3. ຄວາມແຕກຕ່າງລະຫວ່າງຕົວເມືອງ ແລະ ຊົນນະບົດ | | | | |
| 2.1.3.1. ອັດຕາສ່ວນການໃຊ້ຈ່າຍ ແລະ ບໍລິໂພກໃນຊົນນະບົດຕໍ່ຕົວເມືອງ | 0,55 (2013) | 0,7 | 0,8 | ຄິດໄລ່ໂດຍການນໍາໃຊ້ຂໍ້ມູນຈາກການສໍາຫລວດການໃຊ້ຈ່າຍ ແລະ ການບໍລິໂພກ 4 (LECS 4) |
| **2.2. ຄວາມກວ້າງຂວາງ ແລະ ທົ່ວເຖິງຂອງການພັດທະນາ** | | | | |
| 2.2.1. ອັດຕາການຂາດສານອາຫານຂອງເດັກນ້ອຍລຸ່ມ 5 ປີ | | | | |
| 2.2.1.1. ອັດຕາສ່ວນຂອງເດັກລຸ່ມ 5 ປີທີ່ມີນໍ້າໜັກຕໍ່າກວ່າເກນ (%) | ຜຟ027 (2011) | 20 | 17 | ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020) |
| 2.2.1.2. ອັດສ່ວນເດັກລຸ່ມ 5 ປີທີ່ມີຄວາມສູງຕໍ່າກວ່າເກນ (%) | 38 (2011) | 30 | 25 | ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020) |
| 2.2.2. ອັດຕາສ່ວນປະຊາກອນເຂົ້າເຖິງນໍ້າສະອາດ (%) | 84,7 (2014) | 96 | 100 | ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ VIII (2016-2020) |
| 2.2.3. ອັດຕາສ່ວນປະຊາກອນນໍາໃຊ້ວິດຖ່າຍ (%) | 67,9 (2014) | 85 | 100 | ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020) |
| III. ສິ່ງແວດລ້ອມ/ປະສິດທິພາບຂອງການນໍາໃຊ້ຊັບພະຍາກອນທໍາມະຊາດ, ຄວາມສະອາດ ແລະ ທົນທານຕໍ່ສະພາບການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດທາງທໍາມະຊາດ | | | | |
| **3.1. ປະສິດທິພາບ ແລະ ປະສິດທິຜົນຂອງການນໍາໃຊ້ຊັບພະຍາກອນ** | | | | |
| 3.1.1. ອັດຕາສ່ວນຂອງການນໍາໃຊ້ພະລັງງານຕໍ່ GDP (toe/GDP-million) | 295.89 (2012) | 240 | 230 | http://portal.gms-eoc.org/charts/overview/energy-intensity?gid=19 |
| 3.1.2. ປະສິດທິພາບຂອງການນໍາໃຊ້ດິນກະສິກໍາ | | | | |
| 3.1.2.1. ປະສິດທິພາບຂອງການປູກເຂົ້ານາປີ (ໂຕນ/ເຮັກຕາ) | 4,4 | | | ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020) |
| 3.1.2.1. ປະສິດພາບທີຂອງການປູກເຂົ້ານາແຊງ (ໂຕນ/ເຮັກຕາ) | 5,1 | | | ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020) |

| | | | | |
|---|---|---|---|---|
| 3.1.3. ອັດຕາສ່ວນການສົ່ງອອກຊັບພະຍາກອນທຳມະຊາດໃນລວມຍອດມູນຄ່າສິນຄ້າສົ່ງອອກ (%) | 51,2 (2015) | 40 | 30 | ຄິດໄລ່ໂດຍອີງໃສ່ຂໍ້ມູນໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020) |
| **3.2. ສະອາດ ແລະ ເປັນມິດຕໍ່ສິ່ງແວດລ້ອມ** | | | | |
| 3.2.1. ອັດຕາສ່ວນການປ່ອຍທາດອາຍພິດເຮືອນແກ້ວຕໍ່ GDP (ໂຕນ/GDP-million) | 83,3 | <75 | <70 | ຄິດໄລ່ໂດຍອີງໃສ່ຂໍ້ມູນຈາກ: http://portal.gms-eoc.org/charts/overview/temperature-change?gid=39 |
| 3.2.2. ການສ້າງຂີ້ເຫຍື້ອ ຫລື ສິ່ງເສດເຫລືອຕໍ່ຫົວຄົນ (Kg/ຄົນ/ປີ) | 237 (2015) | 210 | 180 | GGGI: Green Growth Potential Assessment |
| 3.2.3. ອັດຕາສ່ວນຂີ້ເຫຍື້ອ ຫລື ສິ່ງເສດເຫລືອທີ່ຖືກນຳມາໃຊ້ຄືນ ຫລື ທຳລາຍຖິ້ມດ້ວຍວິທີ ແລະ ສະຖານທີ່ຖືກຕ້ອງ (%) | 50 (2015) | 65 | 80 | ກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ. |
| 3.2.4. ອັດການປົກຫຸ້ມຂອງປ່າໄມ້ (%) | 40.3 (2010) | 70 | 70 | http://www.leafasia.org/sites/default/files/public/resources/Lao%20PDR%20Final-Revised-Nov2015.pdf |
| 3.2.5. ອັດຕາການນຳໃຊ້ພະລັງງານສະອາດ (ໄຟຟ້າພະລັງງານນ້ຳ, ພະລັງງານແສງອາທິດ ແລະ ພະລັງງານລົມ) (%) | 12 (2011) | 25 | 40 | ກະຊວງພະລັງງານ ແລະ ບໍ່ແຮ່ |
| 3.2.6. ອັດຕາສ່ວນການນຳເຂົ້ານ້ຳມັນເຊື້ອໄຟ ແລະ ອາຍແກັສ (%) | 17 (2014) | <12 | <10 | ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020) |
| 3.2.7. ການນຳໃຊ້ພະລັງງານໄຟຟ້າສະເລ່ຍຕໍ່ຫົວຄົນ (ກິໂລວັດໂມງ/ຄົນ/ປີ) | 636,13 | <1.000 | <1.500 | http://portal.gms-eoc.org/charts/overview/electricity-consumption-per-capita?gid=19 |
| 3.2.8. ການປ່ອຍທາດອາຍພິດເຮືອນແກ້ວຕໍ່ຄົນ (ໂຕນ/ຄົນ/ປີ) | 0,15 (2014) | <0,6 | <1,2 | http://portal.gms-eoc.org/charts/overview/co2-emissions-per-capita?gid=20 |
| **3.3. ຫລຸດຜ່ອນຄວາມສ່ຽງ ແລະ ຄວາມບອບບາງຕໍ່ສະພາບການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດທາງທຳມະຊາດ** | | | | |
| 3.3.1. ອັດຕາສ່ວນມູນຄ່າຜົນເສຍຫາຍທາງເສດຖະກິດທີ່ເກີດຈາກໄພພິບັດທາງທຳມະຊາດ (% ຂອງ GDP) | 0.3 (ສະເລ່ຍ 2010-2015) | <0.25 (ສະເລ່ຍ 2020-2025) | <0.2 (ສະເລ່ຍ 2025-2030) | World Bank: Country Assessment Report for Lao PDR |
| 3.3.2. ຈຳນວນປະຊາກອນສະເລ່ຍທີ່ໄດ້ຮັບຜົນກະທົບຈາກໄພພິບັດທາງທຳມະຊາດ | 200.000 (ສະເລ່ຍ 2010-2015) | <160.000 (ສະເລ່ຍ 2020-2025) | <120:000 (ສະເລ່ຍ 2025-2030) | World Bank: Country Assessment Report for Lao PDR |
| 3.3.3. ອັດຕາສ່ວນມູນຄ່າຜະລິດຕະພັນກະສິກຳໃນ GDP (%) | 23.7 (2015) | 20 | 19 | ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020) |

ຫລາຍຕົວຊີ້ວັດທີ່ສະແດງເຖິງຄຸນລັກສະນະຂອງການເຕີບໂຕສີຂຽວ-ຍືນຍົງ ເຊັ່ນ: ຄຸນນະພາບຂອງອາກາດ, ດິນ, ນໍ້າ, ອັດຕາສ່ວນຂອງເສດຖະກິດສີຂຽວ (Green GDP) ໃນລວມຍອດຜະລິດຕະພັນພາຍໃນຂອງປະເທດ (GDP) ແລະ ອື່ນໆ ຍັງບໍ່ສາມາດນໍາມາເຂົ້າໃນລະບົບຕິດຕາມປະເມີນຜົນນີ້ໄດ້ໃນປະຈຸບັນເນື່ອງຈາກຂາດຂໍ້ມູນ. ສູນສົ່ງເສີມການເຕີບໂຕ ສີຂຽວແຫ່ງຊາດຂອງ ສປປ ລາວ ຈະເປັນຜູ້ສືບຕໍ່ຄົ້ນຄວ້າ ແລະ ປັບປຸງ ລະບົບຕິດຕາມປະເມີນຜົນນີ້ໃຫ້ມີປະສິດທິພາບ, ປະສິດທິຜົນ ແລະ ມີຄວາມຊັດເຈນຫລາຍຂຶ້ນໃນອະນາຄົດ.

## 5.2. ດັດສະນີການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ

ເພື່ອວັດແທກ ແລະ ຕິດຕາມໃນລະດັບມະຫາພາກ (ລະດັບລວມ), ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ໄດ້ສ້າງດັດສະນີການເຕີບໂຕສີຂຽວຂຶ້ນ ໂດຍການໃຫ້ແຕ່ລະຂົງເຂດ ຫລື ເສົາຄໍ້າຂອງການເຕີບໂຕສີຂຽວມີນໍ້າໜັກ ຫລື ຄວາມສໍາຄັນເທົ່າກັນ, ໝາຍຄວາມວ່າ ເສດຖະກິດ 1/3, ສັງຄົມ 1/3 ແລະ ສິ່ງແວດລ້ອມ 1/3 ແລະ ໃຫ້ຄວາມສໍາຄັນ ຫລື ນໍ້າໜັກຂອງແຕ່ລະມິຕິໃນແຕ່ລະຂົງເຂດເທົ່າກັນເຊັ່ນດຽວກັນ. ໃນຂົງເຂດເສດຖະກິດມີ 3 ມິຕິ ຄື: (1) ການຂະ ຫຍາຍຕົວຂອງເສດຖະກິດ, (2) ຫລຸດຜ່ອນຄວາມທຸກຍາກ ແລະ ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ ແລະ (3) ຫລຸດຜ່ອນຄວາມສ່ຽງ ແລະ ຄວາມບອບບາງຕໍ່ການເໜັງຕີງຂອງສະພາບເສດຖະກິດໂລກ. ແຕ່ລະມິຕິຈະມີນໍ້າໜັກ 1/3 ເທົ່າກັນ. ໃນຂົງເຂດສັງຄົມມີພຽງ 2 ມິຕິ ຄື: (1) ຄວາມສະເໝີພາບ ແລະ ເປັນທໍາໃນສັງຄົມ ແລະ (2) ຄວາມກວ້າງຂວາງ ແລະ ທົ່ວເຖິງ; ແຕ່ລະມິຕິຈະມີນໍ້າໜັກ 1/2. ໃນຂົງເຂດສິ່ງແວດລ້ອມປະກອບມີ 3 ມິຕິ ຄື: (1) ປະສິທິພາບ, ປະສິດທິຜົນ ແລະ ຄວາມຍືນຍົງຂອງການນໍາໃຊ້ຊັບພະຍາກອນທໍາມະຊາດ, (2) ຄວາມສະອາດ ແລະ ເປັນມິດຕໍ່ສິ່ງແວດລ້ອມ ແລະ (3) ການຫລຸດຜ່ອນຄວາມສ່ຽງ ແລະ ຄວາມບອບບາງຕໍ່ສະພາບການປ່ຽນແປງດິນຟ້າອາກາດ ແລະ ວິກິດການທໍາມະຊາດ ແຕ່ລະມິຕິກໍ່ຕ້ອງມີນໍ້າໜັກ 1/3 ເທົ່າກັນ.

ໃນແຕ່ລະມິຕິຈະມີຈໍານວນຕົວຊີ້ວັດຫລັກ ແລະ ຕົວຊີ້ວັດຍ່ອຍແຕກຕ່າງກັນ ຂຶ້ນກັບຄວາມກ່ຽວຂ້ອງ ແລະ ການເຂົ້າເຖິງຂໍ້ມູນ. ຕົວຊີ້ວັດໃນແຕ່ລະມິຕິຈະມີນໍ້າໜັກເທົ່າກັນ ແລະ ຕົວຊີ້ວັດຍ່ອຍໃນແຕ່ລະຕົວຊີ້ວັດກໍ່ມີນໍ້າໜັກເທົ່າກັນເຊັ່ນກັນ.

ເພື່ອໃຫ້ສາມາດວັດແທກ ແລະ ຕິດຕາມໄດ້ຢ່າງພາວະວິໄສ ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ໄດ້ກໍານົດມາດຕະຖານໃນການປະເມີນແຕ່ລະຕົວຊີ້ວັດຫລັກ ຫລື ແຕ່ລະຕົວຊີ້ວັດຍ່ອຍ ໂດຍຖືເອົາຜົນສໍາເລັດສູງສຸດ/ດີທີ່ສຸດ ທີ່ປະເທດໃດປະເທດໜຶ່ງໃນອາຊີ-ປາຊີຟິກສາມາດບັນລຸໄດ້ໃນໄລຍະໃດໜຶ່ງ. ຄະແນນຂອງແຕ່ລະຕົວຊີ້ວັດຫລັກ ຫລື ຕົວຊີ້ວັດຍ່ອຍ ແມ່ນອັດຕາສ່ວນຮ້ອຍ (%) ຂອງຕົວຊີ້ວັດຫລັກ ຫລື ຕົວຊີ້ວັດຍ່ອຍດັ່ງກ່າວ ທຽບກັບມາດຕະຖານ. ຕາຕະລາງລຸ່ມນີ້ສະແດງຜົນການວັດແທກການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ.

**ຕາຕະລາງທີ 2: ຜົນການປະເມີນການເຕີບໂຕສີຂຽວຂອງ ສປປ ລາວ ແລະ ຄາດໝາຍປີ 2025 ແລະ 2030**

| ຕົວຊີ້ວັດການເຕີບໂຕສີຂຽວ | ປີຖານ | ຄາດໝາຍ ປີ 2025 | ຄາດໝາຍ ປີ 2030 | ມາດຖານ ໃນການປະເມີນ |
|---|---|---|---|---|
| **ດັດຊະນີການເຕີບໂຕສີຂຽວແຫ່ງຊາດ ຂອງ ສປປ ລາວ** | **55.76** | **63.05** | **69.42** | |
| I. ເສດຖະກິດ/ການຂະຫຍາຍຕົວຂອງເສດຖະກິດ, ຫລຸດຜ່ອນຄວາມທຸກຍາກ, ການຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນ ແລະ ການຫລຸດຜ່ອນຄວາມສ່ຽງ ແລະ ຄວາມບອບບາງຕໍ່ສະພາບການເໜັງຕີງຂອງເສດຖະກິດໂລກ | 51.82 | 55.07 | 58.93 | |
| **1.1. ການຂະຫຍາຍຕົວຂອງເສດຖະກິດ** | **76.7** | **67.9** | **67.9** | |
| 1.1.1. ອັດຕາການຂະຫຍາຍຕົວຂອງ GDP ສະເລ່ຍ (%) | 76.7 | 67.9 | 67.9 | ສູງສຸດແມ່ນ 10.3% |
| **1.2. ຫລຸດຜ່ອນຄວາມທຸກຍາກ ແລະ ລະດັບຊີວິດການເປັນຢູ່ຂອງປະຊາຊົນ** | **41.55** | **47.55** | **50.5** | |
| 1.2.1. ລາຍຮັບສະເລ່ຍຕໍ່ຫົວຄົນ (ໂດລາສະຫະລັດ/ຄົນ) | 3.1 | 5 | 6 | ສູງສຸດແມ່ນ 58,246 ໂດລາສະຫະລັດ/ຄົນ/ປີ |
| 1.2.2. ອັດຕາສ່ວນຜູ້ທຸກຍາກ (%) | 80 | 90 | 95 | ຕໍ່າສຸດແມ່ນ 0% |
| **1.3. ຫລຸດຜ່ອນຄວາມສ່ຽງ ແລະ ຄວາມບອບບາງຕໍ່ການເໜັງຕີງຂອງສະພາບເສດຖະກິດໂລກ** | **37.2** | **49.75** | **58.4** | |
| 1.3.1. ອັດຕາການເຕົ້າໂຮມຂອງການສົ່ງອອກ (ຜົນບວກອັດຕາສ່ວນມູນຄ່າ 3 ປະເພດທີ່ສົ່ງອອກຫລາຍທີ່ສຸດ (%) | 41.1 | 61.1 | 72.2 | ຕໍ່າສຸດແມ່ນ 10% |
| 1.3.2. ອັດຕາການເຕົ້າໂຮມຂອງປະເທດສົ່ງອອກ (ຜົນບວກອັດຕາສ່ວນມູນຄ່າສິນຄ້າສົ່ງອອກໄປ 3 ປະເທດທີ່ສົ່ງອອກໄປຫລາຍທີ່ສຸດ) (%) | 30 | 44.4 | 55.5 | ຕໍ່າສຸດແມ່ນ 10% |
| 1.3.3. ອັດຕາສ່ວນແຮງງານໃນລະບົບທີ່ໄດ້ຮັບການປົກປ້ອງຈາກກົດໝາຍແຮງງານ ແລະ ລະບົບປະກັນສັງຄົມ | 40.5 | 43.75 | 47.5 | ດີທີ່ສຸດ 80% |
| II. ສັງຄົມ/ຄວາມສະເໝີພາບ, ເປັນທຳ ແລະ ທົ່ວເຖິງໃນສັງຄົມ | 67.75 | 79.32 | 87.43 | |
| **2.1. ຄວາມສະເໝີພາບ ແລະ ເປັນທຳ** | **62.13** | **73.30** | **81.86** | |
| 2.1.1. ຄວາມສະເໝີພາບດ້ານລາຍຮັບ (GINI) | 85.4 | 89.9 | 93.9 | ຕໍ່າສຸດແມ່ນ 25.5% |
| 2.1.2. ບົດບາດຍິງ-ຊາຍ | 46.00 | 60.00 | 71.67 | |
| 2.1.2.1. ອັດຕາສ່ວນສະມາຊິກສະພາແຫ່ງຊາດເພດຍິງ (%) | 50 | 60 | 70 | ດີທີ່ສຸດ 50% |
| 2.1.2.2. ອັດຕາສ່ວນຜູ້ຍິງໃນຄະນະລັດຖະບານ (%) | 10 | 30 | 50 | ດີທີ່ສຸດ 50% |
| 2.1.2.3. ອັດຕາສ່ວນຜູ້ຍິງຕໍ່ຜູ້ຊາຍໃນການສຶກສາຂັ້ນສູງ (%) | 78 | 90 | 95 | ດີທີ່ສຸດແມ່ນ 1 |
| 2.1.3. ຄວາມແຕກຕ່າງລະຫວ່າງຕົວເມືອງ ແລະ ຊົນນະບົດ | 55 | 70 | 80 | |
| 2.1.3.1. ອັດຕາສ່ວນການໃຊ້ຈ່າຍ ແລະ ການບໍລິໂພກໃນຊົນນະບົດຕໍ່ຕົວເມືອງ | 55 | 70 | 80 | ດີທີ່ສຸດແມ່ນ 1 |
| **2.2. ຄວາມກວ້າງຂວາງ ແລະ ທົ່ວເຖິງຂອງການພັດທະນາ** | **73.37** | **85.33** | **93.00** | |
| 2.2.1. ອັດຕາການຂາດສານອາຫານຂອງເດັກນ້ອຍລຸ່ມ 5 ປີ | 67.5 | 75 | 79 | |
| 2.2.1.1. ອັດຕາສ່ວນຂອງເດັກລຸ່ມ 5 ປີ ທີ່ມີນໍ້າໜັກຕໍ່າກວ່າເກນ (%) | 73 | 80 | 83 | ດີທີ່ສຸດ 0% |
| 2.2.1.2. ອັດສ່ວນເດັກລຸ່ມ 5 ປີທີ່ມີຄວາມສູງຕໍ່າກວ່າເກນ (%) | 62 | 70 | 75 | ດີທີ່ສຸດ 0% |
| 2.2.2. ອັດຕາສ່ວນປະຊາກອນເຂົ້າເຖິງນໍ້າສະອາດ (%) | 84.7 | 96 | 100 | ດີທີ່ສຸດ 100% |

| | | | | |
|---|---|---|---|---|
| 2.2.3. ອັດຕາສ່ວນປະຊາກອນນຳໃຊ້ວິດຖ່າຍ (%) | 67.9 | 85 | 100 | ດີທີ່ສຸດ 100% |
| III. ສິ່ງແວດລ້ອມ/ປະສິດທິພາບຂອງການນຳໃຊ້ຊັບພະຍາກອນທຳມະຊາດ, ຄວາມສະອາດ ແລະທົນທານຕໍ່ສະພາບການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດທາງທຳມະຊາດ | 47.72 | 54.78 | 61.89 | |
| **3.1. ປະສິດທິພາບ ແລະ ປະສິດທິຜົນຂອງການນຳໃຊ້ຊັບພະຍາກອນ** | **38.45** | **47.63** | **52.87** | |
| 3.1.1. ອັດຕາສ່ວນຂອງການນຳໃຊ້ພະລັງງານຕໍ່ GDP (toe/GDP-million) | 28 | 34.5 | 36.1 | ດີທີ່ສຸດແມ່ນ 83 toe/GDP-milliom |
| 3.1.2. ປະສິດທິພາບຂອງການນຳໃຊ້ດິນກະສິກຳ | 67.85 | 83.4 | 89.2 | |
| 3.1.2.1. ສະມັດຕະພາບຂອງການປູກເຂົ້ານາປີ (ໂຕນ/ເຮັກຕາ) | 67.7 | 81.5 | 87.7 | ສູງສຸດ 6.5 ໂຕນ/ເຮັກຕາ |
| 3.1.2.1. ສະມັດຕະພາບຂອງການປູກເຂົ້ານາແຊງ (ໂຕນ/ເຮັກຕາ) | 68 | 85.3 | 90.7 | ສູງສຸດ 7.5 ໂຕນ/ເຮັກຕາ |
| 3.1.3. ອັດຕາສ່ວນການສົ່ງອອກຊັບພະຍາກອນທຳມະຊາດໃນລວມຍອດມູນຄ່າສິນຄ້າສົ່ງອອກ (%) | 19.5 | 25 | 33.3 | ຕ່ຳທີ່ສຸດ 10% |
| **3.2. ສະອາດ ແລະ ເປັນມິດຕໍ່ສິ່ງແວດລ້ອມ** | **53.05** | **54.60** | **59.26** | |
| 3.2.1. ອັດຕາສ່ວນການປ່ອຍທາດອາຍພິດເຮືອນແກ້ວຕໍ່ GDP (ໂຕນ/GDP-million) | 84 | 93.3 | 100 | ດີທີ່ສຸດ 70 ໂຕນ/GDP-million |
| 3.2.2. ການສ້າງຂີ້ເຫຍື້ອ ຫລື ສິ່ງເສດເຫລືອຕໍ່ຫົວຄົນ (Kg/ຄົນ/ປີ) | 42.2 | 47.6 | 55.5 | ຕ່ຳສຸດ 100Kg/ຄົນ/ປີ |
| 3.2.3. ອັດຕາສ່ວນຂອງຂະແໜງການເສດຖະກິດທີ່ເປັນສີຂຽວໃນ GDP | | | | |
| 3.2.3.1. ອັດຕາສ່ວນລາຍຮັບຈາກທ່ອງທ່ຽວ ໃນ GDP | | | | |
| 3.2.3. ອັດຕາສ່ວນຂີ້ເຫຍື້ອ ຫລື ສິ່ງເສດເຫລືອທີ່ຖືກນຳໃຊ້ຄືນ ຫລື ກຳຈັດຖິ້ມດ້ວຍວິທີ ແລະ ສະຖານທີ່ທີ່ຖືກຕ້ອງ (%) | 55.6 | 72.2 | 88.9 | ສູງສຸດ 90% |
| 3.2.4. ອັດຕາການປົກຫຸ້ມຂອງປ່າໄມ້ (%) | 57.6 | 100 | 100 | ສູງສຸດ 70% |
| 3.2.5. ອັດຕາການນຳໃຊ້ພະລັງງານສະອາດ (ໄຟຟ້າພະລັງງານນ້ຳ, ພະລັງານແສງອາທິດ ແລະ ພະລັງງານລົມ) (%) | 15 | 31.3 | 50 | ສູງສຸດ 80% |
| 3.2.6. ອັດຕາສ່ວນການນຳເຂົ້ານ້ຳມັນເຊື້ອໄຟ ແລະ ອາຍແກັສ (%) | 29.4 | 41.6 | 50 | ຕ່ຳສຸດ 5% |
| 3.2.7. ການນຳໃຊ້ພະລັງງານໄຟຟ້າສະເລ່ຍຕໍ່ຫົວຄົນ (ກິໂລວັດໂມງ/ຄົນ/ປີ) | 40.6 | 25.8 | 17.2 | ຕ່ຳສຸດ 258 ກິໂລວັດໂມງ/ຄົນ/ປີ |
| 3.2.8. ການປ່ອຍທາດອາຍພິດເຮືອນແກ້ວຕໍ່ຄົນ (ໂຕນ/ຄົນ/ປີ) | 100 | 25 | 12.5 | ຕ່ຳທີ່ສຸດ 0.15 ໂຕນ/ຄົນ/ປີ |
| **3.3. ຫລຸດຜ່ອນຄວາມສ່ຽງ ແລະ ຄວາມບອບບາງຕໍ່ສະພາບການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດທາງທຳມະຊາດ** | **51.67** | **62.10** | **73.53** | |
| 3.3.1. ອັດຕາສ່ວນມູນຄ່າຜົນເສຍຫາຍທາງເສດຖະກິດທີ່ເກີດຈາກໄພພິບັດທາງທຳມະຊາດ (% ຂອງ GDP) | 66.7<br>(ສະເລ່ຍ 2010-2015) | 80<br>(ສະເລ່ຍ 2020-2025) | 100<br>(ສະເລ່ຍ 2025-2030) | ຕ່ຳສຸດ 0.2% ຂອງ GDP |
| 3.3.2. ຈຳນວນປະຊາກອນສະເລ່ຍທີ່ໄດ້ຮັບຜົນກະທົບຈາກໄພພິບັດທາງທຳມະຊາດ | 25 | 31.3<br>(ສະເລ່ຍ 2020-2025) | 41.7<br>(ສະເລ່ຍ 2025-2030) | ຕ່ຳສຸດ 50,000 ຄົນ |
| 3.3.3. ອັດຕາສ່ວນມູນຄ່າຜະລິດຕະພັນກະສິກຳໃນ GDP (%) | 63.3 | 75 | 78.9 | ຕ່ຳສຸດ 15% |

ຜົນການປະເມີນໃນຕາຕະລາງຂ້າງເທິງໄດ້ຊີ້ໃຫ້ເຫັນວ່າ ດັດຊະນີການເຕີບໂຕສີຂຽວຂອງ ສປປ ລາວ ເທົ່າກັບປະມານ 55,76% ຂອງມາດຕະຖານທີ່ດີທີ່ສຸດໃນແຕ່ລະດ້ານທີ່ປະເທດໃດໜຶ່ງໃນອາຊີ-ປາຊີຟິກ ສາມາດບັນລຸໄດ້ໃນໄລຍະໃດໜຶ່ງ ແລະ ຖ້າສາມາດບັນລຸໄດ້ຄາດໝາຍໃນແຕ່ລະດ້ານທີ່ກຳນົດໃນຍຸດທະສາດສະບັບນີ້ ດັດຊະນີດັ່ງກ່າວຈະເພີ່ມຂຶ້ນເປັນ 63,05% ໃນປີ 2025 ແລະ ເປັນ 69,42% ໃນປີ 2030.

## 5.3. ການຕິດຕາມ ແລະ ລາຍງານ

- ສູນສົ່ງເສີມການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ຈະຮັບຜິດຊອບຕິດຕາມ ແລະ ລາຍງານຄວາມຄືບໜ້າຂອງການຈັດຕັ້ງປະຕິບັດການພັດທະນາເສດຖະກິດ-ສັງຄົມເປັນແຕ່ລະໄລຍະ. ນັບແຕ່ປີ 2019 ເປັນຕົ້ນໄປ, ສູນຈະສ້າງ ແລະ ເຜີຍແຜ່ບົດລາຍງານດັ່ງກ່າວປະຈຳປີ, ທຸກໆປີ ໃຫ້ແກ່ສາທາລະນະ ເພື່ອໃຫ້ທຸກພາກສ່ວນຮັບຊາບ ແລະ ສາມາດນຳໄປຜັນຂະຫຍາຍເຂົ້າໃນວຽກງານຂອງຕົນຢ່າງມີປະສິດທິພາບ. ເນື້ອໃນຕົ້ນຕໍຂອງບົດລາຍງານດັ່ງກ່າວຈະປະກອບດ້ວຍ: (1) ການທົບທວນຄືນສະພາບການການຈັດຕັ້ງປະຕິບັດ ແລະ ຜົນສຳເລັດຂອງພັດທະນາເສດຖະກິດ-ສັງຄົມຕາມທິດສີຂຽວຍືນຍົງໃນ ສປປ ລາວ ໃນປີຜ່ານມາ, (2) ຕີລາຄາ, ກາລະໂອກາດ ແລະ ສິ່ງທ້າທາຍໃນປີຕໍ່ໜ້າ ແລະ (3) ທິດທາງ ແລະ ຂໍ້ສະເໜີແນະກ່ຽວກັບວິທີການ ແລະ ມາດຕະການສືບຕໍ່ພັດທະນາເສດຖະກິດ-ສັງຄົມຕາມທິດສີຂຽວ-ຍືນຍົງ.

- ກະຊວງແຜນການ ແລະ ການລົງທຶນ ຈະນຳເນື້ອໃນຂອງບົດລາຍງານດັ່ງກ່າວເຂົ້າລາຍງານຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ແຫ່ງຊາດປະຈຳປີ.

- ຈຸດປະສານງານ ຫລື ຜູ້ປະສານງານການເຕີບໂຕສີຂຽວຂອງແຕ່ລະຂະແໜງການ ແລະ ທ້ອງຖິ່ນຈະລາຍງານຄວາມຄືບໜ້າຂອງການຈັດຕັ້ງຍຸດທະສາດການເຕີບໂຕສີຂຽວໃຫ້ຂັ້ນເທິງຂອງຕົນຊາບເປັນແຕ່ລະໄລຍະ.

# ເອກະສານອ້າງອີງ


- ລັດຖະບານແຫ່ງ ສປປ ລາວ (2016). ວິໄສທັດ 2030 ແລະ ຍຸດທະສາດການພັດທະນາເສດຖະກິດ-ສັງຄົມ 10 ປີ (2016-2025). ກະຊວງແຜນການ ແລະ ການລົງທຶນ.

- ລັດຖະບານແຫ່ງ ສປປ ລາວ (2016). ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ VIII (2016-2020). ກະຊວງແຜນການ ແລະ ການລົງທຶນ.

- ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ (2017). ຂອບໂຄງສ້າງການຄົ້ນຄວ້າແຫ່ງຊາດເພື່ອຊຸກຍູ້ການຈັດຕັ້ງປະຕິບັດວິໄສທັດ 2030, ຍຸດທະສາດເຖິງປີ 2025 ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ VIII (2016-2020).

- ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ (2015). ການຫລຸດຜ່ອນດ້ານຄວາມສ່ຽງຢູ່ ສປປ ລາວ ຈາກມຸມມອງການຫລຸດພົ້ນຈາກສະຖານະພາບປະເທດດ້ອຍພັດທະນາ.

- ກະຊວງໂຍທາທິການ ແລະ ຂົນສົ່ງ (2017). ວິໄສທັດຮອດປີ 2030 ແລະ ຍຸດທະສາດພັດທະນາຕົວເມືອງໄລຍະ 10 ປີ (2016-2025) ແລະ ແຜນລົງທຶນ 4 ປີ (2017-2020).

- ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (2009). ຂໍ້ຕົກລົງກ່ຽວກັບມາດຖານສິ່ງແວດລ້ອມແຫ່ງຊາດຂອງ ສປປ ລາວ.

- ກະຊວງການເງິນ (2016). ວິໄສທັດ 2030 ແລະ ແຜນຍຸດທະສາດດ້ານການເງິນແຫ່ງຊາດ. ສະຖາບັນການເຕີບໂຕສີຂຽວໂລກ (2017). ບົດລາຍງານແຫ່ງຊາດ ກ່ຽວກັບການປະເມີນທ່າແຮງການເຕີບໂຕສີຂຽວ ຂອງ ສປປ ລາວ.

- ສະຖາບັນການເຕີບໂຕສີຂຽວໂລກ (2017). ການປະຕິຮູບ ແລະ ການນຳສະເໜີກົນໄກດ້ານການເງິນ ເພື່ອສະໜອງໃຫ້ແກ່ການເຕີບໂຕສີຂຽວ.

- ສະຖາບັນການເຕີບໂຕສີຂຽວໂລກ (2017). ການເຕີບໂຕສີຂຽວຂອງ ສປປ ລາວ: ການປະເມີນດ້ານວິໄສທັດ, ຊ່ອງຫວ່າງ ແລະ ບູລິມະສິດການຈັດຕັ້ງປະຕິບັດ.

- ລັດຖະບານແຫ່ງ ສສ.ຫວຽດນາມ (2012). ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສສ.ຫວຽດນາມ.

- ລັດຖະບານແຫ່ງລາຊະອານາຈັກກຳປູເຈຍ (2013). ນະໂຍບາຍແຫ່ງຊາດກ່ຽວກັບການເຕີບໂຕສີຂຽວ ຢູ່ລາຊະອານາຈັກກຳປູເຈຍ.

- ລັດຖະບານແຫ່ງ ສປ.ຈີນ (2009). ຍຸດທະສາດແຫ່ງຊາດກ່ຽວກັບການເຕີບໂຕສີຂຽວຂອງ ສປ.ຈີນ.

- ລັດຖະບານແຫ່ງ ສ.ເກົາຫລີ (2008). ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສ.ເກົາຫລີ. ຄະນະກຳມະການແຫ່ງຊາດວຽກງານການເຕີບໂຕສີຂຽວ.

- ລັດຖະບານແຫ່ງປະເທດຈໍແດນ (2017). ແຜນງານການເຕີບໂຕສີຂຽວແຫ່ງຊາດຂອງປະເທດຈໍແດນ

- ບູນນິວ (2017). (ຮ່າງ) ຄູ່ມືການປະເມີນຍຸດທະສາດດ້ານສິ່ງແວດລ້ອມຂອງການເຕີບໂຕສີຂຽວ. ກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

# ເອກະສານຊ້ອນທ້າຍ

**ເອກະສານຊ້ອນທ້າຍທີ 1:** ຕາຕະລາງສະຫລຸບຫຍໍ້ຂົງເຂດ ແລະ ຂະແໜງການຈຸດສຸມ ແລະ ຂະແໜງການປົ່ນອ້ອມຂອງຍຸດທະສາດການເຕີບໂຕສີຂຽວແຫ່ງຊາດ ຂອງ ສປປ ລາວ.

| **ຂົງເຂດ/ຂະແໜງການ ຈຸດສຸມ ແລະ ສະໜັບສະໜູນ** | **ຈຸດສຸມ** |
|---|---|
| I. ຂົງເຂດຈຸດສຸມ | |
| • ສະພາບແວດລ້ອມ ແລະ ການຄຸ້ມຄອງການລົງທຶນ | - ທົບທວນ ແລະ ປັບປຸງກົດໝາຍ, ກົດລະບຽບ ແລະ ກົນໄກເພື່ອອຳນວຍຄວາມສະດວກ ແລະ ເພີ່ມປະສິດທິພາບຂອງການຄຸ້ມຄອງການລົງທຶນ.<br>- ເພີ່ມຂີດຄວາມສາມາດໃຫ້ແກ່ການຈັດຕັ້ງ ແລະ ພະນັກງານກ່ຽວຂ້ອງ.<br>- ເພີ່ມການຕິດຕາມກວດກາ ແລະ ມາດຕະການຕໍ່ຜູ້ລະເມີດ. |
| • ພັດທະນາຊົນນະບົດ ແລະ ຫລຸດຜ່ອນຄວາມທຸກຍາກ | - ສືບຕໍ່ຈັດຕັ້ງປະຕິບັດນະໂຍບາຍໂຮມບ້ານນ້ອຍໃຫ້ເປັນບ້ານໃຫຍ່ ແລະ ສ້າງບ້ານໃຫຍ່ໃຫ້ເປັນຕົວເມືອງນ້ອຍສີຂຽວ-ໜ້າຢູ່.<br>- ສືບຕໍ່ພັດທະນາເສັ້ນທາງຄົມມະນາຄົມເຊື່ອມຕໍ່ຊົນນະບົດກັບຕົວເມືອງ.<br>- ປັບປຸງພື້ນຖານໂຄງລ່າງດ້ານການສຶກສາ, ສາທາລະນະສຸກ, ນ້ຳປະປາ, ໂທລະຄົມມະນາຄົມ ແລະ ຂໍ້ມູນຂ່າວສານ.<br>- ພັດທະນາທັກສະການດຳລົງຊີວິດ ແລະ ສີມືແຮງງານ.<br>- ສຸມໃສ່ສ້າງກອງທຶນການເງິນຈຸລະພາກ ແລະ ກົນໄກການເງິນອື່ນໆ ເພື່ອອຳນວຍຄວາມສະດວກໃຫ້ແກ່ການເຂົ້າເຖິງແຫລ່ງທຶນ.<br>- ສົ່ງເສີມການຜະລິດເປັນສິນຄ້າ ແລະ ຊົມໃຊ້ຜະລິດຕະພັນພື້ນເມືອງຊົນນະບົດ. |
| • ບົດບາດຍິງ-ຊາຍ/ ສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ. | - ເຊື່ອມສານບົດບາດຍິງຊາຍເຂົ້າໃນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນຂະແໜງການແລະ ທ້ອງຖິ່ນ.<br>- ສົ່ງເສີມການເຂົ້າເຖິງການສຶກສາຂອງແມ່ຍິງ, ໂດຍສະເພາະແມ່ນການສຶກສາລະດັບສູງ.<br>- ສົ່ງເສີມການຝຶກວິຊາຊີບ, ສີມືແຮງງານ ແລະ ສ້າງວຽກເຮັດງານທຳໃຫ້ແກ່ແມ່ຍິງ.<br>- ຊຸກຍູ້-ສົ່ງເສີມການມີສ່ວນຮ່ວມຂອງແມ່ຍິງໃນການການເຄື່ອນໄຫວກິດຈະກຳທາງເສດຖະກິດ, ການເມືອງ ແລະ ວັດ ທະນະທຳ-ສັງຄົມ.<br>- ສົ່ງເສີມການໃຫ້ການປົກປ້ອງແມ່ຍິງ ແລະ ເດັກນ້ອຍທີ່ໄດ້ຜົນກະທົບຈາກການໃຊ້ຄວາມຮຸນແຮງໃນຄອບຄົວ, ເພດແລະ ການຄ້າມະນຸດ. |
| • ການປັບຕົວເຂົ້າກັບສະພາບການປ່ຽນແປງດິນຟ້າອາກາດ ແລະ ການຄຸ້ມຄອງໄພພິບັດທາງທຳມະຊາດ | - ເພີ່ມຄວາມຮັບຮູ້, ເຂົ້າໃຈ ແລະ ຂີດຄວາມສາມາດຂອງພະນັກງານ ແລະ ອົງການຈັດຕັ້ງຕ່າງໆທີ່ກ່ຽວຂ້ອງກັບການປັບຕົວເຂົ້າກັບສະພາບການປ່ຽນແປງດິນຟ້າອາກາດ.<br>- ສົ່ງເສີມການປັບປຸງລະບົບເຕືອນໄພລ່ວງໜ້າໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງຂຶ້ນ.<br>- ສົ່ງເສີມການສ້າງຕັ້ງ ແລະ ເພີ່ມຂີດຄວາມສາມາດຂອງຄັງແຮຊ່ວຍເຫລືອສຸກເສີນແຫ່ງຊາດ, ຂັ້ນແຂວງ, ເມືອງ ແລະ ບ້ານ.<br>- ສົ່ງເສີມການຂະຫຍາຍອັດຕາການປົກຫຸ້ມ ແລະ ການຄຸ້ມຄອງຂອງລະບົບປະກັນສັງຄົມແຫ່ງຊາດໃຫ້ກວ້າງຂວາງ ແລະ ທົ່ວເຖິງ.<br>- ສົ່ງເສີມການຂະຫຍາຍຕົວຂອງເສດຖະກິດທີ່ປ່ອຍອາຍພິດເຮືອນແກ້ວຕ່ຳ.<br>- ສົ່ງເສີມການສ້າງແຫລ່ງລາຍຮັບຂອງປະຊາຊົນໃຫ້ມີຄວາມຫລາກຫລາຍ. |

| II. ຂະແໜງການຈຸດສຸມ | |
|---|---|
| • ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ | - ສ້າງກົນໄກປະສານງານໃນການຄົ້ນຄວ້າ, ສຳຫລວດ, ຈັດສັນ, ສ້າງແຜນການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທຳມະຊາດແບບມີສ່ວນຮ່ວມຢ່າງກວ້າງຂວາງຂອງຂະແໜງການ ແລະ ທ້ອງຖິ່ນ.<br>- ເພີ່ມທະວີພາລະບົດບາດ ແລະ ຄວາມເຂັ້ມແຂງຂອງຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມໃນການຄຸ້ມຄອງມະຫາພາກ.<br>- ສຳຫລວດ, ຈັດສັນ ແລະ ສ້າງແຜນການຄຸ້ມຄອງ ແລະ ນຳໃຊ້ທີ່ດິນແຫ່ງຊາດໃຫ້ສຳເລັດໂດຍໄວ.<br>- ເພີ່ມທະວີການປົກປັກຮັກສາ ແລະ ຄຸ້ມຄອງຊັບພະຍາກອນນ້ຳ ແລະ ແຫລ່ງນ້ຳໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງຂຶ້ນ.<br>- ເພີ່ມທະວີຄວບຄຸມມົນລະພິດໃຫ້ມີປະສິດທະພາບ ແລະ ປະສິດທິຜົນສູງຂຶ້ນ. |
| • ກະສິກຳ ແລະ ປ່າໄມ້ | |
| ➢ ກະສິກຳ | - ຍົກສູງປະສິດທິພາບຂອງການຜະລິດດ້ວຍການນຳໃຊ້ເຕັກນິກ ແລະ ເຕັກໂນໂລຊີທີ່ສະອາດ, ເປັນມິດຕໍ່ສິ່ງແວດລ້ອມ.<br>- ຫລຸດຜ່ອນສິ່ງເສດເຫລືອ ແລະ ມົນລະພິດ ທີ່ເກີດຈາກການຜະລິດກະສິກຳ ແລະ ກ້າວໄປສູ່ການຜະລິດກະສິກຳແບບຄົບວົງຈອນ.<br>- ພັດທະນາຄວາມຮູ້ ແລະ ທັກສະຂອງຜູ້ຜະລິດ ເພື່ອໃຫ້ບັນລຸເຕັກນິກທີ່ຖືກປັບປຸງ ແລະ ການຜະລິດທີ່ມີປະສິດທິພາບ.<br>- ສົ່ງເສີມການຜະລິດກະສິກຳແບບປະສົມປະສານ ແລະ ໝູນວຽນປູກພືດ.<br>- ເພີ່ມທະວີການຄຸ້ມຄອງການຜະລິດ, ນຳເຂົ້າ, ຈຳໜ່າຍ ແລະ ນຳໃຊ້ສານເຄມີທີ່ເປັນອັນຕະລາຍຕໍ່ສຸຂະພາບຂອງຄົນ, ສັດ ແລະ ສິ່ງແວດລ້ອມ.<br>- ຊຸກຍູ້ ແລະ ສົ່ງເສີມການຜະລິດກະສິກຳສະອາດ ແລະ ກະສິກຳອິນຊີ (Organics) ກໍ່ຄື ການປູກ ແລະ ການລ້ຽງ ທີ່ເປັນພື້ນຖານໃຫ້ແກ່ການຜະລິດຫັດຖະກຳ ທີ່ເປັນມູນເຊື້ອ ແລະ ເປັນ ເອກະລັກຂອງຊາດ.<br>- ປັບປຸງ ແລະ ຂະຫຍາຍລະບົບພື້ນຖານໂຄງລ່າງການຜະລິດກະສິກຳ. |
| ➢ ປ່າໄມ້ | - ຊຸກຍູ້ ແລະ ສົ່ງເສີມການສ້າງ ແລະ ຈັດຕັ້ງປະຕິບັດກົນໄກຄຸ້ມຄອງ, ປົກປັກຮັກສາ ແລະ ນຳໃຊ້ປ່າແບບມີສ່ວນຮ່ວມຂອງຂະແໜງການ ແລະ ທ້ອງຖິ່ນຢ່າງກວ້າງຂວາງ.<br>- ຊຸກຍູ້ສົ່ງເສີມການສຳຫລວດ, ໝາຍເຂດ ແລະ ຈັດປະເພດປ່າ ພ້ອມທັງການສ້າງ, ປັບປຸງ ແລະ ຈັດຕັ້ງປະຕິບັດກົດໝາຍ ແລະ ກົດລະບຽບກ່ຽວກັບການນຳໃຊ້ປ່າແຕ່ລະປະເພດໃຫ້ມີປະສິທິພາບ, ປະສິດທິຜົນ ແລະ ຍືນຍົງ.<br>- ສົ່ງເສີມການປົກປັກຮັກສາ ແລະ ນຳໃຊ້ປ່າແບບຍືນຍົງ ໂດຍເອົາຊຸມຊົນເປັນພື້ນຖານ.<br>- ຊຸກຍູ້ ແລະ ສົ່ງເສີມການລົງທຶນຂອງນັກລົງທຶນພາຍໃນ ແລະ ຕ່າງປະເທດເຂົ້າໃນການປູກປ່າ ຫລື ຕົ້ນໄມ້ອຸດສາຫະກຳແບບປະສົມປະສານ ແລະ ໝູນວຽນພືດ ໃນດິນປອກໂລ້ນ ແລະ ດິນເຊື່ອມໂຊມ.<br>- ເພີ່ມທະວີການປັບປຸງ ແລະ ຟື້ນຟູຄຸນນະພາບຂອງປ່າ.<br>- ເພີ່ມທະວີການຕິດຕາມ, ກວດກາ, ສະກັດກັ້ນ ແລະ ຫລຸດຜ່ອນ ການຖືກທຳລາຍຂອງເນື້ອທີ່ປົກຫຸ້ມຂອງປ່າໄມ້.<br>- ຄົ້ນຄວ້າ, ສ້າງ ແລະ ຈັດຕັ້ງປະຕິບັດກົນໄກທາງການເງິນເພື່ອປົກປັກຮັກສາປ່າ. |

| | |
|---|---|
| • ອຸດສາຫະກຳ ແລະ ການຄ້າ | |
| ➢ ອຸດສາຫະກຳປຸງແຕ່ງ | - ຊຸກຍູ້ ແລະ ສົ່ງເສີມຂະບວນການຫັນເປັນອຸດສາຫະກຳ ແລະ ທັນສະໄໝຢ່າງແຂງແຮງ.<br>- ຊຸກຍູ້ສົ່ງເສີມການຜະລິດເປັນສິນຄ້າ ແລະ ເພີ່ມຂີດຄວາມສາມາດໃນການແຂ່ງຂັນໃນພາກພື້ນ ແລະ ສາກົນ.<br>- ສົ່ງເສີມ ແລະ ພັດທະນາອຸດສາຫະກຳປຸງແຕ່ງທີ່ເປັນທ່າແຮງຢູ່ ແລະ ອຸດສາຫະກຳທີ່ມີທ່າແຮງໃໝ່.<br>- ຄົ້ນຄວ້າ, ປັບປຸງ ແລະ ຈັດຕັ້ງປະຕິບັດກົນໄກການເງິນ ເພື່ອອຳນວຍຄວາມສະດວກ ໃຫ້ແກ່ຜູ້ປະກອບການໂຮງງານອຸດສາຫະກຳ ໃນການນຳເຂົ້າ ແລະ ນຳໃຊ້ເຕັກນິກ ແລະ ເຕັກໂນໂລຊີທີ່ທັນສະໄໝ.<br>- ສົ່ງເສີມການພັດທະນາອຸດສາຫະກຳແບບຄົບວົງຈອນ.<br>- ສ້າງພື້ນຖານໂຄງລ່າງສຳລັບການຖິ້ມ ເພື່ອການທຳລາຍເສດຂີ້ເຫຍື້ອອຸດສາຫະກຳ ທີ່ເປັນພິດທີ່ບໍ່ໄດ້ມາດຕະຖານທາງສິ່ງແວດລ້ອມ.<br>- ປັບປຸງ ແລະ ຈັດຕັ້ງປະຕິບັດມາດຕະຖານໂຮງງານອຸດສາຫະກຳ, ກົດລະບຽບ ແລະ ກົດໝາຍທີ່ກ່ຽວຂ້ອງກັບການຄຸ້ມຄອງສິ່ງແວດລ້ອມ ໃນຂະແໜງອຸດສາຫະກຳ.<br>- ເລັ່ງໃສ່ສົ່ງເສີມອຸດສາຫະກຳປຸງແຕ່ງຂະໜາດນ້ອຍ ແລະ ກາງ. |
| ➢ ຫັດຖະກຳ | - ສ້າງເງື່ອນໄຂ, ສະພາບແວດລ້ອມທາງດ້ານລະບຽບກົດໝາຍ ກໍ່ຄືການເຂົ້າເຖິງປັດໄຈການຜະລິດ, ຕະຫລາດ ແລະ ແຫລ່ງທຶນ ຂອງນາຍຊ່າງຫັດຖະກຳ ແລະ ຜູ້ປະກອບການຜະລິດສິນຄ້າຫັດຖະກຳ.<br>- ສົ່ງເສີມການສ້າງກຸ່ມນາຍຊ່າງ ແລະ/ຫລື ຜູ້ປະກອບການຜະລິດເຄື່ອງຫັດຖະກຳເປັນສິນຄ້າ.<br>- ສົ່ງເສີມການຜະລິດເປັນສິນຄ້າ, ການຕະຫລາດ, ການຂາຍ ແລະ ການຊົມໃຊ້ຜະລິດຕະພັນຫັດຖະກຳ. |
| ➢ ການຄ້າ | - ສົ່ງເສີມການນຳໃຊ້ຖົງທີ່ຜະລິດຈາກຝ້າຍທຳມະຊາດ ທີ່ສາມາດຍ່ອຍສະຫລາຍ ແລະ ສາມາດນຳໃຊ້ໄດ້ຫລາຍເທື່ອ ແລະ ນຳໃຊ້ໃບຕອງ ແລະ ໃບໄມ້ອື່ນໆໃນການຫຸ້ມຫໍ່ຜະລິດຕະພັນ.<br>- ສົ່ງເສີມການໂຄສະນາ ແລະ ການຂາຍສິນຄ້າທາງອອນລາຍ (Online).<br>- ເພີ່ມຄວາມຫລາກຫລາຍຂອງຜະລິດຕະພັນ, ໂດຍສະເພາະແມ່ນຜະລິດຕະພັນສຳເລັດຮູບ ຫລື ເຄິ່ງສຳເລັດຮູບ ແລະ ຕະຫລາດສົ່ງອອກ.<br>- ເພີ່ມທະວີການອຳນວຍຄວາມສະດວກໃຫ້ແກ່ການລົງທຶນເຂົ້າໃນການຜະລິດ, ການເຄື່ອນຍ້າຍພາຍໃນ, ການສົ່ງອອກ ແລະ ນຳເຂົ້າຜະລິດຕະພັນ/ສິນຄ້າທີ່ມີຂະບວນການຜະລະລິດສີຂຽວ-ເປັນມິດຕໍ່ສັງຄົມ ແລະ ສິ່ງແວດລ້ອມ.<br>- ອອກໃບຢັ້ງຢືນ, ສົ່ງເສີມການຜະລິດ, ການຂາຍ, ການຕະຫລາດ ແລະ ການບໍລິໂພກ/ຊື້ຜະລິດຕະພັນສີຂຽວທີ່ເປັນມິດຕໍ່ສິ່ງແວດລ້ອມໃນຕະຫລາດພາຍໃນ ແລະ ຕ່າງປະເທດຢ່າງແຂງແຮງ. |
| • ໂຍທາທິການ ແລະ ຂົນສົ່ງ | |
| ➢ ການພັດທະນາຕົວເມືອງ | - ອອກແບບຜັງເມືອງ, ແບບອາຄານສະຖານທີ່ ແລະ ການຄຸ້ມຄອງ ການອອກແບບປຸກສ້າງອາຄານສະຖານທີ່ໃນຕົວເມືອງນ້ອຍ (ເທດສະບານແຂວງ, ເທດສະບານເມືອງ ແລະ ເຂດຊຸມຊົນ ແນໃສ່ພັດທະນາຕົວເມືອງດັ່ງກ່າວ ໃຫ້ກາຍເປັນຕົວເມືອງທີ່ສວຍສົດງົດງາມ, ມີຄຸນຄ່າທາງສິລະປະ ແລະ ວັດທະນະທຳທີ່ເປັນເອກະລັກຂອງຊາດ.<br>- ສົ່ງເສີມການນຳໃຊ້ວັດສະດຸກໍ່ສ້າງ ທີ່ມີປະສິດທິພາບ, ເປັນມິດຕໍ່ສິ່ງແວດລ້ອມ ຫລື ຜະລິດຢູ່ພາຍໃນປະເທດ.<br>- ປັບປຸງລະບົບຄຸ້ມຄອງສິ່ງເສດເຫລືອໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງຂຶ້ນ.<br>- ຊຸກຍູ້, ສົ່ງເສີມນັກລົງທຶນພາຍໃນ ແລະ ຕ່າງປະເທດ ລົງທຶນເຂົ້າໃນທຸລະກິດສິ່ງເສດເຫລືອ.<br>- ເພີ່ມການປັບປຸງພື້ນຖານໂຄງລ່າງ (ລະບົບບຳບັດ) ແລະ ລະບົບປົກປັກຮັກສາ ແລະ ຄຸ້ມຄອງສິ່ງແວດລ້ອມໃນຕົວເມືອງ.<br>- ເລັ່ງໃສ່ການປູຢາງ, ການປູເບຕົງໃສ່ເສັ້ນທາງດິນແດງໃນຕົວເມືອງ ໂດຍສະເພາະແມ່ນ ໃນເຂດທີ່ມີປະຊາຊົນອາໄສຢູ່ຢ່າງໜາແໜ້ນ ແລະ ມີຍານພາຫະນະສັນຈອນຫລາຍ.<br>- ຄົ້ນຄວ້າ ແລະ ທົດລອງສ້າງຕົວເມືອງ ແລະ ຊົນນະບົດ (ຊຸມຊົນ) ສີຂຽວ. |

| | |
|---|---|
| ➢ ຂົນສົ່ງ | - ປັບປຸງປຸງພື້ນຖານໂຄງລ່າງດ້ານການຂົນສົ່ງໃນຕົວເມືອງເພື່ອສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃຫ້ແກ່ຍ່າງ, ໃຊ້ພາຫະນະຂົນສົ່ງທີ່ບໍ່ໃຊ້ເຄື່ອງຈັກ (ລົດຖີບ) ແລະ ການໃຫ້ບໍລິການລົດຂົນສົ່ງສາທາລະນະ (ລົດເມ).<br>- ອອກແບບ ແລະ ຄຸ້ມຄອງໂຄງລ່າງພື້ນຖານຕາໜ່າງຖະໜົນຫົນທາງໃຫ້ມີໂຄງສ້າງໝັ້ນຄົງ ແລະ ທົນທານຕໍ່ສະພາບການປ່ຽນແປງດິນຟ້າອາກາດ.<br>- ປູກຈິດສຳນຶກ ແລະ ສ້າງຄ່ານິຍົມໃຫ້ປະຊາຊົນຫັນມານິຍົມການຍ່າງ, ໃຊ້ພາຫະນະ ເດີນທາງທີ່ບໍ່ໃຊ້ເຄື່ອງຈັກ (ຕົວຢ່າງ: ລົດຖີບ) ເພື່ອສຸຂະພາບ ແລະ/ຫລື ລົດຂົນສົ່ງສາທາລະນະ.<br>- ສົ່ງເສີມການຜະລິດ, ນຳເຂົ້າ ແລະ ນຳໃຊ້ພະຫະນະຂົນສົ່ງທີ່ນຳໃຊ້ພະລັງງານສະອາດ ຫລື ພະລັງງານທີ່ມີຢູ່ພາຍໃນປະເທດ. |
| • ພະລັງງານ ແລະ ບໍ່ແຮ່ | |
| ➢ ພະລັງງານ | - ຊຸກຍູ້-ສົ່ງເສີມການສ້າງກົນໄກພັດທະນາຂະແໜງການໄຟຟ້າແບບມີສ່ວນຮ່ວມຂອງຫລາຍຂະແໜງການ ແລະ ທ້ອງຖິ່ນ.<br>- ຂະຫຍາຍຕາຂ່າຍໄຟຟ້າ (ລະບົບສາຍສົ່ງ)ໃຫ້ກວ້າງຂວາງ, ທົ່ວເຖິງ, ເຊື່ອມຈອດກັນພາຍໃນປະເທດ ແລະ ເຊື່ອມໂຍງກັບພາກພື້ນ ແລະ ສາກົນ.<br>- ຊຸກຍູ້ສົ່ງເສີມການລົງທຶນຂອງລັດ, ເອກະຊົນພາຍໃນ ແລະ ຕ່າງປະເທດເຂົ້າໃນການຜະລິດໄຟຟ້າພະລັງງານນ້ຳ, ພະລັງງານແສງອາທິດ ແລະ ພະລັງງານລົມ.<br>- ເພື່ອທະວີການຮ່ວມມືກັບພາກພື້ນ ແລະ ສາກົນໃນການສຶກສາຄວາມເປັນໄປໄດ້ ແລະ ສ້າງຂີດຄວາມສາມາດໃຫ້ແກ່ພະນັກງານໃຫ້ນັກພັດທະນາພະລັງງານທາງເລືອກ: ນິວເຄຣຍ, ໄຮໂດຣເຈັນ ແລະ ອື່ນໆ.<br>- ຍົກສູງປະສິດທິພາບຂອງການນຳໃຊ້ພະລັງງານ.<br>- ຫລຸດຜ່ອນການນຳໃຊ້ພະລັງງານທີ່ບໍ່ສະອາດ ແລະ ບໍ່ເປັນມິດກັບສິ່ງແລດລ້ອມ.<br>- ສະໜອງພະລັງງານໄຟຟ້າທີ່ມີຄຸນນະພາບ ແລະ ປອດໄພໃຫ້ທົ່ວເຖິງ.<br>- ປູກຈິດສຳນຶກ, ນຳໃຊ້ເຄື່ອງມືທາງເສດຖະກິດ (ກົນໄກລາຄາ ຫລື ອາກອນ) ແລະ ເຜີຍແຜ່ນິຕິກຳທີ່ກ່ຽວຂ້ອງເພື່ອຊຸກຍູ້ໃຫ້ປະຊາຊົນນຳໃຊ້ພະລັງງານຢ່າງປະຢັດ, ມີປະສິດທິພາບ ແລະ ປະສິດທິຜົນສູງ. |
| ➢ ບໍ່ແຮ່ | - ເອົາໃຈໃສ່ປົກປັກຮັກສາສິ່ງແວດລ້ອມ ແລະ ຄວາມປອດໄພຕໍ່ສຸຂະພາບຂອງແຮງງານ.<br>- ສ້າງແຜນປິດ ແລະ ຟື້ນຟູເນື້ອທີ່ບໍ່ໃຫ້ສາມາດນຳໃຊ້ຄືນ.<br>- ສົ່ງເສີມການປຸງແຕ່ງແຮ່ທາດ ໃຫ້ເປັນຜະລິດຕະພັນສຳເລັດຮູບ ຫລື ເຄິ່ງສຳເລັດຮູບແລ້ວຈຶ່ງສົ່ງອອກ ເພື່ອເພີ່ມມູນຄ່າທາງເສດຖະກິດ ແລະ ສ້າງວຽກເຮັດງານທຳໃຫ້ປະຊາຊົນຫລາຍຂຶ້ນ ເພື່ອຍົກສູງປະສິດທິພາບຂອງການນຳໃຊ້ແຮ່ທາດໃຫ້ສູງ ຂຶ້ນ. |
| • ຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທຽວ | |
| ➢ ຖະແຫລງຂ່າວ | - ປູກຈິດສຳນຶກ ແລະ ສົ່ງເສີມການເຕີບໂຕສີຂຽວໂດຍຜ່ານລາຍການວິທະຍຸ, ໂທລະພາບ, ສື່ສິ່ງພິມຕ່າງໆ ພ້ອມທັງສື່ເອເລັກໂຕນິກ ແລະ ໂທລະໂຄ່ງ.<br>- ປະສານສົມທົບກັບຂະແໜງອຸດສາຫະກຳ ແລະ ການຄ້າໂຄສະນາເຜີຍແຜ່ ແລະ ສົ່ງເສີມການຜະລິດ, ການຕະຫລາດ, ການຂາຍ ແລະ ການບໍລິໂພກຜະລິດຕະພັນສະອາດເປັນມິດຕໍ່ສິ່ງແວດລ້ອມ.<br>- ປະສານສົມທົບກັບຂະແໜງວັດທະນະທຳ ແລະ ທ່ອງທ່ຽວ ໂຄສະນາເຜີຍແຜ່ແຫລ່ງທ່ອງທ່ຽວທາງທຳມະຊາດ, ປະຫວັດສາດ ແລະ ວັດທະນະທຳ.<br>- ໂຄສະນາເຜີຍແຜ່ບັນດານະໂຍບາຍ ແລະ ນິຕິກຳຕ່າງໆຂອງພັກ ແລະ ລັດຖະບານທີ່ກ່ຽວຂ້ອງກັບການເຕີບໂຕສີຂຽວ. |

| | |
|---|---|
| ➢ ວັດທະນະທຳ | - ປະສານສົມທົບກັບຂະແໜງການທ່ອງທ່ຽວ ເພື່ອສ້າງກິດຈະກຳ ແລະ ພັດທະນາສະຖານທີ່ທ່ອງທ່ຽວທາງປະຫວັດສາດ ແລະ ວັດທະນະທຳ.<br>- ປະສານສົມທົບກັບວຽກງານຖະແຫລງຂ່າວເພື່ອເຜີຍແຜ່ວັດທະນະທຳແລະວິຖີການດຳລົງຊີວິດທີ່ເປັນເອກະລັກຂອງຊາດ.<br>- ປະສານສົມທົບກັບຂະແໜງໂຍທາທິການ ແລະ ຂົນສົ່ງ ໃນການອອກແບບຕົວເມືອງ, ອາຄານສະຖານທີ່ ແລະ ປະດັບປະດາຕົວເມືອງ ໃຫ້ມີຄຸນຄ່າທາງດ້ານສິລະປະ, ວັດທະນະທຳທີ່ເປັນເອກະລັກຂອງຊາດລາວ. |
| ➢ ທ່ອງທ່ຽວ | - ເພີ່ມທະວີການປົກປັກຮັກສາ ແລະ ພັດທະນາກິດຈະກຳການທ່ອງທ່ຽວທາງທຳມະຊາດ, ປະຫວັດສາດ ແລະ ວັດທະນະທຳໃນ ສປປ ລາວ ໃຫ້ມີຄວາມຫລາກຫລາຍ ແລະ ສວຍສົດງົດງາມ.<br>- ໂຄສະນາເຜີຍແຜ່ສະຖານທີ່ທ່ອງທ່ຽວທຳມະຊາດ, ປະຫວັດສາດ ແລະ ວັດທະນະທຳໃນ ສປປ ລາວ ໃຫ້ທົ່ວໂລກຮັບຮູ້ ຢ່າງກວ້າງຂວາງ.<br>- ປັບປຸງຄຸນນະພາບຂອງການບໍລິການການທ່ອງທ່ຽວ ແລະ ຂະແໜງການທີ່ຕິດພັນໃຫ້ໄດ້ ມາດຕະຖານ.<br>- ປະສານສົມທົບກັບຂະແໜງການກ່ຽວຂ້ອງ ຊຸກຍູ້ການຜະລິດສະບຽງອາຫານ ແລະ ເຄື່ອງທີ່ລະນຶກ ເພື່ອຕອບສະໜອງຄວາມຕ້ອງການຂອງການທ່ອງທ່ຽວ  ໃຫ້ພຽງພໍທາງດ້ານປະລິມານ ແລະ ຄຸນນະພາບ.<br>- ປະສານສົມທົບກັບບັນດາຫົວໜ່ວຍທຸລະກິດໃນຂະແໜງການທ່ອງທ່ຽວ  ໃຫ້ນຳໃຊ້ພະລັງງານແບບປະຢັດ ແລະ ນຳໃຊ້ຜະລິດຕະພັນທີ່ສະອາດ ແລະ ເປັນມິດກັບສິ່ງແວດລ້ອມ.<br>- ສ້າງ ແລະ ຈັດຕັ້ງປະຕິບັດມາດຕະຖານເມືອງທ່ອງທ່ຽວ, ແຫລ່ງທ່ອງທ່ຽວ ແລະ ສະຖານບໍລິການການທ່ອງທ່ຽວສີຂຽວ. |
| • ວິທະຍາສາດ ແລະເຕັກໂນໂລຊີ | - ສ້າງຕັ້ງ ແລະ ສ້າງຂີດຄວາມສາມາດຂອງເຄືອຂ່າຍຄົ້ນຄວ້າ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ.<br>- ເພີ່ມຂີດຄວາມສາມາດ ໃນດ້ານການຄົ້ນຄວ້າໃຫ້ແກ່ບັນດານັກຄົ້ນຄວ້າ, ສະຖາບັນ ແລະ ສູນຄົ້ນຄວ້າທີ່ເປັນສະມາຊິກ ຂອງເຄືອຂ່າຍຄົ້ນຄວ້າ ເພື່ອຮັບໃຊ້ການຈັດຕັ້ງປະຕິບັດຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ.<br>- ຄົ້ນຄວ້າ, ສ້າງຕັ້ງ ແລະ ຈັດຕັ້ງປະຕິບັດກົນໄກການເງິນ ເພື່ອສະໜອງງົບປະມານໃຫ້ວຽກງານຄົ້ນຄວ້າຮັບໃຊ້ການຈັດຕັ້ງປະຕິບັດຍຸດທະສາດການເຕີບໂຕສີຂຽວແຫ່ງຊາດ ຂອງ ສປປ ລາວ ໃຫ້ພຽງພໍ.<br>- ຄົ້ນຄວ້າ-ຖອດຖອນບົດຮຽນກ່ຽວກັບນະໂຍບາຍ, ວິທະຍາສາດ, ເຕັກນິກ, ເຕັກໂນໂລຊີ ແລະ ນະວັດຕະກຳສີຂຽວທີ່ດີຂອງສາກົນ ແລະ ຕ່າງປະເທດ  ມາປັບປຸງ ແລະ ນຳໃຊ້ໃນ ສປປ ລາວ.<br>- ຈັດຕັ້ງປະຕິບັດບັນດາຫົວຂໍ້, ໂຄງການ ແລະ ແຜນງານຄົ້ນຄວ້ານະໂຍບາຍ, ວິທະຍາສາດ, ເຕັກນິກ, ເຕັກໂນໂລຊີ ແລະ ສ້າງນະວັດຕະກຳ ເພື່ອສະໜັບສະໜູນ ການຈັດຕັ້ງປະຕິບັດຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ.<br>- ຄົ້ນຄວ້າ ແລະ ນຳເຂົ້າເຕັກນິກ ແລະ ເຕັກໂນໂລຊີ ທີ່ມີປະສິດທິພາບ ແລະ ປະສິດທິຜົນສູງ, ເປັນມິດຕໍ່ສິ່ງແວດລ້ອມ, ສັງຄົມ ແລະ ທຳມະຊາດ ຈາກຕ່າງປະເທດມາປັບປຸງ ແລະ ນຳໃຊ້ໃນ ສປປ ລາວ.<br>- ເຊື່ອມສານຜົນການຄົ້ນຄວ້າ ແລະ ບົດຮຽນທີ່ຖອດຖອນໄດ້ຈາກສາກົນ ແລະ ຕ່າງປະເທດເຂົ້າໃນການສ້າງ ແລະ ຈັດຕັ້ງປະຕິບັດຍຸດທະສາດການເຕີບໂຕສີຂຽວ. |
| III. ຂະແໜງການສະໜັບສະໜູນ/ປົ່ນອ້ອມ | |
| • ການເງິນ | - ການສ້າງ ແລະ ຈັດຕັ້ງປະຕິບັດອາກອນສິ່ງແວດລ້ອມ.<br>- ການສ້າງ ແລະ ຈັດຕັ້ງປະຕິບັດນະໂຍບາຍການເງິນສົ່ງເສີມການປະຢັດພະລັງງານ, ຊັບພະຍາກອນທຳມະຊາດ ແລະ ກະຈາຍຜົນປະໂຫຍດຈາກການພັດທະນາເສດຖະກິດ-ສັງຄົມໃຫ້ກວ້າງຂວາງ, ທົ່ວເຖິງ ແລະ ເປັນທຳ.<br>- ການສ້າງ ແລະ ຈັດຕັ້ງປະຕິບັດນະໂຍບາຍການເງິນສະໜັບສະໜູນການຜະລິດ ແລະ ການບໍລິໂພກຜະລິດຕະພັນສີຂຽວ-ເປັນມິດຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ.<br>- ໃຫ້ບູລິມະສິດແກ່ຜະລິດຕະພັນສີຂຽວ, ຜູ້ຜະລິດສິນຄ້າ ແລະ ສະໜອງການບໍລິການສີຂຽວໃນຂະບວນການຈັດຊື້-ຈັດຈ້າງຂອງລັດ. |

| | |
|---|---|
| • ທະນາຄານ | - ອຳນວຍຄວາມສະດວກໃຫ້ບັນດາວິສາຫະກິດຕ່າງໆເຂົ້າເຖິງແຫລ່ງເງິນກູ້ດອກເບ້ຍຕ່ຳ ແລະ ໄລຍະຍາວ ເພື່ອນຳເຂົ້າອຸປະ ກອນການຜະລິດ, ເຄື່ອງຈັກ, ເຕັກນິກ ແລະ ເຕັກໂນໂລຊີທີ່ມີປະສິດທິພາບ, ປະສິດທິຜົນ ແລະ ຄວາມເປັນມິດຕໍ່ສິ່ງແວດລ້ອມສູງຈາກຕ່າງປະເທດ.<br>- ອຳນວຍຄວາມສະດວກໃຫ້ແກ່ການເຂົ້າເຖິງແຫລ່ງທຶນດອກເບ້ຍຕ່ຳຂອງບັນດາວິສາຫະກິດຂະໜາດນ້ອຍ ແລະ ກາງເພື່ອຂະຫຍາຍກິດຈະການລົງທຶນຂົງເຂດ ແລະ ຂະແໜງການທີ່ຕິດພັນກັບການເຕີບໂຕສີຂຽວ.<br>- ອຳນວຍຄວາມສະດວກໃຫ້ແກ່ການສ້າງຕັ້ງ ແລະ ເຄື່ອນໄຫວຂອງກອງທຶນການເງິນຈຸລະພາກ. |
| • ສຶກສາທິການ ແລະ ກິລາ | - ປູກຈິດສຳນຶກໃຫ້ແກ່ນັກນັກຮຽນ-ນັກສຶກສາ ແລະ ເຊື່ອມສານການເຕີບໂຕສີຂຽວເຂົ້າໃນຫລັກສູດການຮຽນ-ການສອນໃນໂຮງຮຽນປະຖົມ ແລະ ມັດທະຍົມ.<br>- ປະສານສົມທົບກັບພາກວິສາຫະກິດພັດທະນາຫລັກສູດການຮຽນວິຊາຊີບສາຂາທີ່ຕິດພັນການເຕີບໂຕສີຂຽວ/ການພັດທະນາແບບຍືນຍົງ.<br>- ສ້າງຫລັກສູດ ແລະ ເປີດສາຂາວິຊາຮຽນທີ່ກ່ຽວຂ້ອງກັບການເຕີບໂຕສີຂຽວ/ການພັດທະນາແບບຍືນຍົງ.<br>- ເພີ່ມການຄົ້ນຄວ້າ-ວິໄຈວິທະຍາສາດ ແລະ ນະໂຍບາຍທີ່ກ່ຽວຂ້ອງກັບການເຕີບໂຕສີຂຽວ. |
| • ແຮງງານ ແລະ ສະຫວັດດີການສັງຄົມ | - ປະສານສົມທົບທັບວິສາຫະກິດສ້າງຫລັກສູດການຝຶກອົບຮົບວິຊາຊີບໄລຍະສັ້ນໃນຂະແໜງການທີ່ຕິດພັນກັບການເຕີບໂຕສີຂຽວ.<br>- ສ້າງສູນຂໍ້ມູນຂ່າວສານດ້ານແຮງງານ ເພື່ອສະໜອງຂໍ້ມູນໃຫ້ກັບວິສາຫະກິດທີ່ຕ້ອງການແຮງງານ ແລະ ຜູ້ອອກແຮງງານທີ່ຊອກຫາວຽກເຮັດງານທຳ.<br>- ຂະຫຍາຍອັດຕາການປົກຫຸ້ມ ແລະ ການຄຸ້ມຄອງຂອງລະບົບປະກັນສັງຄົມໃຫ້ກວ້າງຂວາງ, ທົ່ວເຖິງ ແລະ ມີປະສິດທິພາບສູງ.<br>- ເພີ່ມປະສິດທິພາບ ແລະ ປະສິດທິຜົນຂອງການໃຫ້ການຊ່ວຍເຫລືອສຸກເສີນແກ່ຜູ້ປະສົບເຄາະຮ້າຍຈາກໄພພິບັດທາງທຳມະຊາດ. |
| • ສາທາລະນະສຸກ | - ວຽກງານໂພສະນາການເພື່ອຫລຸດຜ່ອນອັດຕາການຂາດສານອາຫານຂອງປະຊາຊົນ.<br>- ການເຂົ້າເຖິງນ້ຳສະອາດ ແລະ ສຸຂະອະນາໄມເພື່ອຫລຸດຜ່ອນການເຈັບເປັນຂອງປະຊາຊົນ.<br>- ຫລຸດຜ່ອນອັດຕາການຕາຍຂອງແມ່ ແລະ ເດັກ.<br>- ປັບປຸງການເຂົ້າເຖິງການບໍລິການສາທາລະນະສຸກທີ່ມີຄຸນນະພາບ |

**ເອກະສານຊ້ອນທ້າຍທີ 2:** ຂໍ້ຕົກລົງ ເລກທີ 95/ນຍ, ລົງວັນທີ 8 ທັນວາ 2016, ວ່າດ້ວຍການແຕ່ງຕັ້ງຄະນະຊີ້ນໍາລະດັບຊາດວຽກງານການເຕີບໂຕສີຂຽວ.

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--------------------

ນາຍົກລັດຖະມົນຕີ ເລກທີ 95 / ນຍ.

ນະຄອນຫລວງວຽງຈັນ, ວັນທີ 08.12.2016

# ຂໍ້ຕົກລົງ

## ວ່າດ້ວຍການແຕ່ງຕັ້ງຄະນະຊີ້ນໍາລະດັບຊາດ ວຽກງານການເຕີບໂຕສີຂຽວ

- ອີງຕາມໜັງສືສະເໜີ ສະບັບເລກທີ 2810/ຜທ.ກຜ6, ລົງວັນທີ 18 ພະຈິກ 2016 ຂອງກະຊວງແຜນການ ແລະ ການລົງທຶນ.

## ນາຍົກລັດຖະມົນຕີ ຕົກລົງ :

ມາດຕາ 1 : ແຕ່ງຕັ້ງຄະນະຊີ້ນໍາລະດັບຊາດ ວຽກງານການເຕີບໂຕສີຂຽວ, ຊຶ່ງປະກອບມີບັນດາທ່ານ ດັ່ງນີ້ :

1. ທ່ານຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ ເປັນຫົວໜ້າຄະນະ.
2. ທ່ານລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ເປັນຮອງຫົວໜ້າຄະນະ.
3. ທ່ານຫົວໜ້າສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ ເປັນຄະນະ.
4. ທ່ານລັດຖະມົນຕີປະຈໍາສໍານັກງານນາຍົກລັດຖະມົນຕີ ເປັນຄະນະ.
5. ທ່ານລັດຖະມົນຕີກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ເປັນຄະນະ.
6. ທ່ານລັດຖະມົນຕີກະຊວງກະສິກໍາ ແລະ ປ່າໄມ້ ເປັນຄະນະ.
7. ທ່ານລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຄະນະ.
8. ທ່ານລັດຖະມົນຕີກະຊວງອຸດສາຫະກໍາ ແລະ ການຄ້າ ເປັນຄະນະ.
9. ທ່ານລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່ ເປັນຄະນະ.
10. ທ່ານລັດຖະມົນຕີກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ເປັນຄະນະ.

ມາດຕາ 2 : ຄະນະຊີ້ນໍາລະດັບລະດັບຊາດ ວຽກງານການເຕີບໂຕສີຂຽວ ມີສິດ ແລະ ໜ້າທີ່ຕົ້ນຕໍ ດັ່ງນີ້ :

1. ຊີ້ນໍາລວມກ່ຽວກັບວຽກງານການເຕີບໂຕສີຂຽວໃຫ້ສໍາເລັດຢ່າງມີປະສິດທິພາບ, ປະສິດທິຜົນ ແລະ ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຕົວຈິງ ຂອງການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃນແຕ່ລະໄລຍະ, ພິຈາລະນາຮັບຮອງເອົາບັນດານະໂຍບາຍທີ່ຕິດພັນກັບ ວຽກງານການເຕີບໂຕສີຂຽວ, ເປັນຕົ້ນແມ່ນ ວຽກງານການກໍານົດຂອບແນວຄວາມຄິດດ້ານນະໂຍບາຍການພັດທະນາການເຕີບໂຕສີຂຽວຂອງ ສປປ ລາວ ທີ່ໄດ້ຮັບການສະໜັບສະໜູນ ຈາກທະນາຄານໂລກ (GG.DPO), ວຽກງານການສ້າງຍຸດທະສາດການເຕີບໂຕສີຂຽວ ແລະ ວຽກອື່ນໆທີ່ປິ່ນອ້ອມວຽກງານການເຕີບໂຕສີຂຽວ.

2. ຊີ້ນໍາໃຫ້ແຕ່ລະກະຊວງສ້າງຕັ້ງກອງເລຂາຂອງຕົນ ໃນວຽກງານການເຕີບໂຕສີຂຽວ ເພື່ອໃຫ້ສາມາດປະສານງານ ແລະ ຈັດຕັ້ງປະຕິບັດວຽກງານດັ່ງກ່າວ ໃຫ້ສໍາເລັດຕາມແຜນທີ່ກໍານົດໄວ້.
3. ຄະນະຊີ້ນໍາຕ້ອງໄດ້ຮັບການລາຍງານຈາກກອງເລຂາຢ່າງໜ້ອຍໜຶ່ງຄັ້ງຕໍ່ປີ ເພື່ອລາຍງານສະພາບການກະກຽມສ້າງຍຸດທະສາດ ແລະ ວຽກງານທີ່ຢູ່ໃນຂອບແນວຄວາມຄິດດ້ານນະໂຍບາຍການພັດທະນາການເຕີບໂຕສີຂຽວ ຂອງ ສປປ ລາວ ທີ່ໄດ້ຮັບການສະໜັບສະໜູນຈາກທະນາຄານ ໂລກ (GG.DPO) ເພື່ອຂໍທິດຊີ້ນໍາ ແລະ ໃຫ້ສາມາດລາຍງານສະພາແຫ່ງຊາດ ຕາມວາລະການລາຍງານປະຈໍາປີ ຂອງແຜນພັດທະນາເສດຖະກິດ-ສັງຄົມ.
4. ເຂົ້າຮ່ວມໃນການໄປທັດສະນະສຶກສາ ແລະ ກອງປະຊຸມໃຫຍ່ໆສໍາລັບວຽກງານການເຕີບໂຕສີຂຽວ.

ມາດຕາ 3 : ແຕ່ງຕັ້ງກອງເລຂາວຽກງານການເຕີບໂຕສີຂຽວ, ຊຶ່ງປະກອບມີບັນດາທ່ານ ດັ່ງນີ້ :

1. ທ່ານລັດຖະມົນຕີກະຊວງ ແຜນການ ແລະ ການລົງທຶນ — ເປັນຫົວໜ້າກອງເລຂາ.
2. ທ່ານຮອງລັດຖະມົນຕີກະຊວງການເງິນ — ເປັນຮອງຄະນະ.
3. ທ່ານຮອງຫົວໜ້າສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ — ເປັນຮອງຄະນະ.
4. ທ່ານຮອງລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ — ເປັນຮອງຄະນະ.
5. ທ່ານຮອງລັດຖະມົນຕີກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ — ເປັນຄະນະ.
6. ທ່ານຮອງລັດຖະມົນຕີ, ຮອງຫົວໜ້າຫ້ອງວ່າການ ສໍານັກງານນາຍົກລັດຖະມົນຕີ — ເປັນຄະນະ.
7. ທ່ານຮອງລັດຖະມົນຕີກະຊວງກະສິກໍາ-ປ່າໄມ້ — ເປັນຄະນະ.
8. ທ່ານຮອງລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ — ເປັນຄະນະ.
9. ທ່ານຮອງລັດຖະມົນຕີກະຊວງອຸດສາຫະກໍາ ແລະ ການຄ້າ — ເປັນຄະນະ.
10. ທ່ານຮອງລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່ — ເປັນຄະນະ.
11. ທ່ານຮອງລັດຖະມົນຕີກະຊວງວິທະຍາສາດ ແລະ ເຕັກໂນໂລຊີ — ເປັນຄະນະ.

ມາດຕາ 4 : ກອງເລຂາວຽກງານການເຕີບໂຕສີຂຽວ ມີສິດ ແລະ ໜ້າທີ່ຕົ້ນຕໍ ດັ່ງນີ້ :

1. ຊີ້ນໍາ ແລະ ກໍານົດທິດທາງການຄົ້ນຄວ້າບັນດານະໂຍບາຍກ່ຽວກັບວຽກງານການເຕີບໂຕສີຂຽວ ໃຫ້ສໍາເລັດຢ່າງມີປະສິດທິພາບ, ປະສິດທິຜົນສູງ ແລະ ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຕົວຈິງຂອງການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃນແຕ່ລະໄລຍະ.
2. ຄົ້ນຄວ້າບັນດານິຕິກໍາຕ່າງໆ, ຕິດຕາມບັນດາຕົວຊີ້ວັດໃນຂອບຕິດຕາມປະເມີນຜົນວຽກງານການເຕີບໂຕສີຂຽວ ແລະ ລະບອບການລາຍງານຕ່າງໆຈາກຄະນະຊ່ວຍວຽກກອງເລຂາຢ່າງເປັນປົກກະຕິ ກ່ອນທີ່ຈະລາຍງານຄະນະຊີ້ນໍາລະດັບຊາດ ໃນແຕ່ລະໄລຍະ.
3. ສ້າງແຜນປະຕິບັດງານ ແລະ ແຜນງົບປະມານ ຂອງວຽກງານການເຕີບໂຕສີຂຽວຢ່າງລະອຽດ ແລະ ແທດເໝາະກັບຕົວຈິງ.
4. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍ ຂອງຄະນະຊີ້ນໍາລວມວຽກງານການເຕີບໂຕສີຂຽວ.

ມາດຕາ 5 : ແຕ່ງຕັ້ງຄະນະຊ່ວຍວຽກກອງເລຂາວຽກງານການເຕີບໂຕສີຂຽວ, ຊຶ່ງປະກອບມີບັນດາທ່ານ ດັ່ງນີ້ :

1. ທ່ານຫົວໜ້າກົມແຜນການ, ກະຊວງແຜນການ ແລະ ການລົງທຶນ ເປັນຫົວໜ້າຄະນະ.
2. ທ່ານຮອງຫົວໜ້າກົມການເງິນຕ່າງປະເທດ, ກະຊວງການເງິນ ເປັນຮອງຫົວໜ້າຄະນະ.
3. ທ່ານຮອງຫົວໜ້າຝຶກອົບຮົມ ແລະ ຂໍ້ມູນຂ່າວສານ, ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ ເປັນຮອງຫົວໜ້າຄະນະ.
4. ທ່ານຮອງຫົວໜ້າກົມແຜນການ ແລະ ການຮ່ວມມື, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຄະນະ.
5. ທ່ານຮອງຫົວໜ້າກົມແຜນການ ແລະ ການຮ່ວມມື, ກະຊວງກະສິກຳ ແລະ ປ່າໄມ້ ເປັນຄະນະ.
6. ທ່ານຮອງຫົວໜ້າກົມແຜນການ ແລະ ການຮ່ວມມື, ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຄະນະ.
7. ທ່ານຮອງຫົວໜ້າກົມແຜນການ ແລະ ການຮ່ວມມື, ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຄະນະ.
8. ທ່ານຮອງຫົວໜ້າກົມສັງລວມເສດຖະກິດ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເປັນຄະນະ.
9. ທ່ານຮອງຫົວໜ້າຫ້ອງການກະຊວງພະລັງງານ ແລະ ບໍ່ແຮ່ ເປັນຄະນະ.
10. ທ່ານຮອງຫົວໜ້າກົມແຜນການ ແລະ ຮ່ວມມື, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ເປັນຄະນະ.

ມາດຕາ 6 : ຄະນະຊ່ວຍວຽກກອງເລຂາວຽກງານການເຕີບໂຕສີຂຽວ ມີສິດ ແລະ ໜ້າທີ່ ດັ່ງນີ້ :

1. ຄົ້ນຄວ້າ, ເກັບກຳຂໍ້ມູນ, ປະສານກັບຂະແໜງການ ແລະ ທ້ອງຖິ່ນ, ອົງການຈັດຕັ້ງຕ່າງໆທັງພາຍໃນ ແລະ ຕ່າງປະເທດ ໃນການກະກຽມ ແລະ ຈັດຕັ້ງປະຕິບັດວຽກງານການເຕີບໂຕສີຂຽວ ໃຫ້ສຳເລັດຕາມການຊີ້ນຳຂອງຄະນະຊີ້ນຳ ແລະ ຄະນະກອງເລຂາ ໃຫ້ມີປະສິດທິພາບ, ປະສິດທິຜົນ ແລະ ທັນຕາມກຳນົດເວລາ.
2. ກຳນົດ ແລະ ຄົ້ນຄວ້າບັນດາຫົວຂໍ້ວິທະຍາສາດຕ່າງໆ ທີ່ຈຳເປັນ ເພື່ອສາມາດນຳມາເປັນຂໍ້ມູນ ໃຫ້ແກ່ການວາງນະໂຍບາຍ ແລະ ການຈັດຕັ້ງປະຕິບັດວຽກງານການເຕີບໂຕສີຂຽວ.
3. ຄົ້ນຄວ້າ ແລະ ປະຕິບັດຕາມແຜນວຽກທີ່ກຳນົດ ໃນຂອບເຂດແນວຄວາມຄິດດ້ານນະໂຍບາຍການພັດທະນາການເຕີບໂຕສີຂຽວ ຂອງ ສປປ ລາວ ທີ່ໄດ້ຮັບການສະໜັບສະໜູນຈາກທະນາຄານໂລກ (GG.DPO) ໃຫ້ທັນຕາມກຳນົດເວລາ.
4. ຊີ້ນຳຈັດກອງປະຊຸມ, ສຳມະນາວິຊາການ ແລະ ເຜີຍແຜ່ກ່ຽວກັບການເຊື່ອມສານວຽກງານການເຕີບໂຕສີຂຽວ ໃນແຕ່ລະໄລຍະ ແລະ ຕາມໜ້າວຽກຂອງຕົນຮັບຜິດຊອບ ຂອງແຕ່ລະຂະແໜງການ.
5. ສ້າງແຜນປະຕິບັດງານ ແລະ ແຜນງົບປະມານຂອງໜ່ວຍງານຕົນຢ່າງລະອຽດ ແລະ ແທດເໝາະກັບຕົວຈິງ.

6. ປະຕິບັດໜ້າທີ່ຕາມການມອບໝາຍຂອງກອງເລຂາວຽກງານການເຕີບໂຕສີຂຽວ.

ມາດຕາ 7 : ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ນະຄອນຫລວງວຽງຈັນ, ບັນດາແຂວງໃນທົ່ວປະເທດ, ທຸກພາກສ່ວນທີ່ກ່ຽວຂ້ອງ ແລະ ບັນດາທ່ານທີ່ຖືກແຕ່ງຕັ້ງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ.

ມາດຕາ 8 : ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ**

ທອງລຸນ ສີສຸລິດ

**ເອກະສານຊ້ອນທ້າຍທີ 3:** ຂໍ້ຕົກລົງຂອງຄະນະຊີ້ນໍາລະດັບຊາດວຽກງານການເຕີບໂຕສີຂຽວ ສະບັບ ເລກທີ 01/ຄຊຕຂ, ລົງວັນທີ 19 ເມສາ 2017 ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບສ້າງຍຸດທະສາດ ແລະ ສູນສົ່ງເສີມການເຕີບໂຕສີຂຽວຂອງ ສປປ ລາວ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະຊີ້ນຳລະດັບຊາດ

ວຽກງານການເຕີບໂຕສີຂຽວ

0001[illegible]

ເລກທີ....................../ຄຊຕຂ

ນະຄອນຫລວງວຽງຈັນ, ວັນທີ 19 APR 2017

## ຂໍ້ຕົກລົງ
## ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບ
## ສ້າງຍຸດທະສາດ ແລະ ສູນສົ່ງເສີມການເຕີບໂຕສີຂຽວ ຂອງ ສປປ ລາວ

- ອີງຕາມ ແຈ້ງການຂອງຫ້ອງວ່າການລັດຖະບານ ສະບັບເລກທີ 1751/ຫລ.ກລຂ, ລົງວັນທີ 08 ທັນວາ 2014 ກ່ຽວກັບການມອບໝາຍໃຫ້ ກະຊວງແຜນການ ແລະ ການລົງທຶນເປັນເຈົ້າການສົມທົບກັບ ກະຊວງການຕ່າງປະເທດ ແລະ ຂະແໜງການທີ່ກ່ຽວຂ້ອງຮັບຜິດຊອບ ສ້າງຍຸດທະສາດ ແລະ ສູນພັດທະນາສີຂຽວ ຂອງ ສປປ ລາວ.
- ອີງຕາມ ຂໍ້ຕົກລົງຂອງທ່ານນາຍົກລັດຖະມົນຕີ ວ່າດ້ວຍການແຕ່ງຕັ້ງຄະນະຊີ້ນຳລະດັບຊາດວຽກງານການເຕີບໂຕສີຂຽວສະບັບເລກທີ 95/ນຍ, ລົງວັນທີ 8 ທັນວາ 2016.
- ອີງຕາມ ບົດບັນທຶກກອງປະຊຸມຄັ້ງປະຖົມມະລືກຂອງຄະນະຊີ້ນຳລະດັບຊາດວຽກງານການເຕີບໂຕສີຂຽວ ຄັ້ງວັນທີ 30 ມັງກອນ 2017.

**ຮອງນາຍົກລັດຖະມົນຕີ, ຫົວໜ້າຄະນະຊີ້ນຳລະດັບຊາດວຽກງານການເຕີບໂຕສີຂຽວ ຕົກລົງ:**

**ມາດຕາ 1:** ແຕ່ງຕັ້ງຄະນະຊີ້ນຳການສ້າງຍຸດທະສາດ ແລະ ສູນສົ່ງເສີມການເຕີບໂຕສີຂຽວ ຂອງ ສປປ ລາວ ດັ່ງລາຍຊື່ລຸ່ມນີ້:

1. ທ່ານ ຫົວໜ້າສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ ເປັນຫົວໜ້າ.
2. ທ່ານ ຮອງລັດຖະມົນຕີ, ກະຊວງແຜນການ ແລະ ການລົງທຶນ ເປັນຮອງ.
3. ທ່ານ ຮອງຫົວໜ້າ, ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ ເປັນຮອງ.
4. ທ່ານ ຮອງລັດຖະມົນຕີ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຄະນະ.
5. ທ່ານ ຮອງລັດຖະມົນຕີ, ກະຊວງກະສິກຳ-ປ່າໄມ້ ເປັນຄະນະ.
6. ທ່ານ ຮອງລັດຖະມົນຕີ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນຄະນະ.
7. ທ່ານ ຮອງລັດຖະມົນຕີ, ກະຊວງພະລັງງານ-ບໍ່ແຮ່ ເປັນຄະນະ.
8. ທ່ານ ຮອງລັດຖະມົນຕີ, ກະຊວງໂຍທາທິການ ແລະ ການຂົນສົ່ງ ເປັນຄະນະ.
9. ທ່ານ ຮອງລັດຖະມົນຕີ, ຮອງຫົວໜ້າຫ້ອງການສຳນັກງານນາຍົກລັດຖະມົນຕີ ເປັນຄະນະ.
10. ທ່ານ ຫົວໜ້າກົມແຜນການ, ກະຊວງແຜນການ ແລະ ການລົງທຶນ ເປັນຄະນະ.

**<u>ສິດ ແລະ ໜ້າທີ່:</u>**

- ຊີ້ນຳ ແລະ ນຳພາການສ້າງຍຸດທະສາດ ແລະ ສຸບສົ່ງເສີມການເຕີບໂຕສີຂຽວໃຫ້ສຳເລັດຢ່າງມີປະສິດທິພາບ, ປະສິດທິຜົນ ແລະ ທັນກັບເວລາ.
- ສະເໜີຄະນະຊີ້ນຳລະດັບຊາດວຽກງານການເຕີບໂຕສີຂຽວພິຈາລະນາຕົກລົງເຫັນດີຮັບຮອງເອົາຮ່າງຍຸດທະສາດການເຕີບໂຕສີຂຽວຂອງ ສປປ ລາວ.
- ສະເໜີຮ່າງຍຸດທະສາດການເຕີບໂຕສີຂຽວເຂົ້າວາລະກອງປະຊຸມລັດຖະບານຕາມການຕົກລົງເຫັນດີຂອງຄະນະຊີ້ນຳລະດັບຊາດວຽກງານການເຕີບໂຕສີຂຽວ.
- ສະເໜີນາຍົກລັດຖະມົນຕີພິຈາລະນາຮັບຮອງເອົາຍຸດທະສາດການເຕີບໂຕສີຂຽວຂອງ ສປປ ລາວ ຢ່າງເປັນທາງການຕາມການຕົກລົງເຫັນດີຂອງກອງປະຊຸມລັດຖະບານ.
- ຈັດຕັ້ງປະຕິບັດວຽກງານອື່ນໆທີ່ກ່ຽວຂ້ອງກັບການສ້າງຍຸດທະສາດ ແລະ ສຸບສົ່ງເສີມການເຕີບໂຕສີຂຽວ.

**ມາດຕາ 2:** ແຕ່ງຕັ້ງກອງເລຂາຄະນະຮ່າງຍຸດທະສາດການເຕີບໂຕສີຂຽວ ຂອງ ສປປ ລາວ ເຊິ່ງປະກອບມີບັນດາທ່ານດັ່ງລຸ່ມນີ້:

1. ທ່ານ ຫົວໜ້າກົມແຜນການ, ກະຊວງແຜນການ ແລະ ການລົງທຶນ ເປັນຫົວໜ້າ.
2. ທ່ານ ຫົວໜ້າສູນຄົ້ນຄວ້າ ວິທະຍາສາດ ແລະ ນະໂຍບາຍເສດຖະກິດ-ສັງຄົມ, ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ ເປັນຮອງ.
3. ທ່ານ ຮອງຫົວໜ້າກົມ, ກົມແຜນການ, ກະຊວງແຜນການ ແລະ ການລົງທຶນ ເປັນຮອງ.
4. ທ່ານ ຮອງຫົວໜ້າກົມແຜນການ ແລະ ການຮ່ວມມື, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຮອງ.
5. ທ່ານ ຮອງຫົວໜ້າກົມແຜນການ ແລະ ການຮ່ວມມື, ກະຊວງກະສິກຳ-ປ່າໄມ້ ເປັນຄະນະ.
6. ທ່ານ ຮອງຫົວໜ້າກົມແຜນການ-ການເງິນ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນຄະນະ.
7. ທ່ານ ຮອງຫົວໜ້າຫ້ອງການ, ກະຊວງພະລັງງານ-ບໍ່ແຮ່ ເປັນຄະນະ.
8. ທ່ານ ຮອງຫົວໜ້າກົມແຜນການ ແລະ ການຮ່ວມມື, ກະຊວງໂຍທາທິການ ແລະ ການຂົນສົ່ງ ເປັນຄະນະ.
9. ທ່ານ ຮອງຫົວໜ້າກົມນະໂຍບາຍການເງິນ, ກະຊວງການເງິນ ເປັນຄະນະ.
10. ທ່ານ ຮອງຄະນະບໍດີຄະນະເສດຖະສາດ, ມະຫາວິທະຍາໄລແຫ່ງຊາດ ເປັນຄະນະ.
11. ທ່ານ ຮອງຄະນະບໍດີຄະນະວິທະຍາສາດສິ່ງແວດລ້ອມ, ມະຫາວິທະຍາໄລແຫ່ງຊາດ ເປັນຄະນະ.
12. ທ່ານ ຫົວໜ້າສູນຄົ້ນຄວ້ານະໂຍບາຍ, ສະຖາບັນຄົ້ນຄວ້າກະສິກຳ, ກະຊວງກະສິກຳ ແລະ ປ່າໄມ້ ເປັນຄະນະ.
13. ທ່ານ ຮອງຫົວໜ້າສູນຝຶກອົບຮົມ ແລະ ຂໍ້ມູນຂ່າວສານ, ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ ເປັນຄະນະ.
14. ທ່ານ ຫົວໜ້າພະແນກວາງແຜນຄຸ້ມຄອງເສດຖະກິດມະຫາພາກ, ກົມແຜນການ, ກະຊວງ ແຜນການ ແລະ ການລົງທຶນ ເປັນຄະນະ.
15. ທ່ານ ຫົວໜ້າພະແນກຝຶກອົບຮົມ ແລະ ສຶກສາໂຄງການ, ສູນຝຶກອົບຮົມ ແລະ ຂໍ້ມູນຂ່າວສານ, ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ ເປັນຄະນະ.
16. ທ່ານ ຫົວໜ້າພະແນກຄົ້ນຄວ້າລະບົບນິຕິກຳເສດຖະກິດ-ສັງຄົມ, ສູນຄົ້ນຄວ້າວິທະຍາສາດ ແລະ ນະໂຍບາຍເສດຖະກິດ-ສັງຄົມ, ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ ເປັນຄະນະ.

17. ທ່ານ ຫົວໜ້າພະແນກຄົ້ນຄວ້າວິທະຍາສາດ ແລະ ນະໂຍບາຍເສດຖະກິດ, ສູນຄົ້ນຄວ້າວິທະຍາສາດ ແລະ ນະໂຍບາຍເສດຖະກິດ-ສັງຄົມ, ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ ເປັນຄະນະ.

**<u>ສິດ ແລະ ໜ້າທີ່:</u>**

- ຮ່າງຍຸດທະສາດການເຕີບໂຕສີຂຽວຂອງ ສປປ ລາວ ໃຫ້ສໍາເລັດຢ່າງມີປະສິດທິພາບ, ປະສິດທິຜົນ, ທັນກັບກໍານົດເວລາ ແລະ ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຕົວຈິງຂອງການພັດທະນາເສດຖະກິດ-ສັງຄົມຂອງປະເທດຕາມຄໍາເຫັນຂອງບັນດາຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ແລະ ຕາມການຊີ້ນໍາຂອງຄະນະຊີ້ນໍາ.
- ຈັດກອງປະຊຸມປຶກສາຫາລືກັບບັນດາຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງເພື່ອລະດົມຄໍາຄິດເຫັນເຂົ້າໃນຮ່າງຍຸດທະສາດການເຕີບໂຕສີຂຽວຂອງ ສປປ ລາວ ເພື່ອຮັບປະກັນການມີສ່ວນຮ່ວມຢ່າງກວ້າງຂວາງ ແລະ ແທດເໝາະກັບສະພາບການພັດທະນາຂອງປະເທດ.
- ເກັບກໍາ, ລວບລວມ ແລະ ຄົ້ນຄວ້າ-ວິໄຈບັນດາຂໍ້ມູນ, ເອກະສານ, ນິຕິກໍາ ແລະ ບັນຫາຕ່າງໆທີ່ກ່ຽວຂ້ອງກັບການສ້າງ ແລະ ຈັດຕັ້ງປະຕິບັດຍຸດທະສາດການເຕີບໂຕສີຂຽວຂອງ ສປປ ລາວ.
- ໃຫ້ຂໍ້ມູນ, ຄໍາຄິດເຫັນ, ຄໍາອະທິບາຍ, ແກ້ຂໍ້ຂ້ອງໃຈ ແລະ ໃຫ້ຄໍາປຶກສາກ່ຽວກັບທ່າແຮງບົ່ມຊ້ອນ, ກາລະໂອກາດ ແລະ ສິ່ງທ້າທາຍຕ່າງໆຂອງການພັດທະນາເສດຖະກິດ-ສັງຄົມຕາມທິດສີຂຽວ, ຍືນຍົງແກ່ຂະແໜງການ ແລະ ທ້ອງຖິ່ນ.
- ສ້າງຄວາມສາມາດໃນການເຊື່ອມສານການເຕີບໂຕສີຂຽວເຂົ້າໃນນະໂຍບາຍ, ຍຸດທະສາດ ແລະ ແຜນການໃຫ້ແກ່ຂະແໜງການ ແລະ ທ້ອງຖິ່ນ.
- ກອງເລຂາຄະນະຮ່າງຍຸດທະສາດການເຕີບໂຕສີຂຽວສາມາດຂໍການສະໜັບສະໜູນທາງດ້ານວິຊາການຈາກຜູ້ຊ່ຽວຊານພາຍໃນ ແລະ ຕ່າງປະເທດ.
- ປະສານງານ ແລະ ອໍານວຍຄວາມສະດວກໃຫ້ແກ່ການຈັດຕັ້ງປະຕິບັດກິດຈະກໍາຕ່າງໆທີ່ກ່ຽວຂ້ອງກັບການສ້າງ ແລະ ຈັດຕັ້ງປະຕິບັດຍຸດທະສາດການເຕີບໂຕສີຂຽວຂອງຄະນະຊີ້ນໍາ.
- ສ້າງແຜນດໍາເນີນງານ ແລະ ແຜນງົບປະມານສໍາລັບການຈັດຕັ້ງປະຕິບັດກິດຈະກໍາຕ່າງໆທີ່ກ່ຽວຂ້ອງກັບການສ້າງ ແລະ ຈັດຕັ້ງປະຕິບັດຍຸດທະສາດການເຕີບໂຕສີຂຽວ ຂອງ ສປປ ລາວ.
- ຕິດຕາມ ແລະ ລາຍງານຄວາມຄືບໜ້າຂອງການສ້າງຍຸດທະສາດ ແລະ ສູນສົ່ງເສີມການເຕີບໂຕສີຂຽວຂອງ ສປປ ລາວ ໃຫ້ຂັ້ນເທິງຊາບເປັນແຕ່ລະໄລຍະ ແລະ ເມື່ອສໍາເລັດໂຄງການ.
- ຄຸ້ມຄອງບັນຊີ, ສໍາເນົາເອກະສານ ແລະ ດໍາເນີນການເບີກຈ່າຍງົບປະມານຂອງໂຄງການຕາມລະບຽບການ.
- ສ້າງວາລະສານ, ເວບໄຊ, ປະຕິທິນ, ແຜ່ນພັບໂຄສະນາ, ບົດສະຫລຸບຫຍໍ້ດ້ານນະໂຍບາຍ ແລະ ອື່ນໆເພື່ອເຜີຍແຜ່ ແລະ ສະໜັບສະໜູນການສ້າງຍຸດທະສາດ ແລະ ສູນສົ່ງເສີມການເຕີບໂຕສີຂຽວຂອງ ສປປ ລາວ.
- ກອງເລຂາຄະນະຮ່າງຍຸດທະສາດການເຕີບໂຕສີຂຽວສາມາດແຕ່ງຕັ້ງພະນັກງານພາຍໃນຄວາມຮັບຜິດຊອບຂອງຕົນມາຊ່ອຍໃນວຽກງານຕາມຄວາມເໝາະສົມ ແລະ ຄວາມຮຽກຮ້ອງຕ້ອງການຕົວຈິງ.
- ຈັດຕັ້ງປະຕິບັດວຽກງານອື່ນໆຕາມການມອບໝາຍຂອງຄະນະຊີ້ນໍາ.

**ມາດຕາ 3:** ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ນະຄອນຫລວງວຽງຈັນ, ບັນດາແຂວງ, ທຸກພາກສ່ວນກ່ຽວຂ້ອງ ແລະ ບັນດາທ່ານທີ່ຖືກແຕ່ງຕັ້ງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 4:** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຮອງນາຍົກລັດຖະມົນຕີ**
**ລັດຖະມົນຕີກະຊວງການເງິນ**
**ຫົວໜ້າຄະນະຊີ້ນຳລະດັບຊາດວຽກງານການເຕີບໂຕສີຂຽວ**

**ສົມດີ ດວງດີ**

**ເອກະສານຊ້ອນທ້າຍທີ 4:** ແຈ້ງການຂອງຫ້ອງວ່າການລັດຖະບານ ສະບັບເລກທີ 1751/ຫລ.ກລຂ  ລົງວັນທີ 8 ທັນວາ 2014.

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

---

ຫ້ອງວ່າການລັດຖະບານ

ເລກທີ 1751 /ຫລບ.ກລຂ.

ນະຄອນຫຼວງວຽງຈັນ, ວັນທີ 8 - 12 - 2014

# ແຈ້ງການ

ຮຽນ : - ທ່ານຮອງນາຍົກລັດຖະມົນຕີ, ລັດຖະມົນຕີວ່າການ ກະຊວງການຕ່າງປະເທດ ທີ່ນັບຖື.

- ທ່ານລັດຖະມົນຕີວ່າການ ກະຊວງແຜນການ ແລະ ການລົງທຶນ.
- ທ່ານລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ.

ເລື່ອງ : ຜົນກອງປະຊຸມເສດຖະກິດ ຂອງກອງປະຊຸມໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ( ໄອປາ ຄັ້ງທີ 35 ).

- ອີງຕາມໜັງສືທາງລັດຖະການ ສະບັບເລກທີ 0337/ຫສຊ.ກນສຜງ, ລົງວັນທີ 23 ຕຸລາ 2014 ຂອງຫ້ອງວ່າການສະພາແຫ່ງຊາດ.
- ອີງຕາມການຊີ້ນຳ ຂອງທ່ານນາຍົກລັດຖະມົນຕີ ໃນວັນທີ 14 ພະຈິກ 2014.

ຫ້ອງວ່າການລັດຖະບານ ຂໍຖືເປັນກຽດແຈ້ງການຊີ້ນຳຂອງທ່ານນາຍົກລັດຖະມົນຕີ ວ່າ:

" ກອງປະຊຸມໃຫຍ່ລັດຖະສະພາອາຊຽນ ຄັ້ງທີ 35 ໄດ້ພິຈາລະນາ ແລະ ຮັບຮອງເອົາ 2 ມະຕິ ຄື:

(1) ມະຕິວ່າດ້ວຍການສົ່ງເສີມຍຸດທະສາດ ການພັດທະນາການຈະເລີນເຕີບໂຕສີຂຽວ ໃນອາຊຽນ.

(2) ມະຕິວ່າດ້ວຍສົ່ງເສີມການພັດທະນາຜູ້ປະກອບການ ໃນຂະບວນການຮັດແຄບຄວາມແຕກໂຕນທາງດ້ານການພັດທະນາ ໃນອາຊຽນ.

ມອບໃຫ້ບັນດາກະຊວງ - ອົງການທີ່ກ່ຽວຂ້ອງ ຄົ້ນຄວ້າຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດມະຕິດັ່ງກ່າວ:

1. ໃຫ້ຄົ້ນຄວ້າສ້າງນະໂຍບາຍຍຸດທະສາດ ແລະ ສູນພັດທະນາສີຂຽວ ຂອງ ສປປ ລາວ ເພື່ອເປັນບ່ອນຄົ້ນຄວ້າ ແລະ ສະໜອງຂໍ້ມູນຂ່າວສານ ( ມອບໃຫ້ກະຊວງແຜນການ ແລະ ການລົງທຶນ ເປັນເຈົ້າການສົມທົບກັບກະຊວງການຕ່າງປະເທດ ແລະ ຂະແໜງການທີ່ກ່ຽວຂ້ອງ ຮັບຜິດຊອບ ແລະ ຈັດຕັ້ງປະຕິບັດ).

2. ສະເໜີສ້າງກອງທຶນພັດທະນາທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ SMEs ໃນກອບຮ່ວມມືອາຊຽນ ( ມອບໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການສົມທົບກັບ ກະຊວງການຕ່າງປະເທດ ແລະ ຂະແໜງການທີ່ກ່ຽວຂ້ອງ ຮັບຜິດຊອບ ແລະ ຈັດຕັ້ງປະຕິບັດ)."

ໝາຍເຫດ : ລາຍລະອຽດໄດ້ມີຮ່າງມະຕິ ທັງ 02 ສະບັບ ຄັດຕິດມາພ້ອມ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມທິດຊີ້ນຳດັ່ງກ່າວດ້ວຍ.

ລັດຖະມົນຕີ, ຫົວໜ້າຫ້ອງວ່າການລັດຖະບານ

ສອນໄຊ ສີພັນດອນ

ບ່ອນນຳສົ່ງ:

- ນາຍົກ-ຮອງນາຍົກລັດຖະມົນຕີ 06 ສະບັບ
- ຫ້ອງວ່າການສູນກາງພັກ 01 ສະບັບ
- ຫ້ອງວ່າການສະພາແຫ່ງຊາດ 01 ສະບັບ
- ເກັບມ້ຽນ 10 ສະບັບ

ກະຊວງແຜນການ ແລະ ການລົງທຶນ
ຫ້ອງການ
ເລກທີ 6606
ວັນທີ 10.12.14